WORLD BANK GROUP
Social Sustainability & Inclusion

COMMUNITY-DRIVEN DEVELOPMENT
GLOBAL SOLUTIONS GROUP



# ຄູ່ມືຝຶກອົບຮົມ

## 'ການເປັນຜູ້ນຳຂັ້ນຮາກຖານເພື່ອການພັດທະນາໂດຍຊຸມຊົນເປັນເຈົ້າການ'

*"ເສີມສ້າງການມີສ່ວນຮ່ວມ ແລະ ຄວາມເຂັ້ມແຂງໃຫ້ແມ່ຍິງ ໃນການພັດທະນາຊຸມຊົນ"*

**ເດືອນ ຕຸລາ, ປີ 2025**
**ສປປ ລາວ**

# ຄຳສະແດງຄວາມຂອບໃຈ

ຄູ່ມື ສໍາລັບ ໂຄງການ PRF/CLEAR ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ (CLEAR) ສະບັບນີ້ ຖືກດັດແປງມາຈາກ ຄູ່ມືຕົ້ນສະບັບທີ່ສ້າງ ໂດຍ ກຸ່ມ ການພັດທະນາໂດຍຊຸມຊົນເປັນເຈົ້າການ (CDD) Global Solutions Group ຂອງ ທະນາຄານໂລກ, ໂດຍໄດ້ຮັບການຊ່ວຍເຫຼືອ ຈາກ SSI GP ແລະ ກອງທຶນ the Human Rights Inclusion and Empowerment Trust Fund (HRIETF). ທ່ານ. ເຮເລັນ ລູ (ທີ່ປຶກສາໄລຍະຍາວ, SSIGL) ເປັນຜູ້ຂຽນຄູ່ມືສະບັບຕົ້ນແບບ ແລະ ສະບັບດັດແກ້ ສໍາລັບໂຄງການ ໃນ ສປປ ລາວ, ທ່ານ ນາງ ບົວສະຫວັນ ຂັນທະພັດ ໄດ້ໃຫ້ການແນະນໍາການດັດແກ້ ແລະ ທົບທວນບັນດາຫົວຂໍ້ ເນື້ອໃນເພື່ອໃຫ້ສອດຄ່ອງກັບສະພາບຄວາມເປັນຈິງຂອງທ້ອງຖິ່ນ ແລະ ແທດເໝາະກັບໂຄງການທີ່ຈະນໍາໃຊ້.

ທ່ານ. ຊູຊານ ວອງ (ຜູ້ນໍາທີມຊ່ຽວຊານດ້ານການພັດທະນາສັງຄົມ, OPSIS), ແມ່ນເປັນຜູ້ ຊີ້ນໍາດ້ານກໍານົດ ວິໄສທັດ ແລະ ຍຸດທະສາດການຝຶກອົບຮົມ ສະບັບຕົ້ນແບບ ພາຍໃຕ້ການນໍາພາລວມຂອງ ທ່ານ. ອິງໂກ ໄວເດີໂຮເຟີ (ຫົວໜ້າຝ່າຍປະຕິບັດງານ, SSIGL). ນອກນັ້ນ, ຍັງມີການສະໜັບສະໜູນທີ່ດີດ້ານຕິດຕາມ ແລະ ປະເມີນຜົນ ໂດຍ ທ່ານ. ສະຕີເຟັນ ໂຈເຊບ ວິງເຄີ (ທີ່ປຶກສາໄລຍະຍາວ, SSIGL) ແລະ ທ່ານ. ຄາເມລາ ຊໍຣີຊີ ລິນນີແມນ (ທີ່ປຶກສາ, SSIGL).

ທີມງານໄດ້ໃຫ້ຄໍາຄິດຄໍາເຫັນທີ່ຮອບຄອບຈາກ ເພື່ອນນັກວິເຄາະ ຂອງພວກເຮົາ: ທ່ານ. ເຮເລ ບຸດສ໌ແຮບ (ຜູ້ຊ່ຽວຊານດ້ານການພັດທະນາສັງຄົມອາວຸໂສ, SSIGL), ທ່ານ. ແພດທຣິເຊຍ ເຟີນັນເດດສ (ຜູ້ຊ່ຽວຊານດ້ານການພັດທະນາສັງຄົມອາວຸໂສ, SEAS1), ທ່ານ. ໂຣເບີດ ວໍເບວ (ຜູ້ຊ່ຽວຊານດ້ານການພັດທະນາສັງຄົມອາວຸໂສ, SCASO), ແລະ ທ່ານ. ມາກາຣິຕາ ເປີຣໂຕ ໂກເມດ (ຜູ້ຊ່ຽວຊານດ້ານການພັດທະນາສັງຄົມອາວຸໂສ, SAES2). ທ່ານ. ເຈຣາມີ ທອມລິນຊັນ (Young Professional, SMNSO) ແລະ ທ່ານ. ນິຢາຕິ ຊາ (ຜູ້ຊ່ຽວຊານດ້ານການພັດທະນາສັງຄົມອາວຸໂສ, SESD1) ທີ່ໄດ້ໃຫ້ຄໍາຄິດຄໍາເຫັນ ແລະ ຂໍ້ມູນທີ່ເປັນປະໂຫຍດກ່ຽວກັບ ການແກ້ໄຂຂໍ້ຂັດແຍ່ງ ແລະ ຄວາມຮຸນແຮງທາງເພດ ຕາມລໍາດັບ.

# ສາລະບານ


ພາກແນະນຳ ແລະ ເຫດຜົນ .......... 2

ແຜນຝຶກອົບຮົມ ແລະ ຄູ່ມື .......... 5

ຄຳແນະນຳສຳລັບຄູຝຶກ .......... 11

ວາລະກອງປະຊຸມ .......... 13

ກິດຈະກຳ ເປີດ ການອົບຮົມ .......... 14

ພາກທີ 1: ຄວາມເຂົ້າໃຈກ່ຽວກັບການເປັນຜູ້ນຳ .......... 17

ພາກທີ 2: ການເປັນຜູ້ນຳ ແລະ ພັດທະນາໂດຍຊຸມຊົນເປັນເຈົ້າການ CDD .......... 21

ພາກທີ 3: ການຈຳແນກ, ການກີດກັ້ນ ແລະ ຄວາມບໍ່ສະເໝີພາບ .......... 26

ພາກທີ 4: ການວາງແຜນທີ່ມີສ່ວນຮ່ວມຂອງທຸກຄົນ .......... 37

ພາກທີ 5: ທັກສະການສື່ສານ .......... 41

ພາກທີ 6: ທັກສະການປະສານງານ .......... 48

ພາກທີ 7: ຄວາມໝັ້ນໃຈໃນຕົນເອງ (ສຳລັບແມ່ຍິງເທົ່ານັ້ນ) .......... 52

ພາກທີ 8: ການປັບຕົວ (ການຮັບມື) (ສຳລັບແມ່ຍິງເທົ່ານັ້ນ) .......... 57

ພາກທີ 9: ການກຳນົດຄວາມຕ້ອງການ ແລະ ການວາງແຜນ (ສຳລັບແມ່ຍິງເທົ່ານັ້ນ) .......... 60

ກິດຈະກຳ ປິດ ຊຸດອົບຮົມ .......... 64

ເອກະສານຊ້ອນທ້າຍ 1: ມື້ເລີ່ມຕົ້ນ ແລະ ມື້ສິ້ນສຸດການຝຶກອົບຮົມ .......... 65

ເອກະສານຊ້ອນທ້າຍ 2: ການປະເມີນຜົນການຝຶກອົບຮົມຂອງຜູ້ເຂົ້າຮ່ວມ .......... 66

# ພາກແນະນຳ ແລະ ເຫດຜົນ

**ການພັດທະນາໂດຍຊຸມຊົນເປັນເຈົ້າການ (CDD) ແມ່ນແນວທາງການພັດທະນາທີ່ມີຊຸມຊົນເປັນຜູ້ຄວບຄຸມການວາງແຜນ ແລະ ການດຳເນີນການລົງທຶນ ເພື່ອ ການພັດທະນາ.** ການພັດທະນານີ້ເນັ້ນໃສ່ຊຸມຊົນ ໃນຖານະເປັນຕົວແທນທີ່ກະຕຸ້ນການປ່ຽນແປງຢ່າງຫ້າວຫັນ ຫຼາຍກວ່າ ການເປັນພຽງແຕ່ຜູ້ຮັບ, ໂດຍຖືເອົາແນວຄວາມຄິດທີ່ວ່າ "ປະຊາຊົນຕ້ອງມາກ່ອນ" ແລະ ການຕັດສິນໃຈດ້ວຍຕົນເອງຂອງຜູ້ທີ່ໄດ້ຮັບຜົນກະທົບຫຼາຍທີ່ສຸດຈາກການຕັດສິນໃຈໃນການພັດທະນາ, ເຊິ່ງເປັນຜູ້ທີ່ມີຄວາມຮູ້ທ້ອງຖິ່ນ ແລະ ມີທ່າແຮງໃນການຈັດຕັ້ງປະຕິບັດວຽກງານຮ່ວມກັນ, ໂດຍຜ່ານການສະໜັບສະໜູນດ້ານໂອກາດ ແລະ ຊັບພະຍາກອນ ເພື່ອ ກຳນົດ ແລະ ເຂົ້າໃຈເຖິງບູລິມະສິດຂອງພວກເຂົາ. ນອກນີ້ຍັງຍຶດຖືໃນຫຼັກການການມີສ່ວນຮ່ວມ, ການເຂົ້າຮ່ວມ, ການບໍ່ຈຳແນກ, ຄວາມໂປ່ງໃສ, ແລະ ຄວາມຮັບຜິດຊອບ, ພ້ອມທັງຄວາມພະຍາຍາມທີ່ຈະສົ່ງເສີມການນຳໃຊ້ສຽງ ແລະ ອົງການຈັດຕັ້ງຂອງຜູ້ທຸກຍາກ ແລະ ຜູ້ດ້ອຍໂອກາດ.

**ໃນລະດັບຊຸມຊົນ, ຄະນະກຳມະການນຳພາຂັ້ນທ້ອງຖິ່ນແມ່ນ ແຮງຜັກດັນຂອງໂຄງການພັດທະນາ ໂດຍຊຸມຊົນເປັນເຈົ້າການ (CDD) - ເຊິ່ງເປັນກົນໄກຕົ້ນຕໍ ແລະ ເປັນອົງຈັດຕັ້ງຂອງຊຸມຊົນ ເພື່ອ ບໍລິຫານຈັດການ ແລະ ດຳເນີນການຮ່ວມກັນ.**[1] ຄະນະກຳມະການທີ່ໄດ້ຮັບການເລືອກຕັ້ງ ຕາມລະບົບປະຊາທິປະໄຕນີ້ຈະໄດ້ຮັບມອບອຳນາດໃຫ້ເປັນຕົວແທນ ແລະ ປະຕິບັດຕາມຄວາມມຸ່ງມາດປາຖະໜາຂອງປະຊາຊົນ ຕາມທີ່ກຳນົດໄວ້ໃນແຜນພັດທະນາຂອງຊຸມຊົນທີ່ຖືກພັດທະນາຢ່າງມີສ່ວນຮ່ວມ ແລະ ຄອບຄຸມ, ແລະ ຜ່ານການປະກອບຄຳເຫັນ ແລະ ການໃຫ້ຂໍ້ມູນທີ່ສະແດງອອກຢ່າງເປີດກວ້າງ ໃນກອງປະຊຸມຂອງຊຸມຊົນ. ເມື່ອຄະນະກຳມະການໄດ້ຮັບຄວາມໄວ້ວາງໃຈຈາກປະຊາຊົນ ແລະ ຮັບໜ້າທີ່ເປັນຜູ້ນຳ, ພວກເຂົາຈະເປັນກຸ່ມທີ່ຢູ່ແນວໜ້າຂອງການພັດທະນາ ແລະ ເປັນຜູ້ໂຕ້ຕອບກັບສິ່ງທ້າທາຍເປັນກຸ່ມທຳອິດ. ຄະນະກຳມະການເຫຼົ່ານີ້ມີຄວາມສາມາດໃນການລະດົມຊຸມຊົນຂອງຕົນ ໃນເວລາທີ່ມີວິກິດການ ຫຼື ຫັນອອກຈາກຄວາມອ່ອນແອ. ຜູ້ນຳຊຸມຊົນຖືກຄັດເລືອກ ຈາກ ສະມາຊິກຂອງຊຸມຊົນຈຳນວນຫຼາຍຮ້ອຍ ຫຼື ຫຼາຍພັນຄົນ ໃຫ້ຮັບຕຳແໜ່ງເປັນຜູ້ນຳຊຸມຊົນ ໃນທຸກໆການພັດທະນາໂດຍຊຸມຊົນເປັນເຈົ້າການ (CDD) , ເຊິ່ງເປັນທ່າແຮງທີ່ສາມາດຜັກດັນຜູ້ນຳຮາກຖານເຫຼົ່ານີ້ ໃຫ້ລິເລີ່ມການປ່ຽນແປງທາງດ້ານວັດທະນະທຳ-ສັງຄົມ ທີ່ ກ່ຽວຂ້ອງກັບ ສະຖານະພາບຂອງກຸ່ມຜູ້ດ້ອຍໂອກາດ ແລະ ແມ່ຍິງ ເພື່ອ ສົ່ງເສີມການມີສ່ວນຮ່ວມໃນນຳໃຊ້ສຽງ ແລະ ຈັດຕັ້ງປະຕິບັດກິດຈະກຳຂອງອົງການຈັດຕັ້ງຮາກຖານ ແລະ ຕອບສະໜອງຄວາມຕ້ອງການຂອງພວກເຂົາໃຫ້ດີຂຶ້ນ. ການເສີມສ້າງຄວາມເຂັ້ມແຂງໃຫ້ກັບອົງການຈັດຕັ້ງຮາກຖານ ໃນການແກ້ໄຂບັນຫາ ກ່ຽວກັບການເລືອກປະຕິບັດ, ການຖືກແບ່ງແຍກ ແລະ ຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍ ສາມາດເສີມສ້າງຜົນກະທົບທາງສັງຄົມຂອງໂຄງການ CDD ເພື່ອ ຊ່ວຍສ້າງສັງຄົມທີ່ມີສ່ວນຮ່ວມຫຼາຍຂຶ້ນ.

### *ການຝຶກອົບຮົມເປັນເຄື່ອງມືໃນການພັດທະນາຄວາມເປັນຜູ້ນຳ ທີ່ສາມາດຍົກສູງການມີສ່ວນຮ່ວມ*

**ຄວາມສາມາດ ຂອງ ຄະນະກຳມະການ ໃນການຈັດການກັບ ດ້ານ "ແຂງ" ກໍ່ຄື ຈັດຕັ້ງປະຕິບັດໂຄງການຍ່ອຍ ແລະ ດ້ານ "ອ່ອນ" ກໍ່ຄືການລະດົມຊຸມຊົນ ເຊິ່ງແມ່ນປັດໄຈຄວາມສຳເລັດທີ່ສຳຄັນ ເພື່ອ ສ້າງທ່າແຮງຂອງຊຸມຊົນ ໃນການປະຕິບັດງານຮ່ວມກັນ ແລະ ການພັດທະນາແບບມີສ່ວນຮ່ວມຢ່າງຍືນຍົງ.** ໃນຂະນະທີ່ຄະນະກຳມະການ ໄດ້ຮັບການຝຶກອົບຮົມຄວາມສາມາດດ້ານວິຊາການ (ຕົວຢ່າງ: ການຄຸ້ມຄອງດ້ານການເງິນ, ການຈັດຊື້, ການຕິດຕາມ, ແລະ ອື່ນໆ), ພວກເຂົາຄວນໄດ້ຮັບການຊ່ວຍເຫຼືອເພີ່ມເຕີມ ເພື່ອຊ່ວຍໃຫ້ພວກເຂົາ ເຂົ້າໃຈຄວາມຮັບຜິດຊອບຂອງຕົນ ໃນຖານະທີ່ເປັນບຸກຄົນສຳຄັນທີ່ຮັບຜິດຊອບການປົກປ້ອງ ແລະ ສົ່ງເສີມການສ້າງຄວາມເຂັ້ມແຂງຂອງສະມາຊິກໃນຊຸມຊົນທັງໝົດ ແລະ ພັດທະນາແນວຄວາມຄິດການເປັນຜູ້ນຳແບບມີສ່ວນຮ່ວມ ທີ່ທ້າທາຍ ຄວາມບໍ່ເທົ່າທຽມ ແລະ ການຈຳແນກການເຂົ້າຮ່ວມ. ດັ່ງນັ້ນພວກເຂົາຈຳເປັນຕ້ອງໄດ້ຮັບການສະໜັບສະໜູນ ເພື່ອ ເສີມ

[1] ອົງການຈັດຕັ້ງຂອງຊຸມຊົນເຫຼົ່ານີ້ເຮັດວຽກຮ່ວມມືກັບອົງການຈັດຕັ້ງທ້ອງຖິ່ນຂອງລັດຖະບານ.

ສ້າງຄວາມອາດສາມາດ ທີ່ ເຮັດໃຫ້ພວກເຂົາມີຄວາມຮູ້ ແລະ ທັກສະໃນການນໍາພາຊຸມຊົນ ໃນການພັດທະນາ, ມີວິໄສທັດທີ່ຄອບຄຸມ ແລະ ແນ່ໃສ່ການມີສ່ວນຮ່ວມທີ່ມີຄວາມຫມາຍ ແລະ ສ້າງຜົນໄດ້ຮັບທີ່ເທົ່າທຽມ.

**ການຝຶກອົບຮົມນີ້ມີຈຸດປະສົງ ເພື່ອ ເປັນເຄື່ອງມືໃນການພັດທະນາ ການເປັນຜູ້ນໍາແບບມີສ່ວນຮ່ວມ ແລະ ຄວາມສາມາດເພື່ອກ້າວໄປສູ່ການເປັນຜູ້ນໍາທີ່ຄໍານຶງເຖິງການມີສ່ວນຮ່ວມຂອງທຸກຄົນ.** ຈຸດປະສົງຫຼັກແມ່ນ ເພື່ອ ປູກຈິດສໍານຶກ, ຄວາມຮູ້, ແລະ ຄວາມຮັບຜິດຊອບຂອງຜູ້ນໍາຊຸມຊົນ ເພື່ອຊ່ວຍ ສົ່ງເສີມການມີສ່ວນຮ່ວມຂອງສັງຄົມ ແລະ ສ້າງຄວາມເຂັ້ມແຂງໃຫ້ແມ່ຍິງໃນການພັດທະນາກິດຈະກໍາຕ່າງໆ. ເມື່ອຜູ້ນໍາຊຸມຊົນໄດ້ຮັບ ເສີມສ້າງຂີດຄວາມສາມາດໃນການຊຸກຍູ້ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ, ໄວໜຸ່ມ, ກຸ່ມຊົນເຜົ່າ, ຜູ້ມີຄວາມພິການ, ຜູ້ທີ່ມີຄວາມບອບບາງ ແລະ ຜູ້ມີຂໍ້ຈໍາກັດອື່ນໆ, ພວກເຂົາຈະສາມາດນໍາພາຊຸມຊົນ ໃນການກໍານົດ ແລະ ບັນລຸເປົ້າໝາຍພັດທະນາຢ່າງມີສ່ວນຮ່ວມ ແລະ ມີປະສິດທິພາບ ເພື່ອ ສະໜັບສະໜູນກຸ່ມຜູ້ດ້ອຍໂອກາດເຫຼົ່ານີ້.

*ການມີສ່ວນຮ່ວມຂອງແມ່ຍິງ*

**ເຖິງວ່າການຝຶກອົບຮົມນີ້ແນໃສ່ ການມີສ່ວນຮ່ວມຂອງກຸ່ມຄົນດ້ອຍໂອກາດທັງໝົດໃຫ້ຫຼາຍຂຶ້ນ, ແຕ່ພື້ນຖານຫຼັກຂອງຄູ່ມືນີ້ ແມ່ນເນັ້ນໃສ່ການມີສ່ວນຮ່ວມຂອງແມ່ຍິງ,** ການພັດທະນາແບບຍືນຍົງບໍ່ສາມາດເປັນໄປໄດ້, ຫາກຂາດການມີສ່ວນຮ່ວມຂອງປະຊາກອນເຄິ່ງຫນຶ່ງ ແລະ ການນໍາພາຂອງແມ່ຍິງ, ມີຄວາມບໍ່ສະເຫມີພາບລະຫວ່າງຍິງ-ຊາຍ ທີ່ທະວີຄວາມຮຸນແຮງຂຶ້ນ, ແລະການຈໍາແນກທີ່ຍັງສືບຕໍ່ເປັນໄພຂົ່ມຂູ່ຕໍ່ຄວາມຫມັ້ນຄົງ ແລະ ຄວາມທົນທານຂອງສັງຄົມ. ດັ່ງນັ້ນ, ເຖິງວ່າສິ່ງກີດຂວາງຈະສູງ, ແຕ່ຕົ້ນທຶນທີ່ຕ້ອງເສຍໄປຍ້ອນ ການບໍ່ເຮັດຫຍັງເລີຍຍິ່ງສູງກວ່າ. ການລົງທຶນໃສ່ແມ່ຍິງ ແລະ ຜູ້ນໍາຍິງ ໂດຍຜ່ານຍຸດທະສາດທີ່ຄໍານຶງເຖິງເພດ ທີ່ຕັ້ງໃຈຈະແກ້ໄຂສິ່ງກີດຂວາງ ແລະ ຮັບຮູ້ສິດທິ ແລະ ຄວາມສາມາດຂອງແມ່ຍິງ ແມ່ນ ກຸນແຈສໍາຄັນສູ່ໂລກທີ່ຍຸຕິທໍາ ແລະ ຍືນຍົງ.

ການພັດທະນາໂດຍຊຸມຊົນເປັນເຈົ້າ ສົ່ງເສີມການມີສ່ວນຮ່ວມຂອງແມ່ຍິງ, ເສີມສ້າງຄວາມເຂັ້ມແຂງ, ການເປັນຜູ້ນໍາໂດຍການກໍານົດການປະຕິບັດທີ່ແນ່ນອນ ເພື່ອເພີ່ມຄວາມອາດສາມາດຂອງແມ່ຍິງ ແລະ ສ້າງໜ່ວຍງານໃນການພັດທະນາຊຸມຊົນ. ແຕ່ວ່າໃນເວທີການປະຊຸມຕ່າງໆ ບໍ່ມີບ່ອນນັ່ງທີ່ພຽງພໍສໍາລັບແມ່ຍິງ, ດັ່ງນັ້ນຈຶ່ງຕ້ອງກະກຽມໃຫ້ພວກເຂົາໃຫ້ມີຄວາມພ້ອມທີ່ຈະປະສົບຜົນສໍາເລັດ ເມື່ອເຂົ້າຢູ່ໃນກຸ່ມ. ດ້ານບົດບາດຍິງ-ຊາຍ, ການຝຶກອົບຮົມດັ່ງກ່າວ ແນໃສ່ 2 ດ້ານຕົ້ນຕໍຄື: 1) ພັດທະນາຄວາມສາມາດໃນການນໍາເປັນຜູ້ນໍາທີ່ມີສ່ວນຮ່ວມ ໃຫ້ຄະນະກໍາມະການຊຸມຊົນ ລວມທັງສະມາຊິກເພດຊາຍ ເພື່ອນໍາພາການປ່ຽນແປງ ບັດທັດຖານແລະ ການປະຕິບັດກ່ຽວກັບການພົວພັນລະຫວ່າງຍິງ-ຊາຍ ແລະ ສະຖານະພາບຂອງແມ່ຍິງ ແລະ 2) ພັດທະນາຄວາມສາມາດຂອງຜູ້ນໍາຍິງ ເພື່ອ ເຮັດໜ້າທີ່ເປັນຜູ້ນໍາຊຸມຊົນທີ່ປະສົບຜົນສໍາເລັດ.

**ການສ້າງການເປັນຜູ້ນໍາທີ່ມີຄວາມສາມາດ ແລະ ສ້າງຄວາມໝັ້ນໃຈໃນຕົນເອງຂອງຜູ້ນໍາຍິງເປັນສິ່ງທີ່ສໍາຄັນ.** ສິ່ງກີດຂວາງເຫຼົ່ານີ້ໄດ້ເຮັດໃຫ້ແມ່ຍິງມີລະດັບການຮູ້ໜັງສື ແລະ ການສຶກສາຕໍ່າກວ່າ ພ້ອມທັງເຮັດໃຫ້ພວກເຂົາມີຄວາມສົງໄສໃນຕົນເອງ ແລະ ມີປົມດ້ອຍ, ບວກກັບມີຄວາມຢ້ານກົວຕໍ່ການຖືກວິພາກວິຈານ ແລະ ຄວາມຮຸນແຮງ ຖ້າຫາກພວກເຂົາເວົ້າ ຫຼື ປະຕິບັດ ເກີນກວ່າ ພາລະບົດບາດ ແລະ ບັດທັດຖານທີ່ກໍານົດໄວ້ໃນວັດທະນະທໍາ ແລະ ສັງຄົມຂອງພວກເຂົາ.[2] ດັ່ງນັ້ນ, ພວກເຂົາຈຶ່ງຮູ້ສຶກໜັກໃຈ, ຂາດຄວາມພ້ອມ, ແລະ ຢ້ານກົວທີ່ຈະເຂົ້າຮ່ວມກິດຈະກໍາໃນພື້ນທີ່ສາທາລະນະ ແລະ ເປັນທາງການ ຮ່ວມກັນກັບຜູ້ຊາຍ, ໂດຍສະເພາະໃນເວລາທີ່ພວກເຂົາຂາດຄວາມຮູ້, ຄວາມສາມາດ, ຄວາມຫມັ້ນໃຈ, ແລະ ຊັບພະຍາກອນໃນການປະຕິບັດຫນ້າທີ່ ແລະ ມີສ່ວນຮ່ວມຢ່າງມີຄວາມໝາຍໃນວຽກງານເຫຼົ່ານັ້ນ. ຄວາມທຸກຍາກໃນແງ່ຂອງເວລາ ເນື່ອງຈາກການຕ້ອງຮັບພາລະໃນການເຮັດວຽກ

---

[2] Di Meco, Lucina. *Women's Political Networks: Defining Leadership, Breaking Barriers, and Fostering Change.* Wilson Center. p14.; and Kenway, Jessica; Lokot, Michelle; Bradley, Chris. 2014. *Women's Leadership: Evidence Review.* Office of Development Effectiveness, Department of Foreign Affairs and Trade, Australian Government. p12-13.

ເຮືອນ ແລະ ເບິ່ງແຍງດູແລ, ວຽກງານທີ່ຫນັກ, ແລະ ໜ້າທີ່ຮັບຜິດຊອບທີ່ຕ້ອງໃຊ້ແຮງງານຢ່າງໜັກ ໜ່ວງ ລວມທັງ ປະສົບການ ການຖືກໃຊ້ຄວາມຮຸນແຮງໃນຄອບຄົວ ແລະ ຄວາມໂດດດ່ຽວທີ່ເກີດຈາກການຂາດເຄືອຂ່າຍທາງສັງຄົມ ແລະ ຂໍ້ຈຳກັດໃນການເຄື່ອນໄຫວ, ມັກເຮັດໃຫ້ແມ່ຍິງໄດ້ຮັບບົດບາດທີ່ເປັນຮອງຈາກຜູ້ຊາຍ. ໃນເວລາທີ່ເຮັດວຽກໃນຄະນະກຳມະການ ແລະ ເຮັດໃຫ້ພວກເຂົາບໍ່ສາມາດມີສ່ວນຮ່ວມຢ່າງເທົ່າທຽມກັນກັບຜູ້ຊາຍໄດ້.[3] ມີຫຼາຍຄັ້ງທີ່ ການມີທັດສະນະຄະຕິ ຫຼື ພຶດຕິກຳທີ່ເຊື່ອວ່າຕົນເອງບໍ່ມີຄວາມສຳຄັນຂອງແມ່ຍິງ ແລະ ການແຜ່ລາມຂອງຄວາມບໍ່ສະເໝີພາບ ໃນສິ່ງແວດລ້ອມທີ່ພວກເຂົາອາໄສຢູ່ ທັງໃນດ້ານວັດທະນະທຳ-ສັງຄົມ ແລະ ໂຄງສ້າງ, ເຮັດໃຫ້ພວກເຂົາມີອະຄະຕິໃນການເອົາຊະນະຕົນເອງ ແລະ ກາຍເປັນພວກເຂົາເອງທີ່ເປັນຄົນທີ່ສົ່ງເສີມຮູບແບບການແບ່ງແຍກບົດບາດເຫຼົ່ານີ້ ເຊິ່ງເຮັດໃຫ້ພວກເຂົາຍັງຕິດຢູ່ໃນຄວາມບໍ່ສະເໝີພາບເອງ.[4]

**ການສະໜອງພື້ນທີ່ສະເພາະສຳລັບແມ່ຍິງ ເຊິ່ງເປັນພື້ນທີ່ທີ່ຜູ້ນຳຍິງໄດ້ຮັບໂອກາດ ແລະ ເຄື່ອງມືທີ່ເປັນລະບົບ ເພື່ອ ສຳຫຼວດຕົນເອງ ແລະ ສ້າງຄວາມອາດສາມາດຂອງພວກເຂົາ ສາມາດຊ່ວຍໃຫ້ແມ່ຍິງໄດ້ທົບທວນຄືນ ກ່ຽວກັບ ບົດບາດຂອງພວກເຂົາ, ເອົາຊະນະຄວາມລັງເລຂອງພວກເຂົາ, ແລະ ເປີດໂອກາດໃນການຮັບບົດບາດເປັນຜູ້ນຳຢ່າງຈິງຈັງ.** ການຝຶກອົບຮົມ ແລະ ການສ້າງຂີດຄວາມສາມາດໃນໂຄງການພັດທະນາໂດຍຊຸມຊົນເປັນເຈົ້າການ (CDD) ໄດ້ຮັບການພິສູດແລ້ວວ່າ ສາມາດສ້າງທັກສະ ແລະ ຄວາມໝັ້ນໃຈໃຫ້ແກ່ແມ່ຍິງ ໃຫ້ມີບົດບາດຫຼາຍຂຶ້ນໃນຊຸມຊົນ ແລະ ສະໜັບສະໜູນກຸ່ມແມ່ຍິງໃນການນຳສະເໜີ, ປົກປ້ອງ, ແລະພະຍາຍາມໂນ້ມນ້າວ ເພື່ອ ບັນລຸບູລິມະສິດຂອງພວກເຂົາ.[5] ນອກຈາກນີ້, ໂອກາດໃນການເຂົ້າຮ່ວມໃນເຄື່ອຂ່າຍ ກິດຈະກຳເພື່ອນຊ່ວຍເພື່ອນ, ກິດຈະກຳໃຫ້ຄຳປຶກສາ, ແລະ ການຢ້ຽມຢາມ ເພື່ອ ແລກປ່ຽນຄວາມຮູ້, ປະສົບການ, ແລະ ກົນລະຍຸດຕ່າງໆ ຢ່າງເປັນປະຈຳ, ສາມາດສ້າງຄວາມໝັ້ນໃຈໃນຕົນເອງ ແລະ ສ່ວນລວມ ແລະ ສ້າງແນວຄວາມຄິດ, ແຮງຈູງໃຈ, ແລະ ຄວາມສາມັກຄີເປັນຈິດໜຶ່ງໃຈດຽວ.[6] ການເປັນຜູ້ນຳຂອງແມ່ຍິງຍັງ ສະແດງໃຫ້ເຫັນ ຜົນໄດ້ຮັບທີ່ມີປະສິດທິພາບ ທີ່ຊຸກຍູ້ໃຫ້ເດັກຍິງ ແລະ ແມ່ຍິງຄົນອື່ນໆ ໃຫ້ມີແຮງບັນດານໃຈຫຼາຍຂຶ້ນ.[7]

**ສິ່ງສຳຄັນທີ່ຕ້ອງພິຈາລະນາຄື ຄວາມສຳຄັນ ຂອງ ຄວາມເຊື່ອມໂຍງແມ່ຍິງ ໃນການສ້າງຄວາມເຂັ້ມແຂງຂອງແມ່ຍິງ ເຊິ່ງມີແມ່ຍິງທີ່ມາຈາກຫຼາກຫຼາຍກຸ່ມ ໃນປະເພດສັງຄົມທີ່ແຕກຕ່າງກັນ, ເຊັ່ນ: ເຊື້ອຊາດ, ຊົນຊັ້ນ, ກຸ່ມຊົນເຜົ່າ, ອາຍຸ, ແລະ ສາດສະໜາ.** ອາດມີບາງກໍລະນີທີ່ ແມ່ຍິງບາງກຸ່ມເຫັນວ່າສິ່ງໃດໜຶ່ງມີຄວາມສຳຄັນ ສຳລັບພວກເຂົາ, ໃນຂະນະທີ່ແມ່ຍິງກຸ່ມອື່ນໆອາດເຫັນວ່າສິ່ງເຫຼົ່າເປັນອັນຕະລາຍ, ເຊິ່ງຂຶ້ນຢູ່ກັບຄວາມສຳຄັນຂອງສິ່ງເຫຼົ່ານີ້ໃນສັງຄົມນັ້ນ. ດັ່ງນັ້ນ ຈຶ່ງບໍ່ຄວນສັນນິຖານວ່າ ຜູ້ນຳຍິງຈະປະຕິບັດໜ້າທີ່ນຳພາແບບອັດຕະໂນມັດ ເພື່ອ ຜົນປະໂຫຍດທີ່ດີທີ່ສຸດຂອງແມ່ຍິງຄົນອື່ນໆ ຫຼື ກຸ່ມຄົນດ້ອຍໂອກາດ, ເນື່ອງຈາກພວກເຂົາອາດຕ້ອງການໄດ້ຮັບການຍອມຮັບຈາກຜູ້ຊາຍ, ຫຼື ຍ້ອນວ່າພວກເຂົາມີຄວາມເຊື່ອທີ່ຫຼ້າຫຼັງ, ຫຼື ຍ້ອນວ່າພວກເຂົາມາຈາກຊົນຊັ້ນນຳ ແລະ ມີອະຄະຕິກັບກຸ່ມອື່ນໆ, ຫຼື ເຫດຜົນອື່ນໆ.[8] ດ້ວຍເຫດນີ້, ການຝຶກອົບຮົມຄັ້ງນີ້ ຈຶ່ງເນັ້ນໃສ່ ການສ້າງ ຄວາມເປັນຜູ້ນຳຂອງແມ່ຍິງ ພາຍໃຕ້ກອບການມີສ່ວນຮ່ວມ, ການສ້າງຄວາມເຂັ້ມແຂງ, ແລະ ຄວາມສາມາດຂອງຜູ້ນຳທຸກຄົນ, ທັງຍິງ ແລະຊາຍທີ່ກວ້າງຂຶ້ນ ເພື່ອ ກ້າວໄປສູ່ ແຜນພັດທະນາຂອງສັງຄົມທີ່ດີ ທີ່ມີປະໂຫຍດຕໍ່ການພັດທະນາຂອງທຸກໆຄົນ ໃນຊຸມຊົນ ໂດຍສະເພາະກຸ່ມຄົນດ້ອຍໂອກາດທີ່ສຸດ.

---

[3] Hoare, Joanna; Gell, Fiona. 2009. *Women's Leadership and Participation: Case Studies on Learning for Action.* Oxfam GB. p6.

[4] Oxfam Novib. 2011. *Women Leading Change: Experiences Promoting Women's Empowerment, Leadership, and Gender Justice: Case Studies of Five Asian Organizations*. p11.; Di Meco, Lucina. *Women's Political Networks: Defining Leadership, Breaking Barriers, and Fostering Change.* Wilson Center. p16.; Fonchingong, Charles C. 2006. *Expanding Horizons: Women's Voices in Community-Driven Development in the Cameroon Grasslands.* GeoJournal 65: 137-139. p146.; and Garba, P. Kassey. 1999. *An Endogenous Empowerment Strategy: A Case Study of Nigerian Women*. Development in Practice, 9:1-2, 130-141. p139.

[5] Independent Evaluation Group. *Women's Empowerment in Rural Community-Driven Development Projects.* World Bank Group. p19.

[6] Di Meco, Lucina. *Women's Political Networks: Defining Leadership, Breaking Barriers, and Fostering Change.* Wilson Center. p14.

[7] Abdoul Latif Jameel Poverty Action Lab (J-PAL). 2012. *Policy Briefcase, Raising Female Leaders*. Cambridge, MA: JPAL. p4.

[8] Kenway, Jessica; Lokot, Michelle; Bradley, Chris. 2014. *Women's Leadership: Evidence Review.* Office of Development Effectiveness, Department of Foreign Affairs and Trade, Australian Government. p20.

# ແຜນຝຶກອົບຮົມ ແລະ ຄູ່ມື

## *ເປົ້າໝາຍ ແລະ ຈຸດປະສົງ*

**ເປົ້າໝາຍຂອງໂຄງການຝຶກອົບຮົມນີ້ແມ່ນ ເພື່ອ ພັດທະນາຄວາມສາມາດໃນການເປັນຜູ້ນຳຂອງອົງການຈັດຕັ້ງຂັ້ນທ້ອງຖິ່ນເພື່ອເສີມຂະຫຍາຍການມີສ່ວນຮ່ວມ, ໂດຍສະເພາະ ແມ່ຍິງ ແລະ ຊົນເຜົ່າທີ່ບໍ່ແມ່ນຊົນເຜົ່າລາວໄຕ, ໃນໂຄງການ ປັບຕົວກັບການປ່ຽນແປງດິນຟ້າອາກາດ** (CLEAR). ຈຸດປະສົງຂອງໂຄງການຝຶກອົບຮົມແມ່ນເພື່ອ:

- ພັດທະນາຄວາມຮັບຮູ້, ຄວາມຮູ້, ຄວາມສາມາດ, ແລະ ຄວາມມຸ່ງໝັ້ນຜູ້ນຳຊຸມຊົນ ທີ່ສົ່ງເສີມການມີສ່ວນຮ່ວມ ແລະ ສ້າງຄວາມເຂັ້ມແຂງໃຫ້ແມ່ຍິງໃນກິດຈະກຳການພັດທະນາຕ່າງໆ.
- ສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກຂອງຄະນະກຳມະທີ່ເປັນແມ່ຍິງໃຫ້ມີຄວາມຮູ້, ຄວາມສາມາດ, ແລະ ປະສົບການທີ່ກ່ຽວຂ້ອງ ທີ່ສາມາດເຮັດໃຫ້ພວກເຂົາປະສົບຜົນສຳເລັດໃນຖານະເປັນຜູ້ນຳຂອງຊຸມຊົນທີ່ມີຄວາມໝັ້ນໃຈ, ມີປະສິດທິພາບ, ແລະ ມີຄວາມທົນທານ.

## *ຜູ້ເຂົ້າຮ່ວມ*

ການຝຶກອົບຮົມນີ້ແນ່ໃສ່ ບັນດາຜູ້ນຳຂັ້ນບ້ານ (ທັງ ຍິງ ແລະ ຊາຍ) ເຊິ່ງເປັນຜູ້ນຳຂອງຄະນະກຳມະການຂັ້ນບ້ານໃນຂະແໜງການຕ່າງໆ ເພື່ອ ພັດທະນາຊຸມຊົນ. ໃນການຝຶກອົບຮົມຈະມີ ພາກສະເພາະທີ່ເນັ້ນໃສ່ ຜູ້ເຂົ້າຮ່ວມທີ່ເປັນແມ່ຍິງເທົ່ານັ້ນ, ເຊິ່ງມີຈຸດປະສົງເພື່ອ ແກ້ໄຂສິ່ງທ້າທາຍອັນສະເພາະທີ່ຜູ້ນຳແມ່ຍິງຕ້ອງປະສົບພົບພໍ້. ຜູ້ເຂົ້າຮ່ວມບໍ່ຈຳເປັນຕ້ອງຮູ້ໜັງສື.

## *ແນວທາງ*

**ການຝຶກອົບຮົມນີ້** ຊຸກຍູ້ໃຫ້ຜູ້ເຂົ້າຮ່ວມໄດ້ອອກຄວາມຄິດ ແລະ ວິທີການແກ້ໄຂບັນຫາຂອງຕົນເອງ. ໂດຍມີຈຸດປະສົງຕົ້ນຕໍ ເພື່ອສ້າງພື້ນທີ່ ແລະ ສະໜອງກອບແນວຄວາມຄິດ ສຳລັບ ຜູ້ເຂົ້າຮ່ວມໃນການຄົ້ນຫາ, ວິເຄາະ, ທຳຄວາມເຂົ້າໃຈ, ແລະ ກຳນົດທັດສະນະຂອງຕົນເອງ, ທົບທວນກ່ຽວກັບ ແນວຄວາມຄິດ ແລະ ບໍລິບົດຂອງພວກເຂົາ, ລວມທັງ ແນວຄວາມຄິດທີ່ອາດເປັນຄວາມໃໝ່ໆ ສຳລັບ ພວກເຂົາ. ນຳພາຜູ້ເຂົ້າຮ່ວມ ສູ່ຂະບວນການວາງແຜນການປະຕິບັດ ທີ່ພວກເຂົາສາມາດນຳໃຊ້ຄວາມຮູ້ ແລະ ທັກສະເພື່ອນຳໃຊ້ໃນການພັດທະນາແບບມີສ່ວນນຮ່ວມ. ຫຼັງຈາກ ການປະຊຸມຝຶກອົບຮົມຢ່າງເປັນທາງການເຫຼົ່ານີ້, ຈະມີ 1) ການຝຶກສອນຈາກຜູ້ອຳນວຍຄວາມສະດວກຂັ້ນບ້ານ (ພະນັກງານຂັ້ນບ້ານ YG) ທີ່ຮຽນຮູ້ ຜ່ານການປະຕິບັດຕົວຈິງ ແລະ 2) ການຮົມຮົມເພີ່ມ ເພື່ອ ທວນຄືນຄວາມຄືບໜ້າຂອງແຜນປະຕິບັດງານ.

ອົງປະກອບຂອງການຝຶກອົບຮົມສະເພາະແມ່ຍິງ ປະກອບດ້ວຍ ສາມພາກ:

1) <u>ການຝຶກອົບຮົມຢ່າງເປັນທາງການ</u> - ການຝຶກອົບຮົມ ສະເພາະ ແມ່ຍິງ ແມ່ນເນັ້ນໃສ່ການສ້າງຄວາມໝັ້ນໃຈ ແລະ ຄວາມທົນທານ ເຊິ່ງແນ່ໃສ່ ການສະໜັບສະໜູນເພີ່ມເຕີມ ໃຫ້ແກ່ ຜູ້ນຳເພດຍິງ ໃນສະພາບແວດລ້ອມ ທີ່ ພວກເຂົາສາມາດສະແດງອອກໄດ້ຢ່າງເປັນອິດສະລະ ໂດຍປາດສະຈາກການກວດກາຈາກຜູ້ຊາຍ.
2) <u>ໂອກາດໃນການປະຕິບັດ</u> - ກິດຈະກຳ ຫຼື ໂຄງການ ສຳລັບ ຜູ້ນໍເພດຍິງ ເພື່ອ ຝຶກຝົນຄວາມສາມາດໃນການນຳພາຂອງເຂົາ ແລະ ນຳໃຊ້ສິ່ງເຫຼົ່ານີ້ ເພື່ອ ລະດົມ ແລະ ສ້າງຄວາມເຂັ້ມແຂງໃຫ້ແມ່ຍິງຄົນອື່ນໆໃນຊຸມຊົນ. ກິດຈະກຳ ຫຼື ໂຄງການຄວນຈັດສັນແຫຼ່ງທຶນທີ່ພຽງພໍ ແລະ ແມ່ຍິງຄວນກຳນົດກິດຈະກຳດ້ວຍຕົນເອງ, ໂດຍອີງໃສ່ບູລິມະສິດ, ຂໍ້ຈຳກັດ ແລະ ບໍລິບົດຂອງພວກເຂົາ. ຕົວຢ່າງຂອງບາງກິດຈະກຳ ຂອງ ໂຄງການກອງທຶນຫຼຸດຜ່ອນຄວາມທຸກຍາກ (PRF)/ ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ (CLEAR) ລວມທັງ ກິດຈະກຳໂພຊະນາການ (ເຊັ່ນ: ກິດຈະກຳການສື່ສານເພື່ອການປ່ຽນແປງທາງດ້ານສັງຄົມ ແລະ ພຶດຕິກຳ, ການເຜີຍແຜ່ຄວາມຮູ້ ແລະ ການ

ຝຶກອົບຮົມກ່ຽວກັບ ການຜະລິດ ແລະ ການປຸງແຕ່ງອາຫານ, ແລະ ອື່ນໆ) ແລະ ກິດຈະກຳການດຳລົງຊີວິດ (ຕົວຢ່າງ, ກິດຈະກຳຂອງກຸ່ມຊ່ວຍເຫຼືອຕົນເອງ ແລະ ກຸ່ມຜູ້ຜະລິດ).

3) ພື້ນທີ່ການສະໜັບສະໜູນ - ໂອກາດໃນການສ້າງເຄືອຂ່າຍທີ່ ຜູ້ນຳຍິງສາມາດຕິດຕໍ່ກັນໄດ້ຢ່າງເປັນປະຈຳ ເພື່ອສະໜັບສະໜູນ ແລະ ໂອກາດໃນການໃຫ້ຄຳປຶກສາ ທີ່ເຮັດໃຫ້ຜູ້ນຳຍິງ ເປັນແບບຢ່າງໃນການດຳລົງຊີວິດ.

ການຝຶກອົບຮົມໃນຫ້ອງຮຽນຢ່າງເປັນທາງການທີ່ເປັນການສະໜັບສະໜູນພຽງຢ່າງດຽວແມ່ນ ບໍ່ພຽງພໍທີ່ຈະບັນລຸຈຸດປະສົງຂອງການຮຽນຮູ້ ແລະ ມີຄວາມຍືນຍົງໄດ້. ດັ່ງນັ້ນ, ແຜນການຝຶກອົບຮົມຈຶ່ງບໍ່ແມ່ນການຝຶກພຽງຄັ້ງດຽວ ແຕ່ເປັນແຜນການຝຶກແບບເຊື່ອມໂຍງກັນ, ໂດຍມີການປ້ອນຂໍ້ມູນ, ການປະຕິບັດ, ແລະ ການຕິດຕາມຢ່າງປົກກະຕິ ເພື່ອ ປ້ອນເຂົ້າໃນວົງຈອນການສ້າງຄວາມເຂັ້ມແຂງທີ່ໃຫຍ່ຂຶ້ນ ເຊິ່ງເຮັດໃຫ້ຂະບວນການມີຊີວິດຊີວາ ແລະ ມີຄວາມສອດຄ່ອງ. ສິ່ງນີ້ຊ່ວຍເຮັດໃຫ້ເກີດມີການປ່ຽນແປງທາງທັດສະນະຄະຕິ ແລະ ພຶດຕິກຳໄປເທື່ອລະກ້າວ ເພື່ອ ໃຫ້ໝັ້ນໃຈວ່າຈະມີໂອກາດຫຼາຍທີ່ສຸດ ສຳລັບ ແບບຢ່າງຂອງການເປັນຜູ້ນຳແບບມີສ່ວນຮ່ວມ.

*ວິທີການ*

**ການຝຶກອົບຮົມນີ້ໃຊ້ ວິທີການຮຽນຮູ້ແບບມີສ່ວນຮ່ວມຂອງຜູ້ໃຫຍ່, ເຊິ່ງທັງເນື້ອໃນ ແລະ ຂະບວນການຮຽນຮູ້ມີໄວ້ ເພື່ອ ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ເຂົ້າຮ່ວມ.** ຄູຝຶກ ເຮັດໜ້າທີ່ເປັນຜູ້ອຳນວຍຄວາມສະດວກ ຫຼາຍກວ່າ ການເຮັດໜ້າທີ່ເປັນຄູ ຜູ້ເຂົ້າຮ່ວມຫ້າວຫັນໃນການເຮັດໃຫ້ຫົວຂໍ້ ແລະ ພາກຕ່າງໆຂອງການຝຶກອົບຮົມ ມີຊີວິດຊີວາ ຫຼາຍກວ່າການຮັບຟັງຜູ້ບັນຍາຍແຕ່ຢ່າງດຽວ. ພວກເຂົາຮຽນຮູ້ ແລະ ສ້າງແນວຄວາມຄິດ ຜ່ານຂະບວນການການສົນທະນາ ແລະ ວິເຄາະຫົວຂໍ້ແບບລວມໝູ່, ຝຶກແອບທັກສະ, ແລະ ນຳໃຊ້ແນວຄວາມຄິດ ເພື່ອ ລະບຸບັນຫາ ແລະ ວິທີການແກ້ໄຂ. ເນື່ອງຈາກການຝຶກອົບຮົມນີ້ ກ່າວເຖິງ ຫົວຂໍ້ທີ່ອາດກໍ່ໃຫ້ເກີດການໂຕ້ຖຽງກັນ, ແຕ່ວິທີການນີ້ ພະຍາຍາມສ້າງບັນຍາກາດການຮຽນຮູ້ ທີ່ນຳໄປສູ່ຄວາມໄວ້ວາງໃຈ ທີ່ຊຸກຍູ້ໃຫ້ຜູ້ເຂົ້າຮ່ວມເປີດໃຈ ແລະ ສະແດງຄວາມຄິດເຫັນທີ່ແຕກຕ່າງກັນຂອງພວກເຂົາ ໃນຂະນະທີ່ເຮັດວຽກຮ່ວມກັນ ດ້ວຍຄວາມເຄົາລົບ.

ເຕັກນິກທີ່ນຳໃຊ້ໃນການຝຶກອົບຮົມປະກອບມີ:

- ຄຳຖາມສຳລັບການສົນທະນາ – ຄຳຖາມເປີດແບບກະທັດຮັດ ແລະ ກົງໄປກົງມາ ທີ່ຖືກອອກແບບມາ ເພື່ອ ນຳສະເໜີຫົວຂໍ້ຕ່າງໆ ແລະ ກະຕຸ້ນການຄົ້ນຄິດ ແລະ ການສົນທະນາ; ຄຳຖາມທີ່ຕໍ່ເນື່ອງ ມັກຖືກສ້າງໃຫ້ເຊື່ອມຕໍ່ກັນໄດ້ ເພື່ອ ຊ່ວຍຊີ້ນຳການວິເຄາະ ແລະ ການສົນທະນາ;
- ການລະດົມສະໝອງ – ເພື່ອ ເກັບກຳແນວຄວາມຄິດ ກ່ຽວກັບຫົວຂໍ້ສະເພາະ ຫຼື ຄຳຖາມ ຈາກຜູ້ເຂົ້າຮ່ວມໃຫ້ຫຼາຍເທົ່າທີ່ເປັນໄປໄດ້; ການແນະນຳຫົວຂໍ້ໃໝ່ໆ ຫຼື ເລີ່ມກິດຈະກຳແມ່ນວິທີການທີ່ດີ.
- ກຸ່ມສົນທະນານ້ອຍ – ຈັດກຸ່ມນ້ອຍໆ ເພື່ອ ປຶກສາຫາລື ກ່ຽວກັບຫົວຂໍ້ໃດໜຶ່ງ ແລະ ສະເໜີແນວ ແລກປ່ຽນຄວາມຄິດເຫັນລະຫວ່າງຜູ້ເຂົ້າຮ່ວມ; ກຸ່ມສົນທະນານ້ອຍນີ້ເຮັດໃຫ້ຜູ້ເຂົ້າຮ່ວມຮູ້ສຶກບໍ່ຢ້ານກົວ ແລະ ສາມາດແບ່ງປັນທັດສະນະຄະຕິ ຫຼື ປະສົບການຂອງພວກເຂົາໄດ້ງ່າຍຂຶ້ນ; ກິດຈະກຳນີ້ຊ່ວຍເຮັດໃຫ້ ຜູ້ເຂົ້າຮ່ວມທີ່ມີຄວາມໝັ້ນໃຈໃນຕົນເອງໜ້ອຍສາມາດມີສ່ວນຮ່ວມໄດ້ຫຼາຍຂຶ້ນ ແລະ ເສີມສ້າງຄວາມໝັ້ນໃຈໃນການເວົ້າໃນກຸ່ມທີ່ໃຫຍ່ຫຼາຍຂຶ້ນ.
- ຄຳອະທິບາຍ – ການນຳສະເໜີໃນຂະໜາດທີ່ພໍດີ ສາມາດສື່ສານປະເດັນທີ່ສຳຄັນ ສຳລັບ ການສົນທະນາ ແລະການໂຕ້ຕອບກັນໄດ້.
- ກິດຈະກຳກຸ່ມ - ກິດຈະກຳໃນຮູບແບບປະຕິສຳພັນ (ເຊັ່ນ: ການສະແດງບົດບາດສົມມຸດ, ການຍ່າງຊົມ, ການຈັດປະເພດ , ແລະ ອື່ນໆ) ທີ່ເຮັດໃຫ້ການຮຽນຮູ້ມີສ່ວນຮ່ວມ ແລະ ການຫລິ້ນກິດຈະກຳຕ່າງໆ ຊ່ວຍໃຫ້ຜູ້ເຂົ້າຮ່ວມໄດ້ຝຶກແອບທັກສະ ທີ່ຖືກກ່າວເຖິງໃນການຝຶກອົບຮົມນີ້ ເຊັ່ນ: ການສື່ສານ, ການຟັງ, ການເຮັດວຽກເປັນທີມ, ແລະ ອື່ນໆ.
- ການເຮັດວຽກເປັນກຸ່ມ – ການຈັດກຸ່ມຍ່ອຍ ເຮັດວຽກຮ່ວມກັນ ໂດຍອີງຕາມຈຸດປະສົງຂອງກິດຈະກຳ, ເຊິ່ງສາມາດຈັດກຸ່ມໂດຍອີງຕາມກຸ່ມຂອງຄະນະກຳມະການຂອງພວກເຂົາເອງ ເພື່ອ .....ທີມງານ ຫຼື ຈັດກຸ່ມແບບສຸ່ມ ເພື່ອ ໃຫ້ຜູ້ເຂົ້າ

ຮ່ວມສາມາດເຮັດວຽກ ແລະ ແລກປ່ຽນຄວາມຄິດເຫັນກັບຜູ້ເຂົ້າຮ່ວມທີ່ບໍ່ໄດ້ຢູ່ໃນຊຸມຊົນຂອງຕົນ; ນອກນັ້ນກໍ່ຄວນຄຳນຶງເຖິງ ເລື່ອງບົດບາດຍິງ-ຊາຍຄວນຕະຫຼອດເວລາ.

- ການເຮັດວຽກເປັນຄູ່ – ກຸ່ມລະສອງຄົນ; ຜູ້ເຂົ້າຮ່ວມແຕ່ລະຄົນໄດ້ສະແດງຄວາມຄິດເຫັນຂອງພວກເຂົາ. ໃນເວລາທີ່ຢູ່ໃນກຸ່ມໃຫຍ່ ຜູ້ເຂົ້າຮ່ວມບາງຄົນອາດຈະຮູ້ສຶກອາຍ ໃນຂະນະທີ່ ມັນເປັນເລື່ອງຍາກທີ່ຈະຢູ່ງຽບ ໃນເວລາທີ່ເຮັດວຽກຢູ່ກຸ່ມທີ່ມີແຕ່ສອງຄົນ!
- ລາຍງານຍ້ອນຫລັງ – ຮວບຮວມແນວຄວາມຄິດທັງໝົດຈາກກຸ່ມ ຫຼື ຄູ່ຕ່າງໆທີ່ເຂົ້າຮ່ວມ; ໂດຍການເລີ່ມຈາກຈຸດໃດໜຶ່ງພາຍກຸ່ມ ແລະ ເຮັດຊ້ຳເປັນວົງມົນ ຈົນກ່ວາທຸກຄົນໄດ້ສະແດງແນວຄວາມຄິດ; ສິ່ງນີ້ຊ່ວຍຮັບປະກັນວ່າ ທຸກກຸ່ມສາມາດປະກອບສ່ວນເທົ່າທຽມ ແລະ ຫຼີກເວັ້ນການຊ້ຳກັນ.
- ກິດຈະກຳກະຕຸ້ນ – ເກມທີ່ສາມາດສ້າງຄວາມສົດຊື່ນໃຫ້ແກ່ຜູ້ເຂົ້າຮ່ວມ ລະຫວ່າງກິດຈະກຳ ຫຼື ເພີ່ມພະລັງໃຫ້ແກ່ກິດຈະກຳການຮຽນຮູ້ນັ້ນ ທຳລາຍຄວາມເບື່ອໜ່າຍ, ກະຕຸ້ນພະລັງງານ ໂດຍການຂໍໃຫ້ຜູ້ເຂົ້າຮ່ວມລຸກຂຶ້ນ ແລະ ເຄື່ອນຍ້າຍໄປມາ, ສ້າງຄວາມມ່ວນຊື່ນ ແລະ ຄວາມສຸກ.
- ບົດສັງລວມ – ສະຫຼຸບໂດຍຫຍໍ້ ເພື່ອ ຮວບຮວມປະເດັນຫຼັກ ແລະ ຈຸດສຳຄັນຕ່າງໆ ໃນຕອນທ້າຍຂອງກິດຈະກຳ ຫຼື ພາກ.

### *ໂຄງສ້າງ*

**ຄູ່ມືສະບັບນີ້ປະກອບດ້ວຍ 9 ພາກລວມທັງພາກກິຈະກຳເປີດຊຸດອົບຮົມ ແລະ ປິດ. ພາກທີ 1-6 ສຳລັບ ຜູ້ເຂົ້າຮ່ວມເພດຍິງ ແລະ ຊາຍຮ່ວມກັນ, ສ່ວນ ພາກທີ 7 - 9 ແມ່ນ ສຳລັບ ຜູ້ເຂົ້າຮ່ວມເພດຍິງເທົ່ານັ້ນ. ການຝຶກອົບຮົບຈະດຳເນີນໄປຕາມເປັນລຳດັບ ແລະ ເຊື່ອມຕໍ່ກັນໄດ້, ແຕ່ກໍ່ຍັງສາມາດແຍກເປັນເອກະລາດຂອງໃຜມັນໄດ້ເຊັ່ນກັນ.** ບົດຮຽນທັງຫມົດນີ້ ຄວນໃຊ້ເວລາໃນການຝຶກປະມານ ສາມມື້ເຄິ່ງ (3,5 ວັນ). ຕົວຢ່າງວາລະການຝຶກອົບຮົມແມ່ນສະໜອງໃຫ້ໃນໜ້າ 14.

ແຕ່ລະແຜນການຝຶກອົບຮົມມີການແນະນຳຂັ້ນຕອນລະອຽດ ແລະ ມີໂຄງປະກອບພື້ນຖານການນຳສະເຫນີດັ່ງນີ້:

- ຈຸດປະສົງການຮຽນຮູ້: ສິ່ງທີ່ຜູ້ເຂົ້າຮ່ວມຈຳເປັນຕ້ອງຮູ້ ຫຼື ເຮັດໄດ້ ໃນຕອນທ້າຍຂອງການຝຶກອົບຮົມ.
- ຕາຕະລາງສະຫຼຸບ: ສະຫຼຸບກອບການຝຶກອົບຮົມໂດຍຫຍໍ້ ລວມທັງ ໄລຍະເວລາຂອງແຕ່ລະຂັ້ນຕອນ, ວິທີການທີ່ນຳໃຊ້ໃນແຕ່ລະຂັ້ນຕອນ, ແລະ ອຸປະກອນທີ່ຈຳເປັນ ເພື່ອ ອຳນວຍຄວາມສະດວກໃຫ້ພວກເຂົາ.
- ຂັ້ນຕອນ: ການໄຫຼວຽນຂອງເນື້ອຫາ ແລະ ກິດຈະກຳ, ລວມທັງວິທີການທີ່ນຳໃຊ້, ຄຳຖາມທີ່ຈະຖາມ, ຕົວຢ່າງການອະທິບາຍ ແລະ ບົດສະຫຼຸບທີ່ຈະເວົ້າ, ແລະ ຕົວຢ່າງການຕອບ ເພື່ອ ຊ່ວຍໃຫ້ຜູ້ອຳນວຍຄວາມສະດວກສາມາດ ຄາດເດົາສິ່ງທີ່ຈະເກີດຂຶ້ນ ແລະ ທິດທາງຂອງການການສົນທະນາ.

ໃນຄູ່ມືນີ້, *ຄຳສັບຕ່າງໆທີ່ເປັນຕົວເນີ້ງ ແມ່ນ ຕົວຢ່າງ ເພື່ອໃຫ້ ຜູ້ອຳນວຍຄວາມສະດວກເວົ້າ.*

### *ເນື້ອໃນ*

ພາກຕ່າງໆຂອງການຝຶກອົບຮົມແມ່ນແນ່ໃສ່ ການນຳພາແບບມີສ່ວນຮ່ວມ ແລະ ເພີ່ມຄວາມສາມາດຂອງຜູ້ນຳໃຫ້ມີຄວາມສາມາດ ແລະ ທັກສະຫຼັກທີ່ກ່ຽວຂ້ອງ ເພື່ອ ຊ່ວຍໃຫ້ພວກເຂົາສາມາດລະບຸ ແລະ ແກ້ໄຂບັນຫາການລວມຢູ່ໃນຊຸມຊົນ. ດ້ານລຸ່ມນີ້ແມ່ນ

ສັງລວມເນື້ອໃນການຝຶກອົບຮົມ:

| # | ພາກ | ຈຸດປະສົງ ຂອງແຕ່ລະພາກ |
|---|---|---|
| # | **ກິດຈະກຳເປີດຊຸດອົບຮົມ** | • ເຂົ້າໃຈຈຸດປະສົງຂອງການຝຶກອົບຮົມ<br>• ອະທິບາຍຫົວຂໍ້ ແລະ ວາລະການຝຶກອົບຮົມ<br>• ສ້າງຄວາມລຶ້ງເຄີຍກັບຜູ້ເຂົ້າຮ່ວມ ແລະ ຄູຝຶກ<br>• ເຂົ້າໃຈກົດລະບຽບພື້ນຖານ |
| **ແນວຄິດຄວາມ ກ່ຽວກັບ ຄວາມເປັນຜູ້ນຳທີ່ມີສ່ວນຮ່ວມ** | | |
| 1 | **ເຂົ້າໃຈກ່ຽວກັບຄວາມເປັນຜູ້ນຳ** | • ອະທິບາຍ ຄຳນິຍາມ ຄວາມເປັນຜູ້ນຳ<br>• ໄຈ້ແຍກຄວາມແຕກຕ່າງລະຫວ່າງ ຮູບແບບ ແລະ ຄຸນສົມບັດຂອງການເປັນ<br>• ເຂົ້າໃຈວ່າສິ່ງໃດສາມາດເຮັດໃຫ້ເກີດມີຜູ້ນຳທີ່ດີ |
| 2 | **ຄວາມເປັນຜູ້ນຳ ແລະ ການພັດທະນາໂດຍຊຸມຊົນເປັນເຈົ້າການ (CDD)** | • ອະທິບາຍກ່ຽວກັບ ຄຸນຄ່າ ແລະ ຫຼັກການ ຂອງ ການພັດທະນາໂດຍຊຸມຊົນເປັນເຈົ້າການ (CDD) ແລະ ການນຳໃຊ້ສິ່ງເຫຼົ່ານີ້ເຂົ້າໃນການນຳພາຊຸມຊົນ<br>• ເຂົ້າໃຈເຖິງແນວຄວາມຄິດ ແລະ ການປະຕິບັດຕາມຄວາມຮັບຜິດຊອບ<br>• ເລີ່ມນຳໃຊ້ ຫຼັກການການພັດທະນາໂດຍຊຸມຊົນເປັນເຈົ້າການ (CDD) ເຂົ້າມານຳໃຊ້ໃນຖານະເປັນຜູ້ນຳຂອງບ້ານ |
| 3 | **ຄວາມເຂົ້າໃຈກ່ຽວກັບ ການຈຳແນກ, ການກີດກັ້ນ ແລະ ຄວາມບໍ່ສະເໝີພາບ** | • ອະທິບາຍແນວຄວາມຄິດຂອງການຈຳແນກ, ການກີດກັນ, ແລະ ຄວາມບໍ່ສະເໝີພາບ<br>• ລະບຸການຈຳແນກ, ການກີດກັນ, ແລະ ຄວາມບໍ່ສະເຫມີພາບໃນຊຸມຊົນຂອງພວກເຂົາ ແລະ ວິເຄາະສາເຫດທີ່ແທ້ຈິງຂອງມັນ<br>• ອະທິບາຍເຖິງຄວາມແຕກຕ່າງ ລະຫວ່າງ ເພດສະພາບ ແລະ ເພດ<br>• ເຂົ້າໃຈ ບັນທັດຖານ ເລື່ອງ ບົດບາດຍິງ-ຊາຍ ແລະ ຜົນກະທົບທີ່ມີຕໍ່ຊຸມຊົນ<br>• ທົບທວນຢ່າງມີເຫດຜົນ ກ່ຽວກັບ ບັນທັດຖານທາງສັງຄົມ ທີ່ເປັນອັນຕະລາຍຕໍ່ການພັດທະນາຂອງຊຸມຊົນ |
| **ທັກສະຄວາມເປັນຜູ້ນຳທີ່ມີສ່ວນຮ່ວມ** | | |
| 4 | **ການວາງແຜນສຳລັບການມີສ່ວນຮ່ວມ** | • ວິເຄາະສະພາບສັງຄົມຂອງຊຸມຊົນ ແລະ ສ້າງວິໄສທັດສຳລັບການມີສ່ວນຮ່ວມ<br>• ສ້າງແຜນປະຕິບັດການມີສ່ວນຮ່ວມ<br>• ພິຈາລະນາທັກສະການເປັນຜູ້ນຳທີ່ຈຳເປັນ ເພື່ອຈັດຕັ້ງປະຕິບັດແຜນຂອງພວກເຂົາ |
| 5 | **ທັກສະການສື່ສານ** | • ເຂົ້າໃຈເຖິງຄວາມສຳຄັນຂອງການສື່ສານທີ່ດີ ເພື່ອ ການນຳພາທີ່ມີປະສິດທິພາບ<br>• ອະທິບາຍກ່ຽວກັບແນວທາງ ແລະ ອົງປະກອບຂອງການສື່ສານທີ່ແຕກຕ່າງກັນ<br>• ຝຶກແອບທັກສະການສື່ສານເຊັ່ນ: ການເວົ້າໃນສາທາລະນະ, ແລະ ການຟັງຢ່າງກະຕືລືລົ້ນ |
| 6 | **ທັກສະການເຮັດວຽກຮ່ວມກັນ** | • ເຂົ້າໃຈເຖິງຄວາມສຳຄັນຂອງຄວາມເຊື່ອໃຈ ແລະ ການເຮັດວຽກເປັນທີມ ໃນຖານະເປັນຄະນະກຳມະການນຳພາທີ່ມີປະສິດທິພາບ<br>• ສືບຕໍ່ການສ້າງຄວາມເຊື່ອໃຈ ແລະ ຄວາມສາມາດໃນການເຮັດວຽກເປັນທີມກັບສະມາຊິກຂອງຄະນະກຳມະການທ່ານອື່ນໆ |
| **ຄວາມເປັນຜູ້ນຳຂອງແມ່ຍິງ (ສະເພາະແມ່ຍິງເທົ່ານັ້ນ)** | | |
| 7 | **ຄວາມໝັ້ນໃຈໃນຕົນເອງ** | • ເຂົ້າໃຈເຖິງຄວາມສຳຄັນຂອງການເຫັນຄຸນຄ່າຂອງຕົນເອງ ເຊິ່ງ ເປັນທ່າແຮງການເປັນຜູ້ນຳ ແລະ ວິທີການພັດທະນາ<br>• ມີຄວາມຮັບຮູ້ ກ່ຽວກັບ ການເສີມສ້າງຄວາມເຂັ້ມແຂງຂອງແມ່ຍິງ |

| | | |
|---|---|---|
| | | • ເສີມສ້າງການໄຈ້ແຍກຈຸດແຂງ ແລະ ຈຸດອ່ອນຂອງຕົນເອງ<br>• ຮູ້ສຶກດີກັບຕົນເອງຫຼາຍຂຶ້ນ |
| **8** | **ຄວາມຢືດຢຸ່ນ** | • ເຂົ້າໃຈຄວາມສຳຄັນຂອງຄວາມຢືດຢຸ່ນ ແລະ ວິທີການພັດທະນາກົນລະຍຸດ ເພື່ອ ສ້າງຄວາມຢືດຢຸ່ນ<br>• ເຂົ້າໃຈກ່ຽວກັບເຄືອຂ່າຍ ແລະ ວິທີການສ້າງເຄືອຂ່າຍ ເພື່ອ ຮັບການສະໜັບສະໜູນ<br>• ການໂຕ້ຕອບຕໍ່ສິ່ງທ້າທາຍ ແລະ ການຝຶກຝົນການດູແລຕົນເອງ |
| **9** | **ການກຳນົດຄວາມຕ້ອງການ ແລະ ການວາງແຜນ[9]** | • ເຂົ້າໃຈຮູບແບບຄວາມຮຸນແຮງທາງເພດ ແລະ ວິທີການອ້າງອີງກໍລະນີ<br>• ກຳນົດໂຄງການ ຫຼື ກິດຈະກຳທີ່ມີທ່າແຮງ ເພື່ອ ຕອບສະໜອງຄວາມຕ້ອງການຂອງແມ່ຍິງໃນຊຸມຊົນ |

| | |
|---|---|
| **ກິດຈະກຳປິດຊຸດອົບຮົມ** | • ສຳເລັດການປະເມີນການຝຶກອົບຮົມຈາກຜູ້ເຂົ້າຮ່ວມ<br>• ປະທານກ່າວປິດຊຸດອົບຮົມ |

## ຜົນໄດ້ຮັບ

ຜົນໄດ້ຮັບຂອງກອງປະຊຸມການຝຶກອົບຮົມທາງການຄວນປະກອບມີ:

1) ແຜນປະຕິບັດງານແບບມີສ່ວນຮ່ວມ
2) ລາຍການກິດຈະກຳ ການສ້າງຄວາມເຂັ້ມແຂງຂອງແມ່ຍິງ ແລະ ແຜນງານກິດຈະກຳເສີມ

## *ຄູຝຶກ*

ສຳລັບການຝຶກອົບຮົມແຕ່ລະຄັ້ງ, ທີມຄູຝຶກຮ່ວມຄວນມີ 2 ທ່ານ, ໂດຍເປັນຜູ້ຊາຍໜຶ່ງຄົນ ແລະ ແມ່ຍິງໜຶ່ງຄົນ, ແລະ ພວກເຂົາຄວນເປັນແບບຢ່າງ ໃນການເຮັດວຽກເປັນທີມ ແລະ ມີການຮ່ວມມືຢ່າງຮຽບຮ້ອຍ, ເຊິ່ງຄູຝຶກແຕ່ລະຄົນ ຈະປ່ຽນພຽນກັນ ອຳນວຍຄວາມສະດວກໃນແຕ່ລະພາກ ແລະ ສະໜັບສະໜູນເຊິ່ງກັນ ແລະ ກັນ. ຄູຝຶກຄວນມີຄວາມສາມາດໃນການສື່ສານພາສາທ້ອງຖິ່ນໄດ້ ແລະ ໂດຍສະເພາະຄວນເປັນຄົນຈາກທ້ອງຖິ່ນ. ສຳລັບພາກສະເພາະແມ່ຍິງ (ພາກທີ 7-9) ຄູຝຶກ ເພດຍິງ ຄວນເປັນຜູ້ໃຫ້ການຝຶກອົບຮົມ (ບໍ່ຄວນໃຫ້ຄູຝຶກເພດຊາຍເຂົ້າຮ່ວມພາກເລົ່ານີ້).

[9] ໃນພາກນີ້ ໄດ້ນຳສະເໜີ ໃຫ້ ຜູ້ນຳຍິງ ໄດ້ຮັບຮູ້ ກ່ຽວກັບ ວິທີການສິ່ງຕໍ່ກໍລະນີການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ ແລະ/ຫຼື ຮູບແບບຄວາມຮຸນແຮງທາງເພດອື່ນໆ ເພື່ອນຳໄປພິຈາລະນາ. ອີງຕາມບົດບັນທຶກການປະຕິບັດງານທີ່ດີ ຂອງ ກອບດ້ານສິ່ງແວດລ້ອມ ແລະ ສັງຄົມ (ESF) ກ່ຽວກັບ ການແກ້ໄຂບັນຫາການຂູດຮີດທາງເພດ ແລະ ການລ່ວງລະເມີດທາງເພດໃນການດຳເນີນງານ IPF, ໂຄງການທັງຫມົດໄດ້ຮັບການແນະນຳໃຫ້ ກຳນົດ ແລະ ສ້າງແຜນທີ່ ຜູ້ໃຫ້ບໍລິການ, ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດ ແລະ ອົງການຈັດຕັ້ງຂອງຊຸມຊົນ ທີ່ເຮັດວຽກຕ້ານການຂູດຮີດທາງເພດ, ຫຼື ຜູ້ໃຫ້ບໍລິການຈາກຂົງເຂດອື່ນໆ ທີ່ ເປັນໄປຕາມມາດຕະຖານສາກົນ ໃນການສະໜອງການບໍລິການເພື່ອແກ້ໄຂບັນຫາການຂູດຮີດທາງເພດ. ດັ່ງນັ້ນ, ທີມງານໂຄງການຄວນມີແຜນທີ່ຜູ້ໃຫ້ບໍລິການ ເພື່ອແກ້ໄຂບັນຫາການຂູດຮີດທາງເພດ ເພື່ອແບ່ງປັນກັບບັນດາຜູ້ນຳຍິງ, ລວມເຖິງຂັ້ນຕອນການສົ່ງຕໍ່ ແລະ ເສັ້ນທາງທີ່ມີຢູ່, ແລະ ມີໃຜແນ່ທີ່ເປັນຜູ້ຊ່ຽວຊານໃນເລື່ອງນີ້ ຫຼື ຜູ້ປະສານງານຂອງໂຄງການ. ດັ່ງນັ້ນ, ຄູຝຶກຈຳເປັນຕ້ອງໄດ້ຮັບຂໍ້ມູນ ເພື່ອ ໃຫ້ພວກເຂົາສາມາດແບ່ງປັນກັບ ຜູ້ເຂົ້າຮ່ວມ ໃນລະຫວ່າງການຝຶກອົບຮົມນີ້.

*ບົດບາດຂອງຄູຝຶກ*

**ບົດບາດຂອງຄູຝຶກແມ່ນ ການອຳນວຍຄວາມສະດວກ ໃນການປະຕິສຳພັນ ແລະ ການແລກປ່ຽນ ລະຫວ່າງຜູ້ໃຫຍ່ທີ່ກຳລັງຮຽນຮູ້ຮ່ວມກັນ ໂດຍການກຳນົດກອບການສົນທະນາກ່ຽວກັບຫົວຂໍ້, ຮັກສາສະພາບແວດລ້ອມທີ່ເອື້ອອຳນວຍ ຕໍ່ການຮຽນຮູ້ ແລະການແລກປ່ຽນ, ຊຸກຍູ້ການມີສ່ວນຮ່ວມຢ່າງຫ້າວຫັນ, ແລະ ສະຫນັບສະຫນູນຜູ້ເຂົ້າຮ່ວມ.** ເປົ້າໝາຍແມ່ນ ການສ້າງຄວາມເຂັ້ມແຂງໃຫ້ຜູ້ເຂົ້າຮ່ວມ ໂດຍການສ້າງຄວາມຫມັ້ນໃຈໃນຕົນເອງ ແລະ ຊ່ວຍໃຫ້ພວກເຂົາມີຄວາມຮູ້ ແລະ ທັກສະໃນການເຮັດວຽກເປັນຜູ້ນຳທີ່ມີສ່ວນຮ່ວມໃນຊຸມຊົນ. ສະນັ້ນ, ບັນຍາກາດການຝຶກອົບຮົມຕ້ອງເປັນບັນຍາກາດ ທີ່ ຜູ້ເຂົ້າຮ່ວມ ມີໂອກາດໄດ້ຮຽນຮູ້ ໂດຍການທົບທວນ, ແບ່ງປັນ, ປະຕິບັດ, ແລະ ທົດລອງ, ແລະ ຮູ້ສຶກສະບາຍໃຈເວລາຂໍຄວາມຊ່ວຍເຫຼືອ ເມື່ອເກີດມີຄວາມລັງເລ ຫຼື ສົງໄສ. ຄູຝຶກ ມີບົດບາດ ໃນການສະໜອງພື້ນທີ່ປອດໄພທັງທາງດ້ານກາຍຍະພາບ ແລະ ຈິດໃຈ ທີ່ຊ່ວຍໃຫ້ມີ ຂະບວນການຮຽນຮູ້ຮ່ວມກັນຢ່າງເປີດເຜີຍ, ແນະນຳຜູ້ເຂົ້າຮ່ວມຜ່ານການຝຶກຫັດ, ນຳເອົາຄວາມຮູ້ ແລະ ປະສົບການຂອງຜູ້ເຂົ້າຮ່ວມ. ຜົນໄດ້ຮັບນີ້ເກີດມີການແບ່ງປັນ ແລະ ການສົນທະນາຢ່າງເຕັມເມັດເຕັມໜ່ວຍ. ຄູຝຶກບໍ່ຈຳເປັນຕ້ອງເປັນຜູ້ຮູ້ທຸກເລື່ອງ ຫລື ສາມາດຕອບໄດ້ທຸກຄຳຖາມ. ການສອນບໍ່ແມ່ນບົດບາດຂອງ ຄູຝຶກ, ແຕ່ບົດບາດຂອງພວກເຂົາແມ່ນການສະໜັບສະໜູນຜູ້ເຂົ້າຮ່ວມ ໃຫ້ສາມາດສະຫຼຸບຜົນຂອງພວກເຂົາ ໂດຍຜ່ານການສົນທະນາ, ກິດຈະກຳ, ແລະ ການຄົ້ນຄິດໄຕ່ຕອງ.

*ການສະໜັບສະໜູນການກະກຽມຄວາມພ້ອມຕ່າງໆ*

**ການຝຶກອົບຮົມທີ່ຖືກຈັດສັນໃຫ້ເປັນລະບຽບຮຽບຮ້ອຍ ແລະ ດຳເນີນໄປຢ່າງເລື່ອນໄຫຼ ສາມາດສົ່ງຜົນກະທົບຢ່າງຫຼວງຫຼາຍຕໍ່ປະສົບການການຮຽນຮູ້ຂອງຜູ້ເຂົ້າຮ່ວມ.** ສະຖານທີ່ການຝຶກອົບຮົມຄວນມີຂະໜາດໃຫຍ່ພຽງພໍທີ່ຈະໃຫ້ທຸກຄົນສາມາດນັ່ງເປັນວົງມົນ ແລະ ແຍກເປັນກຸ່ມນ້ອຍໆໄດ້, ຄວນມີແສງສະຫວ່າງທີ່ພຽງພໍ ແລະ ອາກາດສົດຊື່ນ, ແລະ ຄວນມີເຄື່ອງເຟີນິເຈີທີ່ເໝາະສົມ , ນອກນັ້ນ, ກໍ່ຄວນມີຄວາມສະດວກສະບາຍ ແລະ ຈັດຢູ່ໃນສະຖານທີ່ທີ່ປາດສະຈາກການລົບກວນ, ຜູ້ເຂົ້າຮ່ວມທັງໝົດຕ້ອງສາມາດເຂົ້າເຖິງໄດ້, ແລະ ເປັນສະຖານທີ່ທີ່ປອດໄພ ແລະ ມີສິ່ງອຳນວຍຄວາມສະດວກ. ຈຳນວນຜູ້ເຂົ້າຮ່ວມທີ່ເຫມາະສົມແຕ່ລະຊຸດ ຄວນມີ **20** ຄົນ ໃນນັ້ນ **50%** ຄວນແມ່ນ ຜູ້ເຂົ້າຮ່ວມ**ເພດຍິງ** . ນອກນັ້ນ, ຄວນຮັບຜິດຊອບ ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການເດີນທາງ, ທີ່ພັກ, ແລະ ການສູນເສຍລາຍຮັບເນື່ອງຈາກການເຂົ້າຮ່ວມຝຶກອົບຮົມ ແລະ ຄວນກຳຈັດສິ່ງກີດຂວາງທີ່ເຮັດໃຫ້ແມ່ຍິງບໍ່ສາມາດເຂົ້າຮ່ວມການຝຶກອົບຮົມໄດ້ ເນື່ອງຈາກກັງວົນກ່ຽວກັບການດູແລລູກເຕົ້າ ແລະ ຄວນຈັດຫາທີ່ພັກສຳລັບແມ່ຍິງທີ່ເອົາລູກຂອງຕົນມານຳ.

**ອຸປະກອນ**

**ຄູຝຶກຕ້ອງກະກຽມອຸປະກອນທີ່ຈຳເປັນ ສຳລັບ ການຝຶກອົບຮົມໄວ້ລ່ວງໜ້າ.** ປົກກະຕິແລ້ວ, ຊຸດອຸປະກອນມາດຕະຖານແມ່ນປະກອບດ້ວຍ: ເຄື່ອງຂຽນ (ສໍຂຽນກະດານ, ມາກເກີ້ສີ, ບິກ, ສໍ, ແລະ ອື່ນໆ), ເຈ້ຍແຜ່ນໃຫຍ່, ກະດານ, ເຈ້ຍສີ, ສະກອດຕິດເຈ້ຍແຜ່ນໃຫຍ່ ຫຼື ເຈ້ຍ, ເຈ້ຍໂນດແບບຕິດໄດ້, ໝາກບານ ຫຼື ວັດຖຸທີ່ຄ້າຍຄືກັນ ທີ່ສາມາດເປັນໂຍນໄປມາໄດ້, ສະກອດເຈ້ຍ, ຄູຝຶກຄວນມີປຶ້ມຄູ່ມືຝຶກອົບຮົມ ລວມທັງສື່ທີ່ສາມາດສື່ສານຜ່ານທາງການເບິ່ງເຫັນຕ່າງໆ ກໍ່ຄວນກຽມພ້ອມໄວ້ລ່ວງຫນ້າ.

## ໃບຢັ້ງຢືນ

ໃບຢັ້ງຢືນຄວນຖືກມອບຫຼັງຈາກສຳເລັດການຝຶກອົບຮົມ. ໃບຢັ້ງຢືນຖືເປັນຕົວແທນທີ່ສະແດງໃຫ້ເຫັນເຖິງ ຄວາມສຳເລັດແບບຮູບປະທຳ ທີ່ມີຄວາມຫມາຍ ໂດຍສະເພາະ ສຳລັບ ຜູ້ເຂົ້າຮ່ວມທີ່ບໍ່ໄດ້ຮັບການສຶກສາ, ລວມທັງເຮັດໃຫ້ໂຄງການໄດ້ຮັບການຮັບຮູ້ ແລະ ມີຄວາມໜ້າເຊື່ອຖືຫຼາຍຂຶ້ນ.

## ຄຳແນະນຳສຳລັບຄູຝຶກ

1. **ກຽມໂຕໃຫ້ພ້ອມ ແລະ ເປັນລະບຽບ.** ໃຫ້ແນ່ໃຈວ່າ ທ່ານໄດ້ອ່ານ ແລະ ເຂົ້າໃຈຄູ່ມືຢ່າງລະອຽດ, ມີຄວາມຊັດເຈນກ່ຽວກັບຈຸດປະສົງການຝຶກອົບຮົມສຳລັບແຕ່ພາກ ແລະ ການຝຶກອົບຮົມໂດຍລວມ, ໝັ້ນໃຈວ່າທ່ານມີຄວາມຮູ້ ແລະ ປະສົບການພຽງພໍກ່ຽວກັບຫົວຂໍ້ການຝຶກອົບຮົມ, ແລະ ໃຫ້ທ່ານໄດ້ທົບທວນຂັ້ນຕອນ, ວິທີການ ແລະ ການກະກຽມຕົວຢ່າງ ໃຫ້ແນ່ໃຈວ່າທ່ານໄດ້ສອດຄ່ອງກັບຄູຝຶກຮ່ວມຂອງທ່ານກ່ຽວກັບພາລະບົດບາດ ແລະ ວິທີທີ່ທ່ານຈະແບ່ງຄວາມຮັບຜິດຊອບຕະຫຼອດການຝຶກອົບຮົມ ເພື່ອໃຫ້ແນ່ໃຈວ່າການປະຕິບັດງານ ແລະ ການເປັນຄູ່ຮ່ວມງານເປັນໄປຢ່າງລື່ນໄຫຼ. ຮັບປະກັນວ່າໄດ້ກຽມສະຖານທີ່ ແລະ ອຸປະກອນໃຫ້ພ້ອມກ່ອນຮອດມື້ອົບຝຶກອົບຮົມ.
2. **ຕົງຕໍ່ເວລາ ແລະ ຫ້າມຊ້າ.** ຖ້າທ່ານບໍ່ເຄົາລົບຕໍ່ເວລາການຝຶກອົບຮົມ, ຜູ້ເຂົ້າຮ່ວມກໍ່ເຊັ່ນກັນ.
3. **ຢ່າຮີບຮ້ອນ.** ຫາຈັງຫວະທີ່ຜູ້ເຂົ້າຮ່ວມຮູ້ສຶກສະດວກສະບາຍ.
4. **ສື່ສານກັນໃຫ້ຈະແຈ້ງ** ໃນດ້ານໜ້າວຽກ ແລະ ເວລາຂອງກິດຈະກຳ
5. **ຖາມຄຳຖາມແບບເປີດ** ເພື່ອກະຕຸ້ນໃຫ້ທຸກຄົນສະແດງຄວາມຄິດເຫັນຂອງເຂົາເຈົ້າ, ແລະ ປະເມີນວ່າຜູ້ເຂົ້າຮ່ວມເຂົ້າໃຈ ຫຼື ບໍ່ເຂົ້າໃຈ. ຄຳຖາມທີ່ເປີດ ແມ່ນຄຳຖາມທີ່ບໍ່ມີຄຳຕອບ ແມ່ນ ຫຼື ບໍ່ແມ່ນ.
6. **ຢ່າພໍໃຈກັບຄຳຕອບພຽງຕອບດຽວ.** ສືບຕໍ່ຖາມເພີ່ມເຕີມ – *"ມີຫຍັງອີກບໍ່? ໃຜມີຫຍັງຢາກເພີ່ມເຕີມອີກບໍ່?"* ຖາມຄຳຖາມຕໍ່ເນື່ອງເພື່ອກະຕຸ້ນໃຫ້ຜູ້ເຂົ້າຮ່ວມເຈາະເລິກປະເດັນ.
7. **ສັງເກດ ແລະ ຈັດການລະດັບພະລັງງານ.** ສັງເກດອາການຂອງຄວາມອິດເມື່ອຍ ຫຼື ເບື່ອໜ່າຍ. ເຊັກຜູ້ເຂົ້າຮ່ວມ, ແລະ ເມື່ອເຂົາຮູ້ສຶກເມື່ອຍ, ເຮັດການກະຕຸ້ນໃຫ້ມີພະລັງ, ຫຼື ພັກຜ່ອນສະໝອງ.
8. **ປ່ຽນວິທີການໄປເລື້ອຍໆ** ເພື່ອຮັກສາຄວາມສົນໃຈ ແລະ ຈຸດສຸມຂອງຜູ້ເຂົ້າຮ່ວມ. ໃຊ້ກິດຈະກຳທີ່ແຕກຕ່າງກັນ (ຕົວຢ່າງ: ການສົນທະນາກຸ່ມ, ກິດຈະກຳກຸ່ມ, ການປະຕິບັດຕົວຈິງ, ບົດບາດການສະແດງ/ການຫຼິ້ນ, ແລະອື່ນໆ) ໃນຊ່ວງຕ່າງໆຂອງການຝຶກອົບຮົມ. ຫາຊ່ວງເວລາເພື່ອໃຫ້ມີຄວາມຫ້າວຫັນຫຼາຍຂຶ້ນ ໂດຍສະເພາະຫຼັງຈາກອາຫານທ່ຽງ ຫຼື ໃນຊ່ວງເຄິ່ງກາງຂອງມື້ທີ່ຜູ້ເຂົ້າຮ່ວມຮູ້ສຶກເຫງົານອນຫຼາຍທີ່ສຸດ.
9. **ເປັນຜູ້ຈັດການເວລາທີ່ດີ.** ພະຍາຍາມໃຫ້ຂັ້ນຕອນທັງຫມົດ ສາມາດແລ້ວ ພາຍໃນເວລາທີ່ໄດ້ກຳນົດໄວ້. ການອະທິບາຍທີ່ໄວໂພດອາດເຮັດໃຫ້ຜູ້ເຂົ້າຮ່ວມ ຫງຸດຫງິດ ຫຼື ສັບສົນ ແລະ ການອະທິບາຍ ທີ່ຍືດເຍື້ອດົນເກີນໄປ ຈະເຮັດໃຫ້ເກີດຄວາມເບື່ອໜ່າຍ ແລະ ເສຍສະມາທິ.
10. **ໃຊ້ພາສາງ່າຍໆທີ່ໃຊ້ໃນຊີວິດປະຈຳວັນ ຫຼີກລ່ຽງຄຳສັບທາງການ.** ຈັດການຝຶກອົບຮົມເປັນພາສາທ້ອງຖິ່ນ ທີ່ປະຊາຊົນເຂົ້າໃຈ ແລະ ບໍ່ໃຊ້ຄຳສັບດ້ານວິຊາການ ທີ່ອາດເຮັດໃຫ້ປະຊາຊົນສັບສົນ
11. **ຢ່າເວົ້າຫຼາຍເກີນໄປ.** ຢ່າການສົນທະນາແຕ່ຜູ້ດຽວ ຫຼື ໃຫ້ຄຳບັນຍາຍຍາວເກີນໄປ. ເວລາເວົ້າສ່ວນໃຫຍ່ຄວນຈະເປັນຂອງຜູ້ເຂົ້າຮ່ວມ.
12. **ແບ່ງຄວາມຮັບຜິດຊອບກັບຜູ້ເຂົ້າຮ່ວມ.** ຂໍໃຫ້ຜູ້ເຂົ້າຮ່ວມມີສ່ວນຮ່ວມໃນການອຳນວຍຄວາມສະດວກໃນກອງປະຊຸມ ຫາກເປັນໄປໄດ້, ເຊັ່ນ: ບັນທຶກໃນ ກະດານແຜ່ນເຈ້ຍ (flipchart), ອຳນວຍຄວາມສະດວກໃນການສົນທະນາ, ຫຼືອ່ານດັງໆ. ສິ່ງນີ້ເຮັດໃຫ້ຜູ້ເຂົ້າຮ່ວມເປັນເຈົ້າການຫຼາຍຂຶ້ນ ແລະ ຊ່ວຍຄູຝຶກ ຈັດການລະດັບພະລັງງານຂອງຕົນເອງ ແລະ ແບ່ງເບົາພາລະໃນການຝຶກອົບຮົມ
13. **ຄຸນຄ່າກັບປະສົບການຂອງຜູ້ເຂົ້າຮ່ວມ.** ໃຫ້ຄວາມເຄົາລົບຕໍ່ຜູ້ເຂົ້າຮ່ວມ ໃນຖານະເປັນຊັບພະຍາກອນທີ່ມີຄຸນຄ່າ ທີ່ຈະນຳໄປສູ່ຄວາມສຳເລັດຂອງການຝຶກອົບຮົມ.
14. **ເປັນມິດ ແລະ ເຂົ້າເຖິງງ່າຍ.** ເຮັດໃຫ້ທຸກຄົນຮູ້ສຶກສະບາຍໃຈ, ເປັນສ່ວນຫນຶ່ງຂອງກຸ່ມ, ສ້າງຄວາມສຳພັນ ແລະ ເຊື່ອມໂຍງກັບຜູ້ເຂົ້າຮ່ວມ. ເຮັດຜູ້ເຂົ້າຮ່ວມຄວນຮູ້ສຶກວ່າພວກເຂົາສາມາດ ເຂົ້າຫາທ່ານໄດ້ຫາກພວກເຂົາມີຄຳຖາມ ຫຼື ຂໍ້ກັງວົນຕ່າງໆ.
15. **ຄຳນຶງຮູ້ຕົນເອງ.** ລະວັງພຶດຕິກຳ, ປະຕິກິລິຍາ, ແລະ ການໃຊ້ນ້ຳສຽງກັບຜູ້ອື່ນ, ເພາະວ່ານີ້ສາມາດສົ່ງຜົນກະທົບຕໍ່ກຸ່ມ ແລະ ຂໍ້ຄວາມທີ່ທ່ານກຳລັງຖ່າຍທອດ.

16. **ເປັນຜູ້ຟັງທີ່ດີ.** ການໃຫ້ຄວາມສົນໃຈຢ່າງເຕັມທີ່ຂອງທ່ານ ແລະ ສະແດງໃຫ້ເຂົາເກັນວ່າທ່ານມີຄວາມສົນໃຈ ຈະຊ່ວຍຊຸກຍູ້ໃຫ້ຜູ້ເຂົ້າຮ່ວມແບ່ງປັນຢ່າງ ເປີດເຜີຍ ແລະ ເຕັມໃຈ. ທວນຄືນສິ່ງທີ່ຄົນອື່ນເວົ້າເພື່ອສະແດງໃຫ້ຜູ້ເວົ້າເຫັນວ່າທ່ານກຳລັງຟັງຢູ່ ແລະ ເສີມປະເດັນຂອງເຂົາເຈົ້າໃຫ້ກັບກຸ່ມທີ່ເຫຼືອ. ເມື່ອຄູຝຶກຂາດການເຊື່ອມຕໍ່ກັບຜູ້ເຂົ້າຮ່ວມ, ເຂົາເຈົ້າອາດໝົດຄວາມສົນໃຈ.
17. **ເປັນຄົນຊ່າງສັງເກດ.** ແນມກວດກາພາຍໃນຫ້ອງຢູ່ເລື້ອຍໆ ແລະ ຮັບຮູ້ເຖິງປະຕິກິລິຍາຂອງຜູ້ເຂົ້າຮ່ວມ ລວມໄປເຖິງການເຄື່ອນໄຫວຂອງກຸ່ມ ເພື່ອໃຫ້ທ່ານສາມາດຕອບສະໜອງຕາມໄດ້ຢ່າງເໝາະສົມ.
18. **ສ້າງຄວາມເທົ່າທຽມໃນການມີສ່ວນຮ່ວມ.** ດຶງຄວາມງຽບອອກມາ ແລະ ຈຳກັດຜູ້ທີ່ຊ່າງເວົ້າ. ໃຫ້ລະວັງເປັນພິເສດໃນການມີຮ່ວມ ຂອງຜູ້ເຂົ້າຮ່ວມທີ່ບໍ່ຮູ້ໜັງສື ຫຼື ບໍ່ໄດ້ຮັບການສຶກສາ, ຜູ້ເຂົ້າຮ່ວມທີ່ເປັນຜູ້ຍິງ, ຫຼື ຜູ້ເຂົ້າຮ່ວມອື່ນໆທີ່ບໍ່ມີຄວາມປອດໄພ ຫຼື ມີຄວາມສ່ຽງທີ່ຈະຖືກກີດກັນ ບໍ່ວ່າດ້ວຍເຫດຜົນໃດກໍ່ຕາມ.
19. **ຄຳນຶງເຖິງບົດບາດຍິງຊາຍ.** ຊຸກຍູ້ໃຫ້ແມ່ຍິງມີຄວາມຫ້າວຫັນໃນການສົນທະນາ
20. **ສ້າງຄວາມເຫັນດີເຫັນພ້ອມ.** ຊ່ວຍໃຫ້ກຸ່ມຕັດສິນໃຈວ່າຈະຈັດການແຕ່ລະໜ້າວຽກແນວໃດ
21. **ມີຄວາມເຫັນອົກເຫັນໃຈ.** ເຄົາລົບຂໍ້ຈຳກັດຂອງຜູ້ເຂົ້າຮ່ວມ ຫຼື ເມື່ອມີຜູ້ໃດຜູ້ໜຶ່ງບໍ່ຕ້ອງການທີ່ຈະເຂົ້າຮ່ວມ ຫຼື ຕ້ອງການຜ່ານ , ຕ້ອງໂອ້ລົມກັບເຂົາເປັນການສ່ວນຕົວ ເພື່ອຄົ້ນຫາວ່າສິ່ງທີ່ທ້າທາຍແມ່ນຫຍັງ ແລະ ໃຫ້ກຳລັງໃຈ
22. **ຫຼີກເວັ້ນການວິພາກວິຈານ.** ຢ່າເວົ້າວ່າ: *"ນັ້ນຜິດ."* ແທນທີ່ຈະເວົ້າວ່າ, *"ມີໃຜມີຄວາມຄິດອື່ນອີກບໍ?"*
23. **ຄິດບວກ, ສະໜັບສະໜູນ ແລະ ໃຫ້ກຳລັງໃຈ** ຜູ້ເຂົ້າຮ່ວມຜ່ານຄຳຕິຊົມ, ການຍ້ອງຍໍ, ແລະ ທ່າທາງໃນທາງບວກ.
24. **ຊຸກຍູ້ໃຫ້ຜູ້ເຂົ້າຮ່ວມຢືນຂຶ້ນໃນເວລາເວົ້າ.** ສິ່ງນີ້ຈະເຮັດໃຫ້ພວກເຂົາຕື່ນຕົວຫຼາຍຂຶ້ນ ແລະ ຊ່ວຍສ້າງຄວາມໝັ້ນໃຈໃນການເວົ້າໃນບ່ອນສາທາລະນະ
25. **ມີຄວາມອົດທົນ ແລະ ສະບາຍໃຈກັບຄວາມງຽບ.** ບາງຄັ້ງຜູ້ເຂົ້າຮ່ວມຕ້ອງການເວລາຄິດ ແລະ ໄຕ່ຕອງ; ບໍ່ຈຳເປັນຕ້ອງຕື່ມເຕັມທຸກເວລາ.
26. **ໃຫ້ຜູ້ເຂົ້າຮ່ວມມີສະມາທິ.** ຢ່າປ່ອຍໃຫ້ແຕ່ 2-3 ຄົນຜູກຂາດການສົນທະນາ ຫຼື ນຳການສົນທະນາອອກນອກຫົວຂໍ້.
27. **ຈັດການຂໍ້ຂັດແຍ່ງ.** ເມື່ອຜູ້ເຂົ້າຮ່ວມບໍ່ເຫັນດີນຳກັນ, ໃຫ້ເຕືອນຜູ້ເຂົ້າຮ່ວມກ່ຽວກັບກົດລະບຽບພື້ນຖານ, ສ້າງພື້ນທີ່ການຮຽນຮູ້ຮ່ວມກັນອີກຄັ້ງ, ແລະ ຊ່ວຍໃຫ້ພວກເຂົາສະແດງຄວາມຄິດເຫັນຂອງເຂົາເຈົ້າຢ່າງສະຫງົບ ແລະ ເຄົາລົບເຊິ່ງກັນ ແລະ ກັນ ສຳລັບທັດສະນະທີ່ແຕກຕ່າງ. ເຕືອນຜູ້ເຂົ້າຮ່ວມວ່ານີ້ແມ່ນໂອກາດການຮຽນຮູ້ ແລະ ມັນເປັນສິ່ງສຳຄັນທີ່ຈະຕ້ອງເປີດໃຈ.
28. **ສາມາດປັບປ່ຽນ ແລະ ດັດແກ້ໄດ້.** ສິ່ງຕ່າງໆບໍ່ເປັນໄປຕາມແຜນສະເໝີໄປ. ມີຄວາມຍືດຫຍຸ່ນ ແລະ ສາມາດຕອບສະໜອງກັບສະຖານະການທີ່ເກີດຂຶ້ນໄດ້.
29. **ບັນທຶກ** ການສົນທະນາ ແລະ ລາຍງານ ໃສ່ ກະດານແຜ່ນເຈ້ຍ (flipchart), ເພື່ອເກັບບັນທຶກພາບ ແລະ ເປັນການເຕືອນຄວາມຈຳສຳລັບຜູ້ເຂົ້າຮ່ວມ; ຂຽນສະເພາະປະເດັນຫຼັກ ຫຼື ຄຳສັບສຳຄັນ ໃຫ້ມີຂະໜາດໃຫຍ່ພຽງພໍເພື່ອໃຫ້ຜູ້ເຂົ້າຮ່ວມທັງໝົດສາມາດແນມເຫັນໄດ້.
30. **ທົບທວນຄືນ** ການຖ່າຍທອດຂອງທ່ານເມື່ອສິ້ນສຸດການຝຶກອົບຮົມໃນແຕ່ລະມື້ ກັບຜູ້ອື່ນໆໃນທີມຝຶກອົບຮົມ, ແລະວາງແຜນທີ່ເໝາະສົມ ສຳລັບການປັບປ່ຽນໃນການຝຶກອົບຮົມໃນມື້ຕໍ່ໆໄປ.
31. **ມີອາລົມຂັນ ແລະ ມ່ວນຊື່ນກັບຕົວເອງ!** ຈົ່ງຈື່ໄວ້ວ່າທ່ານຄວນໄດ້ຮັບຄວາມຮູ້ ແລະ ຄວາມມ່ວນຊື່ນໃນກອງປະຊຸມ. ຊົມເຊີຍຄວາມສຳເລັດຂອງທ່ານ ແລະ ຮຽນຮູ້ຈາກຄວາມຜິດພາດຂອງທ່ານ.

## ວາລະກອງປະຊຸມ

| **ພາກ** | ຫົວຂໍ້ແຕ່ລະພາກ | **ເວລາ** (**ນາທີ**) | **ກຸ່ມເປົ້າໝາຍ** |
|---|---|---|---|
| | **ມື້ທີ 1** | | |
| | ກິດຈະກຳ ເປີດ ການອົບຮົມ | 50 | ແມ່ຍິງ ແລະ ຜູ້ຊາຍ |
| ພາກທີ 1 | ທຳຄວາມເຂົ້າໃຈກ່ຽວກັບ ຄວາມເປັນຜູ້ນຳ | 80 | ແມ່ຍິງ ແລະ ຜູ້ຊາຍ |
| ພາກທີ 2 | ຄວາມເປັນຜູ້ນຳ ແລະ CDD | 75 | ແມ່ຍິງ ແລະ ຜູ້ຊາຍ |
| | ພັກທ່ຽງ | 60 | |
| ພາກທີ 3 | ການເລືອກປະຕິບັດ, ການກີດກັ້ນ, ແລະ ຄວາມບໍ່ສະເຫມີພາບ | 105 | ແມ່ຍິງ ແລະ ຜູ້ຊາຍ |
| ພາກທີ 4 | ການວາງແຜນເພື່ອການມີສ່ວນຮ່ວມຂອງທຸກຄົນ | 55 | ແມ່ຍິງ ແລະ ຜູ້ຊາຍ |
| | ມື້ທີ 2 | | |
| | ທົບທວນຄືນບົດຮຽນ ທີ່ໄດ້ຮຽນ ໃນ ມື້ທີ 1 | 15 | ແມ່ຍິງ ແລະ ຜູ້ຊາຍ |
| ພາກທີ 5 | ທັກສະການສື່ສານ | 100 | ແມ່ຍິງ ແລະ ຜູ້ຊາຍ |
| ພາກທີ 6 | ທັກສະການຮ່ວມມື | 45 | ແມ່ຍິງ ແລະ ຜູ້ຊາຍ |
| | ພັກທ່ຽງ | 60 | |
| ພາກທີ 7 | ຄວາມຫມັ້ນໃຈໃນຕົວເອງ | 100 | ສະເພາະ ແມ່ຍິງ |
| ພາກທີ 8 | ຄວາມຢືດຢຸ່ນ | 60 | ສະເພາະ ແມ່ຍິງ |
| ພາກທີ 9 | ການກຳນົດຄວາມຕ້ອງການ ແລະ ການວາງແຜນ | 60 | ສະເພາະ ແມ່ຍິງ |
| | ກິດຈະກຳ ປິດ ການອົບຮົມ | 30 | ແມ່ຍິງ ແລະ ຜູ້ຊາຍ |

ອາຫານທ່ຽງຈະສະໜອງ ແລະ ກຽມໃຫ້ແກ່ຜູ້ເຂົ້າຮ່ວມໂດຍໂຄງການ CLEAR ເນື່ອງຈາກໄລຍະເວລາຝຶກອົບຮົມໃນແຕ່ລະມື້ແມ່ນຍາວ ແລະ ເວລາສຳລັບ ພັກອາຫານທ່ຽງມີໄລເວລາສັ້ນ ບໍ່ພຽງພໍທີ່ຈະໃຫ້ຜູ້ເຂົ້າຮ່ວມກັບໄປກິນເຂົ້າທ່ຽງຢູ່ເຮືອນແລ້ວກັບມາໃຫ້ທັນກຳນົດເວລາ. ນອກນັ້ນ ຄວນຈັດ ເວລາພັກຜ່ອນ ດື່ມນ້ຳ ແລະ ອາຫານວ່າງ ຕາມຄວາມເຫມາະສົມ.

| ກິດຈະກຳ ເປີດ ການອົບຮົມ |
|---|

**ຈຸດປະສົງ**: ໃນຕອນທ້າຍຂອງພາກນີ້ ຜູ້ເຂົ້າຮ່ວມຈະສາມາດ:

- ເຂົ້າໃຈຈຸດປະສົງຂອງການຝຶກອົບຮົມ
- ອະທິບາຍຫົວຂໍ້ ແລະ ວາລະຂອງການຝຶກອົບຮົມ
- ຮູ້ສຶກສະບາຍໃຈເວລາຢູ່ຮ່ວມກັນ ລວມທັງ ຮ່ວມກັບຄູຝຶກ
- ທຳຄວາມເຂົ້າໃຈກົດລະບຽບພື້ນຖານ

**ສະຫຼຸບເນື້ອໃນ:**

| # | ຫົວຂໍ້ | ຮູບແບບ | ເຄື່ອງມື | ເວລາ (50 ນາທີ) |
|---|---|---|---|---|
| 1 | ຄຳກ່າວເປີດການຝຶກອົບຮົມໂດຍ ກຸ່ມບ້ານ, ນາຍບ້ານ | | | 10 |
| 2 | ກິດຈະກຳສ້າງຄວາມລື້ງເຄີຍ | ຮ້ອງເພງ, ກິດຈະກຳກະຕຸ້ນພະລັງ ຫລື ເກມ | | 5 |
| 3 | ການແນະນຳຕົວເອງ | ຮ່ວມງານເປັນຄູ່ | | 15 |
| 4 | ເປົ້າຫມາຍການຝຶກອົບຮົມ | ຄຳອະທິບາຍ | ເຈ້ຍແຜ່ນໃຫ່ຍ | 5 |
| 5 | ວາລະການປະຊຸມ | ຄຳອະທິບາຍ | ເຈ້ຍແຜ່ນໃຫ່ຍ | 5 |
| 6 | ແນວທາງຝຶກອົບຮົມ ແລະ ກົດລະບຽບພື້ນຖານ | ຄຳຖາມ ແລະ ຄຳອະທິບາຍ | ເຈ້ຍແຜ່ນໃຫ່ຍ | 8 |
| 7 | ບ່ອນສະແດງຄວາມຄິດເຫັນ ຫລື ຄຳຖາມຕ່າງໆ | ຄຳອະທິບາຍ | ເຈ້ຍແຜ່ນໃຫ່ຍ | 2 |

**ບາດກ້າວ:**

1. **ຄຳກ່າວເປີດການຝຶກອົບຮົມ (10 ນາທີ)**
   ອະນຸຍາດໃຫ້ນາຍບ້ານ ຫລື ເຈົ້າຫນ້າທີ່ອື່ນໆ ກ່າວເປີດການຝຶກອົບຮົມ
2. **ກິດຈະກຳສ້າງຄວາມລື້ງເຄີຍ (5 ນາທີ)**
   ເລີ່ມຕົ້ນດ້ວຍການຮ້ອງເພງ ຫຼື ເຮັດກິດຈະກຳໃດໜຶ່ງໃຫ້ຜູ້ເຂົ້າຮ່ວມຮູ້ສຶກສະບາຍໃຈ ແລະ ເລີ່ມການຝຶກອົບຮົມດ້ວຍນ້ຳສຽງທີ່ອ່ອນ ແລະ ສຸພາບ. ຍິນດີຕ້ອນຮັບທຸກຄົນເຂົ້າສູ່ການຝຶກອົບຮົມ, ຂອບໃຈພວກເຂົາທີ່ມາບ່ອນນີ້, ແລະ ແນະນຳຕົວເອງ.
3. **ການແນະນຳຕົນເອງ (15 ນາທີ)**
   ຈັດແບ່ງອອກເປັນຄູ່, ແລະ ໃຫ້ພວກເຂົາແນະນຳຊື່, ຕຳແຫນ່ງຂອງເຂົາເຈົ້າໃນຄະນະກຳມະການ, ແລະ ບັນຫາສຳຄັນທີ່ສຸດທີ່ພວກເຂົາຈະແກ້ໄຂ ຖ້າຫາກວ່າພວກເຂົາໄດ້ເປັນປະທານປະເທດ. *"ຖ້າຂ້ອຍກາຍເປັນປະທານປະເທດໃນມື້ອື່ນ, ສິ່ງທີ່ຂ້ອຍຈະເຮັດວຽກທຳອິດແມ່ນ ...* " ຫຼັງຈາກນັ້ນ, ໃຫ້ແຕ່ລະຄົນແນະນຳຄູ່ຮ່ວມງານຂອງພວກເຂົາ.
4. **ຈຸດປະສົງການຝຶກອົບຮົມ (5 ນາທີ)**

ຂຽນຈຸດປະສົງຂອງການຝຶກອົບຮົມໃສ່ກະດານແຜ່ນເຈ້ຍ, ອະທິບາຍໃຫ້ພວກເຂົາຟັງ, ແລະ ຕອບຄຳຖາມຕ່າງໆ.

- ເພື່ອສ້າງຈິດສຳນຶກ, ຄວາມຮູ້, ທັກສະ ແລະ ຄວາມມຸ່ງໝັ້ນຂອງຜູ້ນຳຂັ້ນບ້ານ ເພື່ອຊ່ວຍພັດທະນາຊຸມຊົນໃຫ້ມີສ່ວນຮ່ວມ ແລະ ສົ່ງເສີມການສ້າງຄວາມເຂັ້ມແຂງຂອງແມ່ຍິງໃນກິດຈະກຳການພັດທະນາ
- ເພີ່ມອຳນາດໃຫ້ສະມາຊິກຄະນະກຳມະການແມ່ຍິງດ້ວຍຄວາມຮູ້, ທັກສະ ແລະ ປະສົບການທີ່ກ່ຽວຂ້ອງ ເພື່ອໃຫ້ພວກເຂົາປະສົບຜົນສຳເລັດໃນຖານະຜູ້ນຳຊຸມຊົນທີ່ຫມັ້ນໃຈ, ມີປະສິດທິພາບ ແລະ ມີຄວາມຍືດຍຸ່ນຕໍ່ອຸປະສັກ.

**5. ວາລະ (5 ນາທີ)**

ຕິດວາລະ ການຝຶກອົບຮົມໄວ້ຢູ່ຝາຫ້ອງ ແລະ ອະທິບາຍໄປແຕ່ລະຫົວຂໍ້. ບອກຜູ້ເຂົ້າຮ່ວມ ເລື່ອງ ເວລາທີ່ຈະໃຊ້ໃນແຕ່ລະພາກ ແລະ ເວລາຢຸດພັກ ແລະ ຕ້ອງໄດ້ຮັບການເຫັນດີຈາກພວກເຂົາ.

**ວິທີການຝຶກອົບຮົມ ແລະ ກົດລະບຽບພື້ນຖານ (8 ນາທີ)**

**ອະທິບາຍ:** *ນີ້ແມ່ນການຝຶກອົບຮົມແບບມີສ່ວນຮ່ວມ, ຫມາຍຄວາມວ່າທຸກຄົນຕ້ອງມີສ່ວນຮ່ວມ ເພາະວ່າຄວາມຮູ້ ແລະ ແນວຄິດຕ່າງໆຈະມາຈາກທ່ານເອງ! ຂ້ອຍບໍ່ໄດ້ຢູ່ທີ່ນີ້ເພື່ອມາບັນຍາຍໃຫ້ເຈົ້າໝົດມື້, ພຽງແຕ່ມາເພື່ອອຳນວຍຄວາມສະດວກໃນຂະບວນການຮຽນຮູ້ ເຊິ່ງທ່ານຈະໄດ້ແບ່ງປັນຄວາມຮູ້ ແລະ ປະສົບການ ແລະ ຮຽນຮູ້ຈາກກັນ ແລະ ກັນ. ດັ່ງນັ້ນ, ມັນເປັນສິ່ງສຳຄັນທີ່ທຸກຄົນຕ້ອງມີສ່ວນຮ່ວມຢ່າງຈິງຈັງ, ແລະ ຢູ່ນີ້ແມ່ນພື້ນທີ່ທີ່ປອດໄພ.*

**ຖາມ:** *ພື້ນທີ່ປອດໄພແມ່ນຫຍັງ?* ໃຫ້ຕອບຄຳຖາມ.

ເຊີນຜູ້ເຂົ້າໃນຫ້ອງ ຮ່ວມສະແດງຄວາມຄິດເຫັນ/ຕອບຄຳຖາມ.

**ອະທິບາຍ:** *ພື້ນທີ່ປອດໄພເປັນບ່ອນທີ່ພວກເຮົາສາມາດສະແດງອອກໄດ້ຕາມຄວາມເຫັນຂອງເຮົາ ໂດຍບໍ່ມີການ ຕັດສິນ ຫຼື ວິພາກວິຈານ. ພວກເຮົາຕ້ອງຮັກສາຈິດໃຈນີ້ໄວ້ຕະຫຼອດການຝຶກອົບຮົມ. ໃນການສ້າງພື້ນທີ່ທີ່ປອດໄພ, ສິ່ງສຳຄັນຄື ກົດລະບຽບພື້ນຖານບາງຢ່າງ ເພື່ອໃຫ້ແນ່ໃຈວ່າທຸກຄົນມີການສະແດງອອກ ດ້ວຍຄວາມເຄົາລົບ ແລະ ທຸກຄົນຮູ້ສຶກສະບາຍໃຈທີ່ຈະເຂົ້າຮ່ວມຢ່າງເສລີ,*

**ຖາມ:** *ກົດລະບຽບພື້ນຖານການຝຶກຂອງພວກເຮົາຄວນເປັນແນວໃດ?*

ເຊີນໃຫ້ຜູ້ເຂົ້າຮ່ວມທັງຫມົດ ສະແດງຄວາມຄິດເຫັນ, ບັນທຶກປະເດັນຕ່າງໆ ໃສ່ເຈ້ຍແຜ່ນໃຫ່ຍ ທີ່ທຸກຄົນເບິ່ງເຫັນ, ຕິດໄວ້ຢູ່ຝາບ່ອນທີ່ສາມາດເບິ່ງເຫັນ ຕະຫລອດການຝຶກອົບຮົມ ແລະ ອ້າງອີງເມື່ອຈຳເປັນ.

**ຄວນລວມເອົາທຸກຫົວຂໍ້ດ້ານລຸ່ມ**

- ມາຝຶກອົບຮົມໃຫ້ກົງຕໍ່ເວລາ.
- ເຄົາລົບຄົນອື່ນໃນຕອນພວກເຂົາເວົ້າ ແລະ ບໍ່ລົບກວນ/ຂັດຈັງຫວະພວກເຂົາ.
- ປິດສຽງໂທລະສັບມືຖື.
- ບໍ່ຄວນຖາມຄຳຖາມທີ່ບໍ່ທັນໄດ້ຄິດໄຕ່ຕອງມາກ່ອນ.
- ຟັງສິ່ງທີ່ຄົນອື່ນເວົ້າຢ່າງຕັ້ງໃຈ.
- ເວົ້າຈາກປະສົບການຂອງທ່ານເອງ.
- ເຄົາລົບຄຳເຫັນທີ່ແຕກຕ່າງ; ຢ່າໂຈມຕີເລື່ອງສ່ວນຕົວ. ເປົ້າຫມາຍບໍ່ແມ່ນການເຫັນດີ ແຕ່ແມ່ນການທຳຄວາມເຂົ້າໃຈໃຫ້ເລິກເຊິ່ງຍິ່ງຂຶ້ນ.

**ຖາມ:** *ທຸກຄົນເຫັນດີກັບກົດລະບຽບພື້ນຖານເຫຼົ່ານີ້ບໍ?*

ຮັບປະກັນວ່າກົດລະບຽບຂ້າງເທິງແມ່ນໄດ້ຮັບ ຄວາມເຫັນພ້ອງຕ້ອງກັນ/ຍິນດີ

**6. ເຈ້ຍບ່ອນສະແດງຄວາມຄິດເຫັນ ຫລື ຄຳຖາມຕ່າງໆ ຫລື ເອີ້ນວ່າ ບ່ອນຈອດລົດ (2 ນາທີ)**

ຕິດເຈ້ຍແຜ່ນໃຫ່ຍ "ບ່ອນຈອດລົດ" ໃສ່ຝາບ່ອນທີ່ສາມາດຢູ່ໄດ້ຕະຫຼອດການຝຶກອົບຮົມ.

**ອະທິບາຍ:** *"ບ່ອນຈອດລົດ" ແມ່ນເປັນບ່ອນທີ່ເອົາຄຳຖາມໃນຫົວຂໍ້ທີ່ບໍ່ມີເວລາຕອບ ໃນລະຫວ່າງການຝຶກອົບຮົມ ສາມາດເອົາມາ "ຈອດ" (ຂຽນປະໄວ້ແຜ່ນເຈ້ຍ) ໄດ້. ເມື່ອມີຄຳຖາມເກີດຂຶ້ນ, ພວກເຮົາຈະຂຽນຄຳຖາມ, ຄວາມກັງວົນ, ຫຼື ຫົວຂໍ້ເຫຼົ່ານີ້ປະໄວ້ໃນເຈ້ຍ ບ່ອນຈອດລົດ, ແລ້ວຈຶ່ງກັບຄືນມາເພື່ອຕອບຄຳຖາມເຫຼົ່ານັ້ນ ຫຼັງຈາກພັກຜ່ອນ ຫຼື ໃນຕອນທ້າຍຂອງມື້.*

# ພາກທີ 1: ຄວາມເຂົ້າໃຈກ່ຽວກັບການເປັນຜູ້ນໍາ

**ຈຸດປະສົງ**: ພາຍຫຼັງສິ້ນສຸດພາກດັ່ງກ່າວນີ້, ຜູ້ເຂົ້າຮ່ວມຈະສາມາດ:

- ສາມາດອະທິບາຍກ່ຽວກັບນິຍາມຂອງການເປັນຜູ້ນໍາ;
- ສາມາດໄຈ້ແຍກໄດ້ ຄວາມແຕກຕ່າງລະຫວ່າງລັກສະນະຂອງຄວາມ ເປັນຜູ້ນໍາ ແລະ ຄຸນສົມບັດ;
- ເຂົ້າໃຈເຖິງປັດໃຈ ໃນການເປັນຜູ້ນໍາທີ່ດີ.

**ເນື້ອໃນໂດຍຫຍໍ້:**

| # | ຫົວຂໍ້ | ຮູບແບບ | ເຄື່ອງມື | ເວລາ (80 ນາທີ) |
|---|---|---|---|---|
| 1 | **ນິຍາມການເປັນຜູ້ນໍາ** | ຄໍາຖາມ, ສົນທະນາກຸ່ມ, ອະທິບາຍ | ເຈ້ຍແຜ່ນໃຫ່ຍ | 10 |
| 2 | **ລັກສະນະຂອງການເປັນຜູ້ນໍາ** | ອະທິບາຍ,ສະແດງບົດບາດ,ສົນທະນາ | ເຈ້ຍແຜ່ນໃຫ່ຍ | 25 |
| 3 | **ຄຸນສົມບັດຂອງການເປັນຜູ້ນໍາ** | ຄໍາຖາມ, ສົນທະນາກຸ່ມ, ອະທິບາຍ | ເຈ້ຍແຜ່ນໃຫ່ຍ | 25 |
| 4 | **ເສັ້ນທາງຂອງການເປັນຜູ້ນໍາຂອງພວກເຮົາ** | ຄໍາອະທິບາຍ, ຄໍາຖາມ, ສົນທະນາກຸ່ມ | | 20 |

**ຂັ້ນຕອນ:**

**1. ນິຍາມການເປັນຜູ້ນໍາ (10 ນາທີ)**

**ອະທິບາຍ**: *ຈຸດປະສົງຂອງການຝຶກອົບຮົມນີ້ ແມ່ນເພື່ອຊ່ວຍພວກທ່ານ ພັດທະນາທັກສະການເປັນຜູ້ນໍາຂອງທ່ານ ໃນການເສີມສ້າງການມີສ່ວນຮ່ວມຂອງທຸກຄົນ ແລະ ເພີ່ມຄວາມສາມາດໃຫ້ແມ່ຍິງໃນການພັດທະນາຊຸມຊົນ, ດັ່ງນັ້ນ ສິ່ງທີ່ສໍາຄັນກ່ອນອື່ນໝົດຕ້ອງເຂົ້າໃຈວ່າ **ການເປັນຜູ້ນໍາແມ່ນຫຍັງ.***

**ຖາມ:** *ການເປັນຜູ້ນໍາແມ່ນຫຍັງ?*

ແບ່ງກຸ່ມນ້ອຍເພື່ອສົນທະນາ, ກວດຄືນຄໍາຕອບຂອງແຕ່ລະກຸ່ມ ໃນຫ້ອງປະຊຸມໃຫ່ຍ ແລະ ອະທິບາຍເພີ່ມເຕີມ ຕາມຫົວຂໍ້ດ້ານລຸ່ມນີ້:

- *ການເປັນຜູ້ນໍາເກີດຂຶ້ນຜ່ານການສ້າງແຮງຈູງໃຈ, ການສ້າງແຮງບັນດານໃຈ, ການລະດົມກໍາລັງ ແລະ ການຈັດຕັ້ງຜູ້ຄົນ.*

**2. ລັກສະນະ/ຮູບແບບຂອງການເປັນຜູ້ນໍາ (25 ນາທີ)**

ອະທິບາຍ: *ລັກຊະນະ ຂອງການເປັນຜູ້ນໍາ ມີຫຼາກຫຼາຍປະເພດ ແຕກຕ່າງກັນ. ໂດຍທົ່ວໄປພວກເຮົາສາມາດແບ່ງກຸ່ມ ລັກຊະນະການເປັນຜູ້ນໍາອອກເປັນ 3 ປະເພດຫຼັກ:*

- ***ຜູ້ນໍາແບບຜະເດັດການ* (Autocratic):** *ຕັດສິນໃຈທຸກຢ່າງໂດຍລາພັງ ແລະ ບໍ່ເຊື່ອໝັ້ນຕໍ່ບຸກຄົນໃດ, ສັ່ງການ ແລະ ຄາດຫວັງໃຫ້ຄົນອື່ນເຮັດຕາມຄໍາສັ່ງ, ບໍ່ຟັງຄໍາເຫັນ ຫຼື ພິຈາລະນາການນໍາສະເໜີຂໍ້ມູນຂອງຜູ້ອື່ນ ບໍ່ເປີດຮັບການແລກປ່ຽນຂໍ້ມູນ ຫຼື ຄວາມຮູ້*

- ***ຜູ້ນຳບໍ່ກະຕືລືລົ້ນ (passive):*** *ຜູ້ນຳທີ່ທ້າວທັນ ແລະ ມີອິດທິພົນໜ້ອຍ; ບໍ່ສາມາດເຮັດວຽກໄດ້ ຫຼື ບໍ່ສະເໜີຫຼາຍແນວຄວາມຄິດ ຫຼື ຫລາຍທິດທາງ; ຂາດທັກສະ ແລະ ຄວາມໝັ້ນໃຈໃນຕົນເອງ; ບໍ່ສາມາດຕັດສິນບັນຫາ ແລະ ບໍ່ໃສ່ໃຈ* ***ຜູ້ນຳແບບມີສ່ວນຮ່ວມ ແລະ ຄອບຄຸມ (inclusive):*** *ສົ່ງເສີມໃຫ້ມີສ່ວນຮ່ວມ ແລະ ຮ່ວມມືກັບຜູ້ອື່ນໃນການຫາແນວຄິດ ແລະ ການຕັດສິນໃຈ. ເປັນຜູ້ຊ່ວຍປ່ຽນແປງທັດສະນະ ແລະ ຄ່ານິຍົມໃຫ້ເຂົ້າຫາຄວາມເທົ່າທຽມຫລາຍຂຶ້ນ.*

**ກິດຈະກຳ:** ການສະແດງບົດບາດ ແບ່ງອອກ 3 ເປັນກຸ່ມ ແລະ ມອບຫມາຍໃຫ້ແຕ່ລະກຸ່ມສະແດງຕາມຮູບແບບຄວາມເປັນຜູ້ນາທີ່ໄດ້ຮັບ.

**ອະທິບາຍ:** *ຕອນນີ້ທຸກຄົນຈະໄດ້ເຮັດການສະແດງບົດບາດສັ້ນໆ ໂດຍສົມມຸດວ່າທ່ານກຳລັງຈັດກອງປະຊຸມກັບປະຊາຊົນ ເພື່ອໃຫ້ປະຊາຊົນຕັດສິນໃຈວ່າຈະດຳເນີນໂຄງການພັດທະນາໃດ. ໃຫ້ສະແດງບົດບາດຕາມສະຖານະການ ໂດຍສະແດງໃຫ້ເຫັນຮູບແບບ/ລັກຊະຄວາມຜູ້ນຳທີໄດ້ຮັບມອບຫມາຍ.*

- ໃຫ້ຜູ້ເຂົ້າຮ່ວມມີເວລາພຽງພໍໃນການກຽມການສະແດງບົດບາດ ແລະ ໃຫ້ເວລາພວກເຂົາສະແດງບົດບາດໃຫ້ທຸກຄົນເບິ່ງ.

ຫລັງຈາກການສະແດງບົດບາດແຕ່ລະກຸ່ມ, **ອະທິບາຍ**

- *ສິ່ງໃດທີ່ທ່ານພໍໃຈ ແລະ ບໍ່ພໍໃຈ ຕໍ່ກັບຮູບແບບຄວາມເປັນຜູ້ນຳ ດັ່ງກ່າວ ? ຍ້ອນຫຍັງ?*
- *ມີຂໍ້ດີ ແລະ ຂໍ້ເສຍ ຂອງຮູບແບບການຜູ້ນຳນີ້ ມີຫຍັງແດ່?*

ພາຍຫຼັງການສະແດງລະຄອນຂອງໝົດທຸກກຸ່ມ, **ສົນທະນາ**:

- *ທ່ານຄິດວ່າຮູບແບການຜູ້ນຳປະເພດໃດ ເຫມາະສົມທີ່ສຸດໃນການພັດທະນາຊຸມຊົນ?*
- *ຮູບແບບໃດທີ່ສາມາດຊຸກຍູ້ສົ່ງເສີມ ການມີສ່ວນຮ່ວມຂອງ ທຸກກຸ່ມພາຍໃນຊຸມຊົນ ໄດ້ດີທີ່ສຸດ?*

### 3. ຄຸນສົມບັດຂອງການເປັນຜູ້ນຳ (25 ນາທີ)

**ອະທິບາຍ:** *ຫຼັງຈາກທີ່ພວກເຮົາໄດ້ສົນທະນາຮ່ວມກັນ ວ່າຮູບແບບຂອງການເປັນຜູ້ນຳໃດທີ່ດີທີ່ສຸດສຳລັບການນຳພາຊຸມຊົນ, ພວກເຮົາສາມາດເວົ້າໄດ້ວ່າ ນີ້ແມ່ນຄວາມຄິດຂອງພວກເຮົາກ່ຽວກັບ **"ການເປັນຜູ້ນຳທີ່ດີ."***

**ຖາມຜູ້ເຂົ້າຮ່ວມ:** *ໃຫ້ແຕ່ຄົນຄິດເຖິງຜູ້ນຳທີ່ທ່ານຮູ້ຈັກ ແລະ ທ່ານພິຈາລະນາວ່າລາວເປັນຜູ້ນຳທີ່ດີ, ເຊິ່ງສາມາດເປັນຜູ້ທີທ່ານເຫັນວ່າລາວເປັນຜູ້ທີ່ທ່ານປະທັບໃຈ ແລະ ຜູ້ທີ່ທ່ານໃຫ້ຄວາມຍ້ອງຍໍ. ພວກເຂົາສະແດງອອກແນວໃດ? ພວກເຂົາມີຄຸນລັກສະນະ ຫຼື ຄຸນສົມບັດແນວໃດແດ່? ພວກເຂົາເຈົ້າສາມາດເປັນບຸກຄົນທີ່ມີຊື່ສຽງ ຫຼື ກຸ່ມຄົນ ທີ່ຢູ່ໃສກໍ່ໄດ້ໃນໂລກນີ້, ຄົນທີ່ຢູ່ໃນປະເທດ ຫຼື ຊຸມຊົນຂອງທ່ານເອງ, ຫຼື ອາດເປັນຄົນໃນຄອບຄົວຂອງທ່ານ ຫຼື ໝູ່ເພື່ອນ ທີ່ທ່ານຮູ້ຈັກ. ຖ້າພວກເຂົາເປັນບຸກຄົນ ແລະ ບໍ່ແມ່ນກຸ່ມຄົນ, ໃຫ້ຄິດເຖິງ ຍິງໜຶ່ງ ແລະ ຊາຍໜຶ່ງ.*

**ກິດຈະກຳ:**

1) ຜູ້ເຂົ້າຮ່ວມສະເໜີແນວຄວາມຄິດຂອງຕົນເອງ ເທື່ອລະຄົນ ແລະ ຂຽນຄຳຕອບໃສ່ເຈ້ຍ (ຖ້າສາມາດຂຽນໄດ້)
2) ແບ່ງຜູ້ເຂົ້າຮ່ວມອອກເປັນກຸ່ມນ້ອຍ ແລະ ໃຫ້ພວກເຂົາແບ່ງປັນກຸ່ມຄົນ/ຜູ້ທີ່ເຂົາເລືອກໃນກຸ່ມ ແລະ ອະທິບາຍເຫດຜົນທີ່ເລືອກກຸ່ມຄົນ/ຜູ້ນັ້ນ.
3) ແຕ່ລະກຸ່ມກັບຄືນມາສະເຫນີ ໃນກຸ່ມໃຫ່ຍ ເລືອກເອົາ 1-2 ບຸກຄົນ ທີ່ເຂົາເລືອກ ມາເປັນແລກປ່ຽນ ໃຫ້ກຸ່ມໃຫ່ຍ. ຫລັງຈາກນັ້ນ ໃຫ້ອະທິບາຍບັນດາຂໍ້ສັງລວມດ້ານລຸ່ມນີ້:

1. **ບໍລິສຸດໃຈ:** ພວກເຂົາ ຖືເອົາຄວາມຮັບຜິດຊອບທາງດ້ານສິນທຳຢ່າງເຄັ່ງຄັດຕໍ່ຜູ້ທີ່ເຂົາເຈົ້ານຳພາ ແລະ ເຮັດວຽກເພື່ອຜົນປະໂຫຍດຂອງຊຸມຊົນ.
2. **ນຳພາໂດຍການປະຕິບັດດປັນແບບຢ່າງ:** ພວກເຂົາ ປະຕິບັດ ແລະ ວາງຕົວເປັນແບບຢ່າງທີ່ດີ ແລະ ການປະພຶດ ທີ່ດີຕໍ່ຊຸມຊົນ.
3. **ມີຄວາມຮູ້:** ພວກເຂົາ ເຂົ້າໃຈສະພາບ ແລະ ຮັບຟັງກ່ຽວກັບສິ່ງທ້າທາຍ, ຄວາມຕ້ອງການ, ແລະ ຈຸດແຂງຂອງຊຸມຊົນ
4. **ຄວາມຕື່ນຕົວ ແລະ ສາມາດຄວບຄຸມຕົນເອງ:** ພວກເຂົາ ຮູ້ຈຸດແຂງ ແລະ ຈຸດອ່ອນຂອງຕົນເອງ, ແລະ ຜົນກະທົບຕໍ່ຜູ້ອື່ນ. ສາມາດຄວບຄຸມປະຕິກິລິຍາ ແລະ ການປະພຶດຂອງຕົນເອງ ແລະ ປັບປຸງຕົວເອງໃຫ້ດີຂຶ້ນ.
5. **ມາດນະອິດທົນ:** ພວກເຂົາ ມີຄວາມມຸ່ງໝັ້ນ ແລະ ພະຍາຍາມຢ່າງຕໍ່ເນື່ອງເພື່ອບັນລຸເປົ້າໝາຍ.
6. **ຄວາມຮັບຜິດຊອບ**: ພວກເຂົາ ມີຄວາມຮັບຜິດຊອບຕໍ່ການກະທຳ, ເຖິງຈະເປັນສິ່ງທີ່ສົ່ງຜົນໃຫ້ເກີດຜົນກະທົບຫຼືຄວາມເສຍຫາຍ.
7. **ອ່ອນນ້ອມຖ່ອມຕົວ:** ພວກເຂົ ບໍ່ຖືຕົນເອງວ່າມີຄວາມສຳຄັນກວ່າຄົນອື່ນ.
8. **ສັດຊື່:** ພວກເຂົາຮັກສາຄຳເວົ້າ, ເຊື່ອຖືໄດ້, ເຮັດແທ້ທຳຈິງ, ແລະ ສ້າງຄວາມເຊື່ອໝັ້ນ.
9. **ເຊື່ອຖືໄດ້:** ພວກເຂົາມີຄວາມສອດຄ່ອງ, ເຊື່ອຖືໄດ້, ຈະແຈ້ງ, ແລະ ມຸ່ງໝັ້ນທີ່ຈະຮັບໃຊ້ຊຸມຊົນ.
10. **ບໍ່ຈຳແນກ ແລະ ບໍ່ແບ່ງແຍກ:** ພວກເຂົາປະຕິບັດຕໍ່ປະຊາຊົນຢ່າງສະເໝີພາບ ແລະ ຍຸດຕິທຳ; ພວກເຂົາຄິດກ່ຽວກັບການເອື້ອຜົນປະໂຫຍດຕໍ່ປະຊາຊົນທັງໝົດໃນຊຸມຊົນ, ໂດຍສະເພາະແມ່ນຜູ້ທີ່ຕ້ອງການການຊ່ວຍເຫຼືອຫຼາຍທີ່ສຸດ.
11. **ເປັນມິດ/ເປັນກັນເອງ:** ພວກເຂົາເປັນຄົນອັດທະຍາໄສດີ ແລະ ໃກ້ຊິດຕິດແທດ.
12. **ມີຄວາມຫ້າວຫັນ:** ພວກເຂົາ ມີແນວຄວາມຄິດລິເລີ່ມ ແລະ ກ້າວໄປຂ້າງໜ້າ ເຖິງແມ່ນວ່າເຂົາເຈົ້າບໍ່ເຄີຍເຮັດສິ່ງນັ້ນມາກ່ອນກໍ່ຕາມ.
13. **ມີສ່ວນຮ່ວມ:** ພວກເຂົາ ຂໍຄຳຄິດເຫັນຈາກບຸກຄົນອື່ນ ແລະ ຊ່ວຍເຫຼືອຄົນອື່ນ ໃນເວົ້າ ແລະ ແລກປ່ຽນແນວຄວາມຄິດຂອງພວກເຂົາ.
14. **ເຮັດວຽກເປັນທີມ:** ພວກເຂົາ ເຮັດວຽກຮ່ວມກັນ ແລະ ຮ່ວມກັບຜູ້ອື່ນໄດ້ເປັນຢ່າງດີ ແລະ ສົ່ງເສີມຄວາມສາມັກຄີ.
15. **ຄວາມໂປ່ງໃສ ແລະ ສື່ສານ :** ພວກເຂົາ ມີຄວາມເປີດເຜີຍ ແລະ ຈະແຈ້ງໃນທຸກບັນຫາ. ລາຍງານຂໍ້ມູນ ແລະ ສືສານກັບປະຊາຊົນໃຫ້ໄດ້ຮັບຮູ້
16. **ມີຄວາມເຫັນອົກເຫັນໃຈ:** ພວກເຂົາ ມີຄວາມປາຖະໜາທີ່ຈະຊ່ວຍເຫຼືອຄົນອື່ນ ທີ່ຕ້ອງການຄວາມຊ່ວຍເຫຼືອ.

**ຖາມ:**

- *ໃນທີ່ນີ້ໃຜແດ່ທີ່ຄິດວ່າຕົນເອງມີຄຸນສົມບັດຄົບຖ້ວນຕາມນີ້? ກະລຸນາຍົກມືຂຶ້ນ.*
- *ໃນທີ່ນີ້ໃຜແດ່ທີ່ຄິດວ່າຕົນເອງມີບາງຄຸນສົມບັດເຫຼົ່ານີ້? ກະລຸນາຍົກມືຂຶ້ນ.*
- *ໃນທີ່ນີ້ໃຜແດ່ທີ່ຕ້ອງການພັດທະນາຄຸນສົມບັດເຫຼົ່ານີ້? ກະລຸນາຍົກມືຂຶ້ນ.*

**ສະຫຼຸບ:** *ເປັນການຍາກ ທີ່ຜູ້ນຳທຸກຄົນ ຈະມີຄຸນສົມບັດເຫຼົ່ານີ້ຄົບຖ້ວນ, ແຕ່ຕອນນີ້ທີ່ທ່ານໄດ້ຮັບຮູ້ກ່ຽວກັບບັນດາຄຸນສົມບັດເຫຼົ່ານີ້, ທ່ານສາມາດສືບຕໍ່ພັດທະນາ. ມັນເປັນສິ່ງສຳຄັນທີ່ຈະຕ້ອງຈື່ຈຳວ່າ ສະເພາະຕົວທ່ານເອງທ່ານອາດຈະມີຈຸດແຂງ ແລະ ຈຸດອ່ອນ ໃນບາງດ້ານ, ຈຸດແຂງພວກທ່ານແຕ່ລະຄົນເມື່ອລວມກັນເປັນກຸ່ມ ມັນຈະສາມາດເຮັດໃຫ້ກາຍເປັນຜູ້ນຳຊຸມຊົນທີ່ດີທີ່ສຸດໄດ້. ການເປັນຜູ້ນຳແມ່ນຕິດພັນກັບການປະກອບສ່ວນໃນວິທີການຂອງທ່ານເອງ, ໂດຍບໍ່ຄຳນຶງເຖິງບົດບາດຂອງທ່ານໃນກຸ່ມ. ແຕ່ລະກຸ່ມ ມີຈຸດແຂງໂດຍການລວມຕົວກັນຂອງສະມາຊິກແຕ່ລະຄົນໃນກຸ່ມ.*

### 4. ເສັ້ນທາງຂອງການເປັນຜູ້ນຳຂອງພວກເຮົາ (20 ນາທີ)

***ອະທິບາຍ:*** *ທຸກຄົນມີຄຸນສົມບັດ ແລະ ທັກສະການເປັນຜູ້ນຳບາງຢ່າງ ແລະ ມີທ່າແຮງທີ່ຈະເປັນຜູ້ນຳທີ່ດີໃນແບບຂອງຕົນເອງ, ແຕ່ພວກເຮົາຕ້ອງປັບປຸງຄວາມສາມາດຂອງຕົນເອງ ໂດຍການຕື່ນຕົວໃຫ້ຫຼາຍຂຶ້ນ ແລະ ເສີມສ້າງທັກສະການເປັນຜູ້ນຳຂອງພວກເຮົາ*

*ໂດຍຜ່ານການຮຽນຮູ້ ແລະ ການປະຕິບັດຕົວຈິງ. ກ່ອນອື່ນໝົດ ທ່ານຕ້ອງຕື່ນຕົວ ແລະ ຍອມຮັບກ່ຽວກັບຕົວຕົນທີ່ແທ້ຈິງຂອງທ່ານເອງ. ຕົວຢ່າງ: ຖ້າທ່ານຕ້ອງການເປັນຜູ້ນໍາທີ່ປະສົມປະສານ, ແຕ່ທ່ານມັກບອກຄົນອື່ນໃນສິ່ງທີ່ຕ້ອງເຮັດ ແລະ ບໍ່ຮັບຟັງຄົນອື່ນ , ທ່ານຕ້ອງຍອມຮັບໃນສິ່ງທີ່ຕົນເອງເປັນ ແລະ ຕັ້ງໃຈທີ່ຈະປ່ຽນແປງມັນ. ຮູ້ຈັກຕົນເອງ ແມ່ນ ເປັນບາດກ້າວທໍາອິດເພື່ອນໍາໄປສູ່ຄວາມເຂົ້າໃຈ ການກາຍເປັນຜູ້ນໍາທີ່ດີ.*

**ຖາມ:** *ອີງໃສ່ສິ່ງທີ່ທ່ານໄດ້ຮຽນຮູ້ ແລະ ສິ່ງທີ່ພວກເຮົາໄດ້ສົນທະນາຮ່ວມກັນ, ຄຸນສົມບັດ ແລະ ທັກສະການເປັນຜູ້ນໍາມີຫຍັງແນ່ 1) ທ່ານຄິດວ່າທ່ານມີບໍ? ແລະ 2) ທ່ານຢາກພັດທະນາອັນໃດ?*

ໃຫ້ຜູ້ເຂົ້າຮ່ວມຄິດດ້ວຍຕົນເອງໃຜມັນ ແລ້ວນໍາມາແລກປ່ຽນກັນພາຍໃນກຸ່ມ. ຫຼັງຈາກການແລກປ່ຽນກັນແລ້ວ, ໃຫ້ກຸ່ມຕ່າງໆລາຍງານໂດຍຫຍໍ້ບາງຈຸດຕົ້ນຕໍຕໍ່ກຸ່ມໃນກຸ່ມໃຫ່ຍ.

**ອະທິບາຍ:** *ທຸກຄົນຈະສາມາດຮຽນຮູ້ສິ່ງໃໝ່ໆ ແລະ ການປະພຶດ, ແລະ ບາງທີອາດໄດ້ຮັບມຸມມອງໃໝ່ໆ ນີ້ແມ່ນ ເສັ້ນທາງຂອງການເປັນຜູ້ນໍາ. ທ່ານເປີດໃຈ ແລະ ກຽມພ້ອມທີ່ຈະປ່ຽນແປງ, ທ່ານຈະສາມາດໄປໄດ້ໄກໃນການເດີນທາງນັ້ນ ແລະ ພັດທະນາລັກສະນະການເປັນຜູ້ນໍາ ແລະ ທັກສະຂອງທ່ານໃຫ້ກາຍເປັນຜູ້ນໍາຊຸມຊົນທີ່ດີ.*

**ຖາມ:** *ກະລຸນາຢືນຂຶ້ນແລ້ວກອດເອິກ ແລະ ສັງເກດວ່າມືຂ້າງໃດຢູ່ເທິງສຸດ. ຕອນນີ້, ກະລຸນາປ່ຽນມືອີກຂ້າງໜຶ່ງຂຶ້ນມາຢູ່ເທິງສຸດ. ມັນງ່າຍບໍທີ່ຈະເຮັດທ່າກອດເອິກແບບໃຫມ່ນີ້ ຫຼື ທ່ານຮູ້ສຶກຢາກກັບໄປເຮັດແບບປົກກະຕິທີ່ທ່ານກອດເອິກບໍ່? ທ່ານເຄີຍສາມາດປ່ຽນແປງມັນໄດ້ ແຕ່ຫຼັງຈາກນັ້ນກໍ່ບໍ່ສາມາດຮັກສາມັນໄວ້ໄດ້ແມ່ນບໍ? ທ່ານຈໍາເປັນຕ້ອງເຮັດແນວໃດເພື່ອເຮັດໃຫ້ການປ່ຽນແປງນັ້ນເປັນການປ່ຽນແປງໄດ້ຕະຫລອດໄປ?* ເຊີນໃຫ້ຜູ້ເຂົ້າຮ່ວມຕອບຄໍາຖາມ.

ສົນທະນາ ເຊີນທຸກຄົນ ແລກປ່ຽນໃນກຸ່ມໃຫ່ຍ

**ອະທິບາຍ:** *ຄວາມຊິນເຄີຍແມ່ນຍາກທີ່ຈະລຶບລ້າງໄດ້. ເມື່ອເຮົາຊິນເຄີຍກັບການເຮັດອັນໃດອັນໜຶ່ງມາດົນນານແລ້ວ, ມັນອາດຈະເປັນການຍາກທີ່ຈະປ່ຽນແປງມັນ. ແຕ່ດ້ວຍການປະຕິບັດຢ່າງຕໍ່ເນື່ອງ ແລະ ການສະໜັບສະໜູນ, ມັນກໍ່ສາມາດເປັນໄປໄດ້. ພວກເຮົາຂ້າມຜ່ານແນວຄວາມຄິດ ແລະ ທັກສະໃໝ່ໆບາງຢ່າງໃນການຝຶກອົບຮົມຄັ້ງນີ້, ແລະ ຈາກການປະຕິບັດ ແລະ ປະສົບການ, ຄວາມຊິນເຄີຍອັນໃໝ່ ແລະ ຮູບແບບການຄິດ ແລະ ການປະພຶດແບບໃໝ່ສາມາດສ້າງເປັນຄວາມລຶ້ງເຄີຍແລະ ຮູ້ສຶກເປັນປົກກະຕິ.*

## ພາກທີ 2: ການເປັນຜູ້ນຳ ແລະ ພັດທະນາໂດຍຊຸມຊົນເປັນເຈົ້າການ (CDD)

**ຈຸດປະສົງ**: ພາຍຫຼັງສິ້ນສຸດພາກນີ້, ຜູ້ເຂົ້າຮ່ວມຈະສາມາດ:

- ອະທິບາຍກ່ຽວກັບ ຄຸນຄ່າ ຂອງການພັດທະນາໂດຍຊຸມຊົນເປັນເຈົ້າການ ແລະ ການນຳໃຊ້ສິ່ງເຫຼົ່ານີ້ເຂົ້າໃນການນຳພາຊຸມຊົນ
- ເຂົ້າໃຈແນວຄວາມຄິດ ແລະ ການປະຕິບັດ ຕໍ່ຄວາມຮັບຜິດ ຮັບຊອບ ໃນໜ້າທີ
- ເລີ່ມຕົ້ນນຳໃຊ້ ຄຸນຄ່າ ຂອງການພັດທະນາໂດຍຊຸມຊົນເປັນເຈົ້າການ ເຂົ້າໃນວຽກງານຂອງເຂົາເຈົ້າ ໃນການເປັນຜູ້ນຳບ້ານ

**ເນື້ອໃນໂດຍຫຍໍ້:**

| # | ຫົວຂໍ້ | ຮູບແບບ | ເຄື່ອງມື | ເວລາ (75 ນາທີ) |
|---|---|---|---|---|
| 1 | **ຄຸນຄ່າ ຂອງຊຸມຊົນ** | ຄຳຖາມ, ສົນທະນາກຸ່ມ, ອະທິບາຍ, | ເຈ້ຍແຜ່ນໃຫ່ຍ | 20 |
| 2 | **ເຂົ້າໃຈ ແລະ ນຳໃຊ້ຄຸນຄ່າ ຂອງການພັດທະນາໂດຍຊຸມຊົນເປັນເຈົ້າການ** | ຄຳຖາມ, ອະທິບາຍ, ສົນທະນາກຸ່ມ | ເຈ້ຍແຜ່ນໃຫ່ຍ | 20 |
| 4 | **ຄວາມເຂົ້າໃນກ່ຽວກັບຄວາມຮັບຜິດຊອບ** | ນຳສະເໜີ, ຄຳຖາມ, ສົນທະນາກຸ່ມ, ອະທິບາຍ | ເຈ້ຍແຜ່ນໃຫ່ຍ | 20 |
| 5 | **ຄຸນຄ່າ ຂອງການພັດທະນາໂດຍຊຸມຊົນເປັນເຈົ້າການ ແລະ ບົດບາດຂອງຜູ້ນຳຊຸມຊົນ** | ກິດຈະກຳ, ອະທິບາຍ | ເຈ້ຍແຜ່ນໃຫ່ຍ, ເຈ້ຍສົນຍາລັກ | 15 |

**ຂັ້ນຕອນ:**

**1. ຄຸນຄ່າຂອງຊຸມຊົນ (20 ນາທີ)**

**ຖາມ:** *ຄຳວ່າຄຸນຄ່າ ໝາຍເຖິງຫຍັງ?*

ໃຫ້ຜູ້ເຂົ້າຮ່ວມຄົ້ນຄິດ, ຈາກນັ້ນໃຫ້ຕອບ ແລະ ບັນທຶກໃສ່ເຈ້ຍແຜ່ນໃຫ່ຍ. ສັງລວມເອົາທຸກຂໍ້ຂ້າງລຸ່ມນີ້:

*ຄຸນຄ່າແມ່ນ:*

- *ສິ່ງໃດທີ່ພວກເຮົາຄິດວ່າເປັນສິ່ງສຳຄັນ ແລະ ມີຄຸນຄ່າໃນຊີວິດ*
- *ພວກເຂົາກຳນົດມາດຕະຖານສຳລັບພຶດຕິກຳ ແລະ ທັດສະນະຄະຕິ*
- *ພວກເຂົານຳພາວິທີການຄິດຂອງຄົນ, ການກະທຳ, ແລະ ການພົວພັນເຊິ່ງກັນ ແລະ ກັນ.*
- *ພວກເຮົາຮຽນຮູ້ສິ່ງເຫຼົ່ານັ້ນ ຈາກປະສົບການໃນຄອບຄົວ, ໂຮງຮຽນ, ຊຸມຊົນ, ແລະ ສັງຄົມອັນກວ້າງໃຫຍ່*
- *ພວກເຮົາຝຶກຝົນຫຼໍ່ຫຼອມ ແລະ ສັ່ງສອນຄົນອື່ນ, ໂດຍສະເພາະຜູ້ໜຸ່ມນ້ອຍ*

*ຕົວຢ່າງ: ຖ້າທ່ານເຫັນເຖິງຄຸນຄ່າ ຂອງຄວາມສັດຊື່ ທ່ານຈະບໍ່ຕົວະ. ຖ້າ ທ່ານເຫັນເຖິງຄຸນຄ່າ ຂອງການຊ່ວຍເຫຼືອຄົນອື່ນທີ່ດ້ອຍກວ່າ, ທ່ານຈະສະຫຼະເວລາ ຫຼື ເງິນຄຳຂອງທ່ານເພື່ອຊ່ວຍເຂົາເຈົ້າ.*

**ຖາມ:** *ໃຫ້ຍົກບາງຕົວຢ່າງຂອງຄຸນຄ່າທາງສັງຄົມ ທີ່ປະຕິບັດຢູ່ໃນຊຸມຊົນນີ້ແມ່ນຫຍັງແດ່?*
ສົນທະນາພາຍໃນກຸ່ມນ້ອຍ, ລາຍງານຄືນພາຍໃນກຸ່ມໃຫ່ຍ. ບາງຄໍາຕອບທີ່ເປັນໄປໄດ້:

- ເຄົາລົບຜູ້ອາວຸໂສ
- ຄວາມຍຸຕິທໍາ
- ເອົາໃຈໃສ່ໃນການເຮັດວຽກ
- ການປະສານງານ
- ການຮັບຕ້ອນ
- ເສລີພາບ
- ກຽດສັກສີ
- ຄວາມສັດຊື່
- ຄວາມໄວ້ວາງໃຈ
- ຄວາມສາມັກຄີ
- ການມີສ່ວນຮ່ວມ

**ຖາມ:** *ຄຸນຄ່າ ເຫຼົ່ານີ້ ມີຜົນກະທົບແນວໃດຕໍ່ການພັດທະນາຂອງຊຸມຊົນ?*
**ສົນທະນາ** ໃນກຸ່ມນ້ອຍ, ລາຍງານຄືນຄໍາຕອບຂອງຜູ້ເຂົ້າຮ່ວມໃນກຸ່ມໃຫ່ຍ.

**ສະຫຼຸບ:** *ການປະຕິບັດ ແລະ ສົ່ງເສີມຄຸນຄ່າດ້ານບວກ ແມ່ນສໍາຄັນຕໍ່ການພັດທະນາຂອງຊຸມຊົນ. ການພົວພັນແມ່ນເກີດຈາກຄວາມເຄົາລົບ, ຄວາມສາມັກຄີ, ແລະ ຄວາມໄວ້ວາງໃຈ ເຮັດໃຫ້ຊຸມຊົນມີຄວາມຮັ່ງມີ, ບໍ່ໝາຍເຖິງເງິນຄໍາ ແລະ ທຶນຮອນທີ່ເປັນວັດຖຸ, ແຕ່ໝາຍເຖິງທຶນຮອນທາງດ້ານສັງຄົມ - ຄວາມສຸກຂອງປະຊາຊົນ, ການຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ມີສ່ວນຮ່ວມຫຼາຍຂຶ້ນໃນການຊ່ວຍເຫຼືອຜູ້ອື່ນ, ແລະ ຊຸມຊົນເພື່ອເຮັດໃຫ້ທັງໝົດສາມາດພັດທະນາໄປໄດ້.*

## 2. ເຂົ້າໃຈ ແລະ ນໍາໃຊ້ຄຸນຄ່າ ຂອງການພັດທະນາໂດຍຊຸມຊົນເປັນເຈົ້າການ (20 ນາທີ)

**ອະທິບາຍ:** *ການພັດທະນາໂດຍຊຸມຊົນເປັນເຈົ້າການ (CDD) ຍັງອີງໃສ່ພື້ນຖານຂອງຄຸນຄ່າ.*
ອະທິບາຍຄຸນຄ່າເທື່ອລະອັນ. ຂໍຄວາມຄິດຄວາມເຫັນກ່ຽວກັບສິ່ງທີ່ເຂົາເຈົ້າໝາຍເຖິງ, ກ່ອນທີ່ຈະບອກຄໍານິຍາມຂອງມັນ ແລະ ເວົ້າເຖິງຄຸນຄ່າອື່ນຕໍ່ໄປ.

| ຄຸນຄ່າ CDD | ຄໍາອະທິບາຍ/ ຄວາມໝາຍ |
|---|---|
| ***ການມີສ່ວນຮ່ວມ*** | • *ໝົດທຸກກຸ່ມ, ໂດຍສະເພາະກຸ່ມທີ່ດ້ອຍໂອກາດທີ່ສຸດ, ບໍ່ວ່າຈະເປັນເພດ, ເຊື້ອຊາດ, ສາສະໜາ, ອາຍຸ, ຄວາມສາມາດ, ກຸ່ມຊົນເຜົ່າ, ຊັ້ນວັນນະ, ສັນຊາດ, ສະຖານທີ່, ຫຼື ທັດສະນະທາງເພດ, ມີໂອກາດທີ່ຈະກໍານົດແລະ ຕອບສະໜອງຄວາມຕ້ອງການຂອງເຂົາເຈົ້າ.* |
| ***ການເຂົ້າຮ່ວມ*** | • *ສະມາຊິກຊຸມຊົນໝົດທຸກຄົນ ສາມາດມີສ່ວນຮ່ວມຢ່າງສະເໝີພາບ ແລະ ມີຄວາມໝາຍໃນຂະບວນການ ການພັດທະນາຊຸມຊົນ* |
| ***ຄວາມຮັບຜິດ ຮັບຊອບໃນໜ້າທີ*** | • *ການຈັດຕັ້ງ ແລະ ປະຊາຊົນ ທີ່ຮັບຜິດຊອບການໃຫ້ບໍລິການສາທາລະນະ ນໍາໃຊ້ຊັບພະຍາກອນຢ່າງມີຄວາມຮັບຜິດຊອບ;*<br>• *ເຂົາເຈົ້າມີພັນທະທີ່ຈະຕ້ອງຮັບຜິດຊອບຕໍ່ການກະທໍາ ແລະ ການຕັດສິນໃຈຂອງເຂົາເຈົ້າ* |

| | |
|---|---|
| | • *ຊຸມຊົນມີສິດຮຽກຮ້ອງຂໍ້ມູນ ແລະ ຄຳຕອບຈາກເຂົາເຈົ້າ.* |
| ***ຄວາມໂປ່ງໃສ*** | • *ເປີດກວ້າງການເຂົ້າເຖິງຂໍ້ມູນ ແລະ ສາມາດເຂົ້າເຖິງໄດ້ຢ່າງງ່າຍດາຍ;*<br>• *ການຕັດສິນບັນຫາໄດ້ຖືກດຳເນີນການ ແລະ ຈັດຕັ້ງປະຕິບັດຕາມກົດລະບຽບ ແລະ ມາດຕະຖານທີ່ໄດ້ຮັບຮອງເອົາຮ່ວມກັນ* |

**ຖາມ:** *ໃນຖານະຜູ້ນຳຊຸມຊົນ ທີ່ມີຄວາມຮັບຜິດຊອບໃນການປະຕິບັດຕາມ ຄຸນຄ່າຂອງ CDD ທ່ານຈະນຳໃຊ້ແຕ່ລະຄຸນຄ່ານີ້ແນວໃດ?*

**ສົນທະນາ** ໃນກຸ່ມນ້ອຍ, **ລາຍງານ** ຄາຕອບຂອງຜູ້ເຂົ້າຮ່ວມໃນກຸ່ມໃຫ່ຍ, ແລະ **ສະເໜີ**ທຸກຫົວຂໍ້ຂ້າງລຸ່ມນີ້:

| **ຫຼັກການ CDD** | **ຜູ້ນຳໄດ້ນຳໃຊ້ຫລັກການເລົ່ານີ້ ຄືແນວໃດ** |
|---|---|
| **ການມີສ່ວນຮ່ວມ** | ພວກເຮົາຕ້ອງໃຫ້ແນ່ໃຈວ່າທຸກກຸ່ມໄດ້ຖືກປຶກສາຫາລື ແລະ ມີສ່ວນຮ່ວມເຂົ້າໃນ ການຕັດສິນໂຄງການ, ກິດຈະກຳ ແລະ ຜົນປະໂຫຍດ |
| **ການເຂົ້າຮ່ວມ** | ພວກເຮົາຕ້ອງຮັບປະກັນວ່າທຸກກຸ່ມໄດ້ຖືກລະດົມ ແລະ ສາມາດມີສ່ວນຮ່ວມຢ່າງສະເໝີພາບ ແລະ ມີຄວາມໝາຍໃນການຕັດສິນໃຈ ແລະ ຂະບວນການ ການຈັດຕັ້ງປະຕິບັດໂຄງການ. |
| **ຄວາມຮັບຜິດຮັບຊອບໃນຫນ້າທີ** | ພວກເຮົາຕ້ອງປະຕິບັດ ແລະ ຕິດຕາມກວດກາໂຄງການຕາມຄູ່ມືແນະນຳ ແລະ ລາຍງານຕໍ່ຊຸມຊົນກ່ຽວກັບຄວາມຄືບໜ້າ ແລະ ການໃຊ້ຈ່າຍຜ່ານກອງປະຊຸມຊຸມຊົນ, ກະດານຂ່າວ ແລະ ການກວດກາດ້ານສັງຄົມ; ກົນໄກຮ້ອງທຸກ ຕ້ອງໄດ້ຮັບການເຄື່ອນໄຫວເປັນຢ່າງດີ |
| **ຄວາມໂປ່ງໃສ** | ພວກເຮົາຕ້ອງໃຫ້ແນ່ໃຈວ່າຂໍ້ມູນແມ່ນຖືກເປີດກວ້າງ ແລະ ສາມາດເຂົ້າເຖິງໄດ້ຢ່າງງ່າຍດາຍ ສໍາລັບທຸກກຸ່ມປະຊາກອນ, ແລະ ຊຸມຊົນຈະຕ້ອງໄດ້ເກັບຮັກສາຂໍ້ມູນກ່ຽວກັບການຕັດສິນ, ການຈັດຕັ້ງປະຕິບັດ , ແລະ ຄວາມຄືບໜ້າ. |

***ສະຫຼຸບ:*** *ມັນເປັນສິ່ງ ສຳຄັນທີ່ຈະ ໃຊ້ຄຸນຄ່າເຫຼົ່ານີ້ເປັນແນວທາງຕະຫຼອດເວລາການຈັດຕັ້ງປະຕິບັດໂຄງການ - ພວກມັນຄວນເປັນຄູ່ມືສໍາລັບທ່ານ ກ່ຽວກັບວິທີການປະພຶດ ຫຼື ສິ່ງທີ່ຕ້ອງປະຕິບັດ, ເມື່ອທ່ານຕ້ອງຕັດສິນໃຈທີ່ຈະສ້າງ ຫຼື ຈັດຕັ້ງປະຕິບັດກິດຈະກຳໃດໜຶ່ງທີ່ຈຳເປັນໃນວຽກງານຂອງທ່ານໃນຖານະຜູ້ນຳຊຸມຊົນ.*

### 3. ຄວາມເຂົ້າໃນກ່ຽວກັບ ຄວາມຮັບຜິດ ຮັບຊອບໃນໜ້າທີ (20 ນາທີ)

**ອະທິບາຍ:** *ຄວາມຮັບຜິດ ຮັບຊອບໃນໜ້າທີ່ ກໍ່ປຽບເໝືອນຖະໜົນສອງສາຍ, ເຊິ່ງດ້ານໜຶ່ງຊຸມຊົນເປັນຜູ້ມອບອຳນາດໃຫ້ແກ່ຜູ້ນຳບ້ານ ເພື່ອເປັນຕົວແທນຂອງພວກເຂົາ ແລະ ປະຕິບັດແທນພວກເຂົາ ແລະ ອີກດ້ານໜຶ່ງ ຜູ້ນຳບ້ານມີພັນທະຕ້ອງຮັບຜິດຊອບຕໍ່ປະຊາຊົນ ຕໍ່ກັບການໃຊ້ອຳນາດ, ການກະທຳ ແລະ ການຕັດສິນໃຈຂອງພວກເຂົາ. ເມື່ອຜູ້ນຳບ້ານບໍ່ມີຄວາມຮັບຜິດຊອບ ຫຼື ສ້າງຄວາມພໍໃຈໃຫ້ແກ່ປະຊາຊົນ, ກໍ່ຈະເຮັດໃຫ້ເກີດມີຜົນສະທ້ອນຕາມຫຼັງມາ ແລະ ປະຊາຊົນກໍ່ສາມາດແຕ່ງຕັ້ງ ຜູ້ອື່ນເຂົ້າມາເຮັດວຽກແທນທີ່ໄດ້ ໂດຍຜ່ານຮອບວຽນຂອງການເລືອກຕັ້ງ. ສິ່ງດັ່ງກ່າວນີ້ເຮັດໃຫ້ປະຊາຊົນສາມາດຕິດຕາມຜູ້ນຳຂອງພວກເຂົາ, ເພື່ອໃຫ້ແນ່ໃຈວ່າຜູ້ນຳ ຄຳນຶງເຖິງ ຄວາມຮັບຜິດຊອບ ແລະ ຈະປະຕິບັດໜ້າທີ່ ເພື່ອ ຜົນປະໂຫຍດທີ່ດີທີ່ສຸດຂອງຊຸມຊົນ.*




**ຖາມ:** *. ຕາມຄວາມເຂົ້າໃຈ ຕໍ່ກັບຄວາມຮັບຜິດ ຮັບຊອບໃນໜ້າທີ່, ທ່ານຈຳເປັນຕ້ອງເຮັດຫຍັງແດ່ ຕໍ່ການເປັນຜູ້ນຳຊຸມຊົນທີ່ມີຄວາມຮັບຜິດຊອບ? ແລະ ທ່ານຈະເຮັດແນວໃດ?*

**ສົນທະນາ** ກຸ່ມນ້ອຍ ແລະ ຫຼັງຈາກນັ້ນ ລາຍງານພາຍໃນກຸ່ມໃຫ່ຍ. ສະເໜີທຸກຄຳຕອບ ຂ້າງລຸ່ມນີ້:

**ເຮັດຫຍັງ**

- *ລາຍງານໃຫ້ຊຸມຊົນຮັບຮູ້ເປັນປະຈຳກ່ຽວກັບ ການພັດທະນາກິດຈະກຳ ເຊັ່ນ: ແຜນການ ແລະ ການຕັດສິນບັນຫາ, ງົບປະມານທີ່ໄດ້ນຳໃຊ້, ວຽກງານທີ່ໄດ້ຮັບການຈັດຕັ້ງປະຕິບັດ ແລະ ມັນຖືກປະຕິບັດຮອດຂັ້ນໃດ.*
- *ເອົາຄຳຄິດເຫັນ, ຄຳແນະນຳ, ຄຳຮ້ອງທຸກ, ຫຼື ຄວາມກັງວົນຂອງເຂົາເຈົ້າກ່ຽວກັບຂະບວນການ ແລະ ຜົນໄດ້ຮັບຂອງກິດຈະກຳການພັດທະນາທີ່ເຂົາເຈົ້ານຳພາ.*

**ເຮັດແນວໃດ**

- *ດຳເນີນກອງປະຊຸມພາຍໃນຊຸມຊົນ ຫລື ປະຊຸມກຸ່ມສະເພາະ ຕະຫຼອດໄລຍະເວລາຂອງໂຄງການ ລວມໄປເຖິງການກວດກາທາງສັງຄົມ*
- *ຕິດປະກາດບົດລາຍງານການຕິດຕາມກວດກາ ແລະ ລາຍງານຄວາມຄືບໜ້າ ລົງໃນ ກະດານຂ່າວ*
- *ເອກະສານອ້າງອີງ ແລະ ບັນທຶກການນຳໃຊ້ງົບປະມານ ແລະ ສາມາດສະໜອງຂໍ້ມູນເຫຼົ່ານັ້ນໃຫ້ທຸກຄົນ ທີ່ຕ້ອງການຕິດຕາມ*
- *ວາງລະບົບການຈັດການຄຳຮ້ອງທຸກ ເພື່ອຮັບ ແລະ ຕອບຄຳຮ້ອງທຸກ, ຄວາມຄິດເຫັນ, ຄຳຖາມ ຫຼື ຄຳຕິຊົມຂອງປະຊາຊົນ.*
- *ປະຕິບັດຕາມຄູ່ມືການດຳເນີນງານ*

**ຖາມ:** *ຜົນປະໂຫຍດຂອງຄວາມຮັບຜິດຮັບຊອບຕໍ່ການພັດທະນາຊຸມຊົນແມ່ນຫຍັງ?*

ເຊີນໃຫ້ຕອບຄຳຖາມ. ອະທິບາຍຄຳຕອບ ຂ້າງລຸ່ມນີ້:

- *ສະໜັບສະໜູນໃຫ້ຜູ້ນຳບ້ານ ໃນການປະຕິບັດໜ້າທີ່ຄວາມຮັບຜິດຊອບຂອງຕົນ ຢ່າງຈິງຈັງເພື່ອປະໂຫຍດຕໍ່ຊຸມຊົນທັງໝົດ*
- *ສົ່ງເສີມໃຫ້ສະມາຊິກຊຸມຊົນມີຄວາມເອົາໃຈໃສ່ ໃນການມີສ່ວນຮ່ວມ ແລະ ຫ້າວຫັນໃນຂະບວນການພັດທະນາ, ພ້ອມທັງສະໜັບສະໜູນ ໃຫ້ເຂົາເຈົ້າມີການສະແດງຄວາມຄິດເຫັນ ແລະ ຄວາມກັງວົນຕໍ່ກັບຜູ້ນຳບ້ານ.*
- *ຮັບປະກັນວ່າ ຜູ້ນຳ ແລະ ໂຄງການໂດຍລວມມີຄວາມຮັບຜິດຊອບຕໍ່ທຸກພາກສ່ວນກ່ຽວຂ້ອງ*

**4. ຄຸນຄ່າຂອງ CDD ພາຍໃນຊຸມຊົນ ແລະ ບົດບາດຂອງຜູ້ນໍາຊຸມຊົນ (15 ນາທີ)**

**ອະທິບາຍ:** *ບາງຄົນເຊື່ອໝັ້ນວ່າຄຸນຄ່າເຫຼົ່ານີ້ເປັນໄພຂົ່ມຂູ່ຕໍ່ການດໍາລົງຊີວິດແບບດັ້ງເດີມ, ແຕ່ຄວາມຈິງແລ້ວມີຫຼາກຫຼາຍດ້ານ. ໃນຂະນະດຽວກັນ, ການປະຕິບັດວັດທະນະທໍາ ແລະ ມາດຕະການບາງຢ່າງ ສາມາດເຮັດໃຫ້ເກີດການລະເມີດ ຄຸນຄ່າເຫຼົ່ານີ້, ເຊັ່ນ: ການແບ່ງແຍກແມ່ຍິງ ຫຼື ກຸ່ມຊົນເຜົ່າ.*

**ກິດຈະກໍາ:** ສະແດງທັດສະນະແນວຄິດ. ວາງເຈ້ຍທີ່ຂຽນວ່າ **"ເຫັນດີ"** ແລະ **"ບໍ່ເຫັນດີ"** ໄວ້ຄົນລະຟາກຂອງຫ້ອງ. ອະທິບາຍວ່າທ່ານຈະອ່ານປະໂຫຍກ ຄໍາເວົ້າ, ແລະ ໃຫ້ທຸກຄົນຢືນຢູ່ອີກດ້ານໜຶ່ງຂອງຫ້ອງ ຕາມສິ່ງທີ່ເຂົາເຈົ້າເຊື່ອໝັ້ນ. ຍິ່ງເຂົາເຈົ້າຢືນເຂົ້າໃກ້ຄໍາວ່າ **"ເຫັນດີ"** ຫຼາຍເທົ່າໃດ, ກໍ່ໝາຍຄວາມວ່າເຂົາເຈົ້າກໍຍິ່ງເຫັນດີຫຼາຍເທົ່ານັ້ນ; ຍິ່ງເຂົາເຈົ້າຢືນເຂົ້າໃກ້ຄໍາວ່າ **"ບໍ່ເຫັນດີ"** ຫຼາຍເທົ່າໃດ, ກໍ່ໝາຍຄວາມວ່າເຂົາເຈົ້າກໍຍິ່ງບໍ່ເຫັນດີຫຼາຍເທົ່ານັ້ນ. ອ່ານເທື່ອລະປະໂຫຍກຄໍາເວົ້າ, ແຕ່ລະຄັ້ງໃຫ້ເຊີນຊວນໃຫ້ຜູ້ເຂົ້າຮ່ວມແລກປ່ຽນເຫດຜົນ ວ່າເປັນຫຍັງເຂົາເຈົ້າຈຶ່ງຢືນຢູ່ບ່ອນທີ່ເຂົາເຈົ້າຢືນຢູ່ນັ້ນ, ຫຼື ໃຫ້ເຂົາເຈົ້າສາມາດຍົກຕົວຢ່າງ.

- ປະເພນີຂອງພວກເຮົາແມ່ນປະຕິບັດຕໍ່ໝົດທຸກຄົນຢ່າງເທົ່າທຽມກັນ.
- ແມ່ຍິງໄດ້ຮັບໂອກາດເທົ່າທຽມກັບຜູ້ຊາຍ.
- ມັນເປັນສິ່ງສໍາຄັນສໍາລັບເດັກນ້ອຍຜູ້ຊາຍໃນການໄປໂຮງຮຽນ ຫຼາຍກວ່າເດັກນ້ອຍຜູ້ຍິງ.
- ໝົດທຸກຄົນໃນຊຸມຊົນມີອິດສະຫຼະໃນການເຊື່ອຖືສາສາໜາ.
- ແມ່ຍິງມີໂອກາດເທົ່າທຽມກັນກັບຜູ້ຊາຍສໍາລັບບົດບາດການເປັນຜູ້ນໍາໃນຊຸມຊົນຂອງພວກເຮົາ.
- ໝົດທຸກຄົນໃນຊຸມຊົນມີປັດໄຈການດໍາລົງຊີວິດທີ່ພຽງພໍ.
- ບໍ່ມີບຸກຄົນໃດ ໃນຊຸມຊົນຂອງພວກເຮົາທີ່ຖືກກີດກັ້ນ ໃນການຕັດສິນບັນຫາ.
- ຜູ້ນໍາຊຸມຊົນທີ່ດີ ປົກປ້ອງ ແລະ ສົ່ງເສີມການມີສ່ວນຮ່ວມ ຂອງປະຊາຊົນທັງໝົດໃນຊຸມຊົນ.

**ສະຫຼຸບ:** *ພາຍຫຼັງຮຽນຮູ້ກ່ຽວກັບຄຸນຄ່າຂອງ CDD, ໃຫ້ພິຈາລະນາວ່າຄວນນໍາເອົາຄຸນຄ່າດັ່ງກ່າວມານໍາໃຊ້ ຫຼື ບໍ່. ຖ້າຫາກບໍ່ໄດ້ຖືກນໍາມາໃຊ້, ໃຫ້ຄິດວ່າມັນມີປະໂຫຍດ ຫຼື ກໍ່ຜົນເສຍຕໍ່ການພັດທະນາຂອງຊຸມຊົນ ແນວໃດ. ຄິດກ່ຽວກັບວ່າຜູ້ນໍາຊຸມຊົນມີຄວາມຮັບຜິດຊອບໃນການສົ່ງເສີມ ແລະ ປົກປ້ອງການມີສ່ວນຮ່ວມຂອງສະມາຊິກໃນຊຸມຊົນໝົດທຸກຄົນ, ແລະ ຖ້າພວກເຂົາອາດຈະຕ້ອງການນໍາພາການພັດທະນາຊຸມຊົນ ໂດຍທັດສະນະການມີສ່ວນຮ່ວມ ແລະ ການປະພຶດບາງຢ່າງເພື່ອຮັບປະກັນວ່າບໍ່ມີໃຜຖືກກີດກັ້ນ ຫຼື ຈໍາແນກ.*

**ພາກທີ 3: ການຈຳແນກ, ການກີດກັ້ນ ແລະ ຄວາມບໍ່ສະເໝີພາບ**

**ຈຸດປະສົງ**: ພາຍຫຼັງສິ້ນສຸດພາກນີ້, ຜູ້ເຂົ້າຮ່ວມຈະສາມາດ:

- ອະທິບາຍແນວຄວາມຄິດກ່ຽວກັບການຈຳແນກ, ການກີດກັ້ນ ແລະ ຄວາມບໍ່ສະເໝີພາບ
- ໄຈ້ແຍກ ການຈຳແນກ, ການກີດກັ້ນ ແລະ ຄວາມບໍ່ສະເໝີພາບ ພາຍໃນຊຸມຊົນ
- ອະທິບາຍຄວາມແຕກຕ່າງລະຫວ່າງ ເພດ ແລະ ບົດບາດທາງເພດ
- ເຂົ້າໃຈມາດຖານທາງເພດ ແລະ ຜົນກະທົບຂອງມັນຕໍ່ຊຸມຊົນ
- ຜົນສະທ້ອນອັນຮ້າຍແຮງຕໍ່ມາດຖານທາງສັງຄົມ ທີ່ສົ່ງເສີມຄວາມບໍ່ສະເໝີພາບ ແລະ ເປັນອັນຕະລາຍຕໍ່ການພັດທະນາຂອງຊຸມຊົນ

**ເນື້ອໃນໂດຍຫຍໍ້:**

| # | ຫົວຂໍ້ | ຮູບແບບ | ເຄື່ອງມື | ເວລາ (105 ນາທີ) |
|---|---|---|---|---|
| 1 | **ການຈຳແນກ, ການກີດກັ້ນ ແລະ ຄວາມບໍ່ສະເໝີພາບ** | ຖາມ, ລະດົມຄວາມຄິດ, ອະທິບາຍ | ເຈ້ຍແຜ່ນໃຫ່ຍ, ເຈ້ຍ | 5 |
| 2 | **ການຈຳແນກ, ການກີດກັ້ນ ແລະ ຄວາມບໍ່ສະເໝີພາບ ໃນຊຸມຊົນຂອງພວກເຮົາ** | ຖາມ, ລະດົມຄວາມຄິດ, ກິດຈະກາກຸ່ມ, ອະທິບາຍ | ເຈ້ຍ | 25 |
| 3 | **ຄວາມບໍ່ສະເໝີພາບທາງເພດ** | ຖາມ, ສົນທະນາກຸ່ມ, ອະທິບາຍ | ເຈ້ຍແຜ່ນໃຫ່ຍ | 10 |
| 4 | **ຄວາມແຕກຕ່າງລະຫວ່າງ ເພດ ແລະ ບົດບາດທາງເພດ** | ຄຳຖາມ, ອະທິບາຍ, ກິດຈະກຳ | ເຈ້ຍແຜ່ນໃຫ່ຍ, ບັດສີ | 15 |
| 5 | **ມາດຖານດ້ານບົດບາດທາງເພດ** | ຖາມ, ອະທິບາຍ, ກິດຈະກຳ | ເຈ້ຍແຜ່ນໃຫ່ຍ, ເຈ້ຍ | 20 |
| 6 | **ຜົນສະທ້ອນຂອງບັນທັດຖານດ້ານບົດບາດຍິງ-ຊາຍ** | ຖາມ, ສົນທະນາກຸ່ມ, ອະທິບາຍ | ເຈ້ຍແຜ່ນໃຫ່ຍ | 20 |
| 7 | **ການປະເມີນຕົນເອງ** | ຖາມ, ກິດຈະກຳດ່ຽວແລະ ກຸ່ມ , ອະທິບາຍ | ເຈ້ຍແຜ່ນໃຫ່ຍ | 10 |

ຂັ້ນຕອນ:

**1. ການຈຳແນກ, ການກີດກັ້ນ ແລະ ຄວາມບໍ່ສະເໝີພາບ (5 ນາທີ)**

**ອະທິບາຍ:** *ລອງມາສາຫລວດເບິ່ງວ່າ ຄວາມບໍ່ສະເໝີພາບ, ການຈຳແນກ ແລະ ການກີດກັ້ນ ໝາຍຄວາມວ່າແນວໃດ ລະ ມີຜົນກະທົບແນວໃດຕໍ່ການພັດທະນາຊຸມຊົນຂອງທ່ານ.*

**ຖາມ:** ຜູ້ເຂົ້າຮ່ວມໃນກຸ່ມໃຫ່ຍວ່າ ພວກເຂົາ ໃຫ້ນິຍາມ ຫົວຂໍ້ນີ້ ແນວໃດ ແລ້ວອະທິບາຍ ຄຳນິຍາມຢູ່ຂ້າງລຸ່ມ.

| ຫົວຂໍ້ | ນິຍາມ |
|---|---|
| **ການຈຳແນກ** | *ການປະຕິບັດຕໍ່ຜູ້ອື່ນຢ່າງບໍ່ຍຸຕິທຳ ຍ້ອນເພດ, ຊົນວັນນະ, ເຊື້ອຊາດ, ທັດສະນະທາງເພດ, ພາສາ, ສາດສະໜາ, ຄວາມເຊື່ອທາງການເມືອງ, ຫຼື ລັກສະນະທາງສັງຄົມອື່ນໆ.* |
| **ການກີດກັ້ນ** | *ບຸກຄົນ ຫຼື ກຸ່ມຄົນຖືກກີດຂວາງຈາກການໄດ້ຮັບການບໍລິການ ຫຼື ເຂົ້າຮ່ວມກິດຈະກຳກັບຜູ້ອື່ນ. ການກີດກັ້ນມັກຈະເກີດຂຶ້ນຍ້ອນການຈຳແນກ.* |
| **ການມີສ່ວນຮ່ວມ** | *ບຸກຄົນ ຫຼື ກຸ່ມຄົນທີ່ມີສຽງສ່ວນໜ້ອຍ ແລະ ອຳນາດໜ້ອຍ ສາມາດ ເຂົ້າຮ່ວມໃນສັງຄົມ ແລະ ໄດ້ຮັບຜົນປະໂຫຍດຈາກການບໍລິການ.* |
| **ຄວາມບໍ່ສະເໝີພາບ** | *ການປະຕິບັດທີ່ບໍ່ເທົ່າທຽມກັນ ແລະ ໂອກາດລະຫວ່າງກຸ່ມຄົນໃນຊຸມຊົນ.* |
| **ຄວາມສະເໝີພາບ** | *ເມື່ອທຸກຄົນສາມາດເຂົ້າເຖິງໄດ້ຢ່າງສະເໝີພາບ ແລະ ໄດ້ຮັບຜົນປະໂຫຍດຈາກໂອກາດ, ຊັບພະຍາກອນ ແລະ ຜົນໄດ້ຮັບຈາກໂຄງການ.* |

**2. ການຈຳແນກ, ການກີດກັ້ນ ແລະ ຄວາມບໍ່ສະເໝີພາບໃນຊຸມຊົນ (25 ນາທີ)**

**ຖາມ:** *ທ່ານຄິດວ່າ ການຈຳແນກ, ການກີດກັ້ນ, ແລະ ຄວາມບໍ່ສະເໝີພາບ ມີຢູ່ໃນຊຸມຊົນຂອງທ່ານບໍ?*

ເຊີນໃຫ້ຕອບຄຳຖາມໃນກຸ່ມໃຫ່ຍ.

**ອະທິບາຍ:** *ຕອນນີ້ພວກເຮົາຈະເຮັດກິດຈະກຳທີ່ເອີ້ນວ່າ "ຍ່າງດ້ອຍເກີບຂອງຂ້ອຍ" ເພື່ອຊ່ວຍໃຫ້ທ່ານເຂົ້າໃຈແນວຄວາມຄິດເຫຼົ່ານີ້ໄດ້ດີຂຶ້ນ ແລະ ຄິດກ່ຽວກັບການຈຳແນກ, ການກີດກັ້ນ ແລະ ຄວາມບໍ່ສະເໝີພາບຢູ່ໃນຊຸມຊົນຂອງທ່ານ. ແຕ່ລະຄົນໄດ້ຮັບບັດທີ່ກຳນົດບົດບາດທີ່ທ່ານຈະຕ້ອງສະແດງ. ພວກມັນເປັນພຽງແຕ່ຄຳອະທິບາຍສັ້ນໆ ກ່ຽວກັບບົດບາດນັ້ນ, ແຕ່ທ່ານສາມາດ ຈິນຕະນາການບົດບາດ ເພີ່ມເຕີມຕາມທີ່ທ່ານຄິດວ່າອາດຈະເປັນບົດບາດຂອງຕົວລະຄອນທີ່ທ່ານໄດ້ຮັບ.*

**ກິດຈະກຳ:** ມອບບົດບາດໃຫ້ຜູ້ເຂົ້າຮ່ວມ. ພະຍາຍາມມອບບົດບາດ ທີ່ກົງກັນຂ້າມກັບບຸກຄະລິກຂອງຜູ້ເຂົ້າຮ່ວມ, ເຊັ່ນ ການໃຫ້ບົດບາດແມ່ຍິງໃຫ້ແກ່ຜູ້ເຂົ້າຮ່ວມຊາຍ, ເພື່ອໃຫ້ພວກເຂົາສາມາດໄດ້ຮັບຄວາມຮູ້ສຶກວ່າ "ຢ່າງດ້ອຍເກີບຂອງຜູ້ອື່ນ."

- ມະຫາເສດຖີ ທີ່ເປັນຜູ້ນຳທາງດ້ານການເມືອງ ທີ່ມີທີ່ດິນຫຼາຍ
- ແມ່ລ້ຽງດ່ຽວທີ່ບໍ່ມີການສຶກສາ, ບໍ່ມີທີ່ດິນ, ລາວອາໃສຢູ່ ໃນເຂດຊົນນະບົດ
- ຜູ້ຊາຍທີ່ເປັນຜູ້ນຳທາງສາສະໜາ
- ລູກຊາຍຂອງຜູ້ອາວຸໂສພາຍໃນບ້ານ ທີ່ຮຽນຢູ່ມະຫາວິທະຍາໄລ ແລະ ມີທີ່ດິນ ແລະ ຊັບສິນ
- ແມ່ໝ້າຍແກ່ສະລາ ຫວ່າງງານ ແລະ ເປັນຄົນພິການ
- ແມ່ຍິງທີ່ຕິດເຊື້ອເອສໄອວີ ບໍ່ສາມາດເຂົ້າເຖິງການບໍລິການດ້ານສາທາລະນະສຸກ
- ແມ່ຍິງຜູ້ທີ່ຕົກເປັນເຫຍື່ອຂອງຄວາມຮຸນແຮງທາງເພດ ທີ່ບໍ່ມີວຽກເຮັດ ແລະ ບໍ່ມີທີ່ດິນ
- ແມ່ຍິງທີ່ເປັນຄູສອນ ແລະ ເປັນໂສດ
- ເດັກຊາຍທີ່ເປັນເດັກກຳພ້າ ແລະ ຕິດເຊື້ອເອສໄອວີ
- ເດັກຍິງທີ່ບໍ່ໄດ້ໄປໂຮງຮຽນ ແລະ ຢູ່ເຮືອນ ເຮັດວຽກເຮືອນ
- ເມຍຂອງຫົວໜ້າ ທີ່ມີການສຶກສາ ພຽງແຕ່ຈົບຊັ້ນມັດທະຍົມ
- ຜູ້ອົບພະຍົກ ເພດຊາຍ ທີ່ຫລົບໜີ ບັນຫາ, ບໍ່ມີວຽກເຮັດ ແລະ ບໍ່ມີຊັບສິນ
- ແມ່ຍິງຊົນເຜົ່າທີ່ເຂົ້າຮຽນຮອດຊັ້ນມັດທະຍົມ
- ຜູ້ຊາຍຮັກຮ່ວມເພດ ທີ່ມີຮຽນຈົບ ມະຫາວິທະຍາໄລ
- ຜູ້ຊາຍທີ່ເປັນກຳມະກອນຮັບຈ້າງທົ່ວໄປ ແລະ ມາຈາກກຸ່ມຊົນເຜົ່າ
- ແມ່ຍິງທີ່ເປັນເຈົ້າຂອງຮ້ານ

**ອະທິບາຍ:** *ໝົດທຸກຄົນກະລຸນາຢືນລຽງກັນ ແລະ ບ່າໄຫລ່ຈຸກັນ ຢືນເທິງເສັ້ນຊື່ທີ່ຢູ່ກາງເດີ່ນ. ນີ້ແມ່ນເສັ້ນເລີ່ມຕົ້ນຂອງການແຂ່ງຂັນ, ມີກຳແພງ ຢູ່ທາງໜ້າເປັນເສັ້ນໄຊ. ເສັ້ນໄຊແມ່ນໝາຍເຖິງຊີວິດທີ່ທ່ານຕ້ອງການເຕີມເຕັມທັງໝົດ. ຂ້າພະເຈົ້າຈະອ່ານບາງຄຳແນະນຳເທື່ອລະອັນ, ແລະ ທ່ານຈຳເປັນຕ້ອງໄດ້ກ້າວໄປຂ້າງໜ້າ ຫຼື ຖອຍຫຼັງຂຶ້ນກັບຄຳແນະນຳ ແລະ ວິທີການທີ່ກ່ຽວຂ້ອງກັບບົດບາດ ທີ່ທ່ານໄດ້ຮັບ.*

ສະແດງໃຫ້ເຫັນຂະໜາດຂອງບາດກ້າວເພື່ອໃຫ້ທຸກຄົນກ້າວຂາເທົ່າກັນ.

**ອະທິບາຍ:** *ຖ້າທ່ານຄິດວ່າຄຳເວົ້ານີ້ໃຊ້ບໍ່ໄດ້ກັບຕົວລະຄອນຂອງທ່ານ, ທ່ານສາມາດຢຸດຢູ່ກັບທີ່. ພວກເຮົາຈະເຮັດສິ່ງນີ້ຢ່າງງຽບໆ, ສະນັ້ນ ກະລຸນາຟັງ ແລະ ໄຕ່ຕອງວ່າຄຳເວົ້ານັ້ນຈະນຳໃຊ້ກັບບົດບາດທີ່ ທ່ານໄດ້ຮັບນັ້ນແນວໃດ, ແລະ ວ່າຈະກ້າວໄປຂ້າງໜ້າ, ຖອຍຫຼັງ, ຫຼື ຢຸດຢູ່ບ່ອນເກົ່າ.*

ອ່ານແຕ່ລະຄຳແນະນຳເທື່ອລະອັນ, ໃຫ້ເວລາຜູ້ເຂົ້າຮ່ວມພິຈາລະນາວ່າຄຳແນະນຳດັ່ງກ່າວວ່າມີຜົນກະທົບແນວໃດ ແລະ ເຂົາເຈົ້າຄວນຈະກ້າວໄປທາງໃດ.

- *ຖ້າທ່ານເປັນຜູ້ຊາຍ, ໃຫ້ກ້າວໄປຂ້າງໜ້າ.*
- *ຖ້າທ່ານເປັນຜູ້ຍິງ, ໃຫ້ກ້າວຖອຍຫຼັງ.*
- *ຖ້າທ່ານມີຄວາມພິການ ຫຼື ເຈັບປ່ວຍ, ໃຫ້ກ້າວຖອຍຫຼັງ.*
- *ຖ້າທ່ານມີອຳນາດໃນການຕັດສິນໃຈ, ໃຫ້ກ້າວໄປຂ້າງໜ້າ.*
- *ຖ້າທ່ານອາໄສຢູ່ໃນເຂດຊົນນະບົດ, ໃຫ້ກ້າວຖອຍຫຼັງ.*
- *ຖ້າທ່ານ ຫຼື ຄອບຄົວຂອງທ່ານທຸກຍາກ, ໃຫ້ກ້າວຖອຍຫຼັງ.*
- *ຖ້າທ່ານ ຫຼື ຄອບຄົວຂອງທ່ານຮັ່ງມີ, ໃຫ້ກ້າວໄປຂ້າງໜ້າ.*
- *ຖ້າທ່ານເປັນເຈົ້າຂອງທີ່ດິນ ຫຼື ເຮືອນ, ໃຫ້ກ້າວໄປຂ້າງໜ້າ.*
- *ຖ້າທ່ານຢູ່ໃນຄົວທີ່ມີຫົວໜ້າຄອບຄົວເປັນແມ່ຍິງ, ໃຫ້ກ້າວຖອຍຫລັງ.*
- *ຖ້າທ່ານມີລົດໃຫຍ່ ຫຼື ລົດຈັກ, ໃຫ້ກ້າວໄປຂ້າງໜ້າ.*
- *ຖ້າທ່ານເຄີຍຖືກປະຕິບັດດ້ອຍກວ່າກວ່າຄົນອື່ນຍ້ອນເຊື້ອຊາດ, ຊົນເຜົ່າ, ຫຼື ຊົ້ນຊັ້ນ, ໃຫ້ກ້າວຖອຍຫຼັງ.*
- *ຖ້າທ່ານເຄີຍໄດ້ຮັບການປະຕິບັດດີກ່ວາຄົນອື່ນຍ້ອນເຊື້ອຊາດ, ຊົນເຜົ່າ, ຫຼື ຊົນຊັ້ນ, ໃຫ້ກ້າວໄປຂ້າງໜ້າ.*
- *ຖ້າທ່ານໄດ້ເຂົ້າໂຮງຮຽນແລ້ວ, ໃຫ້ກ້າວໄປຂ້າງໜ້າ.*
- *ຖ້າທ່ານບໍ່ສາມາດເຂົ້າເຖິງສິນເຊື່ອໄດ້, ໃຫ້ກ້າວຖອຍຫຼັງ.*
- *ຖ້າທ່ານສາມາດຊື້ອາຫານ ແລະ ເຄື່ອງໃຊ້ຊີວິດທັງໝົດໄດ້ໂດຍງ່າຍ, ໃຫ້ກ້າວໄປຂ້າງໜ້າ.*
- *ຖ້າທ່ານບໍ່ມີເງິນທ້ອນ ຫຼື ຊັບສິນ, ໃຫ້ກ້າວຖອຍຫຼັງ.*
- *ຖ້າທ່ານສາມາດອ່ານ ແລະ ຂຽນໜັງສືໄດ້, ໃຫ້ກ້າວໄປຂ້າງໜ້າ.*
- *ຖ້າທ່ານມີວຽກເຮັດທີ່ໝັ້ນຄົງ, ໃຫ້ກ້າວໄປຂ້າງໜ້າ.*
- *ຖ້າທ່ານເປັນຄົນຮັກຮ່ວມເພດ, ໃຫ້ກ້າວຖອຍຫຼັງ.*
- *ຖ້າທ່ານເປັນສາສະໜາທີ່ເດັ່ນ, ໃຫ້ກ້າວໄປຂ້າງໜ້າ.*
- *ຖ້າທ່ານເວົ້າພາສາທາງການບໍ່ໄດ້ດີ, ໃຫ້ກ້າວຖອຍຫຼັງ.*
- ຖ້າທ່ານເຄີຍຕົກເປັນເຫຍື່ອຂອງຄວາມຮຸນແຮງຍ້ອນເປັນຊົນເຜົ່າຂອງທ່ານ, ໃຫ້ກ້າວຖອຍຫຼັງ.
- ຖ້າທ່ານເຄີຍຕົກເປັນເຫຍື່ອຂອງຄວາມຮຸນແຮງຍ້ອນເພດຂອງທ່ານ, ໃຫ້ກ້າວຖອຍຫຼັງ.
- ຖ້າທ່ານເຂົ້າຮ່ວມກອງປະຊຸມຊຸມຊົນ, ໃຫ້ກ້າວໄປຂ້າງໜ້າ.

**ອະທິບາຍ:** *ມາຮອດນີ້ໃຫ້ທ່ານຢຸດຢູ່ບ່ອນທີ່ທ່ານຢູ່ ແລະ ແນມເບິ່ງອ້ອມໆ. ໃຫ້ສັງເກດວ່າທ່ານຢູ່ຈຸດໃດ, ໃຜຢູ່ທາງໜ້າຂອງທ່ານ, ແລະ ໃຜຢູ່ທາງຫຼັງຂອງທ່ານ. ຈາກຄົນທີ່ຢູ່ທາງໜ້າໄປຫາຄົນທາງຫຼັງ, ກະລຸນາເປີດເຜີຍຕົວຕົນຂອງທ່ານໃຫ້ທຸກຄົນຮູ້.*

ຫຼັງຈາກທີ່ທຸກຄົນໄດ້ເປີດເຜີຍຕົວຕົນຂອງຕົນເອງຕາມລຳດັບ,ໃຫ້ສົນທະນາກັບທຸກຄົນດ້ວຍຄຳຖາມດັ່ງຕໍ່ໄປນີ້:

- *ທ່ານສັງເກດເຫັນຫຍັງແດ່?*
- ***ສຳລັບຄົນທີ່ຢູ່ທາງໜ້າ**, ເປັນຫຍັງທ່ານຈຶ່ງຄິດວ່າທ່ານຢູ່ທາງໜ້າ? ທ່ານຮູ້ສຶກແນວໃດໃນການທີ່ຢູ່ດ້ານໜ້າຂອງຄົນອື່ນ?*

- ***ສໍາລັບຄົນທີ່ຢູ່ທາງຫຼັງ***, *ເປັນຫຍັງທ່ານຈຶ່ງຄິດວ່າທ່ານຢູ່ທາງຫຼັງ? ທ່ານຮູ້ສຶກແນວໃດທີ່ຖືກປະຖິ້ມໄວ້ເຖິງແມ່ນວ່າທຸກຄົນຈະເລີ່ມຕົ້ນຢູ່ໃນເສັ້ນດຽວກັນ? ທ່ານຮູ້ສຶກແນວໃດເມື່ອເຫັນຄົນອື່ນກ້າວໄປຂ້າງໜ້າ? ທ່ານຮູ້ສຶກທໍ້ຖອຍໃຈທີ່ຈະເຂົ້າຮ່ວມໃນການແຂ່ງຂັນນີ້ ເນື່ອງຈາກທ່ານຢູ່ທາງຫຼັງຄົນອື່ນ ແລະ ຄົງຈະບໍ່ຊະນະບໍ?*
- ***ສໍາລັບຄົນທີ່ຢູ່ທາງກາງ***, *ເປັນຫຍັງທ່ານຈຶ່ງຄິດວ່າທ່ານຢູ່ທາງກາງ? ທ່ານຮູ້ສຶກແນວໃດ?*
- *ທ່ານຄິດວ່າຄວາມແຕກຕ່າງເຫຼົ່ານີ້ ມີຜົນກະທົບແນວໃດຕໍ່ຄົນທີ່ຈະຊະນະການແຂ່ງຂັນ? ອັນໃດເຮັດໃຫ້ຄົນໜຶ່ງໄດ້ປຽບ ຫຼື ເສຍປຽບກວ່າຄົນອື່ນ?*
- *ທ່ານໄດ້ຮຽນຮູ້ຫຍັງແດ່ຈາກກິດຈະກໍານີ້?*

**ສະຫຼຸບ:** *ກິດຈະກໍານີ້ສະແດງໃຫ້ເຫັນຄວາມແຕກຕ່າງລະຫວ່າງກຸ່ມ, ແລະ ຜົນກະທົບຂອງຄວາມບໍ່ສະເໝີພາບ, ເມື່ອປະຊາຊົນບໍ່ໄດ້ເລີ່ມຕົ້ນຈາກເສັ້ນເລີ່ມຕົ້ນດຽວກັນໃນເວລາທີ່ເຂົາເຈົ້າຕ້ອງການການເຂົ້າເຖິງການບໍລິການ ຫຼື ໂອກາດ. ມັນຍັງສະແດງໃຫ້ເຫັນວ່າ ລັກສະນະທາງສັງຄົມທີ່ແຕກຕ່າງກັນ - ເຊັ່ນ: ເພດ, ເຊື້ອຊາດ, ຊົນຊັ້ນ, ຊົນເຜົ່າ, ສາສະໜາ, ທັດສະນະທາງເພດ, ຄວາມພິການ, ແລະ ອື່ນໆ - ຕັດກັນເພື່ອສ້າງລະດັບ ແລະ ຮູບແບບຂອງການຈໍາແນກ, ການກີດກັ້ນ, ແລະ ຄວາມບໍ່ສະເໝີພາບທີ່ແຕກຕ່າງກັນ.*

**ຖາມ:** *ຕອນນີ້ທ່ານໄດ້ສໍາເລັດກິດຈະກໍານີ້ແລ້ວ, ໃຫ້ຄິດອີກຄັ້ງວ່າ: ການຈໍາແນກ, ການກີດກັ້ນ, ແລະ ຄວາມບໍ່ສະເໝີພາບມີບໍ່ຢູ່ໃນຊຸມຊົນຂອງທ່ານ? ຖ້າເປັນດັ່ງນັ້ນ, ກຸ່ມໃດ ໃນຊຸມຊົນທີ່ປະເຊີນກັບ ການຈໍາແນກ ຫຼື ຖືກກີດກັ້ນຈາກການມີສ່ວນຮ່ວມໃນກິດຈະກໍາການພັດທະນາຂອງຊຸມຊົນ?* ເຊີນໃຫ້ຕອບຄໍາຖາມ. ບາງຄໍາຕອບຕົວຢ່າງ:

| |
|---|
| • ຄົນທຸກຍາກ<br>• ຜູ້ດ້ອຍໂອກາດ<br>• ກຸ່ມຊົນເຜົ່າ<br>• ໄວໜຸ່ມ<br>• ແມ່ຍິງທຸກຍາກ |

**3. ຄວາມບໍ່ສະເໝີພາບທາງເພດ (10 ນາທີ)**

**ອະທິບາຍ:** *ພວກເຮົາຈະກວດເບິ່ງວ່າ ຄວາມບໍ່ສະເໝີພາບທາງເພດ ມີຜົນກະທົບແນວໃດຕໍ່ແມ່ຍິງ ແລະ ຜົນກະທົບຂອງການຈໍາແນກທາງເພດຢູ່ໃນຊຸມຊົນຂອງພວກເຮົາ.*

**ຖາມ:** *ມີປັດໄຈການດໍາລົງຊີວິດໃດໃນຊຸມຊົນ ທີ່ແມ່ຍິງປະເຊີນກັບການຈໍາແນກ, ການກີດກັ້ນ, ຫຼື ຄວາມບໍ່ສະເໝີພາບເມື່ອປຽບທຽບກັບຜູ້ຊາຍ?*

ສົນທະນາ ໃນກຸ່ມນ້ອຍ ແລະ ລາຍງານກັບຄືນພາຍໃນກຸ່ມໃຫ່ຍ. ອະທິບາຍທຸກຄໍາຕອບຂ້າງລຸ່ມນີ້:

| |
|---|
| • ການແບ່ງແຍກດ້ານແຮງງານທັງພາຍໃນ ແລະ ນອກຄອບຄົວ<br>• ການເຂົ້າເຖິງ ແລະ ຄຸ້ມຄອງຊັບພະຍາກອນ<br>• ການເຂົ້າເຖິງການສຶກສາໜ້ອຍກວ່າ |

- ໂອກາດໃນການເຮັດວຽກໜ້ອຍກວ່າ
- ຮູບແບບຄວາມຮຸນແຮງໃນຮູບແບບຕ່າງໆຕໍ່ແມ່ຍິງ
- ໂອກາດໃນການຕັດສິນໃຈ ແລະ ບົດບາດການເປັນຜູ້ນໍາ
- ຄວາມຮັບຜິດຊອບໃນການເບິ່ງແຍງລູກ ແລະ ວຽກເຮືອນ

**ອະທິບາຍ:** *ຕອນນີ້ພວກເຮົາໄດ້ກໍານົດຄວາມບໍ່ສະເໝີພາບທີ່ແມ່ຍິງຕ້ອງປະເຊີນ, ຕອນນີ້ເຮົາມາເບິ່ງເຫດຜົນຂອງຄວາມບໍ່ສະເໝີພາບນີ້, ກ່ອນອື່ນ ພວກເຮົາຈໍາເປັນຕ້ອງໄດ້ກວດເບິ່ງແນວຄວາມຄິດຂອງບົດບາດທາງເພດ ນີ້ຢ່າງຊັດເຈນ ແລະ ຄົ້ນຫາສິ່ງທີ່ພວກເຮົາເຊື່ອຖືກ່ຽວກັບຄວາມໝາຍຂອງເດັກຍິງ ຫຼື ເດັກຊາຍ, ແມ່ຍິງ ຫຼື ຜູ້ຊາຍ, ໃນຊຸມຊົນ ແລະ ສັງຄົມຂອງພວກເຮົາ.*

**4. ຄວາມແຕກຕ່າງລະຫວ່າງ ເພດ ແລະ ບົດບາດທາງເພດ (15 ນາທີ)**

**ຖາມ:** *ຄວາມແຕກຕ່າງກັນລະຫວ່າງ ເພດ ແລະ ແລະ ບົດບາດທາງເພດ ມີຫຍັງແດ່?*

ເຊີນຜູ້ເຂົ້າຮ່ວມໃນກຸ່ມໃຫ່ຍ ໃຫ້ຕອບຄໍາຖາມ. ອະທິບາຍເນື້ອໃນຂ້າງລຸ່ມ:

| *ເພດ* | *ບົດບາດທາງເພດ* |
|---|---|
| ***ຊີວະວິທະຍາ ແລະ ພັນທຸກໍາ*** - *ຄວາມແຕກຕ່າງທາງກາຍຍະພາບ (ອະໄວຍະວະສືບພັນ) ໃນຮ່າງກາຍຂອງຜູ້ຊາຍ ແລະ ແມ່ຍິງ ທີ່ພວກເຮົາເປັນມາໂດຍກໍາເນີດ.* | ***ວັດທະນະທໍາ ແລະ ມະນຸດສ້າງຂຶ້ນ*** - *ທັດສະນະຄະຕິ, ພຶດຕິກໍາ, ຄວາມຄາດຫວັງ, ແລະ ພາລະບົດບາດທີ່ວັດທະນະທໍາສັງຄົມ ແລະ ອົງການຈັດຕັ້ງຂອງສັງຄົມຂອງພວກເຮົາກໍານົດຂຶ້ນໃຫ້ຜູ້ຊາຍ ແລະ ແມ່ຍິງ* |
| ***ຄົງທີ່*** - *ເດັກຍິງທີ່ເກີດຢູ່ທີ່ນີ້ແມ່ນຄືກັນກັບເດັກຍິງຄົນອື່ນ ບໍ່ວ່າຈະເກີດຢູ່ບ່ອນໃດກໍ່ຕາມ, ແລະ ມັນກໍ່ຄືກັນຕະຫຼອດເວລາ (ຍົກເວັ້ນກໍລະນີຂອງການຜ່າຕັດ)* | ***ປ່ຽນແປງໄດ້*** - *ມັນແຕກຕ່າງກັນໄປຕາມແຕ່ລະສະຖານທີ່, ແລະ ການປ່ຽນແປງຕາມການເວລາ* |

**ອະທິບາຍ:** *ພວກເຮົາຈະເຮັດກິດຈະກໍາເພື່ອໃຫ້ເຂົ້າໃຈ ແລະ ອະທິບາຍໄດ້ ຄວາມແຕກຕ່າງລະຫວ່າງສອງແນວຄວາມຄິດນີ້. ມີສອງແຜ່ນປ້າຍຢູ່ເທິງຝາ - ບັດສີຂຽວທີ່ຂຽນວ່າ "ເພດ" ແລະ ບັດສີເຫຼືອງທີ່ຂຽນວ່າ "ບົດບາດທາງເພດ." ພວກທ່ານແຕ່ລະຄົນຈະໄດ້ຮັບບັດ ສີຂຽວ ແລະ ສີເຫຼືອງ. ຂ້າພະເຈົ້າຈະອ່ານຄໍາແນະນໍາທີ່ແຕກຕ່າງກັນເທື່ອລະອັນ, ແລະ ຖ້າທ່ານຄິດວ່າມັນໝາຍເຖິງ "ເພດ", ໃຫ້ຍົກບັດສີຂຽວຂຶ້ນ. ຖ້າທ່ານຄິດວ່າມັນໝາຍເຖິງ "ບົດບາດທາງເພດ", ໃຫ້ຍົກບັດສີເຫຼືອງຂຶ້ນ.*

**ກິດຈະກໍາ**: ອ່ານແຕ່ລະຄໍາແນະນໍາຂ້າງລຸ່ມນີ້, ສະຫຼັບກັນລະຫວ່າງເພດ ແລະ ບົດບາດທາງເພດ. ຫລັງຈາກອ່ານແຕ່ລະຄໍາແນະນໍາ ຖາມຜູ້ເຂົ້າຮ່ວມວ່າ ຍ້ອນຫຍັງຈຶ່ງວ່າແມ່ນ ເພດ ຫລື ບົດບາດທາງເພດ. ຖ້າມີຄໍາແນະນໍາ ທີ່ສະແດງໃຫ້ເຫັນຄວາມຂັດແຍ່ງລະຫວ່າງຜູ້ເຂົ້າຮ່ວມໃນກຸ່ມ ໂດຍການໄດ້ຮັບ ທັງບັດສີຂຽວ ແລະ ສີເຫຼືອງ, ຂໍໃຫ້ຜູ້ເຂົ້າຮ່ວມອະທິບາຍທາງເລືອກຂອງພວກເຂົາເຈົ້າໃຫ້ກັບອີກຝ່າຍ. ຕັ້ງຄໍາຖາມຕໍ່ໄປນີ້ເພື່ອຫາຂໍ້ຕົກລົງເຫັນດີຮ່ວມກັນວ່າມັນໝາຍເຖິງ ເພດ ຫຼື ບົດບາດທາງເພດ:

- *ມັນເປັນຄວາມແຕກຕ່າງທາງຊີວະວິທະຍາລະຫວ່າງຮ່າງກາຍຂອງຜູ້ຊາຍ ແລະ ຜູ້ຍິງ, ຫຼື ມັນກ່ຽວຂ້ອງກັບວັດທະນະທຳ ແລະ ສັງຄົມ ທີ່ສອນພວກເຮົາວ່າຜູ້ຊາຍ ແລະ ແມ່ຍິງຄວນຈະເປັນແນວໃດ?*

| ເພດ | ບົດບາດທາງເພດ (ເພດພາວະ) |
|---|---|
| ແມ່ຍິງສາມາດໃຫ້ກຳເນີດລູກໄດ້ ຜູ້ຊາຍບໍ່ສາມາດເຮັດໄດ້ | ເດັກຊາຍສາມາດປະສົບຜົນສຳເລັດໃນການສຶກສາໄດ້ ເດັກຍິງບໍ່ສາມາດເຮັດໄດ້. |
| ແມ່ຍິງສາມາດມີນ້ຳນົມສຳລັບລ້ຽງລູກໄດ້ ຜູ້ຊາຍບໍ່ສາມາດເຮັດໄດ້ | ເດັກຊາຍສາມາດຫຼິ້ນກິລາໄດ້ ເດັກຍິງ ບໍ່ສາມາດເຮັດໄດ້. |
| ແມ່ຍິງສາມາດຖືພາໄດ້ ຜູ້ຊາຍບໍ່ສາມາດເຮັດໄດ້ | ຜູ້ຊາຍສາມາດມີລາຍຮັບໄດ້ ແມ່ຍິງບໍ່ສາມາດມີໄດ້. |
| ແມ່ຍິງສາມາດມີປະຈຳເດືອນ ຜູ້ຊາຍບໍ່ສາມາດມີໄດ້. | ແມ່ຍິງສາມາດເບິ່ງແຍງລູກໄດ້ ຜູ້ຊາຍບໍ່ສາມາດເຮັດໄດ້. |
| ຜູ້ຊາຍສາມາດມີໜວດ ແລະ ແມ່ຍິງບໍ່ສາມາດມີໄດ້. | ຜູ້ຊາຍສາມາດເປັນຜູ້ນຳຊຸມຊົນໄດ້ ແມ່ຍິງບໍ່ສາມາດເປັນໄດ້. |
| | ຜູ້ຊາຍສາມາດໄປເຮັດວຽກນອກເຮືອນ/ບ້ານ ໄດ້ ແມ່ຍິງບໍ່ສາມາດເຮັດໄດ້. |
| | ຜູ້ຊາຍສາມາດເປັນຫົວໜ້າຄອບຄົວໄດ້ ແມ່ຍິງບໍ່ສາມາດເປັນໄດ້. |

**5. ມາດຖານບົດບາດທາງເພດ. (20 ນາທີ)**

**ອະທິບາຍ**: *ດຽວນີ້ພວກເຮົາຮູ້ຄວາມແຕກຕ່າງລະຫວ່າງເພດ ແລະ ບົດບາດທາງເພດ (ເພດພາວະ), ໃຫ້ເບິ່ງວ່າສິ່ງນີ້ມີຜົນກະທົບແນວໃດຕໍ່ການທີ່ພວກເຮົາກຳນົດມາດຖານບົດບາດທາງເພດ.*

**ຖາມ**: *ພໍ່ຄົນໜຶ່ງກຳລັງຂັບລົດພາລູກຊາຍນ້ອຍໄປໂຮງຮຽນ ເຂົາເຈົ້າປະສົບອຸບັດຕິເຫດທາງລົດ ພໍ່ໄດ້ເສຍຊີວິດຄາທີ່ ລູກຊາຍໄດ້ຮັບບາດເຈັບ ແລະ ໄດ້ຖືກນຳສົ່ງໂຮງໝໍຢ່າງຮີບດ່ວນ. ເມື່ອເດັກຊາຍທີ່ໝົດສະຕິຖືກນຳສົ່ງເຂົ້າຫ້ອງສຸກເສີນ, ທ່ານໝໍໄດ້ຫຼຽວເບິ່ງລາວ ແລະ ເວົ້າວ່າ,* ***"ໂອ້ຍ ! ລູກຊາຍຂອງຂ້ອຍ! " ມັນເປັນໄປໄດ້ແນວໃດ?***

ເຊີນຜູ້ເຂົ້າຮ່ວມໃນກຸ່ມໃຫ່ຍ ໃຫ້ຕອບຄຳຖາມ

**ອະທິບາຍ**: *ຄຳຕອບແມ່ນວ່າທ່ານຫມໍແມ່ນແມ່ຂອງເດັກຊາຍ. ທ່ານອາດຈະຄິດເອງໂດຍອັດຕະໂນມັດວ່ານີ້ແມ່ນເລື່ອງທີ່ເປັນໄປບໍ່ໄດ້ ເພາະວ່າພວກເຮົາສົມມຸດຖານວ່າໝໍຕ້ອງເປັນຜູ້ຊາຍເທົ່ານັ້ນ, ແລະ ຖ້າພໍ່ຂອງເດັກຊາຍໄດ້ເສຍຊີວິດ, ລາວຈະເປັນໝໍໄດ້ແນວໃດ? ພວກເຮົາບໍ່ໄດ້ພິຈາລະນາທັນທີວ່າທ່ານໝໍອາດເປັນແມ່ຍິງກໍ່ເປັນໄດ້. ສົມມຸດຕິຖານເຫຼົ່ານີ້ແມ່ນອີງໃສ່ສິ່ງທີ່ພວກເຮົາເອີ້ນວ່າ "ມາດຖານບົດບາດທາງເພດ." ຈົ່ງຈື່ໄວ້ວ່າບົດບາດແມ່ນສິ່ງທີ່ພວກເຮົາຮຽນຮູ້ ແລະ ບໍ່ແມ່ນສິ່ງທີ່ພວກເຮົາເກີດມາ; ມັນຖືກສ້າງຂຶ້ນ ແລະ ປູກຝັງໂດຍສັງຄົມ ແລະ ວັດທະນະທຳຂອງພວກເຮົາ. ບົດບາດ ແລະ*

*ພຶດຕິກຳເຫຼົ່ານີ້ຖືກກຳນົດໃຫ້ເປັນແມ່ຍິງ ແລະ ຜູ້ຊາຍ ໂດຍອີງໃສ່ສິ່ງທີ່ສັງຄົມ ແລະ ວັດທະນະທຳຂອງພວກເຮົາໄດ້ກຳນົດໄວ້ເປັນປົກກະຕິ. ນັ້ນແມ່ນເຫດຜົນທີ່ພວກເຂົາເອີ້ນວ່າ "ມາດຖານທາງເພດ."*

**ອະທິບາຍ**: *ພວກເຮົາຈະເຮັດກິດຈະກຳ ເພື່ອຊ່ວຍໃຫ້ພວກເຮົາເຂົ້າໃຈມາດຖານທາງເພດ ຫລາຍກວ່າເກົ່າມີຮູບພາບສອງອັນ ຢູ່ສອງຂ້າງຂອງຫ້ອງ. ຮູບພາບໜຶ່ງເປັນຂອງແມ່ຍິງ ແລະ ອີກຮູບພາບໜຶ່ງເປັນຂອງຜູ້ຊາຍ. ຂ້າພະເຈົ້າຈະອ່ານລາຍການຂອງບົດບາດຍິງ-ຊາຍ ແລະ ມາດຖານ. ໃນແຕ່ລະຂໍ້ທີ່ຂ້າພະເຈົ້າເວົ້າ, ໃຫ້ທ່ານຍ້າຍໄປຢູ່ທາງຂ້າງຂອງແມ່ຍິງ ຫຼື ຜູ້ຊາຍ ໂດຍອີງຕາມທີ່ທ່ານຄິດວ່າບົດບາດ ຫຼື ມາດຖານນັ້ນເປັນຂອງໃຜ. ຖ້າທ່ານຄິດວ່າເປັນທັງສອງ, ທ່ານສາມາດຍ້າຍໄປຢູ່ທາງກາງຂອງຫ້ອງ.*

**ກິດຈະກຳ:** "ບ່ອນທີ່ຂ້ອຍຢືນ". ອ່ານລາຍການເທື່ອລະອັນ, ໃຫ້ເວລາຜູ້ເຂົ້າຮ່ວມຍ້າຍໄປຫາຕຳແໜ່ງຂອງເຂົາເຈົ້າ. ດຳເນີນກິດຈະກຳຢ່າງວ່ອງໄວ, ເພື່ອໃຫ້ຜູ້ເຂົ້າຮ່ວມຕອບສະໜອງຕາມສັນຊາດຕະຍານເບື້ອງຕົ້ນຂອງເຂົາເຈົ້າ ແທນທີ່ຈະຄິດເປັນເວລາດົນນານ.

| | | |
|---|---|---|
| ຊາວກະສິກອນ | ຫົວໜ້າຄອບຄົວ | ນັກການເມືອງ |
| ຄົນທີ່ຕ້ອງລ້ຽງດູລູກ | ແຕ່ງກິນ | ກຳມະກອນກໍ່ສ້າງ |
| ນາຍຈ້າງ | ຄົນທີ່ຮ້ອງໄຫ້ | ຄົນຂັບລົດ |
| ຄົນທີ່ອ່ານໜັງສືພິມ | ທ່ານໝໍ | ເຈົ້າຂອງທຸລະກິດ |
| ນາຍພານ | ຄົນຊັກເສື້ອຜ້າ | ຄູອາຈານ |
| ຄົນເຮັດຄວາມສະອາດເຮືອນ | ຄົນແຂງແຮງ | ຜູ້ຕັດສິນໃຈ/ຕັດສິນບັນຫາ |
| ຄົນທີ່ອ່ອນໂຍນ | ຜູ້ນຳທາງສາສະໜາ | |
| ສາມາດໄປທຸກບ່ອນທຸກເວລາ | ຄົນທີ່ຮຽນເກັ່ງຢູ່ໂຮງຮຽນ | |

**ຖາມ**: *ທ່ານຄິດຫຍັງຢູ່ ຕອນທີ່ທ່ານກຳລັງພະຍາຍາມຕັດສິນໃຈວ່າຈະເປັນແມ່ຍິງ ຫຼື ຜູ້ຊາຍ, ຫຼື ທັງສອງ? ເປັນຫຍັງທ່ານຈຶ່ງເຊື່ອມໂຍງບົດບາດບາງຢ່າງກັບແມ່ຍິງ ຫຼື ກັບຜູ້ຊາຍ?*
ເຊີນຕອບຄຳຖາມ ແລະ ສົນທະນາ.

**ອະທິບາຍ**: *ວັດທະນະທຳ ແລະ ສັງຄົມຂອງພວກເຮົາ ສອນໃຫ້ພວກເຮົາມີແນວຄວາມຄິດຕາຍໂຕກ່ຽວກັບສິ່ງທີ່ແມ່ຍິງ ແລະ ຜູ້ຊາຍສາມາດເຮັດໄດ້ ແລະ ຄວນເຮັດແນວໃດ ແລະ ປະພຶດໂຕແນວໃດ, ໃນເວລາທີ່ຜູ້ຊາຍ ແລະ ແມ່ຍິງມີທ່າແຮງທີ່ຈະເຮັດສິ່ງດຽວກັນ ແລະ ເປັນໄປໃນທາງດຽວກັນ. ໃນສັງຄົມທີ່ເທົ່າທຽມກັນ, ທັງຜູ້ຊາຍ ແລະ ແມ່ຍິງສາມາດເປັນສິ່ງເຫຼົ່ານີ້ໄດ້ທັງໝົດ.*

**6. ຜົນກະທົບຂອງມາດຖານທາງເພດ (20 ນາທີ)**

**ຖາມ**: *ຕອນນີ້ໃຫ້ຄິດເບິ່ງວ່າ, ຜົນກະທົບຂອງ ມາດຖານທາງເພດເຫຼົ່ານີ້ແມ່ນຫຍັງ? ປັດໃຈເຫຼົ່ານີ້ສົ່ງຜົນຕໍ່ໂອກາດສໍາລັບແມ່ຍິງແບບໃດ,ແລະສົ່ງຜົນຕໍ່ໂອກາດສໍາລັບຜູ້ຊາຍແບບໃດ? ມີຂໍ້ເສຍແລະອຸປະສັກໃດທີ່ ສົ່ງຜົນໃຫ້ກັບທັງສອງກຸ່ມບໍ່? ສົນທະນາກຸ່ມນ້ອຍ:* ລາຍງານຄືນໃນກອງປະຊຸມ. ຄໍາຕອບທີ່ເປັນໄປໄດ້:

- *ເດັກຍິງຖືກກີດກັນບໍ່ໃຫ້ໄປໂຮງຮຽນ ຫຼື ຕ້ອງການອອກໂຮງຮຽນເພື່ອແຕ່ງດອງ*
- *ແມ່ຍິງສາມາດເຂົ້າເຖິງການຝຶກອົບຮົມ ແລະ ຫລັກສູດວິຊາຊີບໄດ້ໜ້ອຍ*
- *ແມ່ຍິງຖືກກີດກັນບໍ່ໃຫ້ໄປເຮັດວຽກ ຫຼື ມີໂອກາດເຂົ້າເຖິງລາຍໄດ້ໜ້ອຍລົງ*
- *ແມ່ຍິງມີອໍານາດຄວບຄຸມຊັບພະຍາກອນໜ້ອຍລົງ, ໂດຍສະເພາະຊັບພະຍາກອນທີ່ໃຫ້ຜົນປະໂຫຍດເຊັ່ນ: ທີ່ດິນ ແລະ ຊັບສິນ*
- *ຜູ້ຊາຍຖືກກີດກັນບໍ່ໃຫ້ມີບົດບາດຫຼາຍຂຶ້ນໃນການເບິ່ງແຍງລູກ*
- *ຜູ້ຊາຍຖືກກີດກັນບໍ່ໃຫ້ຊ່ວຍເຮັດວຽກເຮືອນ*
- *ແມ່ຍິງເຂົ້າເຖິງການບໍລິການ ແລະ ສະຫວັດດີການຕ່າງໆ ໄດ້ໜ້ອຍລົງ*
- *ຜູ້ຊາຍຖືກດູຖູກຍ້ອນການສະແດງອາລົມ*
- *ແມ່ຍິງມີອໍານາດໃນການຕັດສິນໃຈຕໍ່ຊຸມຊົນໄດ້ໜ້ອຍກວ່າ*
- *ແມ່ຍິງມີອໍານາດໜ້ອຍກວ່າໃນການຕັດສິນໃຈວ່າຈະແຕ່ງງານເວລາໃດ ແລະ ກັບໃຜ, ແລະ ຖ້າຈະມີລູກ ແລະ ຄວນມີລູກເວລາໃດ*
- *ແມ່ຍິງມີຄວາມຄ່ອງໂຕໜ້ອຍກວ່າຜູ້ຊາຍ, ແລະ ຄວາມສາມາດໃນການຄວບຄຸມການເຄື່ອນໄຫວຂອງຕົນເອງ*
- *ແມ່ຍິງຖືກກັກໂຕໄວ້ຢູ່ເຮືອນທີ່ເຊິ່ງເຂົາເຈົ້າບໍ່ມີທາງເລືອກອື່ນນອກຈາກຕ້ອງເຮັດວຽກທີ່ບໍ່ໄດ້ຮັບຄ່າຈ້າງ ເຊັ່ນ: ການເບິ່ງແຍງ ແລະອະນາໄມເຮືອນຊານ*
- *ແມ່ຍິງຖືກໂດດດ່ຽວ ແລະ ກີດກັນບໍ່ໃຫ້ເຂົ້າສັງຄົມ, ເຊິ່ງສົ່ງຜົນກະທົບຕໍ່ຄວາມໝັ້ນໃຈໃນຕົນເອງ ແລະ ທັກສະທາງສັງຄົມ*
- *ເມື່ອຜູ້ຊາຍຄວນຈະເຄັ່ງຄັດ ແລະ ເປັນຜູ້ຄຸ້ມຄອງ ແລະ ແມ່ຍິງບໍ່ປະຕິບັດຕາມບົດບາດທີ່ເຂົາເຈົ້າຕ້ອງຈໍາຍອມ, ສິ່ງນີ້ອາດນໍາພາໃຫ້ເກີດຄວາມຮຸນແຮງຕໍ່ແມ່ຍິງ.*
- *ກົດໝາຍທີ່ເລືອກປະຕິບັດຕໍ່ແມ່ຍິງ ເຊັ່ນ: ກົດໝາຍວ່າດ້ວຍການສືບທອດມູນມໍລະດົກ*
- *ແມ່ຍິງມີການເຂົ້າເຖິງຂໍ້ມູນຂ່າວສານ ແລະ ຄວາມຮູ້ໄດ້ໜ້ອຍ*

**ຖາມ**: *ຄວາມບໍ່ສະເໝີພາບທາງເພດນີ້ມີຜົນກະທົບແນວໃດຕໍ່ການພັດທະນາຊຸມຊົນຂອງທ່ານ? ມີຜົນກະທົບທີ່ເປັນອັນຕະລາຍບໍ່?*

ເຊີນໃຫ້ຕອບຄໍາຖາມ, ຄໍາຕອບທີ່ເປັນໄປໄດ້:

- *ຖ້າແມ່ຍິງຖືກລະເລີຍໃນການວາງແຜນ ແລະ ການຕັດສິນໃຈໃນການພັດທະນາຊຸມຊົນ, ພວກເຮົາຈະຂາດແນວຄວາມຄິດ ແລະ ປະສົບການຂອງເຂົາເຈົ້າ, ແລະ ໂຄງການອາດຈະບໍ່ສາມາດປັບປຸງວິຖີຊີວິດຂອງເຂົາເຈົ້າໄດ້, ເຮັດໃຫ້ເກີດຄວາມບໍ່ສະເໝີພາບຫຼາຍຂຶ້ນ.*

- *ຖ້າເດັກຍິງບໍ່ໄດ້ຮັບການຊຸກຍູ້ໃຫ້ໄປໂຮງຮຽນ, ເຂົາເຈົ້າຈະບໍ່ສາມາດເຂົ້າຮ່ວມໃຊ້ຊີວິດໃນສັງຄົມໄດ້ ຫຼື ໄດ້ວຽກເຮັດງານທຳທີ່ດີ, ແລະ ພວກເຮົາຈະສູນເສຍທ່າແຮງເຄິ່ງໜຶ່ງຂອງປະຊາກອນຂອງພວກເຮົາ.*
- *ຖ້າແມ່ຍິງບໍ່ສາມາດເຂົ້າເຖິງໂອກາດໃນການສ້າງລາຍຮັບ, ພວກເຮົາຈະສູນເສຍກຳລັງແຮງງານເຄິ່ງໜຶ່ງ ແລະ ສິ່ງເຫຼົ່ານີ້ມີຜົນກະທົບທາງລົບຕໍ່ເສດຖະກິດ ຂອງພວກເຮົາ.*

**ອະທິບາຍ:** *ມັນບໍ່ແມ່ນບັນຫາ ທີ່ຜູ້ຊາຍ ແລະ ແມ່ຍິງ ທີ່ຈະມີຄວາມແຕກຕ່າງກັນ; ບັນຫາເກີດຂຶ້ນໃນເວລາທີ່ພວກເຮົາຖືກສັ່ງສອນວ່າແມ່ຍິງ ແລະ ຜູ້ຊາຍ ຄວນຈະເປັນໄປໃນທາງດຽວ ຫຼື ສິ່ງອື່ນ, ແລະ ວ່າສິ່ງທີ່ຜູ້ຊາຍເຮັດ ແລະ ວິທີການທີ່ເຂົາເຈົ້າປະຕິບັດແມ່ນມີຄຸນຄ່າ ຫຼາຍກ່ວາແມ່ຍິງ. ເມື່ອພວກເຮົາກວດກາເບິ່ງບັນທັດຖານທາງເພດ, ພວກເຮົາສາມາດເຫັນໄດ້ວ່າພວກເຂົາເຮັດໃຫ້ເກີດມີຄວາມບໍ່ສະເໝີພາບລະຫວ່າງຜູ້ຊາຍ ແລະ ແມ່ຍິງ, ແລະ ຄວາມເປັນອັນຕະລາຍຕໍ່ການພັດທະນາຊຸມຊົນຂອງພວກເຮົາ. <u>ແຕ່ເມື່ອເຮົາຮູ້ວ່າບົດບາດ ເປັນສິ່ງທີ່ພວກເຮົາຮຽນຮູ້ ແລະ ບໍ່ແມ່ນສິ່ງທີ່ເຮົາເປັນມາແຕ່ເກີດ, ມັນຖືກກຳນົດໂດຍວັດທະນະທຳ ແລະ ສັງຄົມຂອງພວກເຮົາ ແລະ ມະນຸດເປັນຜູ້ສ້າງຂຶ້ນ, ສະນັ້ນ ພວກເຮົາກໍ່ສາມາດເລືອກທີ່ຈະບໍ່ສ້າງພວກມັນໄດ້ ຫຼື ປ່ຽນແປງມັນໃຫ້ມີຄວາມແຕກຕ່າງກັນ.</u>*

**ຖາມ:** *ວັດທະນະທຳ ແລະ ແນວຄວາມຄິດຂອງພວກເຮົາສາມາດປ່ຽນແປງກ່ຽວກັບບົດບາດຍິງ-ຊາຍໄດ້ບໍ? ສິ່ງໃດທີ່ໄດ້ປ່ຽນແປງໄປຈາກຍຸກສະໄໝຂອງປູ່ຍ່າ, ພໍ່ແມ່ ແລະ ຕົວທ່ານເອງ? ທ່ານເຫັນເຖິງຄວາມແຕກຕ່າງອັນໃດແດ່? ຕົວຢ່າງ, ໃນປັດຈຸບັນພວກເຮົາເຫັນແມ່ຍິງມີບົດບາດໃນການຕັດສິນໃຈ ຫຼາຍຂຶ້ນກວ່າແຕ່ກ່ອນບໍ່? ພວກເຮົາເຫັນແມ່ຍິງເຮັດສິ່ງທີ່ໃນສະໄໝກ່ອນແມ່ນມີແຕ່ຜູ້ຊາຍເທົ່ານັ້ນທີ່ເຮັດ ບໍ? ພວກເຮົາເຫັນຜູ້ຊາຍມີບົດບາດຫຼາຍຂຶ້ນພາຍໃນຄອບຄົວ ແລະ ຄົວເຮືອນບໍ?*
ເຊີນໃຫ້ຜູ້ເຂົ້າຮ່ວມຕອບຄຳຖາມ.
**ອະທິບາຍ:** *ທ່ານໃສ່ເສື້ອຜ້າແບບດຽວກັບຕອນທີ່ທ່ານນຸ່ງຕອນຍັງນ້ອຍບໍ? ການປ່ຽນແປງ ແລະ ການພັດທະນາແມ່ນສ່ວນໜຶ່ງຂອງຊີວິດ. ເມື່ອພວກເຮົາເຂົ້າໃຈວ່າບໍ່ພຽງແຕ່ການປ່ຽນແປງທີ່ເປັນໄປໄດ້, ແຕ່ມັນເປັນເລື່ອງປົກກະຕິ ຂອງການເວລາ ແລະ ປະຫວັດສາດ ເມື່ອພວກເຮົາເຕີບໃຫຍ່ ແລະ ພັດທະນາຂຶ້ນ, ແລ້ວພວກເຮົາຈະສາມາດເຂົ້າໃຈໄດ້ ວ່າມາດຖານທາງເພດສາມາດປ່ຽນແປງໄດ້ເມື່ອວັດທະນະທຳ ແລະ ສັງຄົມຂອງພວກເຮົາມີການປ່ຽນແປງ ແລະ ພັດທະນາໄປ. ແລະ ໃນເວລາທີ່ພວກເຮົາໄດ້ຊີ້ໃຫ້ເຫັນຄວາມບໍ່ສະເໝີພາບ ແລະ ສາເຫດຂອງພວກມັນ, ຫຼັງຈາກນັ້ນພວກເຮົາສາມາດກຳນົດການປ່ຽນແປງທີ່ພວກເຮົາຕ້ອງການເຮັດໃຫ້ຊີວິດການເປັນຢູ່ດີຂຶ້ນໃນຊຸມຊົນຂອງພວກເຮົາ.*

### 7. ການປະເມີນຕົວເອງ (10 ນາທີ)

**ຖາມ***: ທ່ານໄດ້ຮຽນຮູ້ຫຍັງແດ່ຈາກຫົວບົດທີ່ຮຽນໃນມື້ນີ້? ທ່ານຈະນຳໃຊ້ສິ່ງທີ່ທ່ານໄດ້ຮຽນມານັ້ນແນວໃດ? ກະລຸນາຖາມຕົວຂອງທ່ານເອງ ກ່ຽວກັບຄຳຖາມເຫຼົ່ານີ້ ພາຍໃນສອງຫາສາມນາທີ ແລະ ໃຫ້ຂຽນຜົນການປະເມີນ ຂອງທ່ານລົງໃນປຶ້ມບັນທຶກ (ຖ້າສາມາດຂຽນ ).*
ຫຼັງຈາກປະເມີນຕົວເອງ, ແລກປ່ຽນຄຳຄິດຄຳເຫັນກັນເປັນຄູ່.

ກັບຄືນມາກຸ່ມໃຫ່ຍ, ຂໍໃຫ້ບາງຄູ່ອາສາສະໝັກ ອອກມາແລກປ່ຽນສິ່ງທີ່ເຂົາເຈົ້າໄດ້ຍິນຈາກຄູ່ສົນທະນາຂອງເຂົາເຈົ້າ.

**ສະຫຼຸບ:** *ໃນກອງປະຊຸມນີ້, ພວກເຮົາໄດ້ວິເຄາະວ່າການຈຳແນກ, ການກີດກັ້ນ, ແລະ ຄວາມບໍ່ສະເໝີພາບ ມີຜົນກະທົບຕໍ່ແມ່ຍິງ, ຜູ້ຊາຍ, ເດັກນ້ອຍ, ໄວໜຸ່ມ, ຜູ້ສູງອາຍຸ, ຜູ້ທຸກຍາກ, ຄົນພິການ, ກຸ່ມຊົນເຜົ່າ, ແລະ ອື່ນໆ. ປະຊາກອນຈາກກຸ່ມຕ່າງໆ ມີຄວາມຕ້ອງການ ແລະ ທັດສະນະທີ່ແຕກຕ່າງກັນ, ນັ້ນແມ່ນເຫດຜົນທີ່ວ່າມັນເປັນສິ່ງສຳຄັນທີ່ຈະໃຫ້ເຂົາເຈົ້າມີສ່ວນຮ່ວມ ເພື່ອໃຫ້ທ່ານສາມາດເກັບກຳທັດສະນະຂອງເຂົາເຈົ້າໄດ້. ລວມທັງປະຊາຊົນເອງ ຍັງສາມາດຊ່ວຍປ້ອງກັນຄວາມຂັດແຍ່ງທີ່ອາດຈະເກີດຂຶ້ນ ເຊິ່ງອາດເປັນຜົນມາຈາກການກີດກັ້ນ ແລະ ການຈຳແນກ. ປ່ຽນແປງ ມາດຖານທີ່ເປັນອັນຕະລາຍ, ເພີ່ມທະວີຄວາມສະເໝີພາບ ແລະ ການມີສ່ວນຮ່ວມ, ແລະ ຜົນປະໂຫຍດຈາກ ການພັດທະນາ ແລະ ສະຫວັດດີການຂອງຊຸມຊົນທັງໝົດ.*

## ພາກທີ 4: ການວາງແຜນທີ່ມີສ່ວນຮ່ວມຂອງທຸກຄົນ

**ຈຸດປະສົງ:** ພາຍຫຼັງສິ້ນສຸດພາກນີ້, ຜູ້ເຂົ້າຮ່ວມຈະສາມາດ:

- ວິເຄາະສະພາບສັງຄົມຂອງຊຸມຊົນ ແລະ ສ້າງວິໄສທັດສໍາລັບການມີສ່ວນຮ່ວມ
- ກໍານົດແຜນປະຕິບັດທີ່ມີສ່ວນຮ່ວມ
- ພິຈາລະນາທັກສະການເປັນຜູ້ນໍາທີ່ຈໍາເປັນ ເພື່ອປະຕິບັດແຜນການຂອງເຂົາເຈົ້າ

**ເນື້ອໃນໂດຍຫຍໍ້:**

| # | ຫົວຂໍ້ | ຮູບແບບ | ເຄື່ອງມື | ເວລາ (55 ນາທີ) |
|---|---|---|---|---|
| 1 | **ແນະນໍາແຜນປະຕິບັດງານທີ່ມີສ່ວນຮ່ວມ** | ອະທິບາຍ | ກະດານເຈ້ຍ, | 5 |
| 3 | **ວິເຄາະສະພາບສັງຄົມຂອງຊຸມຊົນ ແລະ ສ້າງວິໄສທັດ** | ຖາມ, ການເຮັດວຽກເປັນກຸ່ມ | ກະດານເຈ້ຍ, | 15 |
| 4 | **ກໍານົດແຜນປະຕິບັດງານທີ່ມີສ່ວນຮ່ວມ** | ຖາມ, ການເຮັດວຽກເປັນກຸ່ມ | ກະດານເຈ້ຍ, | 25 |
| 5 | **ທັກສະການເປັນຜູ້ນໍາ** | ຖາມ, ການສົນທະນາກຸ່ມ, ອະທິບາຍ | ກະດານເຈ້ຍ | 10 |

**ຂັ້ນຕອນ:**

**1. ແນະນໍາ ແຜນດໍາເນີນງານ ທີ່ມີສ່ວນຮ່ວມ (5 ນາທີ)**

**ອະທິບາຍ:** *ເມື່ອທ່ານສ້າງແຜນພັດທະນາບ້ານຂອງເຈົ້າ, ກ່ອນອື່ນໝົດທ່ານຕ້ອງລະບຸສະຖານະການບ້ານຂອງທ່ານໃນປັດຈຸບັນ ກ່ຽວກັບໂຄງສ້າງພື້ນຖານ ແລະ ການບໍລິການ. ຫຼັງຈາກນັ້ນ, ທ່ານພັດທະນາວິໄສທັດ ຂອງສິ່ງທີ່ທ່ານຕ້ອງການໃຫ້ບ້ານຂອງທ່ານໃນອະນາຄົດເຊັ່ນ: ໂຄງລ່າງພື້ນຖານ ແລະ ການບໍລິການທີ່ທ່ານຕ້ອງການທີ່ຈະປັບປຸງ. ຫຼັງຈາກນັ້ນ, ທ່ານສ້າງແຜນການສໍາລັບວິທີທີ່ຈະບັນລຸວິໄສທັດນັ້ນ, ແລະ ກິດຈະກໍາທີ່ຄວນຈະຖືກປະຕິບັດເພື່ອຍ້າຍຈາກສະຖານະການໃນປະຈຸບັນໄປສູ່ອະນາຄົດ.*




*ເຊັ່ນດຽວກັນ, ພວກເຮົາຈະສ້າງແຜນການດໍາເນີນງານທີ່ມີສ່ວນຮ່ວມ, ໂດຍທໍາອິດກໍານົດສະຖານະການທາງສັງຄົມໃນປະຈຸບັນຢູ່ໃນບ້ານຂອງທ່ານ. ຫຼັງຈາກນັ້ນ, ພວກເຮົາຈະພັດທະນາວິໄສທັດຂອງສິ່ງທີ່ທ່ານຕ້ອງການໃຫ້ບ້ານຂອງທ່ານເປັນແນວໃດໃນອະນາຄົດ ໃນດ້ານການພົວພັນລະຫວ່າງປະຊາຊົນ ແລະ ເສີມສ້າງຄວາມສະເຫມີພາບ ລະຫວ່າງຍິງຊາຍໃນຊຸມຊົນ. ຫຼັງຈາກນັ້ນ, ພວກເຮົາຈະສ້າງແຜນການສໍາລັບວິທີທີ່ຈະບັນລຸວິໄສທັດນັ້ນ, ແລະ ກິດຈະກໍາທີ່ຄວນຈະຖືກປະຕິບັດ ເພື່ອກ້າວຈາກສະຖານະການໃນປະຈຸບັນ ໄປສູ່ອະນາຄົດ.*

**2. ການວິເຄາະສະຖານະການຂອງພວກເຮົາ ແລະ ການສ້າງວິໄສທັດ (15 ນາທີ)**

**ກິດຈະກຳ:** ແຍກຜູ້ເຂົ້າຮ່ວມອອກເປັນກຸ່ມເຊັ່ນ: ກຸ່ມຍິງໜຸ່ມ, ກຸ່ມຍິງອາວຸໂສ, ກຸ່ມຊາຍໜຸ່ມ, ຜູ້ເຖົ້າ, ຊົນເຜົ່າ ແລະ ກຸ່ມອື່ນໆ. ຂໍໃຫ້ຜູ້ເຂົ້າຮ່ວມ ເລືອກເຂົ້າຮ່ວມກຸ່ມ ທີ່ເຂົາເຈົ້າຮູ້ສຶກສະບາຍໃຈທີ່ສຸດ. ໃນກຸ່ມເຫຼົ່ານີ້, ໃຫ້ຜູ້ເຂົ້າຮ່ວມສົນທະນາ ແລະ ຕອບຄຳຖາມຕໍ່ໄປນີ້:

1. **ຖາມ:** *ສະພາບສັງຄົມຂອງຊຸມຊົນຂອງທ່ານໃນປັດຈຸບັນແມ່ນຫຍັງ ?*
- *ສະພາບຂອງກຸ່ມຄົນຕ່າງໆໃນຊຸມຊົນເປັນແນວໃດ ເຊັ່ນ: ແມ່ຍິງ, ຊົນເຜົ່າ, ຄົນພິການ, ໄວໜຸ່ມ, ເດັກນ້ອຍ ແລະ ອື່ນໆ?*
- *ມີການຈຳແນກ, ການກີດກັ້ນ, ຫຼື ຄວາມບໍ່ສະເໝີພາບ ດ້ານໃດແດ່ ທີ່ມີຢູ່ໃນຊຸມຊົນຂອງທ່ານ ?*
- *ກຸ່ມຕ່າງໆ ເຂົ້າເຖິງການບໍລິການແນວໃດ ?*
- *ກິດຈະກຳ ແລະ ພາລະບົດບາດ ຂອງເຂົາເຈົ້າແມ່ນຫຍັງ ແລະ ເຂົາເຈົ້າມີຄວາມຮູ້ສຶກແນວໃດ ?*
- *ຄວາມສຳພັນລະຫວ່າງກຸ່ມເຫຼົ່ານີ້ເປັນແນວໃດ?*

2. **ຖາມ:** *ໃນ 10 ຕໍ່ໜ້າ ທ່ານຕ້ອງການໃຫ້ສະພາບທາງສັງຄົມໃນຊຸມຊົນຂອງທ່ານເປັແນວໃດ ?*
- *ສະພາບຂອງກຸ່ມຄົນຕ່າງໆໃນຊຸມຊົນເປັນແນວໃດ ເຊັ່ນ: ແມ່ຍິງ, ຊົນເຜົ່າ, ຄົນພິການ, ໄວໜຸ່ມ, ເດັກນ້ອຍ ແລະ ອື່ນໆ?*
- *ມີການຈຳແນກ, ການກີດກັ້ນ, ຫຼື ຄວາມບໍ່ສະເໝີພາບ ອັນໃດແດ່ທີ່ມີຢູ່ໃນຊຸມຊົນ ?*
- *ກຸ່ມຕ່າງໆເຂົ້າເຖິງການບໍລິການແນວໃດ ?*
- *ກິດຈະກຳ ແລະ ພາລະບົດບາດຂອງເຂົາເຈົ້າແມ່ນຫຍັງ ແລະ ເຂົາເຈົ້າມີຄວາມຮູ້ສຶກແນວໃດ ?*
- *ຄວາມສຳພັນລະຫວ່າງກຸ່ມເຫຼົ່ານີ້ເປັນແນວໃດ ?*

**3. ສ້າງແຜນດຳເນີນງານທີ່ມີສ່ວນຮ່ວມ (25 ນາທີ)**

**ຖາມ:** *ມາຮອດນີ້ ທ່ານໄດ້ວິເຄາະສະຖານະການປັດຈຸບັນຂອງທ່ານ ແລະ ສ້າງວິໄສທັດສຳລັບອະນາຄົດ, ຊຸມຊົນຈະບັນລຸວິໄສທັດຂອງການມີສ່ວນຮ່ວມໄດ້ແນວໃດ? ຄິດເຖິງກິດຈະກຳ ການຍ່າງດ້ວຍພະລັງ ຊຸມຊົນສາມາດສະໜັບສະໜູນຜູ້ທີ່ຖືກປະຖິ້ມໄວ້ໄດ້ແນວໃດ? ທ່ານສາມາດເຮັດຫຍັງໄດ້ແດ່ ໃນຖານະຜູ້ນຳເພື່ອນຳພາຊຸມຊົນ ທີ່ພະຍາຍາມໃຫ້ທຸກຄົນສ່ວນຮ່ວມນີ້?*

ໃນກຸ່ມດຽວກັນ, ໃຫ້ຜູ້ເຂົ້າຮ່ວມກຳນົດດັ່ງຕໍ່ໄປນີ້, ກະກຽມຕາຕະລາງຂ້າງລຸ່ມນີ້:
- ພວກເຮົາຄວນປະຕິບັດອັນໃດເພື່ອບັນລຸວິໄສທັດ?
- ຊັບພະຍາກອນອັນໃດທີ່ພວກເຮົາຈະຕ້ອງການ ຫຼື ນຳໃຊ້?
- ເມື່ອໃດທີ່ພວກເຮົາຈະບັນລຸແຜນປະຕິບັດງານນີ້?
- ໃຜຈະຮັບຜິດຊອບ?

ໃຫ້ທຸກກຸ່ມລາຍງານຄືນ. ຫຼັງຈາກນັ້ນ, ຮວບຮວມແຜນປະຕິບັດງານຈາກທຸກກຸ່ມເຂົ້າໃສ່ໃນແຜນການປະຕິບັດງານທີ່ມີສ່ວນລວມຂອງຊຸມຊົນ.

ຕົວຢ່າງແຜນດຳເນີນງານ:

| ແຜນປະຕິບັດງານອັນໃດເພື່ອບັນລຸວິໄສທັດຂອງພວກເຮົາ | ຕ້ອງການຊັບພະຍາກອນອັນໃດ | ເມື່ອໃດ | ໃຜຮັບຜິດຊອບ |
|---|---|---|---|
| ຊຸກຍູ້ສົ່ງເສີມໃຫ້ກຸ່ມທີ່ຖືກກີດກັ້ນໃຫ້ເຂົ້າຮ່ວມກອງປະຊຸມບ້ານ ແລະ ຟັງຜູ້ທີ່ມີສຽງສ່ວນໜ້ອຍ | ເວລາ ແລະ ຜູ້ທີ່ເວົ້າພາສາທ້ອງຖິ່ນທີ່ສາມາດໄປເວົ້າກັບຜູ້ດ້ອຍໂອກາດ ເພື່ອຂໍໃຫ້ເຂົາເຈົ້າມາຮ່ວມປະຊຸມໃນບ້ານ | | ສະມາຊິກຄະນະກຳມະການທັງໝົດຈະເປັນຜູ້ປະຕິບັດ; ນາຍບ້ານຈະເປັນຜູ້ຮັບຜິດຊອບ |
| ຈັດລຳດັບຄວາມສຳຄັນຂອງຄວາມຕ້ອງການຂອງກຸ່ມຜູ້ດ້ອຍໂອກາດໃນການຄັດເລືອກໂຄງການຫຼືກິດຈະກຳ | | | |
| ປູກຈິດສຳນຶກກ່ຽວກັບມາດຕະຖານທາງສັງຄົມທີ່ເປັນອັນຕະລາຍ ແລະ ຊ່ວຍປ່ຽນແປງທັດສະນະຄະຕິ ແລະ ພຶດຕິກຳທີ່ເປັນອັນຕະລາຍ ຫຼື ເອົາປຽບຄົນອື່ນ | | | |
| ກວດເບິ່ງວ່າແຜນ ແລະ ໂຄງການພັດທະນາຊຸມຊົນ ຂອງພວກເຮົາມີປະໂຫຍດຕໍ່ທຸກໆຄົນ ແລະ ບໍ່ມີໃຜເສຍຜົນປະໂຫຍດ | | | |
| ຮັບປະກັນວ່າກຸ່ມຜູ້ດ້ອຍໂອກາດສາມາດເຂົ້າເຖິງໂອກາດການເຮັດວຽກທີ່ມາຈາກກິດຈະກຳການພັດທະນາ | | | |
| ສົ່ງເສີມການເຂົ້າເຖິງໃຫ້ກຸ່ມຜູ້ດ້ອຍໂອກາດ ໄດ້ຮັບຮູ້ຂໍ້ມູນຂ່າວສານ, ການບໍລິການ, ແລະ ໂອກາດ | | | |

**ສະຫຼຸບ:** ທຸກໆຄັ້ງທີ່ຜູ້ນຳບ້ານພົບກັນ, ທ່ານຄວນທົບທວນຄືນແຜນປະຕິບັດງານນີ້ ແລະ ທົບທວນຄືນແຜນການຕາມສິ່ງທີ່ເກີດຂຶ້ນໃນຊຸມຊົນ ຫຼື ສິ່ງທີ່ທ່ານໄດ້ຮຽນຮູ້. ທ່ານຍັງຄວນສືບຕໍ່ແບ່ງປັນສິ່ງເຫຼົ່ານີ້, ປັບປຸງ, ແລະ ຮັບຄຳຄິດເຫັນຈາກຊຸມຊົນ ໃນລະຫວ່າງການປະຊຸມກັບຊາວບ້ານ ຫຼື ຜ່ານຊ່ອງທາງການສື່ສານອື່ນໆ ເຊັ່ນກະດານຂ່າວ.

### 4. ທັກສະການເປັນຜູ້ນຳ (10 ນາທີ)

**ອະທິບາຍ:** *ຜູ້ນຳຊຸມຊົນຈຳເປັນຕ້ອງມີທັກສະທີ່ແນ່ນອນເພື່ອສ້າງຄວາມໝັ້ນໃຈ ແລະ ນຳພາຊຸມຊົນໃນການບັນລຸວິໄສທັດຂອງຊຸມຊົນ. ພວກເຂົາຕ້ອງມີຄວາມສາມາດໃນການເປັນຕົວແທນຂອງທຸກກຸ່ມໃນຊຸມຊົນ, ຕອບສະໜອງຄວາມຕ້ອງການຂອງຊຸມຊົນຢ່າງມີປະສິດທິພາບ, ແລະ ສະເໜີແນວຄວາມຄິດ ແລະ ວິທີແກ້ໄຂ.*

**ຖາມ:** *ທັກສະ ແລະຄວາມສາມາດອັນໃດທີ່ເຈົ້າຮູ້ສຶກວ່າເຈົ້າຕ້ອງການເພື່ອນໍາພາ ແລະ ປະຕິບັດແຜນປະຕິບັດງານລວມນີ້?*

ສົນທະນາເປັນກຸ່ມນ້ອຍ, ລາຍງານຄໍາຕອບໃນກຸ່ມໃຫ່ຍ, ແລະ ອະທິບາຍທຸກຂໍ້ ຂ້າງລຸ່ມນີ້:

- ຕື່ນຕົວ
- ທັກສະໃນການວິເຄາະ ແລະ ວິຈານ
- ໝັ້ນໃຈໃນຕົນເອງ
- ທັກສະການສື່ສານ
- ທັກສະການເວົ້າຕໍ່ຫນ້າຊຸມຊົນ
- ການເຮັດວຽກເປັນທີມ, ຄວາມໄວ້ວາງໃຈ, ແລະ ການປະສານງານ – ເຮັດວຽກຮ່ວມກັນເປັນທີມ ແລະ ກັບຊຸມຊົນ
- ທັກສະການແກ້ໄຂຂໍ້ຂັດແຍ່ງ – ການແກ້ໄຂຂໍ້ຂັດແຍ່ງໃນຊຸມຊົນ
- ການປຸກລະດົມ ແລະ ອໍານວຍຄວາມສະດວກໃນຊຸມຊົນ
- ທັກສະການເຈລະຈາ
- ທັກສະສ້າງເຄືອຂ່າຍ ແລະ ຮູ້ວິທີການຂົນຂວາຍບຸກຄະລາກອນ ແລະ ພາກສ່ວນກ່ຽວຂ້ອງ
- ທັກສະການຕັດສິນໃຈ ແລະ ການແກ້ໄຂບັນຫາ
- ທັກສະການວາງແຜນ

**ສະຫຼຸບ:** *ຕົວທ່ານຄົນດຽວອາດຈະບໍ່ສາມາດມີທັກສະເຫຼົ່ານີ້ທັງໝົດ, ແຕ່ໂດຍການຮ່ວມກັນ, ທ່ານສາມາດມີທັກສະອື່ນເພີ່ມເຕີມ ໂດຍຜ່ານການເຮັດວຽກຮ່ວມກັນເປັນກຸ່ມ. ໃນລັດຖະບານພາກຕໍ່ໄປ, ພວກເຮົາຈະລົງເລິກ ໃນບາງທັກສະ ທີ່ສໍາຄັນທີ່ສຸດ ທີ່ສາມາດ ຊ່ວຍໃຫ້ທ່ານ ກາຍເປັນຜູ້ນໍາແບບມີສ່ວນຮ່ວມ ທີ່ປະສົບຜົນສໍາເລັດ.*

# ພາກທີ 5: ທັກສະການສື່ສານ

**ຈຸດປະສົງ** : ເມື່ອຮອດຕອນທ້າຍຂອງພາກນີ້, ຜູ້ເຂົ້າຮ່ວມຈະສາມາດ:

- ເຂົ້າໃຈຄວາມສຳຄັນຂອງການສື່ສານທີ່ດີເພື່ອການນຳພາທີ່ມີປະສິດທິພາບ
- ອະທິບາຍຊ່ອງທາງ ແລະ ອົງປະກອບຕ່າງໆຂອງການສື່ສານ
- ຝຶກທັກສະການສື່ສານເຊັ່ນ: ການເວົ້າຕໍ່ໜ້າສາທາລະນະຊົນ, ແລະ ການຟັງຢ່າງຕັ້ງໃຈ

**ສັງລວມເນື້ອໃນ:**

| # | ຫົວຂໍ້ | ວິທີການ | ອຸປະກອນ | ເວລາ (100 ນາທີ) |
|---|---|---|---|---|
| 1 | **ຄວາມສຳຄັນຂອງການສື່ສານ** | ເຮັດວຽກກຸ່ມ, ຖາມ, ອະທິບາຍ | ເຈ້ຍແຜ່ນໃຫຍ່ | 15 |
| 2 | **ອົງປະກອບ ແລະ ຊ່ອງທາງຕ່າງໆສຳລັບການສື່ສານທີ່ດີ** | ຖາມ, ອະທິບາຍ | ເຈ້ຍແຜ່ນໃຫຍ່ | 10 |
| 3 | **ການເວົ້າຕໍ່ຫນ້າສາທາລະນະ (ສົ່ງ)** | ຖາມ, ເຮັດວຽກກຸ່ມ, ອະທິບາຍ | ເຈ້ຍແຜ່ນໃຫຍ່ | 15 |
| 4 | **ການຟັງຢ່າງຕັ້ງໃຈ (ການຮັບ)** | ຖາມ, ເຮັດວຽກກຸ່ມ, ອະທິບາຍ | ເຈ້ຍແຜ່ນໃຫຍ່ | 10 |
| 5 | **ທັກສະການເວົ້າ ແລະ ການຟັງ** | ຖາມ, ເຮັດວຽກກຸ່ມ, ອະທິບາຍ | | 20 |
| 6 | **ການເວົ້າ ແລະ ຟັງ ໃນຖານະເປັນຜູ້ນຳຊຸມຊົນ** | ບົດບາດສົມມຸດ, ຖາມ, ອະທິບາຍ | ເຈ້ຍແຜ່ນໃຫຍ່ | 30 |

**ຂັ້ນຕອນ** :

**1. ຄວາມສຳຄັນຂອງການສື່ສານ (15 ນາທີ)**

**ອະທິບາຍ**: *ກະລຸນາລວມກັນເປັນວົງ. ຂ້າພະເຈົ້າຈະເວົ້າຂໍ້ຄວາມບາງຢ່າງໃສ່ຫູຂອງຄົນທີ່ຢູ່ຂ້າງຂ້າພະເຈົ້າ; ຈະເວົ້າດັງພໍທີ່ລາວຈະໄດ້ຍິນ ແຕ່ເວົ້າຄ່ອຍໆເພື່ອບໍ່ໃຫ້ຜູ້ອື່ນໄດ້ຍິນ. ບຸກຄົນນັ້ນຈະເຮັດແບບດຽວກັນນີ້ກັບຄົນທີ່ຢູ່ຂ້າງລາວ, ແລະ ຄົນຕໍ່ໆໄປກໍ່ຈະເຮັດແບບດຽວກັນ, ຈົນກວ່າຂໍ້ຄວາມນັ້ນຈະວົນວຽນໄປທົ່ວວົງ ຈົນຮອດຄົນສຸດທ້າຍ. ທ່ານມີໂອກາດພຽງຄັ້ງດຽວທີ່ຈະເວົ້າ ຂໍ້ຄວາມນັ້ນກັບຄົນທີ່ຢູ່ຂ້າງທ່ານ ແລະ ບໍ່ສາມາດເວົ້າຊໍ້າໄດ້ອີກ.*

**ກິດຈະກຳ: ໂທລະສັບ**

ຕົວຢ່າງຂໍ້ຄວາມທີ່ສາມາດໃຊ້ໄດ້: "ພໍ່ແມ່ທຸກໆຄົນໃນບ້ານ ໄດ້ໄປຕະຫຼາດເພື່ອຊື້ຫມາກເລັ່ນ, ຜັກກາດ ແລະ ເຂົ້າ ເພື່ອເອົາໄປສົມທົບໃນກອງປະຊຸມໂຮງຮຽນບ່ອນທີ່ພວກເຂົາຈະແຕ່ງກິນໃຫ້ຄູ ແລະ ເດັກນ້ອຍກິນ." ຫຼັງຈາກທີ່ຂໍ້ຄວາມໄດ້ຖືກບອກຕໍ່ໄປຈົນເຖິງຄົນສຸດທ້າຍ, ຂໍໃຫ້ລາວ *ເວົ້າຂໍ້ຄວາມທີ່ລາວໄດ້ຍິນອອກມາດັງໆ.* ຫຼັງຈາກນັ້ນ, ໃຫ້ລາວອ່ານຂໍ້ຄວາມເຕັມທັງໝົດທີ່ໄດ້ບອກໃຫ້ຄົນທຳອິດຟັງຕໍ່ໜ້າທຸກໆ. ປົກກະຕິແລ້ວ, ຂໍ້ຄວາມທີ່ຄົນສຸດທ້າຍເວົ້າຈະບໍ່ຄືກັນທີ່ຄົນທຳອິດເວົ້າ ຫຼື ອາດເວົ້າອອກມາບໍ່ແມ່ນອັນດຽວກັນເລີຍ.

**ຖາມ** : *ເປັນຫຍັງຂໍ້ຄວາມທີ່ຄົນສຸດທ້າຍເວົ້າອອກມາຈຶ່ງບໍ່ຄືທີ່ຄົນທຳອິດເວົ້າ? ມັນມີການປ່ຽນແປງແນວໃດຕອນທີ່ແຕ່ລະຄົນເວົ້າຕໍ່ໆກັນໄປ?*

ເຊີນໃຫ້ຜູ້ເຂົ້າຮ່ວມຕອບຄຳຖາມ. ອ່ານຄຳຕອບທີ່ເປັນໄປໄດ້ຂ້າງລຸ່ມນີ້:

- ຄົນເວົ້າຂໍ້ຄວາມບໍ່ຖືກຕ້ອງ.
- ຄົນເວົ້າສຽງຄ່ອຍໂພດຈົນຜູ້ຟັງບໍ່ໄດ້ຍິນດີ.
- ຜູ້ຟັງບໍ່ໄດ້ຟັງດີໆ.
- ຫ້ອງປະຊຸມມີສຽງບົນແຊວໂພດເຮັດໃຫ້ຜູ້ຟັງບໍ່ໄດ້ຍິນດີ.
- ຜູ້ຟັງບໍ່ຕັ້ງໃຈຟັງຂໍ້ຄວາມ.
- ຜູ້ຟັງໄດ້ຍິນຂໍ້ຄວາມແລ້ວ, ພັດລືມ, ເລີຍບໍ່ສາມາດເວົ້າຄືນໄດ້.
- ຜູ້ຟັງບໍ່ທັນກຽມພ້ອມທີ່ຈະຟັງຂໍ້ຄວາມ.
- ຂໍ້ຄວາມບໍ່ຈະແຈ້ງ ຫຼື ເຂົ້າໃຈຍາກ.
- ຄົນຟັງບໍ່ເຂົ້າໃຈສິ່ງທີ່ເຂົາເຈົ້າໄດ້ຍິນ, ພວກເຂົາກໍເລີຍເວົ້າຄວາມຄິດຂອງຕົນເອງເຂົ້າໄປ.

**ຖາມ** : *ການສື່ສານເປັນສິ່ງຈໍາເປັນໃນການສົ່ງ ແລະ ຮັບຂໍ້ມູນ. ເປັນຫຍັງການສື່ສານຈຶ່ງເປັນທັກສະທີ່ສໍາຄັນສໍາລັບຜູ້ນໍາຊຸມຊົນ?*
**ເຊີນໃຫ້ຜູ້ເຂົ້າຮ່ວມ**ຕອບໃນກຸ່ມໃຫ່ຍ.
**ອະທິບາຍ:** *ຜູ້ນໍາຊຸມຊົນຈໍາເປັນຕ້ອງຮູ້ວິທີການສົ່ງ ແລະ ຮັບຂໍ້ມູນ. ພວກເຂົາ ຕ້ອງການສື່ສານຂໍ້ມູນຂ່າວສານກັບປະຊາຊົນກ່ຽວກັບເປົ້າຫມາຍການພັດທະນາທີ່ແຕກຕ່າງກັນ ແລະ ກິດຈະກໍາທີ່ເກີດຂຶ້ນ (ສົ່ງ), ແລະ ພວກເຂົາ ຕ້ອງການຟັງ ແລະ ຕອບສະໜອງຄວາມຕ້ອງການຂອງປະຊາຊົນ (ການຮັບ). ພວກເຂົາ ເຈົ້າຍັງຈໍາເປັນຕ້ອງສ້າງຄວາມສະດວກ ໃນການສື່ສານລະຫວ່າງ ສະມາຊິກຊຸມຊົນ ແລະ ແກ້ໄຂບັນຫາທີ່ເກີດຂຶ້ນລະຫວ່າງຜູ້ນໍາ. ພວກເຂົາ ຍັງຕ້ອງຕິດຕໍ່ສື່ສານຢ່າງມີປະສິດທິພາບ ເຊິ່ງກັນ ແລະ ກັນ ໃນຄະນະກໍາມະການ ຖ້າພວກເຂົາຕ້ອງການເຮັດວຽກຮ່ວມກັນເປັນທີມ.*

## 2. ອົງປະກອບ ແລະ ຊ່ອງທາງສໍາລັບການສື່ສານທີ່ດີ (10 ນາທີ)

**ຖາມ**: *ຄິດເບິ່ງຄືນກ່ຽວກັບ ກິດຈະກໍາ ໂທລະສັບ ທີ່ໄດ້ເຮັດ, ແມ່ນຫຍັງຄືປັດໄຈທີ່ເຮັດໃຫ້ການສື່ສານມີປະສິດທິພາບ? ພວກເຮົາຈະເຮັດແນວໃດໄດ້ຕື່ມອີກ ເພື່ອຮັບປະກັນວ່າຂໍ້ຄວາມຖືກສົ່ງໄປຫາຄົນສຸດທ້າຍໄດ້ຢ່າງຖືກຕ້ອງ?*
ເຊີນໃຫ້ຜູ້ເຂົ້າຮ່ວມຕອບໃນກຸ່ມໃຫ່ຍ. ອ່ານຄໍາຕອບທີ່ເປັນໄປໄດ້ຂ້າງລຸ່ມນີ້:

- ຟັງໃຫ້ດີ ແລະ ຕັ້ງໃຈຈື່ເອົາຂໍ້ຄວາມນັ້ນ
- ແນ່ໃຈວ່າຂໍ້ຄວາມທີ່ທ່ານຈະເວົ້ານັ້ນແມ່ນຫຍັງ
- ແນ່ໃຈວ່າຂໍ້ຄວາມນັ້ນຄົບຖ້ວນ
- ແນ່ໃຈວ່າທ່ານໄດ້ຍິນຂໍ້ຄວາມທີ່ຖືກຕ້ອງ
- ເວົ້າແຈ້ງໆ ແລະ ຊ້າໆ
- ມີຄວາມອົດທົນໃນເວລາເວົ້າຫຼືຟັງ
- ເວົ້າຂໍ້ຄວາມຄືນໃຫມ່ໄດ້.

**ອະທິບາຍ** : *ເພື່ອໃຫ້ຕິດຕໍ່ສື່ສານໄດ້ດີກັບໝູ່ເພື່ອນຂອງທ່ານ, ກັບສະມາຊິກໃນຊຸມຊົນ, ແລະ ກັບເຈົ້າໜ້າທີ່, ຈົ່ງຈື່ຈໍາອົງປະກອບຂອງການສື່ສານທີ່ດີດັ່ງຕໍ່ໄປນີ້:*

- **ຮູ້ຈັກຜູ້ຟັງຂອງທ່ານ** - ເຂົ້າໃຈວ່າທ່ານກໍາລັງເວົ້າກັບໃຜ, ວັດທະນະທໍາຂອງເຂົາເຈົ້າແມ່ນຫຍັງ ແລະ ອັນໃດສິ່ງທີ່ເຂົາເຈົ້າຕ້ອງການໃຫ້ທ່ານບອກໃຫ້ຮູ້

- **ຈະແຈ້ງ ແລະ ກົງໄປກົງມາ** - ໃຊ້ພາສາງ່າຍໆ ແລະ ເວົ້າດ້ວຍຄວາມໝັ້ນໃຈ
- **ແບ່ງປັນຂໍ້ມູນທີ່ກ່ຽວຂ້ອງ** - ແນ່ໃຈວ່າທ່ານກໍາລັງໃຫ້ຂໍ້ມູນທີ່ພຽງພໍຕໍ່ຄວາມຕ້ອງການຂອງຜູ້ຟັງເພື່ອໃຫ້ເຂົາເຈົ້າໄດ້ຮັບຄໍາຕອບຫຼາຍກວ່າຄໍາຖາມ
- **ຟັງຢ່າງຕັ້ງໃຈ** - ການສື່ສານແມ່ນການໂຕ້ຕອບເຊິ່ງກັນລະກັນ, ທີ່ມີຄົນຕັ້ງໃຈຟັງຫຼາຍເທົ່າໆກັນກັບຄົນເວົ້າ
- **ເວົ້າສັ້ນໆ ແລະ ໄດ້ໃຈຄວາມ** - ສຸມໃສ່ເນື້ອໃນໃຈຄວາມ ແລະ ຢ່າສັບສົນກັບຂໍ້ມູນອື່ນທີ່ບໍ່ກ່ຽວຂ້ອງ.
- **ຮັບຟັງຄໍາຕິຊົມ** – ເພື່ອຢືນຢັນວ່າຂໍ້ມູນ ຫຼື ຂໍ້ຄວາມໄດ້ຖືກເຂົ້າໃຈໂດຍ ຜູ້ຮັບ

**ຖາມ**: *ຂໍ້ມູນຖືກສົ່ງຜ່ານຊ່ອງທາງທີ່ເຊື່ອມຕໍ່ລະຫວ່າງຜູ້ສົ່ງ ແລະ ຜູ້ຮັບ. ຊ່ອງທາງການສື່ສານຕ່າງໆນັ້ນມີຫຍັງແດ່?*
ເຊີນໃຫ້ຜູ້ເຂົ້າຮ່ວມຕອບໃນກຸ່ມໃຫຍ່.

**ອະທິບາຍ**: *ມີ 4 ຊ່ອງທາງຫຼັກຂອງການສື່ສານ. ຊ່ອງທາງເຫຼົ່ານີ້ສາມາດຖືກນໍາໃຊ້ແຍກຕ່າງຫາກ ຫຼື ໃຊ້ປະສົມປະສານກັນ, ແລະ ແຕ່ລະຊ່ອງທາງມີຂໍ້ດີ ແລະ ຂໍ້ເສຍຂອງມັນ. ມັນເປັນສິ່ງສໍາຄັນທີ່ຈະພິຈາລະນາສິ່ງເຫຼົ່ານີ້ ໃນເວລາທີ່ຕັດສິນໃຈ ວ່າຊ່ອງທາງໃດຈະມີປະສິດທິພາບທີ່ສຸດ ໃນການສື່ສານຂໍ້ຄວາມຂອງທ່ານ:*

- ***ການສື່ສານທາງວາຈາ*** - *ພາສາເວົ້າ, ເພງ, ວິທະຍຸ, ໂທລະສັບ*
- ***ການສື່ສານທາງຮ່າງກາຍ*** - *ພາສາກາຍ, ສີໜ້າ, ການເໜັງມື*
- ***ການສື່ສານຜ່ານຕົວໜັງສື*** – *ກະດານຂ່າວ, ຈົດໝາຍ, ປ້າຍ, ຂໍ້ຄວາມສັ້ນ*
- ***ການສື່ສານດ້ວຍການເບິ່ງ*** - *ເວັບໄຊ, ໂທລະທັດ, ພາບວາດ, ຮູບພາບ, ພາບສັນຍາລັກ*

### 3. ການເວົ້າຕໍ່ໜ້າສາທາລະນະຊົນ/ມວນຊົນ (ການສົ່ງ) (15 ນາທີ)

**ອະທິບາຍ:** *ສາມາດເວົ້າໄດ້ດີເວລາຢູ່ໜ້າມວນຊົນເປັນທັກສະທີ່ສໍາຄັນທີ່ຜູ້ນໍາຊຸມຊົນຕ້ອງມີ. ພວກເຂົາຕ້ອງການຮູ້ວິທີດຶງດູດ ແລະ ຮັກສາຄວາມສົນໃຈຂອງຜູ້ຟັງ, ສົ່ງຂໍ້ຄວາມທີ່ໜັກແໜ້ນ, ແລະ ສ້າງແຮງບັນດານໃຈໃນສິ່ງທີ່ພວກເຂົາເວົ້າ. ມັນເປັນເລື່ອງປົກກະຕິທີ່ຈະຕື່ນເຕັ້ນ, ອາຍ, ຫຼື ຢ້ານ ໃນເວລາທີ່ເວົ້າໃນສາທາລະນະ, ແຕ່ມີຫຼາຍວິທີທີ່ຈະຊ່ວຍໃຫ້ທ່ານ ເອົາຊະນະຄວາມຢ້ານກົວນີ້, ແລະ ບໍ່ວ່າຈະເປັນທັກສະໃດກໍ່ຕາມ, ຍິ່ງທ່ານຝຶກຝົນຫຼາຍເທົ່າໃດ, ທ່ານສາມາດເຂົ້າຫາມັນໄດ້ດີ ແລະ ຮູ້ສຶກສະບາຍໃຈໃນການເວົ້າ.*

**ຖາມ:** *ເຈົ້າຕ້ອງຈື່ຫຍັງໄວ້ໃນເວລາເວົ້າຕໍ່ໜ້າມວນຊົນ (ເຊັ່ນ: ເຈົ້າຕ້ອງເຮັດຫຍັງແດ່ເພື່ອກຽມຕົວໃຫ້ດີ, ແລະ ເຈົ້າຕ້ອງເຮັດຫຍັງແດ່ເມື່ອເຮັດມັນ)?*

ສົນທະນາເປັນກຸ່ມນ້ອຍ, ກວດເບິ່ງຄໍາຕອບຂອງຜູ້ເຂົ້າຮ່ວມ, ແລະ ອ່ານຫົວຂໍ້ຂ້າງລຸ່ມນີ້:

- **ກ່ອນທີ່ຈະເວົ້າຕໍ່ສາທາລະນະຊົນ/ມວນຊົນ**
  - **ເຮັດໃຫ້ຕົນຄຸ້ນເຄີຍກັບຮູບແບບຂອງກອງປະຊຸມ :** ຮູ້ຈັກສະຖານທີ່ ທີ່ທ່ານຈະເວົ້າ, ຕ້ອງຮູ້ວ່າທ່ານຈະຕ້ອງໃຊ້ໄມໂຄຣໂຟນ ຫຼື ບໍ່, ທ່ານຈະໄດ້ຢູ່ໃກ້ກັບຜູ້ເຂົ້າຮ່ວມຫຼາຍປານໃດ, ແລະ ໃຜຈະເວົ້າກ່ອນທ່ານ, ແລະ ອື່ນໆ, ເພື່ອບໍ່ໃຫ້ທ່ານຕົກໃຈ ຫຼື ຖືກລົບກວນ ຈາກສິ່ງຕ່າງໆໃນເວລາດໍາເນີນກອງປະຊຸມ

- ○ **ກະກຽມບົດເວົ້າຂອງທ່ານ** : ທ່ານຕ້ອງແນ່ໃຈວ່າທ່ານຮູ້ຈຸດປະສົງຂອງຕົນເອງ, ແລະ ທ່ານຮູ້ຈຸດສຳຄັນ ແລະ ຂໍ້ມູນທີ່ທ່ານຕ້ອງການນຳສະເໜີ ແລະ ກະກຽມການນຳສະເໜີຫຼືບົດເວົ້າຂອງທ່ານກ່ອນ; ຈັດລຽງຈຸດທີ່ທ່ານຈະເວົ້າໃຫ້ເປັນລະບຽບ
- ○ **ຝຶກເວົ້າ**: ຈິນຕະນາການວ່າທ່ານຢູ່ຕໍ່ຫນ້າຜູ້ເຂົ້າຮ່ວມຫຼາຍຄົນ ແລະ ຝຶກເວົ້າຢູ່ໜ້າແວ່ນແຍງ ຫຼື ຕໍ່ໜ້າໝູ່ເພື່ອນ ແລະ ຂໍຄຳຕິຊົມ; ຝຶກເວົ້າຫຼາຍໆເທື່ອເທົ່າທີ່ທ່ານຕ້ອງການເພື່ອໃຫ້ຕົນເອງຮູ້ສຶກສະບາຍໃຈຫຼາຍຂຶ້ນ
- ○ **ກະກຽມຂໍ້ຄວາມທີ່ຈະເວົ້າ**: ຂຽນຂໍ້ຄວາມທ່ານສາມາດເບິ່ງໄດ້ໃນເວລາທີ່ນຳສະເໜີ, ຖ້າທ່ານຕ້ອງການທີ່ຈະໃຊ້ເພື່ອຊ່ວຍໃຫ້ທ່ານຈື່ຈຳຈຸດທີທ່ານຈະເວົ້າ
- ○ **ຮູ້ຈັກຜູ້ຟັງຂອງທ່ານ:** ຮູ້ວ່າພວກເຂົາແມ່ນໃຜ, ສິ່ງທີ່ພວກເຂົາອາດຈະຮູ້ຫຼືບໍ່ຮູ້ແລ້ວ, ສະຖານະການຂອງພວກເຂົາແມ່ນຫຍັງ, ແລະ ທ່ານຕ້ອງການໃຫ້ພວກເຂົາ ເຂົ້າໃຈຈຸດໃດທີ່ທ່ານເວົ້າ.

- **ໃນລະຫວ່າງທີ່ດຳເນີນການເວົ້າ**

- **ສ້າງຄວາມປະທັບໃຈໃນຕອນຕົ້ນໃຫ້ໄດ້ດີ:** ດຶງດູດຄວາມສົນໃຈຂອງຜູ້ຟັງຕັ້ງແຕ່ເລີ່ມຕົ້ນເຊັ່ນ: ໃຊ້ເລື່ອງເລົ່າ ຫຼື ສິ່ງທີ່ໜ້າສົນໃຈເພື່ອດຶງດູດຜູ້ຟັງ
- **ໃຊ້ນ້ຳສຽງທີ່ເໝາະສົມ**: ເວົ້າຢ່າງແຈ້ງໆ ແລະ ຊ້າໆ
- **ໃຊ້ພາສາທີ່ເຫມາະສົມ:** ໃຫ້ແນ່ໃຈວ່າທ່ານກຳລັງໃຊ້ພາສາທີ່ຜູ້ຟັງເຂົ້າໃຈໄດ້ງ່າຍ; ໃຊ້ຄຳເວົ້າ ແລະ ພາສາກາຍທີ່ແທດເໝາະກັບວັດທະນະທຳ
- **ເວົ້າສັ້ນໆແລະເຂົ້າໃຈງ່າຍ:** ສຸມໃສ່ຂໍ້ຄວາມທີ່ທ່ານຕ້ອງການຖ່າຍທອດ; ບໍ່ອອກນອກປະເດັນທີ່ຢາກເວົ້າໃນເບື້ອງຕົ້ນ ແລະ ບໍ່ສົນທະນາກ່ຽວກັບສິ່ງທີ່ບໍ່ກ່ຽວຂ້ອງ; ໃນເວລາທີ່ຝຶກເວົ້າກ່ອນປະຊຸມ, ໃຫ້ທ່ານຈັບເວລາເບິ່ງເພື່ອບໍ່ໃຫ້ຕົນເອງເວົ້າດົນເກີນໄປຈົນເຮັດໃຫ້ຜູ້ຟັງເບື່ອໄດ້
- **ໃຊ້ພາສາກາຍໃນທ່າທາງທີ່ເປັນມິດ:** ຍິ້ມ, ເປີດໃຈ, ເບີກບານ, ເບິ່ງໜ້າຜູ້ຟັງ, ຜ່ອນຄາຍ
- **ມີຄວາມໝັ້ນໃຈ ແລະ ຄິດໃນແງ່ດີ** – ຫາຍໃຈເຂົ້າເລິກໆ ເພື່ອປົດປ່ອຍຄວາມຄຽດ ຫຼື ຜ່ອນຄາຍເສັ້ນປະສາດ ແລະ ເຄື່ອນໄຫວຊ້າໆລົງ; ຢືນຊື່ແລະຫັນໜ້າເຂົ້າຫາຜູ້ຟັງ, ແຕ່ງໂຕໃຫ້ເຫມາະສົມ ແລະ ສະບາຍໂຕ
- **ເປັນໂຕຂອງໂຕເອງ** : ເປັນທຳມະຊາດ ແລະ ເປັນຕົວທ່ານເອງ; ຜູ້ຟັງຈະຮູ້ວ່າທ່ານບໍ່ໝັ້ນໃຈໃນສິ່ງທີ່ທ່ານເວົ້າອອກມາ
- **ໃຊ້ຕົວຢ່າງ:** ປະສົບການຊີວິດຈິງ ຫຼື ເລື່ອງເລົ່າ ສາມາດຊ່ວຍໃຫ້ຜູ້ຟັງເຂົ້າໃຈຈຸດທີ່ທ່ານຢາກເວົ້າ
- **ໃຊ້ອຸປະກອນທີ່ປະຈັກຕາ:** ສິ່ງເຫຼົ່ານີ້ສາມາດເປັນປະໂຫຍດຕໍ່ການນຳສະເໜີຂອງທ່ານ, ແຕ່ຢ່າໃຊ້ພວກມັນຖ້າວ່າມັນຈະເຮັດໃຫ້ຜູ້ຟັງສັບສົນ ຫຼື ລົບກວນ ທ່ານໃນເວລາທີ່ເວົ້າໃນກອງປະຊຸມ.
- **ສະຫຼຸບມ້ວນທ້າຍ:** ສະຫຼຸບສິ່ງທີ່ທ່ານໄດ້ເວົ້າເພື່ອເນັ້ນຫນັກຈຸດສຳຄັນທີ່ທ່ານຢາກໃຫ້ຜູ້ຟັງເຂົ້າໃຈ ແລະ ສ້າງຄວາມປະທັບໃຈທີດີ ປິດທ້າຍການເວົ້າຂອງທ່ານ
- **ຊຸກຍູ້ໃຫ້ຜູ້ຟັງມີສ່ວນຮ່ວມກັບການເວົ້າຂອງທ່ານ**: ກຽມພ້ອມທີ່ຈະຮັບຟັງຄຳຄິດເຫັນ ແລະ ຄຳຖາມຈາກຜູ້ຟັງ ແລະ ຕອບເຂົາເຈົ້າດ້ວຍຄວາມນັບຖື ແລະ ຄວາມຈິງ
- **ກວດເບິ່ງວ່າຜູ້ຊົມໄດ້ເຂົ້າໃຈ** ຂໍ້ມູນ ຫຼື ຂໍ້ຄວາມທີ່ທ່ານໄດ້ຖ່າຍທອດ
- **ຂໍຄຳຄຶດຄຳເຫັນ:** ຕາມຄວາມເຫມາະສົມ

**ສະຫຼຸບ**: *ການຮູ້ຈັກວິທີການເວົ້າໄດ້ດີຕໍ່ຫນ້າຄົນອື່ນເປັນທັກສະທີ່ມີຄຸນຄ່າສໍາລັບການເປັນຜູ້ນໍາຊຸມຊົນ, ເຊັ່ນດຽວກັນກັບສະຖານະການອື່ນໆ. ບໍ່ວ່າທ່ານຈະເຮັດຫຍັງໃນຊີວິດ, ການເປັນນັກເວົ້າໃນຕໍ່ໜ້າສາທາລະນະທີ່ດີ ແລະ ມີທັກສະການນໍາສະເຫນີທີ່ດີສາມາດເພີ່ມຄວາມຫມັ້ນໃຈຕົນເອງ ແລະ ເປີດໂອກາດຫຼາຍ.*

**4. ການຟັງຢ່າງຕັ້ງໃຈ (ການຮັບ) (10 ນາທີ)**

**ອະທິບາຍ**: *ການຟັງຢ່າງຕັ້ງໃຈແມ່ນການທີ່ທ່ານສະແດງໃຫ້ຜູ້ເວົ້າຮູ້ວ່າທ່ານກໍາ ລັງໄດ້ຍິນ ແລະ ເຂົ້າໃຈສິ່ງທີ່ຜູ້ເວົ້າກໍາລັງສື່ສານ. ມັນຄືຄວາມຕັ້ງໃຈ ແລະ ເປີດໃຈ.*

**ຖາມ**: *ທ່ານເຮັດແນວໃດເວລາຕັ້ງໃຈ?*
ເຊີນໃຫ້ຜູ້ເຂົ້າຮ່ວມຕອບ ແລ້ວ**ອະທິບາຍ** ຈຸດທີ່ຂາດຫາຍໄປ:

- *ຕັ້ງໃຈຟັງໂດຍຈົດຈໍ່ໃນສິ່ງທີ່ຖືກຜູ້ເວົ້າກໍາລັງເວົ້າອອກມາ*
- *ຊຸກຍູ້ຜູ້ເວົ້າດ້ວຍການສະແດງອອກທາງວາຈາ ແລະ ທາງຮ່າງກາຍທີ່ຊີ້ບອກວ່າທ່ານໄດ້ຍິນ ແລະ ປະຕິບັດຕາມສິ່ງທີ່ຜູ້ເວົ້າກໍາລັງເວົ້າ*
- *ເນີ້ງໂຕໄປທາງໜ້າ, ແນມເບິ່ງຜູ້ເວົ້າຢ່າງຕື່ນຕົວ, ເບິ່ງຕາ, ຫງຶກຫົວ*
- *ໃຊ້ສໍານວນງ່າຍໆເຊັ່ນ, "ແມ່ນ," "ຂ້ອຍເຫັນ," "ອື່ມຮ"*
- *ສະຫຼຸບຄວາມເຂົ້າໃຈຂອງຕົນເອງກ່ຽວກັບສິ່ງທີ່ຜູ້ເວົ້າໄດ້ເວົ້າອອກມາເພື່ອກວດເບິ່ງ ວ່າທ່ານໄດ້ຍິນຂໍ້ມູນຢ່າງຖືກຕ້ອງ*
- *ຖາມຄໍາຖາມເປີດເພື່ອສືບຕໍ່ການສົນທະນາ (ພວກມັນເປັນຄຊາຖາມທີ່ບໍ່ແມ່ນແຕ່ຕ້ອງຕອບວ່າ ແມ່ນ ຫຼື ບໍ່ແມ່ນ) ເພື່ອ ໄດ້ຮັບຂໍ້ມູນທີ່ສະເພາະເຈາະຈົງຫຼາຍຂຶ້ນ.*
- *ຢ່າເວົ້າຕັດຄວາມ, ວິຈານ, ຕັດສິນ, ຫຼື ໂຕ້ແຍ້ງກັບພວກເຂົາ*
- *ຖ້າເຈົ້າບໍ່ເຂົ້າໃຈ, ຢ່າທໍາທ່າວ່າເຈົ້າເຂົ້າໃຈ; ຂໍໃຫ້ຜູ້ເວົ້າອະທິບາຍໃຫ້ແຈ້ງໆແທນ ເພື່ອທີ່ທ່ານຈະໄດ້ເຂົ້າໃຈ*

**5. ຝຶກການເວົ້າ ແລະ ການຟັງ (20 ນາທີ)**
**ກິດຈະກໍາ**: *ແບ່ງຜູ້ເຂົ້າຮ່ວມອອກເປັນກຸ່ມ ແຕ່ລະກຸ່ມມີ 3ຄົນ.*
**ອະທິບາຍ:** *ແຕ່ລະກຸ່ມຈະມີ: ຜູ້ເວົ້າ, ຜູ້ຟັງ, ແລະ ຜູ້ສັງເກດການ. ພວກເຮົາຈະເຮັດແບບນີ້ສາມຄັ້ງເພື່ອໃຫ້ທຸກຄົນໄດ້ມີໂອກາດທີ່ຈະປ່ຽນກັນສະແດງແຕ່ລະບົດບາດ. ຜູ້ເວົ້າຈະມີເວລາ 2 ນາທີເພື່ອເລົ່າເລື່ອງ ທີ່ພວກເຂົາເຮັດວານນີ້ ແຕ່ເຊົ້າ ຈົນຮອດຄໍ່າ. ຜູ້ຟັງຄວນຟັງເລື່ອງທີ່ຜູ້ເວົ້າເລົ່າ. ຜູ້ສັງເກດການຄວນສັງເກດ ທັງຜູ້ເວົ້າ ແລະ ຜູ້ຟັງ, ແລະ ສັງເກດໃຫ້ອອກວ່າແຕ່ລະຄົນກໍາລັງເຮັດຫຍັງ. ຜູ້ສັງເກດການບໍ່ຄວນຂັດຂວາງການເວົ້າ*

ເຮັດແບບນີ້ ສາມ ເທື່ອ, ໃຫ້ໃຊ້ເວລາ ສອງ ນາທີ ສໍາລັບແຕ່ລະເທື່ອ.

**ສົນທະນາ** ໃນກຸ່ມໃຫຍ່:
- *ຕອນທີ່ເຈົ້າເປັນ ຜູ້ເວົ້າ ເຈົ້າຄິດວ່າເຈົ້າເຮັດໄດ້ດີ ຫຼື ບໍ່ດີ? ທ່ານຄິດວ່າຜູ້ຟັງເຮັດໄດ້ດີ ຫຼື ບໍ່ດີ?*
- *ເມື່ອເຈົ້າເປັນຜູ້ຟັງ ເຈົ້າຄິດວ່າເຈົ້າເຮັດໄດ້ດີ ຫຼື ບໍ່ດີ? ທ່ານຄິດວ່າ ຜູ້ເວົ້າ ເຮັດໄດ້ດີຫຼືບໍ່ດີ?*

- *ໃນເວລາທີ່ທ່ານເປັນຜູ້ສັງເກດການ, ຜູ້ເວົ້າ ເຮັດແນວໃດ ດີ ຫຼື ບໍ່ດີ? ຜູ້ຟັງສະແດງໃຫ້ເຫັນວ່າພວກເຂົາຟັງດີຫຼືບໍ່ດີ?*

**ສະຫຼຸບ**: *ທ່ານສາມາດຝຶກ ການເວົ້າ ແລະ ການຟັງຢ່າງຕັ້ງໃຈໄດ້ໃນຊີວິດປະຈໍາວັນຂອງທ່ານ - ຢູ່ເຮືອນ, ຢູ່ບ່ອນເຮັດວຽກ, ຫຼື ຢູ່ບ່ອນໃດກໍໄດ້ໃນເວລາທີ່ກໍາລັງລົມກັບຄົນອື່ນ. ທ່ານອາດພົບວ່າຍິ່ງທ່ານຝຶກຝົນ ແລະ ປັບປຸງທັກສະການເວົ້າ ແລະ ການຟັງ ຢ່າງຕັ້ງໃຈຫຼາຍເທົ່າໃດທ່ານກໍ່ຍິ່ງມີ ຄວາມຮູ້ ແລະ ຂໍ້ມູນຫຼາຍຂຶ້ນເທົ່ານັ້ນ, ເຊິ່ງເຮັດໃຫ້ຄວາມສໍາພັນຂອງທ່ານກັບຄົນອື່ນດີຂຶ້ນ ແລະ ໄດ້ຮັບຄວາມນັບຖືຫຼາຍຂຶ້ນ.*

## 6. ການເວົ້າ ແລະ ຟັງ ໃນຖານະເປັນຜູ້ນໍາຊຸມຊົນ (30 ນາທີ)

**ອະທິບາຍ**: *ຕໍ່ໄປນີ້ພວກເຮົາຈະຫຼິ້ນ ສອງ ບົດບາດ ສົມມຸດທີ່ແຕກ ຕ່າງກັນ. ສະຖານະການຈໍາລອງແມ່ນທ່ານກໍາລັງເວົ້າຢູ່ໃນກອງປະຊຸມບ້ານ ແລະ ກໍມີແມ່ຍິງໃນຊຸມຊົນ ກຸ່ມໜຶ່ງ ຈົ່ມ ວ່າພວກເຂົາ ບໍ່ມີໂອກາດທີ່ຈະໄດ້ຮັບຄ່າຈ້າງລາຍວັນ ຈາກໂຄງການ.*

**ກິດຈະກໍາ:** ການຫຼິ້ນບົດບາດສົມມຸດ
ແບ່ງຜູ້ເຂົ້າຮ່ວມອອກເປັນ 2 ກຸ່ມເພື່ອກະກຽມ ແລະ ສະແດງບົດບາດສົມມຸດ. ເອົາເອກະສານທີ່ມີຄໍາອະທິບາຍກ່ຽວກັບບົດບາດສົມມຸດທີ່ເຂົາເຈົ້າຈະສະແດງໃຫ້ແຕ່ລະກຸ່ມ ແລະ ອະທິບາຍ.

- <u>ບົດລະຄອນບົດບາດທີ 1</u>: ຜູ້ເວົ້າ ເວົ້າຂັດແມ່ຍິງກຸ່ມນັ້ນ, ບອກວ່າພວກນາງເວົ້າບໍ່ຖືກ, ເວົ້າວ່າພວກນາງບໍ່ມີສິດທີ່ຈະຮູ້ກ່ຽວກັບເລື່ອງເຫຼົ່ານີ້ ແລະ ຕອບໂຕ້ດ້ວຍການເວົ້າສຽງດັງດ້ວຍນໍ້າສຽງທີ່ໃຈຮ້າຍທີ່ເຮັດໃຫ້ພວກນາງອັບອາຍ. ພວກນາງໂມໂຫຫຼາຍ ແລະ ທັງສອງຝ່າຍເລີ່ມຖົງຖຽງກັນ.
- <u>ບົດລະຄອນບົດບາດທີ 2</u>: ຜູ້ເວົ້າ ເວົ້າຢ່າງໃຈເຢັນ ແລະ ຖາມແມ່ຍິງກຸ່ມນັ້ນກ່ຽວກັບສິ່ງທີ່ເກີດຂຶ້ນ, ຟັງຄໍາຕອບເພື່ອໃຫ້ເຂົ້າໃຈລັກສະນະຂອງຄໍາຮ້ອງທຸກຂອງພວກນາງ. ຫຼັງຈາກທີ່ພວກນາງເວົ້າຈົບແລ້ວ, ຜູ້ເວົ້າໄດ້ສັງລວມສິ່ງທີ່ລາວໄດ້ຍິນ ແລະ ຖາມພວກນາງວ່າ ການສະຫຼຸບນີ້ຖືກຕ້ອງຫຼືບໍ່. ຫຼັງຈາກນັ້ນ, ຜູ້ເວົ້າກໍ່ອະທິບາຍຢ່າງຈິງໃຈ ແລະ ຈະແຈ້ງວ່າ ລະບຽບການເຂົ້າເຖິງໂອກາດເຮັດວຽກທີ່ໂຄງການສະໜອງນັ້ນເປັນແບບໃດ ເຊິ່ງມັນເປັນວຽກທີ່ສະໜອງໃຫ້ແມ່ຍິງທຸກຄົນໃນຊຸມຊົນ, ຖ້າມີຄົນມາບອກຫຍັງທີ່ຕ່າງໄປຈາກນີ້ໃຫ້ພວກນາງຟັງ, ພວກນາງຄວນຖາມຄືນເພື່ອຄວາມກະຈ່າງແຈ້ງກ່ຽວກັບລະບຽບການ ຫຼື ບອກໃຫ້ພວກນາງ ມາບອກກັບສະມາຊິກຄະນະກໍາມະການ ເພື່ອໃຫ້ເຂົາເຈົ້າຊີ້ແຈງ ຫຼື ສືບສວນບັນຫານີ້ຕໍ່ໄປ, ແລ້ວຈຶ່ງລາຍງານຄືນໃຫ້ແມ່ຍິງ ແລະ ຊຸມຊົນ ວ່າເລື່ອງລາວເປັນແນວໃດແທ້. ທ່ານຍັງອະທິບາຍອີກວ່າ ຖ້າພວກນາງຍັງບໍ່ພໍໃຈ, ພວກນາງສາມາດໃຊ້ກົນໄກການຮ້ອງທຸກທີ່ພວກນາງສາມາດຮ້ອງຮຽນຢ່າງເປັນທາງການໄດ້, ເຊິ່ງຄະນະກໍາມະການຈະຕິດຕາມ ແລະ ແກ້ໄຂຄໍາຮ້ອງຮຽນນັ້ນ.

**ຖາມ**: *ຄວາມແຕກຕ່າງກັນລະຫວ່າງສອງບົດບາດນີ້ແມ່ນຫຍັງ? ຜູ້ນໍາຊຸມຊົນສະແດງອອກແນວໃດໃນແຕ່ລະສະຖານະການ?*
ເຊີນໃຫ້ຜູ້ເຂົ້າຮ່ວມຕອບ ແລະ **ອະທິບາຍ** ຈຸດຕ່າງໆຂ້າງລຸ່ມນີ້:

- ໃນສະຖານະການທໍາອິດ, ຜູ້ເວົ້າໄດ້ໂຈມຕີ ແລະ ເວົ້າກັບພວກນາງດ້ວຍຄວາມໃຈຮ້າຍ ແລະ ຕັດສິນພວກນາງວ່າເປັນຄົນຜິດໂດຍບໍ່ທັນໄດ້ຟັງສິ່ງທີ່ພວກເຂົາຕ້ອງການຈະເວົ້າ. ຜູ້ເວົ້າສະແດງໃຫ້ເຫັນວ່າແມ່ຍິງບໍ່ມີສິດທີ່ຈະຮູ້ຈັກ ຫຼື ມີສ່ວນຮ່ວມໃນເລື່ອງເຫຼົ່ານີ້. ເຊິ່ງເຮັດໃຫ້ແມ່ຍິງເກີດຄວາມໂມໂຫ ແລະ ເລີ່ມໂຕ້ຖຽງ. ຖ້າຜູ້ເວົ້າໃຫ້ຂໍ້ມູນທີ່ຖືກຕ້ອງ, ບັນຫານີ້ກໍ່ສາມາດຖືກແກ້ໄຂບັນໄດ້, ແຕ່ຍ້ອນວ່າຜູ້ເວົ້າສະແດງອອກດ້ວຍການບໍ່ຮັບຟັງພວກນາງ, ຈຶ່ງເຮັດໃຫ້ເກີດຄວາມຄຽດແຄ້ນ ແລະ ເລີ່ມຕົ້ນການຂັດແຍ້ງ.

- ໃນສະຖານະການທີສອງ, ຜູ້ເວົ້າທຳອິດສະແດງໃຫ້ເຫັນວ່າລາວຮັບຟັງ ແລະ ຖາມຄຳຖາມຄືນ. ລາວໄດ້ສ້າງພື້ນທີ່ທີ່ສະບາຍໃຈ ເພື່ອໃຫ້ຜູ້ເຂົ້າຮ່ວມສະແດງອອກ ແລະ ຮູ້ສຶກວ່າພວກເຂົາຖືກຮັບຟັງ. ຜູ້ເວົ້າໄດ້ໃຫ້ຂໍ້ມູນທີ່ຜູ້ຟັງຈຳເປັນຕ້ອງໄດ້ຍິນ ເພື່ອຊ່ວຍຊີ້ແຈງໃຫ້ຄວາມກະຈ່າງແຈ້ງສະຖານະການ ແລະ ການສື່ສານຢ່າງຈະແຈ້ງ ແລະ ສັນຕິວິທີແກ້ໄຂບັນຫາ.

**ຖາມ**: *ທ່ານຈະຕິດຕໍ່ສື່ສານແນວໃດ ເພື່ອເຮັດໃຫ້ຊຸມຊົນຮັບຮູ້ ແລະມີສ່ວນຮ່ວມ?*
**ເຊີນໃຫ້ຜູ້ເຂົ້າຮ່ວມຕອບ** ໃນກຸ່ມໃຫ່ຍ ແລ້ວ **ອະທິບາຍ** ຂໍ້ຄວາມຂ້າງລຸ່ມນີ້:

- ການສົ່ງແລະຮັບຂໍ້ມູນຂ່າວສານ ຊ່ວຍໃຫ້ເກີດຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບໃນຂະບວນການພັດທະນາ, ພ້ອມທັງ ສ້າງຄວາມໄວ້ວາງໃຈ ລະຫວ່າງຜູ້ນຳ ແລະ ປະຊາຊົນ ເຊິ່ງຊ່ວຍໃຫ້ຊຸມຊົນສາມາດຮ່ວມມືກັນເຮັດວຽກໃນການພັດທະນາໃນທາງບວກ.
- ຖ້າປະຊາຊົນໃຫ້ຂໍ້ຄິດເຫັນ ແຕ່ບໍ່ມີການຕິດຕາມ ຫຼື ບໍ່ມີຂໍ້ມູນກັບໄປໃຫ້ພວກເຂົາ, ພວກເຂົາຈະຮູ້ສຶກວ່າບໍ່ມີໃຜຮັບຟັງ ແລະ ຄິດວ່າຜູ້ນຳບໍ່ຮັບຜິດຊອບ.
- ເມື່ອຄວາມກັງວົນ ຫຼື ຂໍ້ຂ້ອງໃຈຂອງປະຊາຊົນໄດ້ຮັບການເຄົາລົບ ແລະ ຕອບສະໜອງຢ່າງເໝາະສົມ, ມັນຈະຊ່ວຍສົ່ງເສີມໃຫ້ເກີດການມີສ່ວນຮ່ວມ, ຄວາມເທົ່າທຽມ ແລະ ຄວາມສາມັກຄີໃນສັງຄົມ.

| |
|---|
| • |

**ຖາມ:** ທ່ານຈະສື່ສານແນວໃດ ເພື່ອໃຫ້ຊຸມຊົນຮັບຮູ້ຂໍ້ມູນ ແລະ ມີສ່ວນຮ່ວມ ຢ່າງຕໍ່ເນື່ອງ?
**ເຊີນໃຫ້ຜູ້ເຂົ້າຮ່ວມຕອບ** ໃນກຸ່ມໃຫ່ຍ ແລ້ວ **ອະທິບາຍ** ຂໍ້ຄວາມຂ້າງລຸ່ມນີ້:

- *ກະກຽມແລະຈັດຕັ້ງກອງປະຊຸມແບບເປີດກວ້າງຢ່າງເປັນປົກກະຕິ (ເຮັດທຸກໆເດືອນ?) ກັບຊຸມຊົນເພື່ອປັບປຸງ, ປະກອບຄຳຄຶດຄຳເຫັນ, ແລະປຶກສາຫາລືກັບເຂົາເຈົ້າກ່ຽວກັບກິດຈະກຳຕ່າງໆ*
- *ໃຫ້ແນ່ໃຈວ່າແມ່ຍິງ ແລະກຸ່ມຄົນດ້ອຍໂອກາດມີສ່ວນຮ່ວມ ແລະຖືກເຊີນເຂົ້າຮ່ວມກອງປະຊຸມຊຸມຊົນ, ຫຼືຈັດການສົນທະນາກຸ່ມຢ່າງມີຈຸດສຸມເປັນໄລຍະ ກັບເຂົາເຈົ້າເພື່ອແກ້ໄຂບັນຫາຂອງເຂົາເຈົ້າໂດຍກົງ.*
- *ໃຫ້ຄະນະກຳມະການແຈ້ງໃຫ້ສະມາຊິກຊຸມຊົນໃນເຂດບ້ານຂອງຕົນຮັບຊາ-ຂໍ້ມູນຂ່າວສານໃໝ່*
- *ສື່ສານຂໍ້ມູນຂ່າວສານແລະຮັບຟັງຄຳຕິຊົມຈາກການເຕົ້າໂຮມບໍ່ເປັນທາງການ, ຢູ່ຮ້ານນ້ຳຊາ, ບ່ອນເຕົ້າໂຮມທາງສາສະໜາ , ແລະອື່ນໆ.*
- *ຕິດຕໍ່ສື່ສານຂໍ້ມູນຂ່າວສານແລະຮັບຟັງຄຳຕິຊົມໂດຍຜ່ານສື່ສັງຄົມອອນລາຍເປັນປະຈຳ ຜ່ານກະດານຂ່າວບ້ານ, ຫລື ສື່ສັງຄົມຕ່າງໆ*
- *ຮັບປະກັນວ່າບົດບັນທຶກ ແລະ ເອກະສານສຳຄັນທັງຫມົດມີໃຫ້ທຸກຄົນເຫັນຖ້າຕ້ອງການເທົ່າທີ່ຈະເປັນໄປໄດ້.*
- *ເຂົ້າໃຈ ແລະ ສາມາດອະທິບາຍເຫດຜົນກ່ຽວກັບການດຳເນີນງານ ແລະ ການຕັດສິນໃຈຂອງຄະນະກຳມະການ*

# ພາກທີ 6: ທັກສະການປະສານງານ

**ຈຸດປະສົງ:** ໃນຕອນທ້າຍຂອງພາກນີ້, ຜູ້ເຂົ້າຮ່ວມຈະສາມາດ:

- ເຂົ້າໃຈຄວາມສໍາຄັນຂອງຄວາມໄວ້ວາງໃຈ ແລະ ການເຮັດວຽກເປັນທີມ ໃນການເປັນຜູ້ພາທີ່ມີປະສິດທິພາບ
- ສືບຕໍ່ສ້າງຄວາມໄວ້ເນື້ອເຊື່ອໃຈ ແລະ ຄວາມສາມາດໃນການເຮັດວຽກເປັນທີມກັບສະມາຊິກຜູ້ອື່ນໆ

**ເນື້ອໃນໂດຍຫຍໍ້:**

| # | ຫົວຂໍ້ | ວິທີການ | ເຄື່ອງມື | ເວລາ (45 ນາທີ) |
|---|---|---|---|---|
| 1 | ບົດແນະນໍາ | ຖາມ, ອະທິບາຍ | ເຈ້ຍແຜ່ນໃຫຍ່ | 5 |
| 2 | ຄວາມໄວ້ວາງໃຈ | ຖາມ, ອະທິບາຍ, ທົ່ງລະເບີດ | ເຈ້ຍແຜ່ນໃຫ່ຍ, ຈອກເຈ້ຍ | 20 |
| 3 | ເຮັດວຽກເປັນທີມ | ຖາມ, ອະທິບາຍ, ວຽກເປັນກຸ່ມ | ເຈ້ຍແຜ່ນໃຫ່ຍ, ທ່ອນໄມ້ | 20 |

**ຂັ້ນຕອນ:**

**1. ບົດແນະນໍາ (5 ນາທີ)**

**ອະທິບາຍ:** *ຄົນຕາບອດຫ້າຄົນໄດ້ມາພົບພໍ້ຊ້າງເປັນຄັ້ງທໍາອິດໃນຊີວິດ. ຄົນຕາບອດຄົນທໍາອິດຍ່າງເຂົ້າໄປທາງດ້ານຂ້າງຂອງມັນ ແລະ ເວົ້າວ່າ, "ຊ້າງໂຕນີ້ຄືກັບກໍາແພງໃຫຍ່". ຄົນທີສອງວາງມືລົງໃສ່ຫາງ ຂອງມັນ ແລະ ເວົ້າວ່າ, "ຊ້າງນີ້ຄືເຊືອກ.". ຜູ້ທີສາມໄດ້ສໍາຜັດຕີນຂອງມັນ ແລະ ເວົ້າວ່າ, "ຊ້າງນີ້ຄືກັບລໍາຕົ້ນຂອງຕົ້ນໄມ້." ຜູ້ທີສີ່ໄດ້ສໍາຜັດຫູຂອງມັນ ແລະ ເວົ້າວ່າ, "ຊ້າງນີ້ຄ້າຍຄືພັດລົມ". ຜູ້ທີຫ້າໄດ້ສໍາຜັດງ່າຂອງມັນ ແລະ ເວົ້າວ່າ, "ຊ້າງໂຕນີ້ຄືງູ" ແລະ ພວກເຂົາກໍໂຕ້ຖຽງກັນ. ຫຼັງຈາກນັ້ນ, ຊາວບ້ານອີກຄົນໜຶ່ງ, ຜູ້ທີ່ຕາບໍ່ໄດ້ບອດ, ໄດ້ເຂົ້າມາຫາ ແລະ ເວົ້າວ່າແຕ່ລະຄົນຖືກ ແລະ ຜິດ.*

**ຖາມ:** *ທ່ານໄດ້ຮຽນຮູ້ຫຍັງແດ່ຈາກເລື່ອງນີ້?*

ເຊີນໃຫ້ຕອບຄໍາຖາມ ໃນກຸ່ມໃຫ່ຍ. ຕື່ມຂໍ້ມູນທີ່ບໍ່ຄົບຖ້ວນໃສ່ໃນຄໍາຕອບຂ້າງລຸ່ມນີ້:

- ທ່ານອາດຈະເຫັນສິ່ງທີ່ແຕກຕ່າງຈາກຄົນອື່ນ, ແຕ່ມັນບໍ່ໄດ້ໝາຍຄວາມວ່າທັດສະນະຂອງເຂົາເຈົ້າບໍ່ຖືກຕ້ອງ
- ພຽງແຕ່ທັດສະນະຂອງໝົດທຸກຄົນ ທ່ານຈະສາມາດເບິ່ງເຫັນພາບລວມຂອງທັງໝົດໄດ້ຖືກຕ້ອງ
- ຄົນອື່ນສາມາດຊ່ວຍທ່ານໃຫ້ເຫັນສິ່ງທີ່ທ່ານອາດຈະພາດ ຫຼື ເບິ່ງບໍ່ເຫັນ
- ພວກເຮົາຈະມີຄວາມເຂັ້ມແຂງ ເມື່ອພວກເຮົາເຮັດວຽກຮ່ວມກັນກັບຜູ້ອື່ນ, ເພາະວ່າພວກເຮົາສາມາດໄດ້ຮັບທັດສະນະທີ່ແຕກຕ່າງກັນທັງໝົດ

**ອະທິບາຍ:** *ການຮ່ວມມືໝາຍເຖິງການເຮັດວຽກຮ່ວມກັນກັບຜູ້ອື່ນເພື່ອເຮັດບາງສິ່ງບາງຢ່າງ, ແລະ ນີ້ແມ່ນທັກສະທີ່ທ່ານຕ້ອງການ ເພື່ອຊ່ວຍໃຫ້ທ່ານເຮັດວຽກຮ່ວມກັນ ເພື່ອນໍາພາຊຸມຊົນໄປສູ່ການບັນລຸເປົ້າໝາຍການພັດທະນາ. ທັກສະການສື່ສານບໍ່ພຽງແຕ່ຊ່ວຍໃຫ້ທ່ານເຮັດວຽກກັບຊຸມຊົນໄດ້, ແຕ່ຍັງຊ່ວຍໃຫ້ທ່ານເຮັດວຽກຮ່ວມກັນເປັນທີມ ແລະ ການຮ່ວມມື.*

**2. ຄວາມໄວ້ວາງໃຈ (20 ນາທີ)**

**ຖາມ:** *ສິ່ງນຶ່ງທີ່ສຳຄັນທີ່ສຸດໃນການ ຮ່ວມມືກັບຄົນອື່ນໄດ້ດີແມ່ນຄວາມໄວ້ວາງໃຈ. ຄວາມໄວ້ວາງໃຈແມ່ນຫຍັງ?*

ເຊີນໃຫ້ຕອບຄຳຖາມໃນກຸ່ມໃຫ່ຍ. ຄຳຕອບທີ່ເປັນໄປໄດ້:

- ເມື່ອທ່ານຄິດວ່າຜູ້ໃດຜູ້ໜຶ່ງເຊື່ອຖືໄດ້, ເຂົາເຈົ້າຮັກສາຄຳເວົ້າຂອງເຂົາເຈົ້າ
- ເມື່ອທ່ານຄິດວ່າຄົນໃດຄົນໜຶ່ງເວົ້າຄວາມຈິງ
- ເມື່ອທ່ານເຊື່ອໃນຄວາມສາມາດຂອງໃຜຜູ້ໃດຜູ້ໜຶ່ງ ໃນການເຮັດບາງສິ່ງບາງຢ່າງ

**ກິດຈະກຳ:** *ສະໜາມລະເບີດ. ວາງຈອກເຈ້ຍລົງພື້ນທີ່ຫວ່າງ. ແບ່ງຜູ້ເຂົ້າຮ່ວມຈັບຄູ່ກັນເປັນຄູ່.*

**ອະທິບາຍ:** *ຄົນໜຶ່ງໃນແຕ່ລະຄູ່ຄວນຕັ້ງແຖວຢູ່ອີກດ້ານໜຶ່ງຂອງຫ້ອງ, ສ່ວນອີກຄົນໜຶ່ງໃນຄູ່ຄວນຕັ້ງແຖວຢູ່ອີກດ້ານໜຶ່ງຂອງຫ້ອງ. ຄົນທີ່ຢູ່ຂ້າງຫ້ອງເບື້ອງນີ້, ກະລຸນາຫຼັບຕາ. ຈຸດປະສົງຂອງທ່ານແມ່ນເພື່ອຍ່າງໄປຫາອີກດ້ານໜຶ່ງຂອງຫ້ອງ ໂດຍທີ່ຍັງຫຼັບຕາຢູ່. ຢ່າງໃດກໍຕາມ, ມີວັດຖຸຈຳນວນໜຶ່ງທີ່ທ່ານຈຳເປັນຕ້ອງຫຼີກຫຼີກ ເພື່ອໃຫ້ສາມາດຍ່າງໄປອີກດ້ານໜຶ່ງຂອງຫ້ອງໄດ້. ສິ່ງເຫຼົ່ານັ້ນແມ່ນລະເບີດ ທີ່ພ້ອມຈະລະເບີດຂຶ້ນຖ້າທ່ານແຕະຖືກພວກມັນ, ເຮັດໃຫ້ທັງທ່ານ ແລະ ຄູ່ຂອງທ່ານສູນເສຍ. ຄູ່ຂອງທ່ານຈະຊ່ວຍທ່ານໂດຍໃຊ້ພຽງຄຳເວົ້າ ເພື່ອບອກວິທີເຄື່ອນທີ່ ເຊັ່ນ: ກ້າວຍ່າງ, ເວລາໃດຄວນຢຸດ, ເວລາໃດຄວນຈະລ້ຽວ ແລະ ອື່ນໆ.*

ເມື່ອໝົດທຸກຄົນເຮັດສຳເລັດແລ້ວ, ໃຫ້ແຕ່ລະຄູ່ສະຫຼັບກັນເຮັດໜ້າທີ່ ແລະ ເຮັດກິດຈະກຳນີ້ອີກຄັ້ງ. ປ່ຽນແປງບ່ອນທີ່ວັດຖຸຕັ້ງຢູ່ ເພື່ອໃຫ້ມັນກາຍເປັນສະໜາມລະເບີດທີ່ແຕກຕ່າງກັນ.

**ຖາມ:** *ຄົນຕາບອດເປັນຄືແນວໃດ? ການເປັນຜູ້ນຳທາງ ເປັນຄືແນວໃດໃນ? ມັນເປັນເລື່ອງຍາກ ຫຼື ງ່າຍທີ່ຈະໄວ້ວາງໃຈຄູ່ຮ່ວມງານຂອງທ່ານ? ດ້ວຍເຫດໃດ? ທ່ານໄດ້ຮຽນຮູ້ຫຍັງແດ່ຈາກກິດຈະກຳນີ້?*

ເຊີນໃຫ້ຕອບຄຳຖາມໃນກຸ່ມໃຫ່ຍ.

**ອະທິບາຍວ່າ:** *ໃນຖານະຜູ້ນຳທາງ, ທ່ານຕ້ອງຮັບຜິດຊອບຕໍ່ຄວາມປອດໄພຂອງຄູ່ຂອງທ່ານ, ແລະ ທ່ານຕ້ອງເຊື່ອໝັ້ນວ່າເຂົາເຈົ້າຈະປະຕິບັດຕາມຄຳແນະນຳຂອງທ່ານ. ໃນຖານະເປັນຄົນຕາບອດ, ທ່ານຕ້ອງໄວ້ວາງໃຈຄູ່ຂອງທ່ານເພື່ອນຳພາທ່ານຍ່າງໄປຢ່າງປອດໄພ; ເຊື່ອໝັ້ນວ່າພວກເຂົາມີຄວາມຊື່ສັດ ແລະ ມີຄວາມຕັ້ງໃຈທີ່ດີ ຕໍ່ຄວາມສະຫວັດດີພາບຂອງທ່ານ. ວິທີດຽວທີ່ຈະຜ່ານທົ່ງລະເບີດ ແລະ ຊະນະເກມນີ້ໄດ້ ແມ່ນການມີຄວາມເຊື່ອໝັ້ນເຊິ່ງກັນ ແລະ ກັນ.*

**ຖາມ:** *ເປັນຫຍັງມັນຈຶ່ງມີຄວາມສຳຄັນທີ່ຈະມີຄວາມໄວ້ວາງໃຈລະຫວ່າງສະມາຊິກຄະນະກຳມະການ?*

ເຊີນໃຫ້ຕອບຄຳຖາມໃນກຸ່ມໃຫ່ຍ.

**ອະທິບາຍ:** *ສະມາຊິກຄະນະກຳມະການຕ້ອງສາມາດເພິ່ງພາເຊິ່ງກັນ ແລະ ກັນ ເພື່ອບັນລຸເປົ້າໝາຍຂອງເຂົາເຈົ້າ. ເຂົາເຈົ້າຕ້ອງເຊື່ອໝັ້ນຜູ້ອື່ນ ເພື່ອໃຫ້ສາມາດເປີດຮັບແນວຄວາມຄິດ ແລະ ສິ່ງທ້າທາຍຂອງເຂົາເຈົ້າ, ແບ່ງປັນຄວາມຮູ້, ສື່ສານຢ່າງເປີດເຜີຍ, ແລະ ເຮັດວຽກຮ່ວມກັນໄດ້ດີ.*

*ທ່ານມີບົດບາດ ແລະ ຄວາມຮັບຜິດຊອບອັນສໍາຄັນຕໍ່ການພັດທະນາຊຸມຊົນ ແລະ ເຊັ່ນດຽວກັນກັບເລື່ອງຊ້າງ, ຕ້ອງໄດ້ພ້ອມກັນເຮັດຮ່ວມກັນເພື່ອໃຫ້ເຫັນພາບລວມ ແລະ ໄດ້ຮັບຜົນດີທີ່ສຸດ. ຢ່າງໃດກໍ່ຕາມ, ມັນເປັນເລື່ອງຍາກທີ່ຈະເຮັດວຽກຮ່ວມກັນຖ້າທ່ານບໍ່ໄວ້ວາງໃຈເຊິ່ງກັນ ແລະ ກັນ. ການສ້າງຄວາມເຊື່ອໝັ້ນຕ້ອງໃຊ້ເວລາ ແລະ ຄວາມພະຍາຍາມ, ແຕ່ມັນກໍ່ສໍາຄັນທີ່ຈະສ້າງຖ້າທ່ານຕ້ອງການມີຄວາມສໍາພັນທີ່ດີກັບຜູ້ອື່ນ ແລະ ແກ້ໄຂບັນຫາຮ່ວມກັນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ແລະ ເຮັດວຽກຮ່ວມກັນເພື່ອນໍາພາຊຸມຊົນ ໃນການບັນລຸເປົ້າໝາຍການພັດທະນາມີສ່ວນຮ່ວມຂອງສັງຄົມ.*

**3. ການເຮັດວຽກເປັນທີມ (20 ນາທີ)**

**ຖາມວ່າ:** *ໃຜເຄີຍເຮັດວຽກເປັນທີມມາກ່ອນ? ກະລຸນາແລກປ່ຽນປະສົບການຂອງທ່ານ.*

ເຊີນໃຫ້ຕອບຄໍາຖາມໃນກຸ່ມໃຫຍ່.

**ອະທິບາຍ:** *ທີມປະກອບດ້ວຍໝົດທຸກຄົນທີ່ເຮັດວຽກຮ່ວມກັນເພື່ອບັນລຸເປົ້າໝາຍຮ່ວມກັນ. ໃນຖານະເປັນຄະນະກໍາມະການນໍາພາ, ທ່ານມີເປົ້າໝາຍ ແລະ ຄວາມຮັບຜິດຊອບຮ່ວມກັນ ໃນການປະຕິບັດແຜນພັດທະນາຂອງຊຸມຊົນ. ດັ່ງນັ້ນ, ມັນຈຶ່ງເປັນສິ່ງສໍາຄັນທີ່ຈະເຮັດວຽກຢ່າງມີປະສິດທິພາບພາຍໃນທີມ; ອັນນີ້ເອີ້ນວ່າການເຮັດວຽກເປັນທີມ.*

**ກິດຈະກໍາ:** ວາງທ່ອນໄມ້ລົງ.[10] *ແບ່ງອອກເປັນກຸ່ມຄະນະກໍາມະການຂອງທ່ານ. ພວກທ່ານແຕ່ລະຄົນມີໄມ້ຍາວທີ່ພວກທ່ານຈໍາເປັນຕ້ອງດຸ່ນດ່ຽງມັນໂດຍໃຊ້ພຽງແຕ່ດ້ານຂ້າງຂອງນິ້ວມືພວກທ່ານເທົ່ານັ້ນ. ຖືທ່ອນໄມ້ໄວ້ໃນແນວນອນຕໍ່ໜ້າພວກທ່ານໃນລະດັບບ່າໄຫຼ່ ແລະ ໃຫ້ສະມາຊິກໃນທີມຢືນຢູ່ສອງຟາກຂ້າງຂອງທ່ອນໄມ້, ແລະ ດຸ່ນດ່ຽງທ່ອນໄມ້ໄວ້ຢູ່ເທິງນິ້ວຊີ້ຂອງພວກທ່ານເທົ່ານັ້ນ. ແຕ່ລະຄົນຄວນໃຊ້ແຂນ ແລະ ນິ້ວຊີ້ພຽງຂ້າງດຽວ. ເປົ້າໝາຍຂອງພວກທ່ານແມ່ນເພື່ອວາງທ່ອນໄມ້ລົງພື້ນ, ແຕ່ທຸກຄົນຕ້ອງໃຫ້ນິ້ວມືຂອງເຂົາເຈົ້າຍໍທ່ອນໄມ້ໄວ້. ຖ້າຄົນໃດຄົນໜຶ່ງສູນເສຍການສໍາພັດກັບທ່ອນໄມ້ ບໍ່ວ່າໃນເວລາໃດກໍ່ຕາມ, ຫຼື ຖ້າທ່ອນໄມ້ຕົກລົງພື້ນ, ພວກທ່ານຕ້ອງເລີ່ມຕົ້ນໃໝ່ອີກຄັ້ງ.*

**ສົນທະນາ:** ສິ່ງ*ນີ້ແມ່ນຍາກ ຫຼື ງ່າຍ? ຍ້ອນຫຍັງ? ທັກສະອັນໃດທີ່ຈໍາເປັນ ເພື່ອເຮັດວຽກຮ່ວມກັນເປັນທີມຢ່າງມີປະສິດທິຜົນ?*

ເຊີນໃຫ້ຕອບຄໍາຖາມ. ຄໍາຕອບທີ່ເປັນໄປໄດ້:

- ການສື່ສານທີ່ດີ
- ການຕັດສິນໃຈ ແລະ ການແກ້ໄຂບັນຫາຮ່ວມກັນ
- ຄວາມໄວ້ວາງໃຈ
- ເຄົາລົບເຊິ່ງກັນ ແລະ ກັນ
- ການແກ້ໄຂຂໍ້ຂັດແຍ່ງ
- ສ້າງແຜນການ ແລະ ຕົກລົງກັນວ່າຈະເຮັດສິ່ງໃດ

---

[10] ເຈົ້າອາດຈະໃຊ້ທ່ອນໄມ້, ໄມ້ບັນທັດ, ທໍ່ເຈ້ຍ, ຫຼືສິ່ງໃດກໍ່ຕາມທີ່ຍາວ, ແຂງ, ແລະບາງໆ.

**ຖາມ**: *ການເຮັດວຽກເປັນທີມມີປະໂຫຍດຫຍັງແດ່?*

ເຊີນໃຫ້ຕອບຄໍາຖາມໃນກຸ່ມໃຫ່ຍ. ອະທິບາຍຕື່ມຂ້າງລຸ່ມ:

- ***ສາມາດເຮັດໄດ້ຫຼາຍກວ່ານີ້*** *– ເນື່ອງຈາກວ່າໃນທີມແມ່ນປະກອບດ້ວຍຫຼາຍຄົນ, ເຮັດວຽກຮ່ວມກັນ, ເຮັດວຽກໄດ້ຫຼາຍຂຶ້ນ, ສໍາເລັດໄວຂຶ້ນ.*
- ***ຜົນໄດ້ຮັບທີ່ດີກວ່າ*** *- ເນື່ອງຈາກວ່າໃນທີມມີສະມາຊິກທີ່ມີປະສົບການ ແລະ ທັກສະທີ່ແຕກຕ່າງກັນ, ພວກທ່ານສາມາດມີແນວຄວາມຄິດຫຼາຍຂຶ້ນ ແລະ ດີກວ່າສໍາລັບການແກ້ໄຂບັນຫາ; ຄວາມຫຼາກຫຼາຍແມ່ນຈຸດແຂງ ແລະ ບໍ່ແມ່ນຈຸດອ່ອນ*
- ***ໂອກາດໃນການຮຽນຮູ້*** *– ເຊັ່ນດຽວກັບຊ້າງ, ພວກເຮົາສາມາດຮຽນຮູ້ຈາກທັດສະນະທີ່ແຕກຕ່າງຂອງຄົນອື່ນ*
- ***ແຮງຈູງໃຈ ແລະ ການສະໜັບສະໜູນທີ່ຫຼາຍຂຶ້ນ*** *– ເມື່ອມີເປົ້າໝາຍຮ່ວມກັນ ແລະ ຜູ້ຄົນຮູ້ວ່າການ ຄົນອື່ນຕ້ອງການເພິ່ງພາອາໄສເຂົາເຈົ້າ, ສິ່ງນີ້ຈະກະຕຸ້ນໃຫ້ເຂົາເຈົ້າ ເພື່ອເຮັດໃຫ້ດີທີ່ສຸດ.*

**ອະທິບາຍ**: *ເມື່ອເຮັດວຽກເປັນທີມ, ບາງຄັ້ງກໍ່ມີບັນຫາ. ເຊິ່ງອາດເປັນຍ້ອນຫຼາຍເຫດຜົນ, ເຊັ່ນ: ສະມາຊິກໃນທີມບາງຄົນມັກເຮັດວຽກດ້ວຍຕົນເອງ, ສະມາຊິກໃນທີມບາງຄົນບໍ່ເຮັດໜ້າທີ່ຂອງຕົນເອງ, ຫຼື ສະມາຊິກໃນທີມບາງຄົນສົນໃຈກັບສິ່ງອື່ນ. ການເຮັດວຽກເປັນທີມ, ສິ່ງສໍາຄັນແມ່ນຕ້ອງສື່ສານກັນເປັນຢ່າງດີ, ໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນເຊິ່ງກັນແລະກັນ, ແລະ ພະຍາຍາມແກ້ໄຂຄວາມເຂົ້າໃຈຜິດ, ການສື່ສານທີ່ຜິດພາດ, ແລະ ຂໍ້ຂັດແຍ່ງລະຫວ່າງສະມາຊິກໃນທີມ.*

**ຖາມ**: *ທ່ານສາມາດສ້າງຄວາມສາມາດໃນການເຮັດວຽກເປັນທີມຂອງທ່ານໄດ້ແນວໃດ?*

ເຊີນໃຫ້ຕອບຄໍາຖາມ ໃນກຸ່ມໃຫ່ຍ ແລະ ອະທິບາຍຄໍາຕອບຂ້າງລຸ່ມນີ້ໃຫ້ຄົບຖ້ວນ:

- *ພັດທະນາຄວາມເຄົາລົບ, ຄວາມໄວ້ເນື້ອເຊື່ອໃຈ, ແລະ ເປີດໃຈເຊິ່ງກັນ ແລະ ກັນ*
- *• ຮັບປະກັນວ່າທຸກຄົນເຫັນດີ ແລະ ໝັ້ນໝາຍຕໍ່ເປົ້າໝາຍຮ່ວມກັນ ແລະ ການແບ່ງໜ້າວຽກ*
- *ຮັບປະກັນວ່າທຸກຄົນຮູ້ຈັກບົດບາດ ແລະ ຄວາມຮັບຜິດຊອບຂອງຕົນເອງ*
- *ຮັບປະກັນວ່າທຸກຄົນເຮັດໃນສ່ວນຂອງຕົນເອງ ແລະ ສະໜັບສະໜູນເຊິ່ງກັນ ແລະ ກັນ ແທນທີ່ຈະໂຍນວຽກຂອງຕົນເອງ ໃຫ້ຄົນອື່ນ*
- *ເປີດໃຈໃນສິ່ງທີ່ທ່ານບໍ່ຮູ້ ຫຼືມີຄວາມຫຍຸ້ງຍາກໃນການເຮັດ ແລະ ຂໍຄວາມຊ່ວຍເຫຼືອ ແລະ ການສະໜັບສະໜູນ*
- *ຕັດສິນໃຈ ແລະ ແກ້ໄຂບັນຫາຮ່ວມກັນ*
- *ກໍານົດ ແລະ ພັດທະນາທັກສະທີ່ພວກເຮົາຕ້ອງການຕື່ມອີກແຕ່ຍັງຂາດຢູ່*

**ສະຫຼຸບ**: *ຄວາມໄວ້ວາງໃຈທີ່ມີປະສິດທິຜົນ ແລະ ການເຮັດວຽກເປັນທີມແມ່ນມີຄວາມຈໍາເປັນສໍາລັບຄະນະກໍາມະການທີ່ຈະເຮັດວຽກໄດ້ດີ ແລະ ບັນລຸເປົ້າໝາຍການພັດທະນາຂອງຊຸມຊົນ ທີ່ມີວ່ານຮ່ວມຂອງສັງຄົມ. ການເຮັດວຽກເປັນທີມບໍ່ພຽງແຕ່ມີຄຸນຄ່າສໍາລັບການເຮັດວຽກຮ່ວມກັນເປັນຄະນະກໍາມະການ, ແຕ່ຍັງລວມເຖິງການເຮັດວຽກກັບກຸ່ມອື່ນ , ອົງການຈັດຕັ້ງຕ່າງໆ, ຫຼື ບຸກຄົນອື່ນ*

# ພາກທີ 7: ຄວາມໝັ້ນໃຈໃນຕົນເອງ (ສໍາລັບແມ່ຍິງເທົ່ານັ້ນ)

**ຈຸດປະສົງ** : ເມື່ອຮອດຕອນທ້າຍຂອງພາກນີ້, ຜູ້ເຂົ້າຮ່ວມຈະສາມາດ:

- ເຂົ້າໃຈຄວາມສໍາຄັນຂອງຄວາມຫມັ້ນໃຈຕົນເອງ ສໍາລັບທ່ານແຮງການເປັນນໍາພາ ແລະ ວິທີການພັດທະນາມັນ
- ມີຄວາມຮັບຮູ້ສູງກ່ຽວກັບສິດທິຂອງແມ່ຍິງ
- ພັດທະນາການຮັບຮູ້ຕົນເອງກ່ຽວກັບຈຸດແຂງ ແລະ ຈຸດອ່ອນ
- ຮູ້ສຶກດີກັບຕົນເອງຫຼາຍຂຶ້ນ

**ສັງລວມເນື້ອໃນ:**

| # | ຫົວຂໍ້ | ວິທີການ | ອຸປະກອນ | ເວລາ (100 ນາທີ) |
|---|---|---|---|---|
| 1 | **ຄວາມຫມັ້ນໃຈຕົນເອງ** | ກິດຈະກໍາ, ສົນທະນາກຸ່ມ, ຖາມ, ອະທິບາຍ | ເຈ້ຍແຜ່ນໃຫ່ຍ, ເຈ້ຍ | 40 |
| 2 | **ຄວາມຮັບຮູ້ກ່ຽວກັບສິດທິແມ່ຍິງ** | ອະທິບາຍ, ຖາມ, ສົນທະນາກຸ່ມ, | ເຈ້ຍແຜ່ນໃຫ່ຍ, | 15 |
| 3 | **ການຮູ້ຈັກຕົນເອງ** | ອະທິບາຍ, ຖາມ, ຈັບຄູ່ສົນທະນາ | ເຈ້ຍແຜ່ນໃຫ່ຍ, | 20 |
| 4 | **ຖົງຂີ້ເຫຍື້ອ** | ຖາມ, ກິດຈະກໍາ, ອະທິບາຍ, | ເຈ້ຍ, ຖົງຂີ້ເຫຍື້ອ | 15 |
| 5 | **ວົງການສະຫນັບສະຫນູນ** | ກິດຈະກໍາ | ເພງ ແລະ ລໍາໂພງ | 10 |

ຂັ້ນຕອນ:

**1. ຄວາມໝັ້ນໃຈໃນຕົວເອງ (40 ນາທີ)**

**ອະທິບາຍ:** *ພວກເຮົາຮູ້ວ່າຜູ້ນໍາແມ່ຍິງມັກຈະຂາດຄວາມໝັ້ນໃຈໃນຕົວເອງຍ້ອນຕໍາແໜ່ງໃນສັງຄົມ.*

*ແຕ້ມເສັ້ນຢູ່ເທິງພື້ນທີ່ມີປາຍຫນຶ່ງເວົ້າວ່າ "ແມ່ນ" ແລະ ອີກປາຍເວົ້າວ່າ "ບໍ່ແມ່ນ." ຂ້າພະເຈົ້າຈະອ່ານບາງຄໍາເວົ້າ ແລະ ຫຼັງຈາກແຕ່ລະຄໍາເວົ້າ, ຖ້າທ່ານເຫັນດີກັບຄໍາເວົ້ານັ້ນ, ຍ້າຍໄປຂ້າງ "ແມ່ນ". ຖ້າທ່ານບໍ່ເຫັນດີກັບຄໍາເວົ້າດັ່ງກ່າວ, ໃຫ້ຍ້າຍໄປຂ້າງ "ບໍ່ແມ່ນ". ຖ້າທ່ານຢູ່ບ່ອນໃດບ່ອນໜຶ່ງໃນລະຫວ່າງ, ຢືນຢູ່ໃນຈຸດທີ່ກົງກັບສິ່ງທີ່ທ່ານຄິດ.*

**ກິດຈະກໍາ**: ການກະຕຸ້ນ. ອ່ານລາຍການອອກເທື່ອລະອັນ, ໃຫ້ເວລາຜູ້ເຂົ້າຮ່ວມຍ້າຍໄປຫາຕໍາແໜ່ງຂອງເຂົາເຈົ້າ. ຮັກສາການເຄື່ອນໄຫວຢ່າງວ່ອງໄວ, ເພື່ອໃຫ້ຜູ້ເຂົ້າຮ່ວມຕອບສະຫນອງໂດຍອີງໃສ່ ສັນຊາດຕະຍານ ເບື້ອງຕົ້ນຂອງເຂົາເຈົ້າ ແທນທີ່ຈະໃຫ້ຄົ້ນຄິດເປັນເວລາດົນນານ.

- ຂ້ອຍມີທັກສະທີ່ເປັນປະໂຫຍດຫຼາຍ.
- ຂ້ອຍມັກການຮຽນຮູ້ ແລະ ລອງເຮັດສິ່ງໃໝ່ໆ.
- ຂ້ອຍຕັ້ງເປົ້າຫມາຍຂອງຕົນເອງ.
- ຂ້ອຍເຊື່ອວ່າຂ້ອຍສາມາດບັນລຸເປົ້າຫມາຍຂອງຂ້ອຍໄດ້.
- ຂ້ອຍມີຄວາມສາມາດໃນການຊ່ວຍເຫຼືອຄົນອື່ນ.
- ຂ້ອຍສາມາດຊ່ວຍຄົນອື່ນໃຫ້ບັນລຸເປົ້າຫມາຍຂອງເຂົາເຈົ້າໄດ້.
- ຂ້ອຍບໍ່ອາຍທີ່ເຈົ້າເວົ້າລົມກັບຄົນອື່ນແລະເວົ້າຕໍ່ຫນ້າຫຼາຍໆກຸ່ມຄົນ.
- ຂ້ອຍຮູ້ສຶກສະດວກໃຈໃນການສະແດງຄວາມຄິດເຫັນຂອງຂ້ອຍ.
- ວິທີຄິດ ຂອງຂ້ອຍມີຄ່າແລະສໍາຄັນ.
- ຂ້ອຍຮູ້ສຶກວ່າມີຄົນຟັງຂ້ອຍ.
- ຂ້ອຍເຮັດວຽກຮ່ວມກັບຄົນອື່ນໄດ້ດີ.
- ຂ້ອຍມີອິດທິພົນຕໍ່ຄົນອື່ນ.

- ຂ້ອຍສາມາດຕັດສິນໃຈໃນສິ່ງທີ່ສຳຄັນ.
- ຂ້ອຍພູມໃຈໃນການຕັດສິນໃຈຂອງຂ້ອຍ.
- ຂ້ອຍຂໍຄວາມຊ່ວຍເຫຼືອໃນເວລາທີ່ຂ້ອຍຕ້ອງການ.
- ຂ້ອຍຮູ້ສຶກດີກັບຕົນເອງ.
- ຂ້ອຍຮູ້ວ່າຕົນເອົງມີຈຸດແຂງ ແລະ ຈຸດອ່ອນຫຍັງແດ່.
- ຂ້ອຍອ່ອນແອຫຼາຍກວ່າຄົນອື່ນ.
- ຂ້ອຍສາມາດຮັບມືກັບສິ່ງທ້າທາຍຕ່າງໆທີ່ເຂົ້າມາໃນຊີວິດໄດ້.
- ຂ້ອຍກ້າສ່ຽງ.
- ຄວາມຄິດເຫັນຂອງຄົນທີ່ຂ້ອຍເຫັນວ່າມີຄ່າທີ່ສຸດແມ່ນຂອງຕົວຂ້ອຍເອງ.
- ຂ້ອຍສາມາດຮັບມືກັບຄວາມຄິດເຫັນທີ່ບໍ່ດີຕໍ່ຂ້ອຍ.
- ຂ້ອຍສາມາດເປັນຜູ້ນຳຊຸມຊົນທີ່ດີໄດ້.

**ຖາມ** : *ຄວາມເຊື່ອໝັ້ນຕົນເອງແມ່ນຫຍັງ?*
ເຊີນໃຫ້ຜູ້ເຂົ້າຮ່ວມຕອບຄຳຖາມໃນກຸ່ມໃຫ່ຍ.
**ອະທິບາຍ:** *ຄວາມເຊື່ອໝັ້ນຕົນເອງເປັນສິ່ງທີ່ທ່ານຄິດກ່ຽວກັບເອງ. ມັນແມ່ນລະດັບຄວາມໝັ້ນໃຈ ແລະ ຄວາມເຊື່ອໝັ້ນທີ່ທ່ານມີຕໍ່ຄຸນຄ່າ ແລະ ຄວາມສາມາດຂອງຕົນເອງ. ຖ້າທ່ານບໍ່ເຫັນຄຸນຄ່າຂອງຕົນເອງແລະໃສ່ໃຈໃນສິ່ງທີ່ທ່ານເຮັດ* ***ບໍ່ໄດ້,*** *ທ່ານຈະມີ ຄວາມີຄວາມໝັ້ນໃຈໃນຕົນເອງຕ່ຳ. ຖ້າທ່ານເຫັນຄຸນຄ່າຂອງຕົນເອງ ແລະ ເອົາໃຈໃສ່ສິ່ງທີ່ທ່ານ* ***ເຮັດໄດ້,*** *ນັ້ນໝາຍຄວາມວ່າທ່ານ ມີຄວາມໝັ້ນໃຈໃນຕົນເອງສູງ. ຄວາມເຊື່ອໝັ້ນ ຕົນເອງເປັນສິ່ງທີ່ພວກເຮົາສາມາດ ສ້າງໄດ້. ເຮົາກໍສາມາດປ່ຽນວິທີທີ່ເຮົາຮູ້ສຶກຕໍ່ຕົນເອງໄດ້ ເພື່ອໃຫ້ພວກເຮົາ ມີຄວາມໝັ້ນໃຈໃນຕົນເອງຫຼາຍຂຶ້ນ .*
**ຖາມ** : *ປັດໄຈອັນໃດທີ່ສົ່ງຜົນກະທົບຕໍ່ຄວາມເຊື່ອໝັ້ນ ຕົນເອງ?*
**ສົນທະນາກຸ່ມນ້ອຍ** ແລະ **ລາຍງານ**ຜົນການສົນທະນາໃນກຸ່ມໃຫ່ຍ. ອະທິບາຍ**ຄຳຕອບ**ຂ້າງລຸ່ມນີ້:

- ການປະຕິບັດຕົວ ແລະ ຂໍ້ຄວາມ ທີ່ພວກເຮົາໄດ້ຮັບຈາກຜູ້ທີ່ມີຄວາມສຳຄັນຕໍ່ພວກເຮົາ ເຊັ່ນ: ຜົວ, ພໍ່ແມ່, ຄອບຄົວ ແລະ ຫມູ່ເພື່ອນຂອງພວກເຮົາ
- ຄຸນຄ່າຂອງແມ່ຍິງຕາມທີ່ວັດທະນະທຳຂອງພວກເຮົາກຳນົດໃຫ້
- ຂໍ້ຄວາມທີ່ພວກເຮົາໄດ້ຮັບຈາກແວດວົງສັງຄົມທີ່ກວ້າງຂວາງ - ຊຸມຊົນຂອງພວກເຮົາ, ລະບົບການສຶກສາ, ສາດສະຫນາຂອງພວກເຮົາ, ສື່ມວນຊົນ, ກົດຫມາຍ
- ປະສົບການຈາກຄວາມລົ້ມເຫລວທີ່ພວກເຮົາເຄີຍມີ ຫຼື ຄວາມຜິດພາດທີ່ພວກເຮົາເຄີຍເຮັດໃນອະດີດ ທີ່ສົ່ງຜົນຕໍ່ຄວາມຮູ້ສຶກຂອງພວກເຮົາ, ຫຼືວ່າ ຄົນອື່ນເຮັດໃຫ້ພວກເຮົາຮູ້ສຶກແນວໃດກັບສິ່ງທີ່ເຄີຍເຮັດຜ່ານມາ.

**ຖາມ** : *ເປັນຫຍັງຄວາມເຊື່ອໝັ້ນ ຕົນເອງຈຶ່ງສຳຄັນ?*
ເຊີນໃຫ້ຜູ້ເຂົ້າຮ່ວມຕອບໃນກຸ່ມໃຫ່ຍ. ອະທິບາຍຄຳຕອບຂ້າງລຸ່ມນີ້:

- ຄຸນຄ່າທີ່ທ່ານຄິດວ່າຕົນເອງມີເປັນຕົວກຳນົດວ່າທ່ານຈະພັດທະນາເປັນແບບໃດ
- ຖ້າທ່ານບໍ່ເຊື່ອໝັ້ນໃນຕົນເອງ, ທ່ານຈະບໍ່ສາມາດ ຊອກພົບທ່າແຮງຂອງທ່ານ, ຕັ້ງເປົ້າໝາຍ ແລະ ເຮັດມັນໃຫ້ສຳເລັດໄດ້
- ຄວາມເຊື່ອໝັ້ນ ເອງມີຜົນກະທົບອັນໃຫຍ່ຫຼວງຕໍ່ຄວາມຄິດ, ອາລົມ, ແລະ ຄຸນຄ່າ ຂອງທ່ານເອງ
- ວິທີທີ່ພວກເຮົາມີຄິດກ່ຽວກັບຕົນເອງມີຜົນກະທົບອັນໃຫຍ່ຫຼວງຕໍ່ຄວາມສຳພັນຂອງພວກເຮົາກັບຄົນອື່ນ ແລະ ສຸຂະພາບຈິດຂອງພວກເຮົາເອງ

**ຖາມ** : *ເປັນຫຍັງຄວາມເຊື່ອໝັ້ນ ຕົນເອງຈຶ່ງມີຄວາມສຳຄັນຕໍ່ການເປັນຜູ້ນຳທີ່ມີປະສິດທິພາບ?*
ເຊີນໃຫ້ຜູ້ເຂົ້າຮ່ວມຕອບໃນກຸ່ມໃຫ່ຍ. ຄຳຕອບທີ່ເປັນໄປໄດ້:

- ຖ້າທ່ານບໍ່ເຊື່ອໝັ້ນໃນຕົວເອງ, ຄົນອື່ນກໍບໍ່ເຊື່ອໃນໂຕຂອງທ່ານ, ນີ້ຈະສົ່ງຜົນກະທົບຕໍ່ຄວາມໄວ້ວາງໃຈແລະຄວາມເຊື່ອຫມັ້ນຂອງພວກເຂົາໃນທ່ານໃນຖານະຜູ້ນຳ
- ຖ້າທ່ານບໍ່ເຊື່ອໝັ້ນໃນຕົນເອງ, ມັນຈະເປັນການຍາກທີ່ທ່ານຈະປະຕິບັດພາລະບົດບາດ ແລະ ຄວາມຮັບຜິດຊອບຂອງທ່ານໄດ້ດີ
- ຖ້າທ່ານບໍ່ໝັ້ນໃຈໃນຕົນເອງ ທ່ານຈະບໍ່ສາມາດຮັບມືກັບສິ່ງທ້າທາຍ ຫຼື ບັນຫາທີ່ເກີດຂຶ້ນໄດ້.

**ຖາມ** : *ທ່ານຈະຍົກລະດັບ ຄວາມຫມັ້ນໃຈໃນຕົນເອງໄດ້ແນວໃດ?*
**ສົນທະນາກຸ່ມນ້ອຍ** ແລະ ລາຍງານຜົນການສົນທະນາໃນກຸ່ມໃຫ່ຍ. ອະທິບາຍຄຳຕອບຂ້າງລຸ່ມນີ້:

- ມີຄວາມສັດທາໃນຕົນເອງ
- ຍອມຮັບວ່າຕົນເອງເປັນຄົນທີ່ມີຄຸນຄ່າ
- ເບິ່ງແຍງຕົນເອງທາງຮ່າງກາຍ, ອາລົມ ແລະ ຈິດໃຈ
- ຄິດໃນແງ່ບວກແທນ, ພ້ອມທັງເຊື່ອວ່າຂ້ອຍສາມາດ ປະສົບຜົນສຳເລັດ ໃນສິ່ງ ທີ່ຂ້ອຍຈະເຮັດ
- ຝຶກທັກສະໃຫ້ຕົນເອງມີຄວາມເຂັ້ມແຂງແລະມີຄວາມຫມັ້ນໃຈໃນຄວາມສາມາດຂອງຕົນເອງ
- ກຳນົດເປົ້າຫມາຍທີ່ສາມາດບັນລຸໄດ້ແທ້
- ເຂົ້າໃຈແລະຢືນຢັດໃນສິດທິຂອງຕົນ
- ຢຸດຕິຄວາມໂດດດ່ຽວຂອງຂ້ອຍ ແລະ ເຂົ້າຮ່ວມກັບແມ່ຍິງຫຼາຍໆຄົນທີ່ສາມາດໃຫ້ການສະຫນັບສະຫນູນດ້ານສິນລະທຳ ແລະ ກຳລັງໃຈ
- ຊົມເຊີຍຕໍ່ຜົນສຳເລັດຂອງຕົນ
- ແທນທີ່ຈະຮູ້ສຶກອັບອາຍເມື່ອຕົນເອງເຮັດຜິດ ຂ້ອຍພັດໃຊ້ມັນເປັນໂອກາດເພື່ອຮຽນຮູ້
- ຢູ່ໃກ້ກັບຄົນທີ່ເບິ່ງຂ້ອຍໃນແງ່ດີ
- ບອກແຕ່ເລື່ອງດີໆຕໍ່ຕົນເອງແທນທີ່ຈະເປັນເລື່ອງທີ່ບໍ່ດີ

**ສະຫຼຸບ**: *ຄວາມຫມັ້ນໃຈໃນຕົນເອງມີບົດບາດສຳຄັນຕໍ່ການເປັນຜູ້ນຳທີ່ມີປະສິດທິພາບ. ຜູ້ນຳທີ່ຫມັ້ນ ໃຈໃນຕົນເອງສາມາດສ້າງແຮງບັນດານໃຈ, ມີອິດທິພົນ, ແລະ ຕອບສະຫນອງຕໍ່ຄວາມຕ້ອງການຂອງປະຊາຊົນໄດ້ງ່າຍກວ່າ. ມັນຊ່ວຍໃຫ້ພວກເຂົາສາມາດຮັບມືກັບສິ່ງທ້າທາຍ ແລະ ແກ້ໄຂບັນຫາ ເພື່ອໃຫ້ບັນລຸເປົ້າຫມາຍ. ເຖິງແມ່ນວ່າທ່ານຈະບໍ່ເລີ່ມຕົ້ນຈາກການເປັນຜູ້ນຳທີ່ມີຄວາມຫມັ້ນໃຈສູງ, ການເປັນຜູ້ນຳຈະສາມາດຊ່ວຍສ້າງຄວາມຫມັ້ນໃຈໃຫ້ທ່ານໄດ້ ໃນເວລາທີ່ທ່ານຮຽນຮູ້ສິ່ງໃຫມ່ໆ ແລະ ຝຶກທັກສະການເປັນຜູ້ນຳ. ທ່ານບໍ່ຈຳເປັນຕ້ອງມີຄວາມໝັ້ນໃຈເພື່ອການເລີ່ມຕົ້ນ, ແຕ່ທ່ານຕ້ອງເລີ່ມມີຄວາມໝັ້ນໃຈ!*

## 2. ຄວາມຮັບຮູ້ກ່ຽວກັບ ສິດທິຂອງແມ່ຍິງ (15 ນາທີ)

**ອະທິບາຍ** : *ໃນບາງບ່ອນ, ເຫດຜົນໜຶ່ງທີ່ເຮັດໃຫ້ແມ່ຍິງບໍ່ມີຄວາມໝັ້ນໃຈແມ່ນຍ້ອນວ່າເຂົາເຈົ້າບໍ່ຮູ້ວ່າຕົນເອງມີສິດທິຫຍັງແດ່. ໃນປີ 1981, ລັດຖະບານລາວ ໄດ້ໃຫ້ສັດຕະຍາບັນ ຕໍ່ສົນທິສັນຍາສາກົນ ວ່າດ້ວຍການລົບລ້າງການຈຳແນກທຸກຮູບແບບຕໍ່ແມ່ຍິງ (CEDAW). ນີ້ໝາຍຄວາມວ່າ ລັດຖະບານລາວ ຂໍເປັນໜຶ່ງໃນນັ້ນ, ທີ່ໃຫ້ຄຳໝັ້ນສັນຍາວ່າຈະໃຊ້ທຸກມາດຕະການທີ່ເໝາະສົມ, ເຊິ່ງລວມມີນິຕິກຳ ແລະ ການປ່ຽນແປງດ້ານວັດທະນະທຳສັງຄົມ, ເພື່ອໃຫ້ແມ່ຍິງມີສິດເສລີພາບໃນທຸກໆດ້ານ, ດັ່ງນີ້:*

- *ບໍ່ໃຫ້ຖືກຂາຍ ຫຼື ຖືກບັງຄັບໃຫ້ຂາຍບໍລິການທາງເພດ*
- *ສາມາດລົງຄະແນນສຽງເລືອກຕັ້ງ, ແລະ ເຂົ້າຮ່ວມວຽກງານດ້ານການເມືອງ*

- *ມີໂອກາດໄດ້ຮັບການສຶກສາແລະການຝຶກອົບຮົມເຊັ່ນດຽວກັນກັບຜູ້ຊາຍ*
- *ໄດ້ເຮັດວຽກ, ມີໂອກາດໃນການຖືກຈ້າງງານ, ແລະ ໄດ້ຮັບເງິນເດືອນເທົ່າທຽມກັນກັບຜູ້ຊາຍ*
- *ໄດ້ຮັບການບໍລິການດ້ານສຸຂະພາບ ລວມທັງ ສຸຂະພາບການຈະເລີນພັນ ແລະ ການມີເພດສຳພັນປອດໄພ*
- *ສາມາດເຂົ້າເຖິງຜົນປະໂຫຍດຂອງຄອບຄົວ ແລະ ໂອກາດທາງການເງິນເທົ່າທຽມກັນກັບຜູ້ຊາຍ*
- *ສາມາດເຂົ້າຮ່ວມຢ່າງສະເໝີພາບ ແລະ ໄດ້ຮັບຜົນປະໂຫຍດຈາກການວາງແຜນ ແລະ ເຮັດກິດຈະກຳພັດທະນາຊຸມຊົນ*
- *ມີຄວາມສະເໝີພາບຕໍ່ໜ້າກົດໝາຍ, ທັງທາງແພ່ງ ແລະ ການເປັນເຈົ້າຂອງຊັບສິນ*
- *ມີສິດເລືອກໄດ້ວ່າຈະແຕ່ງງານກັບໃຜ*

**ຖາມ** : *ປັດຈຸບັນນີ້ທ່ານໄດ້ໃຊ້ປະໂຫຍດຈາກສິດທິເຫຼົ່ານີ້ບໍ?*
ເຊີນໃຫ້ຜູ້ເຂົ້າຮ່ວມຕອບຄຳຖາມໃນກຸ່ມໃຫຍ່.

**ອະທິບາຍ**: *ຢູ່ເທິງຝາແມ່ນມີບັດຄຳ ສາມບັດທີ່ເວົ້າວ່າ "ອະດີດ, ປັດຈຸບັນ, ອະນາຄົດ." ຄິດເບິ່ງວ່າຊີວິດຂອງລຸ້ນແມ່ຂອງເຈົ້າເປັນແນວໃດ. ລອງຄິດເບິ່ງວ່າຊີວິດຂອງຄົນລຸ້ນຂອງເຈົ້າເປັນແນວໃດ. ລອງຄິດເບິ່ງວ່າເຈົ້າຢາກໃຫ້ຊີວິດຂອງລູກສາວຂອງເຈົ້າເປັນແນວໃດ. ຈາກນັ້ນຕອບຄຳຖາມຕໍ່ໄປນີ້:*

- *ມີຫຍັງປ່ຽນແປງໃນຊີວິດຂອງແມ່ຍິງເຫຼົ່ານີ້ຈາກລຸ້ນສູ່ລຸ້ນ?*
- *ແມ່ນຫຍັງທີ່ນຳເອົາການປ່ຽນແປງເຫຼົ່ານັ້ນມາ?*
- *ອັນໃດທີ່ໃຫ້ຄວາມຫວັງກ່ຽວກັບອະນາຄົດແກ່ທ່ານ?*
- *ທ່ານຄິດວ່າທ່ານມີບົດບາດແລະຄວາມຮັບຜິດຊອບໃນການສ້າງຄວາມແຕກຕ່າງນີ້ບໍ?*
- *ມັນບົດບາດ ແລະ ຄວາມຮັບຜິດຊອບຫຍັງ?*

ສົນທະນາກຸ່ມນ້ອຍ ແບ່ງປັນປະເດັນສຳຄັນຈາກການສົນທະນາຂອງແຕ່ລະກຸ່ມຕໍ່ກຸ່ມໃຫຍ່.

**ສະຫຼຸບ** : *ບໍ່ມີປະເທດໃດໃນໂລກທີ່ບັນລຸຄວາມສະເໝີພາບລະຫວ່າງຍິງ-ຊາຍໄດ້ຢ່າງຄົບຖ້ວນ, ແຕ່ສິ່ງທີ່ກ້າວໄປຂ້າງໜ້າເກືອບທຸກປະເທດ. ຄວາມຈິງທີ່ວ່າທ່ານກຳລັງເຂົ້າຮ່ວມການຝຶກອົບຮົມນີ້ແມ່ນຕົວຢ່າງຫນຶ່ງ ແລະ ເຖິງແມ່ນວ່າພວກເຮົາອາດຈະຄິດວ່າວັດທະນະທຳບໍ່ອະນຸຍາດໃຫ້ພວກເຮົາຮັບຮູ້ສິດທິເຫຼົ່ານີ້, ຈື່ໄວ້ວ່າວັດທະນະທຳ ບໍ່ແມ່ນບາງສິ່ງບາງຢ່າງຄົງທີ່, ແຕ່ບາງສິ່ງບາງຢ່າງທີ່ມີການປ່ຽນແປງຕາມການເວລາ.*

**3. ການຮູ້ຈັກຕົນເອງ (20 ນາທີ)**

**ອະທິບາຍ**: *ການຮູ້ຈັກຕົນເອງໝາຍເຖິງການພະຍາຍາມເຂົ້າໃຈຕົນເອງໃຫ້ດີຂຶ້ນ. ນັ້ນຫມາຍຄວາມວ່າ ພວກເຮົາເຂົ້າໃຈຕົວຕົນຂອງເຮົາ ເຂົ້າໃຈຄວາມແຂງ ແລະ ຄວາມອ່ອນແອ, ຄວາມຫວັງ ແລະ ຄວາມຢ້ານກົວ. ເນື່ອງຈາກວ່າແມ່ຍິງ ມັກຈະຫຍຸ້ງຢູ່ກັບການເຮັດວຽກເຮືອນ, ດູແລຄອບຄົວ, ແລະ ຊອກຢູ່ຫາກິນ, ມັນອາດຈະເປັນກໍລະນີທີ່ພວກເຂົາບໍ່ມີເວລາ ຫຼື ພື້ນທີ່ຫຼາຍທີ່ຈະຄິດ ແລະ ສະແດງຄວາມເປັນຕົວຕົນອອກ. ຕອນນີ້ພວກເຮົາຈະໃຊ້ເວລາຫນ້ອຍຫນຶ່ງ ເພື່ອຄິດທົບທວນເຖິງ ການຮູ້ຈັກຕົນເອງ ທາງດ້ານຄວາມຄິດ, ອາລົມ, ແລະ ຄວາມຝັນຂອງທ່ານເອງໃຫ້ຫຼາຍຂຶ້ນ.*

**ຈັບຄູ່ສົນທະນາ**

**ຖາມ**: ສົນທະນາຄຳຖາມຕໍ່ໄປນີ້ກັບຄູ່ສົນທະນາຂອງເຈົ້າ:

- *ອັນໃດເຮັດໃຫ້ຂ້ອຍຮູ້ສຶກພູມໃຈໃນຕົວເອງ?*
- *ອັນໃດເຮັດໃຫ້ຂ້ອຍຮູ້ສຶກວ່າບໍ່ມີອຳນາດ?*

- *ຂ້ອຍມີຈຸດແຂງອັນໃດໃນຖານະຜູ້ນໍາຊຸມຊົນ?*
- *ຄວາມສາມາດໃນການເປັນຜູ້ນໍາພາອັນໃດທີ່ຂ້ອຍຕ້ອງການເພື່ອພັດທະນາຫຼາຍຂຶ້ນ?*

ເຊີນໃຫ້ຜູ້ເຂົ້າຮ່ວມແລກປ່ຽນການສົນທະນາໃນກຸ່ມໃຫ່ຍ

**ຖາມ ແລະ ສົນທະນາໃນກຸ່ມໃຫ່ຍ** :

- *ເຈົ້າໄດ້ຮຽນຮູ້ຫຍັງກ່ຽວກັບຕົນເອງຜ່ານບົດຝຶກຫັດນີ້?*
- *ສິ່ງນີ້ມີຜົນກະທົບແນວໃດຕໍ່ຄວາມຮູ້ສຶກທີ່ທ່ານເປັນຜູ້ນໍາຊຸມຊົນ?*

**ສະຫຼຸບ**: *ການຮູ້ຈັກຕົນເອງ ຫມາຍເຖິງການມີສະຕິໃນຄວາມຮູ້ ແລະຄວາມສາມາດພາຍໃນຕົນເອງຫຼາຍຂຶ້ນ. ອັນນີ້ສາມາດຊ່ວຍໃຫ້ທ່ານຮູ້ສຶກໝັ້ນໃຈກ່ຽວກັບຕົວທ່ານເອງໃນການຕັດສິນໃຈ ແລະ ການກະທໍາຂອງຕົນເອງຫຼາຍຂຶ້ນ, ແລະຊ່ວຍໃຫ້ທ່ານສາມາດເອົາຊະນະສິ່ງທ້າທາຍຕ່າງໆທີ່ທ່ານອາດຈະປະເຊີນໃນຖານະທີ່ເປັນຜູ້ນໍາຊຸມຊົນ.*

**4. ຖັງຂີ້ເຫຍື້ອ (15 ນາທີ)**

**ຖາມ:** *ມີບາງສິ່ງບາງຢ່າງທີ່ທ່ານຮູ້ສຶກວ່າມັນຖ່ວງດຶງທ່ານບໍ່ໃຫ້ເປັນຜູ້ນໍາຊຸມຊົນທີ່ມີຄວາມໝັ້ນໃຈ ແລະ ມີປະສິດທິພາບບໍ? ສິ່ງເຫຼົ່ານີ້ສາມາດເປັນອັນໃດກໍໄດ້ຈາກຄວາມຮູ້ສຶກຄືຢ້ານວ່າຄົນຈະບໍ່ຟັງທ່ານ, ຫຼືຄວາມກັງວົນທີ່ທ່ານບໍ່ຮູ້ຈະເຮັດແນວໃດ, ຫຼືສິ່ງອື່ນໆເຊັ່ນ: ການຈໍາແນກທາງເພດທີ່ບໍ່ໃຫ້ທ່ານໄດ້ຮັບການສຶກສາ. ຫຼັງຈາກນັ້ນ, ກະລຸນາຂຽນສິ່ງເຫຼົ່ານີ້ລົງຫຼືແຕ້ມມັນໃສ່ເຈ້ຍ.*

**ກິດຈະກໍາ:** ເມື່ອຜູ້ເຂົ້າຮ່ວມເຮັດແລ້ວ, ໃຫ້ພວກເຂົາຢືນເປັນວົງມົນທີ່ມີຖັງຂີ້ເຫຍື້ອຕັ້ງຢູ່ກາງຫ້ອງ. ໃຫ້ຜູ້ເຂົ້າຮ່ວມແຕ່ລະຄົນຍ່າງເຂົ້າຫາຖັງຂີ້ເຫຍື້ອ ແລ້ວຈີກ ແລະ ຖິ້ມເຈ້ຍຂອງເຂົາເຈົ້າໃສ່ຖັງຂີ້ເຫຍື້ອ. ຖ້າພວກ ເຂົາຮູ້ສຶກສະດວກໃຈທີ່ຈະແບ່ງປັນສິ່ງທີ່ໄດ້ຂຽນຫຼືແຕ້ມກັບຜູ້ເຂົ້າຮ່ວມຄົນອື່ນໆ, ໃຫ້ພວກເຂົາອ່ານອອກສຽງຫຼື ອະທິບາຍສິ່ງທີ່ແຕ້ມຢູ່ໃນເຈ້ຍຂອງພວກເຂົາກ່ອນທີ່ພວກເຂົາຈະຈີກມັນຖິ້ມ. ຕົບມືໃຫ້ແຕ່ລະຄົນຫຼັງຈາກທີ່ເຂົາເຈົ້າໄດ້ຖິ້ມເຈ້ຍຂອງເຂົາເຈົ້າ.

**ອະທິບາຍ:** *ນີ້ແມ່ນບົດຝຶກຫັດທີ່ຈະຊ່ວຍໃຫ້ທ່ານລະບຸສິ່ງທີ່ກໍາລັງຖ່ວງດຶງທ່ານຢູ່, ແລະ ເພື່ອໃຫ້ທ່ານໝັ້ນໃຈວ່າທ່ານສາມາດຊອກຫາວິທີຕັດມັນອອກໄປຈາກຊີວິດຂອງທ່ານໄດ້.*

**5. ວົງການສະໜັບສະໜູນ (10 ນາທີ)**

**ກິດຈະກໍາ:** *ໃຫ້ຜູ້ເຂົ້າຮ່ວມຢືນອ້ອມກັນເປັນສອງວົງມົນ - ວົງນອກແລະວົງໃນ, ທັງສອງວົງຕ້ອງມີຈໍານວນຄົນເທົ່າກັນ.*

**ອະທິບາຍ:** *ຂ້າພະເຈົ້າຈະເປີດເພງ ແລະ ຂໍໃຫ້ພວກທ່ານເຕັ້ນ, ເຊິ່ງວົງນອກເຕັ້ນໄປໃນທິດທາງໜຶ່ງ ແລະ ວົງໃນເຕັ້ນໄປອີກທິດທາງກົງກັນຂ້າມ. ເມື່ອຂ້າພະເຈົ້າປິດສຽງເພງ, ໃຫ້ຢຸດຢູ່ບ່ອນທີ່ທ່ານຢູ່ນັ້ນ ແລະ ໃຫ້ບອກຜູ້ທີ່ຢືນຢູ່ເຊິ່ງໜ້າຂອງທ່ານ. ເວົ້າກ່ຽວກັບບາງຢ່າງທີ່ທ່ານມັກກ່ຽວກັບຄົນທີ່ຢືນເຊິ່ງໜ້າທ່ານນັ້ນ.*

**ເປີດເພງຕໍ່ ແລະ ພວກເຮົາຈະເຮັດລື້ມຄືນແບບເກົ່າຈັກສອງສາມເທື່ອ.**

***ອະທິບາຍ:*** *ນີ້ແມ່ນບົດຝຶກຫັດທີ່ຈະຊ່ວຍໃຫ້ທ່ານຮູ້ສຶກດີຕໍ່ຕົນເອງ, ແລະ ເພື່ອຊ່ວຍໃຫ້ທ່ານເຂົ້າໃຈວ່າທ່ານສາມາດຊ່ວຍເຮັດໃຫ້ຄົນອື່ນມີຄວາມຮູ້ສຶກດີຕໍ່ຕົນເອງໄດ້. ໃນຄວາມເປັນຈິງ, ການສ້າງຄວາມສໍາພັນ ກັບຜູ້ນໍາ ທີ່ເປັນເພດຍິງຫຼາຍຄົນ ຈະຊ່ວຍໃຫ້ທ່ານສາມາດສະຫນັບສະຫນູນ ເຊິ່ງກັນ ແລະ ກັນ.*

# ພາກທີ 8: ການປັບຕົວ (ການຮັບມື) (ສໍາລັບແມ່ຍິງເທົ່ານັ້ນ)

**ຈຸດປະສົງ** : ເມື່ອຮອດຕອນທ້າຍຂອງພາກນີ້, ຜູ້ເຂົ້າຮ່ວມຈະສາມາດ:

- ເຂົ້າໃຈຄວາມສໍາຄັນຂອງການປັບຕົວ ແລະ ວິທີການພັດທະນາຍຸດທະສາດເພື່ອການຮັບມື
- ເຂົ້າໃຈກ່ຽວກັບເຄືອຂ່າຍແລະວິທີການສ້າງເຄືອຂ່າຍເພື່ອການສະໜັບສະໜູນ
- ເອົາຊະນະສິ່ງທ້າທາຍ ແລະ ຮູ້ຈັກດູແລຕົນເອງ

**ສັງລວມເນື້ອໃນ:**

| # | ຫົວຂໍ້ | ວິທີການ | ອຸປະກອນ | ເວລາ (60 ນາທີ) |
|---|---|---|---|---|
| 1 | **ການປັບຕົວ/ການຮັບມື** | ອະທິບາຍ, ຖາມ, ສົນທະນາເປັນຄູ່ | ເຈ້ຍແຜ່ນໃຫຍ່ | 20 |
| 2 | **ເຄືອຂ່າຍເພື່ອການສະໜັບສະໜູນ** | ຖາມ, ສົນທະນາກຸ່ມ | ເຈ້ຍແຜ່ນໃຫຍ່ | 20 |
| 3 | **ການດູແລຕົນເອງ** | ອະທິບາຍ,ຖາມ, ສົນທະນາກຸ່ມ, ກິດຈະກໍາ | ເຈ້ຍແຜ່ນໃຫຍ່ | 20 |

**ຂັ້ນຕອນ:**

**1. ການປັບຕົວ/ການຮັບມື (20 ນາທີ)**

**ອະທິບາຍ**: *ເນື່ອງຈາກວ່າປະຊາຊົນສ່ວນຫຼາຍໃນຊຸມຊົນອາດຈະບໍ່ເຫັນດີນໍາຫຼືສະໜັບສະໜູນແມ່ຍິງໃຫ້ຢູ່ໃນຕໍາແໜ່ງຜູ້ນໍາ, ຜູ້ນໍາທີ່ເປັນເພດຍິງ ອາດຈະປະເຊີນກັບການໂຕ້ກັບ ໃນຮູບແບບຂອງຄວາມຄິດເຫັນທີ່ບໍ່ດີຕໍ່ເຂົາ, ການຈໍາແນກ, ຄວາມທໍ້ຖອຍໃຈ, ການຂົ່ມຂູ່, ຈົນເຖິງການໃຊ້ຄວາມຮຸນແຮງ. ດັ່ງນັ້ນ, ຜູ້ນໍາທີ່ເປັນເພດຍິງຕ້ອງມີຄວາມອົດທົນ ແລະ ກຽມພ້ອມທີ່ຈະຮັບມືກັບການໂຕ້ກັບນີ້. ໃຫ້ກໍານົດສິ່ງທ້າທາຍຕ່າງໆ ແລະ ຫຼັງຈາກນັ້ນປຶກສາຫາລືບາງຍຸດທະວິທີສໍາລັບຈັດການກັບພວກມັນ.*

**ສົນທະນາເປັນຄູ່**

**ຖາມ:** *ກະລຸນາຄິດທົບທວນ ໂດຍໃຊ້ ຄໍາຖາມຕໍ່ໄປນີ້ ກັບຄູ່ຂອງທ່ານ:*

- *ສິ່ງທ້າທາຍ ຫລື ຄວາມສ່ຽງ, ອັນໃດທີ່ທ່ານປະເຊີນ ຫຼື ທີ່ທ່ານຄິດວ່າທ່ານອາດຈະປະເຊີນໃນຖານະທີ່ເປັນຜູ້ນໍາຊຸມຊົນທີ່ເປັນເພດຍິງ?*
- *ທ່ານ ຮັບມື ຫລື ແກ້ໄຂສິ່ງທ້າທາຍເຫົລ່ານັ້ນແນວໃດ?*
- *ທ່ານຕ້ອງການຄວາມຊ່ວຍເຫຼືອແບບໃດ? ມີການຊ່ວຍເຫຼືອຫຍັງແດ່ທີ່ມີຢູ່ແລ້ວ?*

ສັງລວມຜົນການສົນທະນາໃນກຸ່ມໃຫຍ່ ແລະ ຈົດບັນທຶກຄໍາຕອບລົງໃນເຈ້ຍແຜ່ນໃຫຍ່ດັ່ງຕາຕະລາງຂ້າງລຸ່ມນີ້:

| ສິ່ງທ້າທາຍ/ຄວາມສ່ຽງທີ່ປະເຊີນຢູ່ | ວິທີການຮັບມື/ແກ້ໄຂສິ່ງທ້າທາຍ | ການສະໜັບສະໜູນ ທີ່ຕ້ອງການ/ຊັບພະຍາກອນທີ່ມີ |
|---|---|---|
| | | |
| | | |

**ສະຫຼຸບ:** *ການສາມາດກໍານົດ ແລະ ຄິດໂດຍຜ່ານບາງສິ່ງທ້າທາຍ ແລະ ຍຸດທະສາດການຮັບມື ທີ່ທ່ານສາມາດນໍາໃຊ້ເປັນວິທີການໜຶ່ງເພື່ອກະກຽມຈິດໃຈສໍາລັບຕົວທ່ານເອງຮັບມືກັບເຂົາເຈົ້າ. ທ່ານສາມາດສືບຕໍ່ນໍາໃຊ້ນີ້ເປັນເຄື່ອງມືສໍາລັບທຸກຄັ້ງທີ່ມີຄວາມທ້າທາຍທີ່ເກີດຂຶ້ນ.*

**2. ເຄືອຂ່າຍເພື່ອການສະໜັບສະໜູນ (20 ນາທີ)**

**ຖາມ** : *ເຄືອຂ່າຍແມ່ນຫຍັງ?*

ເຊີນໃຫ້ຜູ້ເຂົ້າຮ່ວມຕອບຄຳຖາມ.

*ເຄືອຂ່າຍແມ່ນພົວພັນກັບຜູ້ອື່ນເພື່ອສ້າງ ແລະ ຮັກສາຄວາມສຳພັນເພື່ອສະໜັບສະໜູນການພັດທະນາຂອງຄົນ..*

**ຖາມ** : *ເປັນຫຍັງເຄືອຂ່າຍຈຶ່ງສຳຄັນສຳລັບຜູ້ນຳທີ່ເປັນເພດຍິງ?*

ເຊີນຜູ້ເຂົ້າຮ່ວມຕອບຄຳຖາມໃນກຸ່ມໃຫ່ຍ ແລ້ວ **ອະທິບາຍຂ້າງລຸ່ມນີ້:**

- *ເຄືອຂ່າຍສົ່ງເສີມການແລກປ່ຽນແນວຄວາມຄິດ ແລະ ປະສົບການ*
- *ເຄືອຂ່າຍໃຫ້ການຊຸກຍູ້, ສ້າງຄວາມສາມັກຄີ, ແລະ ການສະໜັບສະໜູນດ້ານສິນລະທຳ*
- *ເຄືອຂ່າຍມີຄວາມສຳຄັນຕໍ່ການແກ້ໄຂບັນຫາທີ່ໜັກໜ່ວງເກີນກວ່າທີ່ຄົນເຮົາຈະປະເຊີນກັບມັນໄດ້ດ້ວຍຕົນເອງ*
- *ເຄືອຂ່າຍສາມາດເສີມສ້າງຜົນຮັບຂອງກິດຈະກຳຂອງຄົນໃດຄົນໜຶ່ງໄດ້.*
- *ເຄືອຂ່າຍສາມາດຊ່ວຍໃນການລະດົມທຶນ (ຊັບພະຍາກອນຕ່າງໆ)*

**ຖາມ:** *ບອກຄວາມສຳພັນທັງຫມົດທີ່ມີໃນຊີວິດຂອງທ່ານ – ມັນອາດຈະເປັນຄວາມສຳພັນທີ່ໃກ້ຊິດ, ປານກາງ, ຫຼື ຫ່າງໆ. ແມ່ນໃຜທີ່ຢູ່ໃນຄົນທີ່ທ່ານຮູ້ຈັກ, ກຸ່ມຄົນ, ຫຼື ອົງການຈັດຕັ້ງໃນຊຸມຊົນຂອງທ່ານ ຫຼື ຢູ່ໃນຂົງເຂດອື່ນ, ທີ່ສາມາດຊ່ວຍທ່ານໃຫ້ປະຕິບັດຕົວເປັນຜູ້ນຳຊຸມຊົນ ທີ່ມີປະສິດທິພາບໄດ້? ທ່ານຕ້ອງການເຊື່ອມຕໍ່ກັບໃຜ? ທ່ານຈະເຊື່ອມຕໍ່ກັບເຂົາເຈົ້າໄດ້ແນວໃດ?*

**ສົນທະນາກຸ່ມນ້ອຍ.** ຫຼັງຈາກນັ້ນ, ແບ່ງປັນໃນກຸ່ມໃຫ່ຍ. ບັນທຶກຈຸດທີ່ຄ້າຍຄືກັນໃສ່ຕາຕະລາງຂ້າງລຸ່ມນີ້:

| ທ່ານຕ້ອງການເຊື່ອມຕໍ່ກັບ [ບຸກຄົນ/ກຸ່ມ/ອົງການຈັດຕັ້ງໃດ? | ຄວາມສຳພັນຂອງທ່ານກັບເຂົາເຈົ້າເປັນແນວໃດ? | ທ່ານຈະເຊື່ອມຕໍ່ກັບເຂົາເຈົ້າໄດ້ແນວໃດ? |
|---|---|---|
| | | |
| | | |
| | | |

**ສະຫຼຸບ:** *ສ້າງເຄືອຂ່າຍ ແລະ ພົວພັນກັບຄົນທີ່ສາມາດສະໜັບສະໜູນ ແລະ ຊ່ວຍທ່ານເຮັດບົດບາດຜູ້ນຳທີ່ເປັນເພດຍິງໄດ້, ເຊິ່ງມັນມີຄວາມສຳຄັນເມື່ອທ່ານພົບສິ່ງທ້າທາຍໃນບົດບາດຂອງທ່ານ. ກຸ່ມແມ່ຍິງທີ່ເຂົ້າຮ່ວມການຝຶກອົບຮົມຄັ້ງນີ້ ແມ່ນເປັນສ່ວນໜຶ່ງຂອງເຄືອຂ່າຍທີ່ຊຸກຍູ້ພວກທ່ານແລ້ວ, ທ່ານສາມາດຊ່ວຍເຫຼືອເຊິ່ງກັນ ແລະ ກັນ ເພື່ອຂະຫຍາຍເຄືອຂ່າຍຂອງທ່ານອອກໄປຕື່ມອີກ. ພ້ອມນີ້ທ່ານກໍສາມາດຄິດກ່ຽວກັບວິທີທີ່ທ່ານຈະສາມາດນຳເອົາການ ສະໜັບ ສະໜູນຂອງສະມາຊິກ ຄະນະກຳມະການ ທີ່ເປັນເພດຊາຍ, ເພາະວ່າພວກພວກເຂົາກໍ່ໄດ້ເຂົ້າຮ່ວມການຝຶກອົບຮົມນີ້ ແລະ ເຂົ້າໃຈຄວາມສຳຄັນ ຂອງການເປັນພັນທະມິດ ໃນການສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ.*

**3. ການດູແລຕົນເອງ (20 ນາທີ)**

**ອະທິບາຍ** : *ຜູ້ນຳຕ້ອງມີຈິດໃຈທີ່ເບິ່ງໂລກໃນແງ່ດີເພື່ອການຕັດສິນໃຈທີ່ດີ, ປະຕິບັດຢ່າງຖືກຕ້ອງ, ແລະ ຊ່ວຍເຫຼືອຄົນອື່ນ. ມີການປະຕິບັດຫຼາຍຢ່າງທີ່ສາມາດຊ່ວຍໃຫ້ຜູ້ນຳທີ່ເປັນເພດຍິງແນ່ໃຈວ່າຄວາມກົດດັນບໍ່ໄດ້ບີບຮັດພວກແມ່ຍິງຫຼາຍເກີນໄປ ຫຼື ເຮັດໃຫ້ພວກເຂົາສູນເສຍພະລັງ ແລະ ຄວາມສົນໃຈໃນບົດບາດການເປັນຜູ້ນຳຂອງພວເຂົາ. ໃນຊ່ວງເວລາແບບນີ້, ມັນເປັນຈຳເປັນຕ້ອງໄດ້ສ້າງພື້ນທີ່ບາງຢ່າງເພື່ອທົບທວນຕົນເອງຄືນໃຫມ່ ແລະ ຝຶກແອບເຮັດສິ່ງທີ່ສາມາດ ຊ່ວຍໃຫ້ທ່ານຮັບມື ກັບສະຖານະການທີ່ຫຍຸ້ງຍາກ, ສາມາດດູແລຕົນເອງ, ແລະ ມີຄວາມອົດທົນ. ອັນນີ້ເອີ້ນວ່າ ການດູແລຕົນເອງ , ເອົາໃຈໃສ່ຕົນເອງ.*

**ຖາມ** : *ທ່ານຈັດການກັບຄວາມກົດດັນໄດ້ແນວໃດ? ທ່ານດູແລຕົນເອງແບບໃດ? ມີຫຍັງແດ່ທີ່ທ່ານເຮັດເພື່ອຜ່ອນຄາຍເມື່ອທ່ານຮູ້ສຶກຄຽດ?*

**ສົນທະນາເປັນກຸ່ມນ້ອຍ** ແລະ ແບ່ງປັນຕໍ່ກຸ່ມໃຫ່ຍ. ເສີມຕື່ມຂໍ້ມູນຂ້າງລຸ່ມນີ້ໃນກໍລະນີທີ່ບໍ່ມີໃຜເວົ້າເຖິງມັນ:

- *ພັກຜ່ອນແລະນອນຫລັບຢ່າງເປັນປົກກະຕິ*
- *ກິນອາຫານທີ່ດີຕໍ່ສຸຂະພາບ*
- *ອອກກຳລັງກາຍ*
- *ຍ່າງເບິ່ງທຳມະຊາດ*
- *ຫຼິ້ນເກມ*
- *ເບິ່ງວິດີໂອ ຫຼື ຟັງເພັງ*
- *ໃຊ້ເວລາຢູ່ກັບຫມູ່ເພື່ອນ ແລະ ຄອບຄົວ*
- *ເຮັດກິດຈະກຳທີ່ມ່ວນຊື່ນ*

**ອະທິບາຍ**: *ມັນຈຳເປັນທີ່ຈະຕ້ອງໃຊ້ການຮູ້ຈັກຕົນເອງເພື່ອກຳນົດວ່າເວລາໃດທີ່ທ່ານກຳລັງຮູ້ສຶກມີຄວາມກົດດັນ, ແລະ ນຳໃຊ້ບາງກົນໄກເຫຼົ່ານີ້ເພື່ອຊ່ວຍໃຫ້ທ່ານສາມາດຮັບມືກັບຄວາມກົດດັນນັ້ນ.*

**ກິດຈະກຳ**: ຫາຍໃຈເຂົ້າອອກເລິກໆ. ອະທິບາຍ: *ພວກເຮົາຈະມາເຝິກການຫາຍໃຈທີ່ສາມາດຊ່ວຍໃຫ້ທ່ານມີສະມາທິ, ສະຫງົບລົງ, ຫຼື ມີພະລັງ, ເຊິ່ງເສີມສ້າງຄວາມຮູ້ສຶກທີ່ເປັນສູນກາງ ແລະ ສົມດູນຫຼາຍຂຶ້ນ ເມື່ອທ່ານພົບກັບຄວາມກົດດັນ. ລົມຫາຍໃຈ ແມ່ນຕົ້ນກຳເນີດພື້ນຖານຂອງພະລັງງານຊີວິດ. ໃນເວລາທີ່ມີຄວາມເຄັ່ງຕຶງ, ການຫາຍໃຈແບບຮູ້ສຶກຕົວຕະຫຼອດເວລາເປັນວິທີ ທີ່ມີປະສິດທິພາບໃນການທີ່ຈະປົດປ່ອຍຄວາມ ເຄັ່ງຕຶງ ທາງດ້ານຮ່າງກາຍ, ອາລົມ, ແລະ ຈິດໃຈ,*

- *ໃຫ້ທຸກຄົນຫລັບຕາລົງຕາມສະບາຍ ແລະ ຫາຍໃຈເຂົ້າເລິກໆ, ຊ້າໆຈົນສຸດລົມຫາຍໃຈ ແລ້ວຫາຍໃຈອອກ. ໃນເວລາທີ່ທ່ານຫາຍໃຈອອກ, ປົດປ່ອຍຄວາມກົດດັນທັງຫມົດໃນຮ່າງກາຍຂອງທ່ານອອກຊ້າໆ, ຜ່ອນຄາຍຮ່າງກາຍ, ບ່າໄລ່, ແລະ ໃບຫນ້າຂອງທ່ານ. ເຮັດແບບນີ້ຊ້ຳກັນ 20 ເທື່ອ (ຫຼື ຫຼາຍກວ່ານັ້ນ).*
- *ບາດນີ້ຫຼັງຈາກຫາຍໃຈເຂົ້າສຸດແລ້ວ, ໃຫ້ກັ້ນຫາຍໃຈເປັນເວລາ 3 ວິນາທີກ່ອນທີ່ຈະຫາຍໃຈອອກ. ເຮັດແບບນີ້ຊ້ຳກັນ 20 ເທື່ອ (ຫຼືຫຼາຍກວ່ານັ້ນ).*
- *ບາດນີ້ພວກເຮົາຈະເພີ່ມການຈິດຕະນາການເຂົ້າຕື່ມ. ໃຫ້ທ່ານຈິນຕະນາການວ່າໃນຂະນະທີ່ທ່ານຫາຍໃຈເຂົ້າ, ທ່ານກຳລັງຫາຍໃຈຢູ່ໃນບ່ອນທີ່ມີແສງແດງທີ່ສົດໃສເຊິ່ງເປັນພະລັງງານຊີວິດທີ່ມີພະລັງບວກຢູ່ອ້ອມຮອບທ່ານ. ໃນຂະນະທີ່ທ່ານຫາຍໃຈອອກ, ໃຫ້ທ່ານຈິນຕະນາການວ່າທ່ານກຳລັງຫາຍໃຈເອົາຄວັນຜິດດຳໆທີ່ມີຄວາມກັງວົນ, ຄວາມເຄັ່ງຕຶງ, ຄວາມກົດດັນ, ຄວາມຢ້ານກົວ, ຫຼື ຄວາມຮູ້ສຶກທາງລົບຕ່າງໆທີ່ທ່ານມີ. ເຮັດແບບນີ້ຊ້ຳກັນ 10 ເທື່ອ (ຫຼື ຫຼາຍກວ່ານັ້ນ).*
- *ບາດນີ້ໃຫ້ພວກເຮົາເພີ່ມການເຄື່ອນໄຫວຂອງມືແລະແຂນ. ຄ່ອຍໆຫງາຍຝາມືຂອງທ່ານຂຶ້ນໃນຂະນະທີ່ທ່ານຫາຍໃຈເຂົ້າແລ້ວຄ່ອຍໆຂວ້າມມືຂອງທ່ານລົງໃນຂະນະທີ່ເຈົ້າຫາຍໃຈອອກ. ເຮັດແບບນີ້ຊ້ຳກັນ 20 ເທື່ອ (ຫຼືຫຼາຍກວ່ານັ້ນ).*

**ຖາມ:** *ການເຮັດແບບນັ້ນເຮັດໃຫ້ທ່ານຮູ້ສຶກແນວໃດ?* ເຊີນຜູ້ເຂົ້າຮ່ວມຕອບ.

**ສະຫລຸບ:** *ທ່ານສາມາດຝຶກເຮັດແບບນີ້ປະມານ 5 ນາທີ ຫຼື ຫຼາຍກວ່ານັ້ນ, ຢູ່ທຸກບ່ອນ ແລະ ທຸກເວລາທີ່ທ່ານຕ້ອງການເພື່ອຊ່ວຍໃຫ້ທ່ານຮູ້ສຶກດີຂຶ້ນໃນຊ່ວງເວລາທີ່ເຄັ່ງຄຽດ.*

# ພາກທີ 9: ການກຳນົດຄວາມຕ້ອງການ ແລະ ການວາງແຜນ (ສຳລັບແມ່ຍິງເທົ່ານັ້ນ)

**ຈຸດປະສົງ** : ເມື່ອຮອດຕອນທ້າຍຂອງພາກນີ້, ຜູ້ເຂົ້າຮ່ວມຈະສາມາດ:

- ເຂົ້າໃຈວິທີການການສົ່ງຕໍ່ກໍລະນີຂອງຄວາມຮຸນແຮງທາງເພດ
- ກໍານົດແລະວາງແຜນວິທີການແກ້ໄຂຄວາມຕ້ອງການຂອງແມ່ຍິງໃນຊຸມຊົນ

**ສັງລວມເນື້ອໃນ:**

| # | ຫົວຂໍ້ | ວິທີການ | ອຸປະກອນ | ເວລາ (60 ນາທີ) |
|---|---|---|---|---|
| 1 | **ການສົ່ງຕໍ່ກໍລະນີຂອງຄວາມຮຸນແຮງທາງເພດ** | ອະທິບາຍ, ຖາມ | ເຈ້ຍແຜນໃຫ່ຍ | 20 |
| 2 | **ກໍານົດແລະວາງແຜນແກ້ໄຂຄວາມຕ້ອງການຂອງແມ່ຍິງໃນຊຸມຊົນ** | ອະທິບາຍ, ສົນທະນາກຸ່ມ | ເຈ້ຍແຜນໃຫ່ຍ | 20 |
| 3 | **ການວາງແຜນປະຕິບັດງານ** | ສົນທະນາກ | ເຈ້ຍແຜນໃຫ່ຍ | 20 |

**ຂັ້ນຕອນ** :

**1. ການສົ່ງຕໍ່ກໍລະນີການໃຊ້ຄວາມຮຸນແຮງທາງເພດ (GBV) (20 ນາທີ)**

**<u>ໝາຍເຫດສຳລັບຄູຝຶກ:</u>** ເພື່ອກະກຽມສໍາລັບພາກນີ້, ກ່ອນອື່ນທ່ານຄວນສຶກສາ ແຜນການນໍາສົ່ງກໍລະນີການໃຊ້ຄວາມຮຸນແຮງທາງເພດ (GBV) ທີ່ມີຢູ່ແລ້ວຂອງໂຄງການ ແລະ ການຊ່ວຍເຫຼືອສໍາລັບຜູ້ລອດຊີວິດຈາກໃຊ້ຄວາມຮຸນແຮງທາງເພດທີ່ມີຢູ່ໃນຊຸມຊົນ ແລະ ເຂົ້າໃຈຂັ້ນຕອນການນໍາສົ່ງ ແລະ ເສັ້ນທາງການນໍາສົ່ງຕົວຜູ້ລອດຊີວິດທີ່ມີຢູ່, ພ້ອມທັງປຶກສາຫາລືກັບໜ່ວຍງານຮັບຜິດຊອບວຽກງານຕ້ານການໃຊ້ຄວາມຮຸນແຮງທາງເພດ (GBV) / ຜູ້ປະສານງານບົດບາດຍິງ-ຊາຍ ຂອງ ໂຄງການຕາມຄວາມເໝາະສົມ. ດັ່ງນັ້ນ, ທ່ານຈຶ່ງຮູ້ວ່າຄວນອ້າງອີງຜູ້ເຂົ້າຮ່ວມຈາກບ່ອນໃດ ໃນກໍລະນີທີ່ພວກເຂົານໍາສົ່ງກໍລະນີຕ່າງໆມາຫາທ່ານ; ແລະ ມັນຍັງເປັນສິ່ງທີ່ທ່ານຈະອະທິບາຍໃຫ້ຜູ້ເຂົ້າຮ່ວມຮັບຟັງໃນພາກນີ້, ເພື່ອໃຫ້ຜູ້ນໍາຊຸມຊົນຮູ້ວິທີການສົ່ງຕໍ່ກໍລະນີ ຫາກມີສະມາຊິກຊຸມຊົນມາລາຍງານເຫດການຕໍ່ພວກເຂົາ ບໍ່ວ່າຈະເປັນກໍລະນີແບບໃດກໍ່ຕາມ.

**ອະທິບາຍ:** *ການໃຊ້ຄວາມຮຸນແຮງທາງເພດ, ລວມທັງຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ, ເປັນບັນຫາທີ່ມີຢູ່ໃນຫຼາຍໆຊຸມຊົນ, ເຊິ່ງປະຊາຊົນອາດຈະມາລາຍງານກໍລະນີຕໍ່ຜູ້ນໍາຊຸມຊົນຂອງພວກເຂົາ. ເນື່ອງຈາກຜູ້ນໍາຊຸມຊົນມີທີ່ສ່ວນຮ່ວມ ມີຄວາມຮັບຜິດຊອບໃນການຊ່ວຍ ເຫຼືອແມ່ຍິງ, ແລະ ຄວາມຮຸນແຮງທາງເພດບໍ່ພຽງແຕ່ມີຜົນກະທົບທີ່ບໍ່ດີຕໍ່ຜູ້ລອດຊີວິດ, ແຕ່ມັນຍັງສົ່ງຜົນກະທົບຕໍ່ຄອບຄົວ ແລະ ຊຸມຊົນຢ່າງຫຼວງຫຼາຍ, ດັ່ງນັ້ນຜູ້ນໍາຊຸມຊົນຄວນຮູ້ຈັກ ວິທີການນໍາສົ່ງກໍລະນີເຫຼົ່ານີ້ໄປຫາຜູ້ຊ່ຽວຊານທີ່ສາມາດໃຫ້ການຊ່ວຍເຫຼືອ ຜູ້ເຄາະຮ້າຍ/ຜູ້ລອດຊີວິດໄດ້. ກ່ອນອື່ນ, ພວກເຮົາຈະໄປຮູ້ຈັກກັບ ຄໍານິຍາມ ແລະ ຮູບແບບຂອງການໃຊ້ຄວາມຮຸນແຮງທາງເພດຕ່າງໆ ເພື່ອໃຫ້ແນ່ໃຈວ່າ ພວກເຮົາມີຄວາມເຂົ້າໃຈພື້ນຖານວ່າ ມັນແມ່ນຫຍັງ.*

*ການໃຊ້ຄວາມຮຸນແຮງທາງເພດແມ່ນ ການກະທໍາທີ່ເປັນການໃຊ້ຄວາມຮຸນແຮງ ເຊິ່ງເປັນການກະທໍາຜິດຕໍ່ບຸກຄົນໃດໜຶ່ງ ແລະ ຂຶ້ນກັບຄວາມແຕກຕ່າງ (ເຊັ່ນ: ບົດບາດຍິງ-ຊາຍ) ລະຫວ່າງ ເພດຊາຍ ແລະ ເພດຍິງ ທີ່ສັງຄົມໄດ້ກໍານົດຂຶ້ນ. ສິ່ງນີ້ຍັງລວມເຖິງການກະທໍາຕ່າງໆທີ່ສ້າງຄວາມເດືອດຮ້ອນທາງຮ່າງກາຍ, ທາງເພດ, ຫຼື ຈິດໃຈ, ການກະທໍາທີ່ເປັນການຂົ່ມຂູ່, ການບີບບັງຄັບ, ແລະ ການເຮັດໃຫ້ຂາດສິດເສລີພາບຫຼາຍໆດ້ານ. ການກະທໍາເຫຼົ່ານີ້ອາດເກີດຂຶ້ນຢ່າງເປີດເຜີຍ ແລະ ບໍ່ເປີດເຜີຍ. ແມ່ຍິງ ແລະ ເດັກຍິງໄດ້ຮັບຜົນກະທົບ ບໍ່ເທົ່າກັບຈາກ GBV, ແຕ່ຜູ້ຊາຍ ແລະ ເດັກຊາຍກໍ່ສາມາດປະສົບກັບ ການໃຊ້ຄວາມຮຸນແຮງທາງເພດເຊັ່ນກັນ.*

**ຖາມ:** *ການໃຊ້ຄວາມຄວາມຮຸນແຮງທາງເພດ ລວມມີ, ແຕ່ບໍ່ຈຳກັດ, ຄວາມຮຸນແຮງຮູບແບບຕ່າງໆຄື: ທາງກາຍ, ທາງເພດ, ອາລົມ/ຈິດໃຈ ແລະ ທາງດ້ານເສດຖະກິດ; ຮູບແບບຕ່າງໆເຫຼົ່ານີ້ອາດເກີດຂຶ້ນພ້ອມກັນ ແລະ ຊ້ອນກັນໄດ້. ທ່ານສາມາດຍົກຕົວຢ່າງຂອງແຕ່ລະປະເພດເຫຼົ່ານີ້ໄດ້ບໍ?*

ຮູບແບບລະໜຶ່ງຕົວຢ່າງ, ຂຽນມັນອອກມາແລ້ວປຶກສາຫາລືກ່ຽວກັບຄວາມຮູຮແຮງແຕ່ລະຮູບແບບໃນຕາຕະລາງຂ້າງລຸ່ມນີ້, ຂໍໃຫ້ຜູ້ເຂົ້າຮ່ວມໃຫ້ຄຳນິຍາມ, ຫຼັງຈາກນັ້ນກໍຂໍໃຫ້ຍົກຕົວຢ່າງ.

| ຮູບແບບຄວາມຮຸນແຮງ | ນິຍາມ | ຕົວຢ່າງ* |
|---|---|---|
| **ທາງກາຍ** | ຄວາມຮຸນແຮງທີ່ເປັນອັນຕະລາຍຕໍ່ຮ່າງກາຍຂອງຄົນ | ຟາດ, ຕົບ, ຕີ, ຍູ້, ເຕະ, ຕັດ, ຟັນ, ຈັບໂຍນ, ຕ ່ອຍ, ຂົ່ມ , ໃຊ້ອາວຸດນາບຂູ່ຄົນ, ແກວ່ງອັນໃດອັນໜຶ່ງໃສ່ຄົນ, ຂ້າ. |
| **ທາງເພດ** | ໃຊ້ຄວາມຮຸນແຮງບັງຄັບ ແລະ ຂືນໃຈໃຫ້ປຸກອາລົມທາງເພດ ຫຼື ການກະທຳທີ່ກໍ່ໃຫ້ເກີດຄວາມເສຍຫາຍທາງກາຍຍະພາບ ແລະ ສຸຂະພາບຈິດໃຈຂອງບຸກຄົນ. | ການຂົ່ມຂືນ, ການຂົ່ມເຫັງທາງເພດ, ການລູບຄຳ, ການເບິ່ງອານາຈານ, ຄຳເວົ້າລາມົກ, ການບັງຄັບໃຫ້ຂາຍບໍລິການທາງເພດ, ການຄ້າມະນຸດ, ການບັງຄັບໃຫ້ຖືພາ, ການບັງຄັບໃຫ້ແຕ່ງງານ, ການແຕ່ງງານຕັ້ງແຕ່ຍັງນ້ອຍ. ການຂົ່ມຂືນເກີດຂຶ້ນໄດ້ທຸກເວລາໂດຍມີບາງຄົນຖືກບັງຄັບໃຫ້ມີເພດສຳພັນຕາມຄວາມຕັ້ງໃຈຂອງຜູ້ບັງຄັບ, ໂດຍບໍ່ຄຳນຶງເຖິງສາຍສຳພັນ ຫຼື ເພດ. ສະນັ້ນມັນຖືວ່າເປັນການຂົ່ມຂືນເຖິງແມ່ນວ່າເປັນລະຫວ່າງຜົວກັບເມຍ, ແຟນກັບແຟນ, ຫຼື ກັບສະມາຊິກໃນຄອບຄົວ, ເພື່ອນບ້ານ, ໝູ່ເພື່ອນ, ຫຼື ຄົນແປກຫນ້າ. |
| **ທາງດ້ານຈິດໃຈ ແລະ ອາລົມ** | ຄວາມຮຸນແຮງທີ່ເຮັດໃຫ້ເກີດຄວາມເສຍຫາຍຕໍ່ສຸຂະພາບຈິດຂອງບຸກຄົນ | ການດູຖູກດ້ອຍອາຈາ, ຄຳສາບແຊ່ງ ແລະ ຄຳສາບານ, ຮ້າຍດ່າ, ຮ້ອງແຮງໃສ່, ເວົ້າໃຫ້ເຈັບປວດໃຈ, ບໍ່ສົນໃຈ, ຂົ່ມຂູ່, ເວົ້າກວນ, ເວົ້າລວນລາມ, ເວົ້າສຽດສີ, ດ່າ, ດູຖູກ, ເຍາະເຍີ້ຍ, ປະຕິເສດການຕັດສິນໃຈ ຫຼື ບໍ່ຮັບຟັງ, ຮຽກຮ້ອງຄ່າດອງ, ເຮັດໃຫ້ໂດດດ່ຽວ, ກີດກັ້ນບໍ່ໃຫ້ເຂົ້າເຖິງການບໍລິການ, ບົງການຊີວິດວ່າໃຫ້ເຮັດຫຍັງໄດ້ແດ່, ໄປບ່ອນໃດໄດ້ແດ່, ພົບໃຜໄດ້ແດ່, ຫຼື ນຸ່ງຫຍັງໄດ້ແດ່ |
| **ທາງດ້ານເສດຖະກິດ** | ຄວາມຮຸນແຮງທີ່ເຮັດໃຫ້ເກີດຄວາມເສຍຫາຍຕໍ່ສະຖານະການເງິນຫຼືລາຍຮັບຂອງບຸກຄົນ | ບັງຄັບເອົາເງິນທີ່ຄົນອື່ນຫາມາໄດ້, ກີດກັ້ນບໍ່ໃຫ້ຄົນອື່ນໄດ້ເຮັດວຽກ, ທຳລາຍຊັບສິນຂອງບຸກຄົນ, ບໍ່ໃຫ້ເງິນ ຫຼື ອາຫານທີ່ຈຳເປ ັນຕໍ່ຄົນອື່ນ, ບໍ່ສິດຄຸ້ມຄອງເງິນ, ຖືກປະຕິເສດບໍ່ໃຫ້ນຳໃຊ້ເງິນຂອງຄອບຄົວ. |

** **<u>ໝາຍເຫດສຳລັບຄູຝຶກ</u>** : ຖ້າວ່າຕົວຢ່າງເຫຼົ່ານີ້ບໍ່ຄົບຖ້ວນ, ໃຫ້ລວມເອົາຕົວຢ່າງທີ່ເໝາະສົມກັບສະພາບການທ້ອງຖິ່ນ.*

**ຖາມ** : *ຖ້າສະມາຊິກຊຸມຊົນມາຫາທ່ານເພື່ອລາຍງານວ່າເຂົາເຈົ້າຖືກກະທຳຮຸນແຮງ, ມີຂັ້ນຕອນຫຍັງແດ່ທີ່ເໝາະສົມໃນການສົ່ງຕໍ່ກໍລະນີເພື່ອໄປຮັບການດູແລ ແລະ ການຊ່ວຍເຫຼືອ?*

ເຊີນໃຫ້ຜູ້ເຂົ້າຮ່ວມຕອບຄຳຖາມ, ແລ້ວ **ອະທິບາຍດັ່ງຂ້າງລຸ່ມນີ້** :

- *ຄວນຮັບຟັງການເປີດເຜີຍການກະທຳຮຸນແຮງດ້ວຍທັດສະນະທີ່ບໍ່ຕັດສິນແລະສະຫນັບສະຫນູນຜູ້ເຄາະຮ້າຍ, ປະຕິບັດຕໍ່ພວກເຂົາດ້ວຍການໃຫ້ກຽດແລະຄວາມເຄົາລົບ ແລະ ຕັ້ງໃຈຟັງ.*
- *ສຳຄັນ ແລະ ຈຳເປັນ ທີ່ຈະຕ້ອງຮັບປະກັນການຮັກສາຄວາມລັບ, ຖ້າບໍ່ດັ່ງນັ້ນຜູ້ລອດຊີວິດຈະມີຄວາມສ່ຽງທີ່ຈະຖືກແກ້ແຄ້ນແລະບໍ່ປອດໄພ*
- *ຕ້ອງພະຍາຍາມເຮັດທຸກຢ່າງເພື່ອຮັກສາຄວາມປອດໄພແລະສະຫວັດດີພາບຂອງຜູ້ລອດຊີວິດ ແລະ ການດຳເນີນງານທຸກຢ່າງຄວນຈະຖືກປະຕິບັດດ້ວຍຄວາມຍິນຍອມຂອງພວກເຂົາສະເຫມີ ແລະ ດ້ວຍຄວາມເຄົາລົບຕໍ່ການຕັດສິນໃຈຂອງພວກເຂົາ.*
- *ສົ່ງຕໍ່ກໍລະນີໂດຍໃຊ້ກົນໄກການແກ້ໄຂທີ່ເໝາະສົມ (ເຊັ່ນ: ສະຫະພັນແມ່ຍິງລາວ);*
  **<u>ຄູຝຶກຄວນຮູ້ພິທີການ ແລະຂັ້ນຕອນການສົ່ງຕໍ່ກໍລະນີລ່ວງໜ້າ ແລ້ວອະທິບາຍມັນຢູ່ໃນຊຸດອົບຮົມນີ້</u>**

**2. ການກຳນົດຄວາມຕ້ອງການຂອງແມ່ຍິງໃນຊຸມຊົນ (20 ນາທີ)**

**ອະທິບາຍ**: *ເຖິງວ່າວຽກງານການສົ່ງເສີມຄວາມສະເໝີພາບລະຫວ່າງຍິງຊາຍຈະແມ່ນວຽກງານຂອງຜູ້ນຳທຸກຄົນ, ບໍ່ວ່າຈະເປັນເພດຊາຍ ຫຼື ຍິງ, ແຕ່ວ່າວຽກງານການສົ່ງເສີມຄວາມສະເໝີພາບລະຫວ່າງຍິງຊາຍ ມັກຖືກມອບໃຫ້ຜູ້ນຳທີ່ເປັນເພດຍິງ, ເພາະວ່າຜູ້ນຳທີ່ເປັນເພດຊາຍມັກຈະເຫັນວ່າວຽກນີ້ບໍ່ແມ່ນບູລິມະສິດສຳຄັນ, ເຂົາເຈົ້າບໍ່ເຂົ້າໃຈສິ່ງທ້າທາຍທີ່ເກີດຂຶ້ນກັບແມ່ຍິງໂດຍສະເພາະ ແລະບໍ່ເຂົ້າໃຈວ່າພວກເຂົາມີຄວາມຕ້ອງການອັນໃດແດ່. ສະນັ້ນ, ຈຶ່ງຈຳເປັນຕ້ອງໄດ້ຄົ້ນຄິດກ່ຽວກັບຄວາມຕ້ອງການສະເພາະຂອງ ແລະຮັບປະກັນວ່າຄວາມຕ້ອງການຂອງພວກເຂົາຖືກນຳເຂົ້າໄປພິຈາລະນາໃນການພັດທະນາຊຸມຊົນ.*

**ຖາມ:**

- *ສິ່ງທ້າທາຍອັນໃດແດ່ທີ່ແມ່ຍິງປະເຊີນຢູ່ໃນຊຸມຊົນ?*
- *ແມ່ນໃຜແມ່ນແມ່ຍິງທີ່ມີຄວາມສ່ຽງຫຼາຍທີ່ສຸດໃນຊຸມຊົນ, ແລະສິ່ງທີ່ຕ້ອງເຮັດເພື່ອປັບປຸງສະພາບຂອງເຂົາເຈົ້າ?*
- *ປະຈຸບັນນີ້ຂົງເຂດໃດທີ່ມີຄວາມກ່ຽວຂ້ອງ ແລະ ສຳຄັນທີ່ສຸດ ແລະ ຕ້ອງການຄວາມເອົາໃຈໃສ່ຢ່າງຮີບດ່ວນ?*

ສົນທະນາໃນກຸ່ມ, ລາຍງານຜົນຂອງການສົນທະນາຕໍ່ກຸ່ມໃຫ່ຍ, ສັງລວມບາງຕົວຢ່າງຂ້າງລຸ່ມນີ້:

- *ຄວາມທຸກຍາກ*
- *ສຸຂະພາບບໍ່ດີ ແລະ ຍາກທີ່ຈະເຂົ້າເຖິງການດູແລສຸຂະພາບ*
- *ມີຄວາມຫຍຸ້ງຍາກທີ່ຈະເຂົ້າຮ່ວມການຕັດສິນໃຈ*
- *ມີຄວາມຈຳກັດໃນການເຂົ້າເຖິງການສຶກສາແລະການຝຶກອົບຮົມ*
- *ມີຄວາມຈຳກັດໃນການເຂົ້າເຖິງວຽກເຮັດງານທຳແລະໂອກາດສ້າງລາຍໄດ້*
- *ປະສົບກັບການກະທຳຄວາມຮຸນແຮງ*

**ຖາມ:**

- *ຄວນເຮັດຫຍັງແດ່ໃນຊຸມຊົນຂອງທ່ານເພື່ອປັບປຸງ ສະພາບການຂອງຜູ້ຍິງໃນບັນຫາທີ່ທ່ານຫາກໍໄດ້ກຳນົດຜ່ານມານັ້ນ?*
- *ໂຄງການ ຫຼື ກິດຈະກຳອັນໃດທີ່ເປັນໄປໄດ້ ທີ່ສາມາດແກ້ໄຂບັນຫາເຫຼົ່ານີ້ໄດ້?*
- *ຈຸດປະສົງ ຫລື ເປົ້າໝາຍຂອງກິດຈະກຳ ຫຼືໂຄງການດັ່ງກ່າວແມ່ນຫຍັງ?*

ຄິດກ່ຽວກັບກຸ່ມ ແລະ ກິດຈະກຳທີ່ເຈົ້າມີສ່ວນຮ່ວມຢູ່ກ່ອນແລ້ວ ເຊັ່ນ: ກຸ່ມຊ່ວຍເຫຼືອເຊິ່ງກັນແລະກັນ, ກຸ່ມຜູ້ຜະລິດ, ແລະ ກຸ່ມໂພຊະນາການຂອງຊາວກະສິກອນ, ແລະ ຄິດກ່ຽວກັບວິທີເຫຼົ່ານີ້ທີ່ສາມາດກະຕຸ້ນການຊ່ວຍເຫຼືອ.

ສົນທະນາໃນກຸ່ມ, ລາຍງານຜົນຂອງການສົນທະນາຕໍ່ກຸ່ມໃຫ່ຍ, ສັງລວມບາງຕົວຢ່າງຂ້າງລຸ່ມນີ້:

| **ຄວາມຕ້ອງການ / ບັນຫາ** | **ກິດຈະກໍາທີ່ສະເຫນີ ຫຼື ໂຄງການ** | **ຈຸດປະສົງ ແລະ ເປົ້າໝາຍ** |
|---|---|---|
| | | |
| | | |
| | | |

**3. ການວາງແຜນປະຕິບັດງານ (20 ນາທີ)**

**ອະທິບາຍ:** *ຕອນນີ້ທ່ານໄດ້ກໍານົດກິດຈະກໍາ ຫຼືໂຄງການທີ່ຈະຕອບສະໜອງຄວາມຕ້ອງການອັນສໍາຄັນທີ່ສຸດຂອງແມ່ຍິງໃນຊຸມຊົນ, ວຽກງານການນໍາພາອັນທໍາອິດຂອງທ່ານແມ່ນການນໍາສະເຫນີກິດຈະກໍາ ຫຼື ໂຄງການເຫຼົ່ານີ້ໃຫ້ກັບແມ່ຍິງໃນຊຸມຊົນ, ແລ້ວຂໍໃຫ້ພວກເຂົາ ສະເໜີຄໍາແນະນໍາ ຫລື ປັບປຸງ. ເມື່ອເຮັດສໍາເລັດແລ້ວ, ທ່ານສາມາດຕັດສິນໃຈວ່າໂຄງການ ຫຼື ກິດຈະກໍາໃດທີ່ຈະດໍາເນີນການຕໍ່ໄປ ແລະ ສ້າງ* ***ແຜນປະຕິບັດງານ*** *ທີ່ສາມາດຊ່ວຍຕິດຕາມການຈັດຕັ້ງປະຕິບັດໄດ້.*

ສົນທະນາໃນກຸ່ມໃຫ່ຍ, ທົບທວນຄືນແຜນການປະຕິບັດການລວມທີ່ໄດ້ສໍາເລັດກ່ອນຫນ້ານີ້ໃນການຝຶກອົບຮົມ, ແລະຕື່ມໃສ່ຕາຕະລາງຂ້າງລຸ່ມນີ້:

| **ການປະຕິບັດອັນໃດເພື່ອບັນລຸວິໄສທັດຂອງພວກເຮົາ?** | **ຕ້ອງການຊັບພະຍາກອນອັນໃດ?** | **ເມື່ອໃດ?** | **ແມ່ນໃຜຮັບຜິດຊອບ?** |
|---|---|---|---|
| | | | |
| | | | |
| | | | |

**ອະທິບາຍ:** *ຊຸມຊົນທັງໝົດຄວນຮັບຮູ້ເຖິງກິດຈະກໍາ/ໂຄງການ, ຈຸດປະສົງ ແລະ ຄວາມສໍາຄັນຂອງການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ. ສະມາຊິກຄະນະກໍາມະການເພດຊາຍຄວນຈະເປັນຜູ້ນໍາພາຫລັກໃນການບັນລຸກິດຈະກໍາເຫຼົ່ານີ້ ແລະ ໃຫ້ເປັນສ່ວນຫນຶ່ງຂອງແຜນການປະຕິບັດການລວມໃນແຜນພັດທະນາຂອງບ້ານທີ່ເຂົາເຈົ້າຮັບຜິດຊອບ.*

ຜູ້ເຂົ້າຮ່ວມທຸກຄົນສົນທະນາໃນກຸ່ມໃຫຍ່, ຕົກລົງເຫັນດີກ່ຽວກັບຂັ້ນຕອນຕໍ່ໄປຕໍ່ໄປນີ້:

| **ຂັ້ນຕອນຕໍ່ໄປ** | **ວັນທີ ເດືອນ ປີ** |
|---|---|
| ເມື່ອໃດ ພວກເຮົາຈະນໍາສະເໜີແນວຄວາມຄິດເຫຼົ່ານີ້ ແລະ ນໍາສະເໜີແຜນກິດຈະກໍາ ໃຫ້ແມ່ຍິງໃນຊຸມຊົນ ເພື່ອ ປະກອບຄໍາເຫັນ? | |
| ເມື່ອໃດ ພວກເຮົາຈະນໍາສະເຫນີແຜນປະຕິບັດງານຕໍ່ທຸກໆຄົນໃນຊຸມຊົນ? | |

## ກິດຈະກຳ ປິດ ຊຸດອົບຮົມ

**1. ການປະເມີນຜົນ**

ຜູ້ເຂົ້າຮ່ວມທັງຫມົດຕື່ມແບບຟອມການປະເມີນຜົນການຝຶກອົບຮົມ (ເອກະສານຊ້ອນທ້າຍ 2).

**2. ຄຳກ່າວປິດ**

ເຊີນຜູ້ຈັດງານ, ຄູຝຶກ ຫຼື ຜູ້ມີກຽດມາສະເໜີບົດກ່າວປິດຊຸດອົບຮົມ.

ຕົວຢ່າງຄຳກ່າວປິດຈາກຄູຝຶກ:

*ໃນລະຫວ່າງການຝຶກອົບຮົມນີ້ ທ່ານຍັງໄດ້ຮັບຄວາມຮູ້ຫຼາຍຢ່າງ ແລະ ໄດ້ຮັບທັກສະແນວຄິດວິພາກວິຈານ. ນອກນັ້ນທ່ານຍັງໄດ້ຮຽນຮູ້ເຄື່ອງມືຫຼາກຫຼາຍ ທີ່ໃຊ້ວິເຄາະສະຖານະການ, ກຳນົດບັນຫາ, ແລະ ຫາທາງແກ້ໄຂ. ທ່ານຍັງໄດ້ຮຽນຮູ້, ເສີມສ້າງ, ແລະ ປະຕິບັດທັກສະຫຼາຍຢ່າງທີ່ຈຳເປັນເພື່ອເປັນຜູ້ນຳພາຊຸມຊົນທີ່ເຂັ້ມແຂງ.*

*ເຖິງແມ່ນວ່າການຝຶກອົບຮົມໄດ້ສິ້ນສຸດລົງ, ການສ້າງຄວາມອາດສາມາດຂອງທ່ານຍັງບໍ່ທັນໄດ້, ແລະຈະມີກິດຈະກຳຕິດຕາມຫຼາຍຢ່າງເພື່ອຊ່ວຍໃຫ້ເຈົ້າຂະຫຍາຍສິ່ງທີ່ເຈົ້າໄດ້ຮຽນຮູ້ແລະເຮັດຢູ່ທີ່ນີ້. ການຝຶກອົບຮົມນີ້ແມ່ນພຽງແຕ່ການເລີ່ມຕົ້ນ, ແລະຖ້າຫາກວ່າທ່ານບໍ່ໄດ້ນຳໃຊ້ແລະປະຕິບັດສິ່ງທີ່ທ່ານໄດ້ຮຽນຮູ້, ຄວາມຮູ້ແລະຄວາມສາມາດໃຫມ່ຂອງທ່ານອາດຈະຫາຍໄປ.*

*ມີຄວາມຍິນດີຢ່າງຍິ່ງທີ່ໄດ້ເຮັດວຽກ ແລະ ຮຽນຮູ້ຮ່ວມກັບທ່ານໃນລະຫວ່າງໂຄງການຝຶກອົບຮົມນີ້. ຂ້າພະເຈົ້າຫວັງວ່າ ທ່ານຈະມີຄວາມສຸກກັບມັນ ແລະ ໄດ້ຮັບຄວາມຮູ້ໃໝ່ ແລະ ທັກສະທີ່ສາມາດຊ່ວຍໃຫ້ທ່ານເປັນຜູ້ນຳການປ່ຽນແປງທາງສັງຄົມໃນຊຸມຊົນທີ່ມີປະສິດຕິພາບ ແລະ ມີການປ່ຽນແປງໄດ້.*

*ເຖິງແມ່ນວ່າການຝຶກອົບຮົມໄດ້ສິ້ນສຸດລົງແລ້ວ, ແຕ່ການເສີມສ້າງຄວາມສາມາດຂອງທ່ານຍັງບໍ່ສິ້ນສຸດ, ແລະ ຈະມີກິດຈະກຳຕິດຕາມຜົນຫຼາຍຢ່າງຕໍ່ໄປ ເພື່ອຊ່ວຍໃຫ້ທ່ານຂະຫຍາຍສິ່ງທີ່ທ່ານໄດ້ຮຽນຮູ້ ແລະ ເຮັດຢູ່ທີ່ນີ້. ການຝຶກອົບຮົມນີ້ເປັນພຽງຈຸດເລີ່ມຕົ້ນ, ແລະ ຖ້າຫາກວ່າທ່ານບໍ່ນຳໄປໃຊ້ ແລະ ປະຕິບັດສິ່ງທີ່ທ່ານໄດ້ຮຽນ, ຄວາມຮູ້ ແລະ ຄວາມສາມາດໃຫມ່ຂອງທ່ານຈະຫາຍໄປ. ສະນັ້ນ, ກະລຸນາເອົາໃຈໃສ່ ແລະ ພາກພຽນ, ນຳໃຊ້ສິ່ງທີ່ທ່ານໄດ້ຮຽນຮູ້ເຂົ້າໃນກິດຈະກຳໂຄງການ CLEAR, ແລະ ສືບຕໍ່ຮຽນຮູ້ດ້ວຍການເຮັດ!*

**3. ການສະເຫຼີມສະຫຼອງ**

ມອບໃບຢັ້ງຢືນໃຫ້ແກ່ຜູ້ເຂົ້າຮ່ວມ, ຖ່າຍຮູບເປັນກຸ່ມ ແລະ ຈົບການຝຶກອົບຮົມດ້ວຍຂໍ້ຄວາມໃນທາງບວກ

## ເອກະສານຊ້ອນທ້າຍ 1: ມື້ເລີ່ມຕົ້ນ ແລະ ມື້ສິ້ນສຸດການຝຶກອົບຮົມ

ໃນຕອນເລີ່ມຕົ້ນການຝຶກອົບຮົມແຕ່ລະມື້ (ມື້ທຳອິດທີ່ຄວນໃຊ້ແຜນສຳລັບຈຸດປະສົງການອົບຮົມ), ກິດຈະກຳກະກຽມຄວາມພ້ອມ ກັບຜູ້ເຂົ້າຮ່ວມ ເພື່ອສະຫຼຸບຄືນຂອງມື້ທີ່ຜ່ານມາຂອງການຝຶກອົບຮົມ ແລະ ເພີ່ມເປັນການເພີ່ມພະລັງງານຂອງເຂົາເຈົ້າສຳລັບມື້ນັ້ນໆ. ໃນຕອນທ້າຍຂອງການຝຶກອົບຮົມແຕ່ລະມື້, ທຸກໆຄຳຖາມຄວນຕອບໃຫ້ໝົດ, ແລະ ຄວນຈະມີກິດຈະກຳເພື່ອທົບທວນຄືນສິ່ງທີ່ໄດ້ສົນທະນາໃນມື້ນັ້ນ ເຊັ່ນດຽວກັນກັບການໄດ້ຮັບຄຳຊົມຢ່າງຕໍ່ເນື່ອງຈາກຜູ້ເຂົ້າຮ່ວມ. ຂ້າງລຸ່ມນີ້ແມ່ນບາງຕົວຢ່າງຂອງກິດຈະກຳທີ່ສາມາດເຮັດໄດ້ທັງໃນ ມື້ເລີ່ມຕົ້ນ ແລະ ມື້ສິ້ນສຸດການຝຶກອົບຮົມ

**<u>ເລີ່ມຕົ້ນຂອງວັນ</u>**

ການໂຍນໝາກບານ. ທຸກຄົນຢືນຢູ່ເປັນວົງມົນ ແລະ ໂຍນໝາກບານໄປຮອບໆ, ໂດຍຜູ້ເຂົ້າຮ່ວມຈະໃຫ້ຄຳຕອບຫນຶ່ງຄຳຕອບຕໍ່ຄຳຖາມແຕ່ລະຂໍ້ດ້ານລຸ່ມນີ້.

- *ມື້ວານນີ້ໄດ້ສົນທະນາຫົວຂໍ້ໃດແດ່?*
- *ທ່ານໄດ້ຮຽນຮູ້ຫຍັງໃໝ່ ຫຼື ສຳຄັນສຳລັບທ່ານ?*
- *ສິ່ງທີ່ຍາກ ຕໍ່ການເຂົ້າໃຈ ໃນການຝຶກອົບຮົມມື້ວານນີ້ແມ່ນຫຍັງ?*
- *ເຈົ້າມັກຫຍັງ?*

ຮັບປະກັນວ່າປະເດັນຫຼັກທັງໝົດຈາກມື້ກ່ອນໜ້າແມ່ນຖືກກວມເອົາໃນກິດຈະກຳການອຸ່ນເຄື່ອງນີ້.

**<u>ຕອນທ້າຍຂອງວັນ</u>**

**ບ່ອນຈອດລົດ**

- ຕອບຄຳຖາມທີ່ຍັງເຫຼືອ ແລະ ຊີ້ແຈງຂໍ້ສົງໄສ, ໃຫ້ຜູ້ເຂົ້າຮ່ວມຊ່ວຍຕອບ.

ຕົວຢ່າງ : ການໂຍນໝາກບານ. ທຸກຄົນຢືນຢູ່ເປັນວົງມົນ ແລະ ໂຍນໝາກບານໄປຮອບໆ, ໂດຍຜູ້ເຂົ້າຮ່ວມຈະໃຫ້ຄຳຕອບຫນຶ່ງຄຳຕອບ ຕໍ່ຄຳຖາມແຕ່ລະຂໍ້ດ້ານລຸ່ມນີ້.

- *ເຈົ້າໄດ້ຮຽນຮູ້ຫຍັງໃນການຝຶກອົບຮົມມື້ນີ້?*
- *ເຈົ້າມັກຫຍັງໃນການຝຶກອົບຮົມມື້ນີ້?*
- *ອັນໃດທີ່ເປັນສິ່ງຫຍຸ້ງຍາກສຳລັບເຈົ້າໃນການຝຶກອົບຮົມມື້ນີ້?*

## ເອກະສານຊ້ອນທ້າຍ 2: ການປະເມີນຜົນການຝຶກອົບຮົມຂອງຜູ້ເຂົ້າຮ່ວມ

ໝາຍເຫດ: ໃນກໍລະນີຂອງຜູ້ເຂົ້າຮ່ວມທີ່ບໍ່ຮູ້ໜັງສື, ຄູຝຶກຄວນອະທິບາຍມາດຕາສ່ວນການໃຫ້ຄະແນນ, ອ່ານຄໍາຖາມເທື່ອລະຂໍ້, ແລະໃຫ້ເວລາສໍາລັບຜູ້ເຂົ້າຮ່ວມໃຫ້ຄະແນນຄໍາຕອບຂອງແຕ່ລະຄໍາຖາມ ກ່ອນທີ່ຈະອ່ານຄໍາຖາມຕໍ່ໄປ, ແລະ ຄໍາຖາມເປີດ ສາມາດຕອບໄດ້ຢູ່ໃນກຸ່ມສົນທະນາ.

-------------------------

**ກະລຸນາຕອບແບບສອບຖາມທີ່ບໍ່ໄດ້ລະບຸຊື່ ຕໍ່ໄປນີ້ໂດຍການໝາຍໃສ່ປ່ອງທີ່ສະແດງວ່າທ່ານ ເຫັນດີ ຫຼື ບໍ່ເຫັນດີ ຫຼາຍໜ້ອຍປານໃດກັບຂໍ້ຄວາມເຫຼົ່ານີ້**

| ລ/ດ | ຕົວຢ່າງຂໍ້ຄວາມ: | ☹ | 🙁 | 😐 | 🙂 | 😃 |
|---|---|---|---|---|---|---|
| | **ແນວຄວາມຄິດ ຄວາມເປັນຜູ້ນໍາທີ່ມີສ່ວນ** | | | | | |
| 1 | ຫົວຂໍ້ທີ່ສົນທະນາແມ່ນໜ້າສົນໃຈ ແລະ ກ່ຽວຂ້ອງກັບບົດບາດຂອງຂ້ອຍໃນຖານະຜູ້ນໍາຊຸມຊົນ. | | | | | |
| 2 | ຂ້ອຍເຂົ້າໃຈຄວາມແຕກຕ່າງລະຫວ່າງ ເພດ ແລະ ບົດບາດທາງເພດ | | | | | |
| 3 | ຜົນຂອງການຝຶກອົບຮົມນີ້, ຂ້ອຍສາມາດກໍານົດຮູບແບບຂອງການເລືອກປະຕິບັດ, ການກີດກັ້ນ, ແລະ ຄວາມບໍ່ສະເໝີພາບ ໃນຊຸມຊົນຂອງຂ້ອຍ. | | | | | |
| 4 | ຂ້ອຍເຂົ້າໃຈໄດ້ດີຂຶ້ນເຖິງຄວາມສໍາຄັນຂອງການສ້າງຄວາມເຂັ້ມແຂງຂອງແມ່ຍິງເພື່ອການພັດທະນາຊຸມຊົນ. | | | | | |
| 5 | ຜົນຂອງການຝຶກອົບຮົມຄັ້ງນີ້, ຂ້ອຍຮູ້ສຶກມີແຮງຈູງໃຈຫຼາຍຂຶ້ນ ໃນການເຮັດວຽກເພື່ອຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການມີສ່ວນຮ່ວມໃນຊຸມຊົນຂອງຂ້ອຍ. | | | | | |
| | **ທັກສະການເປັນຜູ້ນໍາທີ່ມີສ່ວນຮ່ວມ** | | | | | |
| 6 | ຂ້ອຍຮູ້ ການວາງແຜນດໍາເນີນງານແບບມີສ່ວນຮ່ວມຂອງທຸກຄົນ | | | | | |
| 7 | ຂ້ອຍໄດ້ປັບປຸງຄວາມສາມາດໃນການສື່ສານ ກັບຜູ້ອື່ນຢ່າງມີປະສິດທິພາບ. | | | | | |
| 8 | ຂ້ອຍຮູ້ສຶກພ້ອມທີ່ຈະເຮັດວຽກຮ່ວມກັນກັບສະມາຊິກຄະນະກໍາມະອື່ນໆ ໃນທີມໄດ້ດີຂຶ້ນ. | | | | | |
| | **ພາກສະເພາະແມ່ຍິງ** | | | | | |
| 9 | ຜົນຂອງການຝຶກອົບຮົມຄັ້ງນີ້, ຂ້ອຍຮູ້ສຶກໝັ້ນໃຈຫຼາຍຂຶ້ນທີ່ຈະສະແດງຄວາມຄິດເຫັນຂອງຂ້ອຍ ແລະ ເປັນຜູ້ນໍາຊຸມຊົນ. | | | | | |
| 10 | ຜົນຂອງການຝຶກອົບຮົມຄັ້ງນີ້, ເຮັດໃຫ້ຂ້ອຍຮູ້ວິທີ ນໍາໃຊ້ຈຸດແຂງຂອງຂ້ອຍ ຮັບມືກັບສິ່ງທ້າທາຍ | | | | | |

| | | | | | | |
|---|---|---|---|---|---|---|
| 11 | ຜົນຂອງການຝຶກອົບຮົມຄັ້ງນີ້, ຂ້ອຍເຂົ້າໃຈວິທີຕອບໂຕ້ກັບສິ່ງທ້າທາຍທີ່ຂ້ອຍປະເຊີນໃນຖານະເປັນຜູ້ນໍາແມ່ຍິງ. | | | | | |
| 12 | ຂ້ອຍເຂົ້າໃຈກ່ຽວກັບຄວາມຕ້ອງການຂອງແມ່ຍິງໃນຊຸມຊົນດີຂຶ້ນ ແລະ ວິທີການຈັດການກັບສິ່ງເຫຼົ່ານີ້ | | | | | |
| | **ການອໍານວຍຄວາມສະດວກໃນການຝຶກອົບຮົມ** | | | | | |
| 13 | ແບບຝຶກຫັດ ແລະ ກິດຈະກໍາ ທີ່ໃຊ້ໃນການຝຶກອົບຮົມຄັ້ງນີ້ ມ່ວນ ແລະ ໄດ້ຊຸກຍູ້ໃຫ້ຂ້ອຍມີສ່ວນຮ່ວມ ແລະ ຮຽນຮູ້ | | | | | |
| 14 | ການຝຶກອົບຮົມນີ້ເຮັດໃຫ້ຂ້ອຍເຂົ້າໃຈ ແລະ ປະຕິບັດຕາມໄດ້ງ່າຍ. | | | | | |
| 15 | ຄູຝຶກເຂົ້າໃຈແນວຄວາມຄິດໄດ້ດີ ແລະ ສາມາດອະທິບາຍສິ່ງຕ່າງໆໄດ້ຢ່າງຊັດເຈນ. | | | | | |
| 16 | ຄູຝຶກໄດ້ສ້າງສະພາບແວດລ້ອມທີ່ຂ້ອຍຮູ້ສຶກສະດວກສະບາຍ ແລະຊຸກຍູ້ໃຫ້ແບ່ງປັນ,ສົນທະນາແນວຄວາມຄິດ ແລະປະສົບການຂອງຂ້ອຍ. | | | | | |
| 17 | ການຝຶກອົບຮົມໄດ້ຖືກຈັດຕັ້ງ ແລະ ຈັດການຢ່າງດີໂດຍຄູຝຶກສອນ. | | | | | |
| 18 | ອາຫານແລະສະຖານທີ່ແມ່ນເປັນທີ່ພໍໃຈ. | | | | | |
| 19 | ການຝຶກອົບຮົມນີ້ແມ່ນໃຊ້ເວລາທີ່ເຫມາະສົມ. | | | | | |

**ກະລຸນາຕອບຄໍາຖາມແບບເປີດຕໍ່ໄປນີ້:**

- ພາກທີ່ສໍາຄັນທີ່ສຸດ 3 ອັນດັບທໍາອິດ ສໍາລັບທ່ານແມ່ນຫຍັງ ແລະ ຍ້ອນຫຍັງ?

-----------------------------------------------------------------------------------------------------------------------------
-----------------------------------------------------------------------------------------------------------------------------
-----------------------------------------------------------------------------------------------------------------------------

- ອັນໃດແມ່ນຈຸດແຂງທີ່ສຸດຂອງການຝຶກອົບຮົມຄັ້ງນີ້ *?*
- -----------------------------------------------------------------------------------------------------------------------
-----------------------------------------------------------------------------------------------------------------------
-----------------------------------------------------------------------------------------------------------------------
- ທ່ານຈະແນະນໍາຫຍັງແດ່ ເພື່ອປັບປຸງການຝຶກອົບຮົມນີ້ໃຫ້ດີຂຶ້ນ

-----------------------------------------------------------------------------------------------------------------------------
-----------------------------------------------------------------------------------------------------------------------------
-----------------------------------------------------------------------------------------------------------------------------